# ປະຖົມມະການ

## ( ຕົ້ນກຳເນີດຂອງສັບພະສິ່ງ )



# ໜັງສືປະຖົມມະການ
## ພຣະທຳປະຖົມມະການເປັນສ່ວນໜຶ່ງຂອງພຣະຄຳພີຂອງພຣະເຈົ້າ
## ຕາມທ່ານໂມເຊ ສະບັບຕົ້ນ

## ບົດທີ 1

໑ເມື່ອຕົ້ນເດີມ ພຣະເຈົ້າໄດ້ຊົງເນລະມິດສ້າງຟ້າສະຫວັນແລະແຜ່ນ
ດິນໂລກ. ໒ແຜ່ນດິນໂລກຍັງບໍ່ມີຮູບຮ່າງແລະວ່າງເປົ່າຢູ່ ມີຄວາມມືດ
ປົກຄຸມຢູ່ເທິງໜ້ານໍ້າເລິກ ແລະພຣະວິນຍານຂອງພຣະເຈົ້າໄດ້ເວີ່ນ
ຢູ່ເທິງໜ້ານໍ້າທັງຫຼາຍ. ໓ພຣະເຈົ້າໄດ້ຊົງກ່າວວ່າ "ຈົ່ງເກີດມີຄວາມສະ
ຫວ່າງ" ແລ້ວຄວາມສະຫວ່າງກໍໄດ້ເກີດຂຶ້ນ. ໔ພຣະເຈົ້າຊົງເຫັນວ່າ
ຄວາມສະຫວ່າງນັ້ນດີ ແລະພຣະເຈົ້າໄດ້ຊົງແຍກຄວາມສະຫວ່າງ
ອອກຈາກຄວາມມືດ. ໕ພຣະເຈົ້າໄດ້ເອີ້ນຄວາມສະຫວ່າງນັ້ນວ່າເວັນ
ແລະໄດ້ເອີ້ນຄວາມມືດນັ້ນວ່າຄືນ, ມີເວລາຄ່ຳແລະມີເວລາເຊົ້າ ເປັນ
ວັນທີໜຶ່ງ. ໖ພຣະເຈົ້າໄດ້ຊົງກ່າວວ່າ "ຈົ່ງໃຫ້ມີພື້ນອາກາດຫວ່າງກາງ
ນໍ້າທັງຫຼາຍແລະຈົ່ງໃຫ້ພື້ນອາກາດນັ້ນແຍກນໍ້າອອກຈາກນໍ້າ".
໗ພຣະເຈົ້າໄດ້ສ້າງພື້ນອາກາດແລະໄດ້ກະທຳໃຫ້ນໍ້າທີ່ຢູ່ໃຕ້ພື້ນອາ
ກາດກັບນໍ້າທີ່ຢູ່ເທິງພື້ນອາກາດນັ້ນແຍກອອກຈາກກັນ ແລະກໍໄດ້
ເປັນດັ່ງນັ້ນ. ໘ພຣະເຈົ້າໄດ້ເອີ້ນພື້ນອາກາດນັ້ນວ່າຟ້າ, ມີເວລາຄ່ຳ
ແລະມີເວລາເຊົ້າ ເປັນວັນທີສອງ. ໙ພຣະເຈົ້າໄດ້ຊົງກ່າວວ່າ "ຈົ່ງໃຫ້
ນໍ້າທັງຫຼາຍທີ່ຢູ່ໃຕ້ຟ້າໂຮມເຂົ້າມາຢູ່ໃນບ່ອນດຽວກັນ ແລະຈົ່ງໃຫ້
ດິນແຫ້ງປະກົດຂຶ້ນມາ" ແລະກໍໄດ້ເປັນດັ່ງນັ້ນ. ໑໐ພຣະເຈົ້າໄດ້ເອີ້ນ
ດິນແຫ້ງນັ້ນວ່າແຜ່ນດິນ ແລະນໍ້າທັງຫຼາຍທີ່ໂຮມກັນນັ້ນ ພຣະອົງໄດ້
ຊົງເອີ້ນວ່າທະເລ ພຣະເຈົ້າໄດ້ເຫັນວ່າດີ. ໑໑ພຣະເຈົ້າໄດ້ຊົງກ່າວວ່າ

“ຈົ່ງໃຫ້ແຜ່ນດິນນັ້ນເກີດຕົ້ນຫຍ້າ, ຕົ້ນຜັກທີ່ມີເມັດ ແລະໝາກໄມ້ທີ່
ເກີດໝາກຕາມຊະນິດຂອງມັນທີ່ມີແກ່ນໃນໝາກຂອງມັນເທິງແຜ່ນ
ດິນ” ແລະກໍໄດ້ເປັນດັ່ງນັ້ນ. ໑໒ແຜ່ນດິນໄດ້ເກີດຕົ້ນຫຍ້າ, ຕົ້ນຜັກທີ່ມີ
ເມັດຕາມຊະນິດຂອງມັນ ແລະຕົ້ນໝາກໄມ້ເກີດໝາກທີ່ມີແກ່ນໃນ
ມັນເອງຕາມຊະນິດຂອງມັນພຣະເຈົ້າໄດ້ເຫັນວ່າສິ່ງນັ້ນດີ.໑໓ມີເວລາ
ຄ່ຳແລະມີເວລາເຊົ້າ ເປັນວັນທີສາມ. ໑໔ພຣະເຈົ້າໄດ້ຊົງກ່າວວ່າ “ຈົ່ງ
ໃຫ້ມີດວງສະຫວ່າງຕ່າງໆໃນທ້ອງຟ້າເພື່ອໃຫ້ແຍກວັນອອກຈາກ
ຄືນແລະຈົ່ງໃຫ້ດວງແຈ້ງນັ້ນເປັນໝາຍສຳຄັນຕ່າງໆ,ເປັນທີ່ກຳນົດ
ລະດູການຕ່າງໆ, ວັນທັງຫຼາຍແລະປີທັງຫຼາຍ ໑໕ແລະຈົ່ງໃຫ້ມັນສ່ອງ
ສະຫວ່າງໃນທ້ອງຟ້າ ເພື່ອໃຫ້ຄວາມສະຫວ່າງແກ່ແຜ່ນດິນ” ແລະກໍ
ໄດ້ເປັນດັ່ງນັ້ນ. ໑໖ພຣະເຈົ້າໄດ້ຊົງສ້າງດວງສະຫວ່າງໃຫຍ່ໄວ້ສອງ
ດວງໃຫ້ດວງໃຫຍ່ກວ່ານັ້ນຄຸ້ມຄອງກາງເວັນ ແລະໃຫ້ດວງນ້ອຍກວ່າ
ຄຸ້ມຄອງກາງຄືນແລະພຣະອົງຊົງສ້າງດວງດາວທັງຫຼາຍດ້ວຍ ໑໗ດວງ
ສະຫວ່າງນັ້ນພຣະເຈົ້າໄດ້ຕັ້ງໄວ້ໃນທ້ອງຟ້າ ເພື່ອຈະໃຫ້ສ່ອງແຈ້ງ
ແກ່ແຜ່ນດິນ. ໑໘ເພື່ອຈະຄຸ້ມຄອງກາງເວັນແລະກາງຄືນ ແລະໃຫ້
ຄວາມສະຫວ່າງແຍກອອກຈາກຄວາມມືດ ພຣະເຈົ້າໄດ້ເຫັນວ່າສິ່ງ
ນັ້ນດີ. ໑໙ມີເວລາຄ່ຳແລະມີເວລາເຊົ້າ ເປັນວັນທີສີ່.

໒໐ພຣະເຈົ້າຊົງກ່າວວ່າ “ຈົ່ງໃຫ້ນ້ຳທັງຫຼາຍບໍລິບູນດ້ວຍຝູງສັດຕ່າງໆ
ທີ່ມີຊີວິດເຄື່ອນໄຫວໄປມາ ແລະໃຫ້ມີນົກຕ່າງໆບິນໄປມາເທິງແຜ່ນ
ດິນໃຕ້ທ້ອງຟ້າ”. ໒໑ພຣະເຈົ້າໄດ້ເນລະມິດສ້າງປາວານໃຫຍ່ຢູ່ໃນນ້ຳ
ທະເລແລະສັດທີ່ມີຊີວິດເຄື່ອນໄຫວໄປມາທຸກໂຕທີ່ມີຢູ່ໃນນ້ຳທັງ
ຫຼາຍຢ່າງບໍລິບູນຕາມເຊື້ອສາຍຂອງມັນທຸກຢ່າງແລະນົກທີ່ມີປີກ
ທຸກໂຕຕາມຊະນິດຂອງມັນ ພຣະເຈົ້າໄດ້ເຫັນວ່າສິ່ງນັ້ນດີ. ໒໒ພຣະ

ເຈົ້າໄດ້ອວຍພອນໃຫ້ສັດທັງຫຼາຍນັ້ນວ່າ "ຈົ່ງພາກັນອອກແມ່ແຜ່ລູກ
ຫຼາຍທະວີຂຶ້ນ ໃຫ້ນ້ຳທະເລທັງຫຼາຍເຕັມໄປດ້ວຍສັດນັ້ນແລະໃຫ້ມີ
ຝູງນົກມາກທະວີຂຶ້ນເທິງແຜ່ນດິນເຖີດ". ໒໓ມີເວລາຄ່ຳແລະມີເວລາ
ເຊົ້າ ເປັນວັນທີຫ້າ. ໒໔ພຣະເຈົ້າໄດ້ບອກວ່າ "ໃຫ້ແຜ່ນດິນເກີດສັດ
ຕ່າງໆທີ່ມີຊີວິດຢູ່ຕາມຊະນິດຂອງມັນ ສັດໃຊ້ງານ, ສັດເລືອຄານ
ແລະສັດປ່າຕ່າງໆຕາມຊະນິດຂອງມັນ" ແລະກໍໄດ້ເປັນດັ່ງນັ້ນ.
໒໕ພຣະເຈົ້າໄດ້ສ້າງສັດປ່າຕ່າງໆຕາມຊະນິດຂອງມັນ, ສັດໃຊ້ງານ
ຕ່າງໆຕາມຊະນິດຂອງມັນ ແລະສັດທີ່ເລືອຄານເທິງດິນທຸກໂຕ ຕາມ
ຊະນິດຂອງມັນ ພຣະເຈົ້າໄດ້ເຫັນວ່າສິ່ງນັ້ນດີ. ໒໖ພຣະເຈົ້າໄດ້ບອກ
ວ່າ "ໃຫ້ພວກເຮົາຈົ່ງສ້າງມະນຸດຕາມຮູບລັກສະນະຂອງພວກເຮົາ
ໃຫ້ຄ້າຍຄືພວກເຮົາເຖີດ ແລະໃຫ້ພວກເຂົາຄຸ້ມຄອງຝູງປາໃນນ້ຳທະ
ເລ, ຝູງນົກໃນຟ້າອາກາດ, ຝູງສັດໃຊ້, ແຜ່ນດິນໂລກທັງສິ້ນແລະ
ສັດເລືອຄານທຸກໂຕທີ່ເລືອຄານເທິງແຜ່ນດິນໂລກ". ໒໗ດັ່ງນັ້ນ ພຣະ
ເຈົ້າໄດ້ເນລະມິດສ້າງມະນຸດຕາມຮູບລັກສະນະຂອງພຣະອົງເອງ
ພຣະອົງໄດ້ຊົງເນລະມິດສ້າງມະມຸດຕາມແບບຢ່າງຂອງພຣະເຈົ້າ
ພຣະອົງໄດ້ເນລະມິດສ້າງພວກເຂົາໃຫ້ເປັນຊາຍແລະຍິງ. ໒໘ພຣະ
ເຈົ້າໄດ້ອວຍພອນແກ່ພວກເຂົາແລະພຣະເຈົ້າໄດ້ບອກພວກເຂົາວ່າ
"ຈົ່ງມີລູກມາກມາຍແລະທະວີຫຼາຍຂຶ້ນໃຫ້ເຕັມແຜ່ນດິນໂລກ, ຈົ່ງມີ
ອຳນາດເໜືອແຜ່ນດິນໂລກ, ຈົ່ງຄຸ້ມຄອງຝູງປາໃນນ້ຳທະເລ, ຝູງນົກ
ໃນຟ້າອາກາດແລະສັດທັງປວງທີ່ມີຊີວິດເຄື່ອນໄຫວໄປມາເທິງ
ແຜ່ນດິນໂລກ". ໒໙ພຣະເຈົ້າໄດ້ບອກວ່າ "ເບິ່ງແມ, ເຮົາໄດ້ປະ
ທານຕົ້ນຜັກທັງປວງທີ່ເກີດແນວປູກຊຶ່ງມີຢູ່ເທິງພື້ນແຜ່ນດິນທົ່ວໄປ
ແລະຕົ້ນໄມ້ທັງປວງທີ່ເກີດໝາກແລະມີແນວປູກໃຫ້ແກ່ເຈົ້າ ໃຫ້ເປັນ
ອາຫານຂອງເຈົ້າ. ໓໐ສັດທຸກໂຕທີ່ແຜ່ນດິນ, ນົກທຸກໂຕໃນອາກາດ

ແລະສັດເລືອຄານທັງປວງທີ່ມີຊີວິດຢູ່ເທິງແຜ່ນດິນໂລກ ເຮົາໄດ້ເອົາ
ຕົ້ນຫຍ້າຂຽວທັງປວງໃຫ້ເປັນອາຫານຂອງສັດທັງຫຼາຍນັ້ນ" ແລະກໍ
ໄດ້ເປັນດັ່ງນັ້ນ. ໓໑ພຣະເຈົ້າໄດ້ເຫັນສິ່ງທັງປວງທີ່ພຣະອົງໄດ້ສ້າງນັ້ນ
ແລະເບິ່ງແມ ເປັນສິ່ງທີ່ດີຫຼາຍແທ້ໆ ມີເວລາຄ່ຳແລະມີເວລາເຊົ້າ ເປັນ
ວັນທີຫົກ.

*1:11 "ເມັດ" ກັບ "ແກ່ນ" ຕາມພາສາເຮັບເຣີ ກໍແປອອກວ່າ "ເມັດ" "ແກ່ນ" "ເຊື້ອສາຍ" "ລູກຫຼານ" "ອຸດົມ" "ແນວ" "ພັນ" ແລະ "ນໍ້າພັນ"*

## ບົດທີ 2

໑ດັ່ງນັ້ນ ຟ້າສະຫວັນທັງຫຼາຍແລະແຜ່ນດິນໂລກກັບສັບພະທຸກສິ່ງທີ່
ມີຢູ່ໃນທີ່ນັ້ນກໍສຳເລັດເສັດສິ້ນແລ້ວ. ໒ໃນວັນທີ່ເຈັດພຣະເຈົ້າໄດ້ສຳ
ເລັດການງານຂອງພຣະອົງທີ່ພຣະອົງໄດ້ຊົງສ້າງມາແລ້ວນັ້ນແລະ
ໃນວັນທີເຈັດນັ້ນພຣະອົງໄດ້ພັກເຊົາຈາກການງານທັງສິ້ນທີ່ພຣະອົງ
ໄດ້ສ້າງມາແລ້ວນັ້ນ. ໓ພຣະເຈົ້າໄດ້ອວຍພອນໃນວັນທີເຈັດນັ້ນ ແລະ
ໄດ້ຕັ້ງໄວ້ເປັນວັນບໍລິສຸດ* ເພາະວ່າໃນວັນນັ້ນ ພຣະອົງໄດ້ພັກເຊົາ
ຈາກການງານທັງສິ້ນທີ່ພຣະອົງໄດ້ເນລະມິດແລະໄດ້ສ້າງຂຶ້ນນັ້ນ.

໔ເລື່ອງຕົ້ນເດີມຂອງຟ້າສະຫວັນທັງຫຼາຍແລະແຜ່ນດິນໂລກ ເມື່ອ
ພວກມັນຖືກເນລະມິດສ້າງຂຶ້ນມາກໍເປັນດັ່ງນີ້ ໃນວັນທີ່ພຣະເຢໂຮ
ວາພຣະເຈົ້າໄດ້ສ້າງແຜ່ນດິນໂລກແລະຟ້າສະຫວັນທັງຫຼາຍນັ້ນ.
໕ຕົ້ນໄມ້ໃນປ່າເທິງແຜ່ນດິນຍັງບໍ່ມີຈັກກົກ ແລະຕົ້ນຫຍ້າໃນທົ່ງກໍຍັງ
ບໍ່ຂຶ້ນຈັກກົກ ເພາະວ່າພຣະເຢໂຮວາພຣະເຈົ້າຍັງບໍ່ໄດ້ເຮັດໃຫ້ຝົນ

ຕົກເທິງແຜ່ນດິນ ແລະຄົນທີ່ຈະຂຸດດິນກໍຍັງບໍ່ມີ. [໖]ແຕ່ມີນ້ຳໝອກ
ຂຶ້ນມາຈາກດິນແລະເຮັດໃຫ້ໜ້າພື້ນດິນຊຸ່ມທົ່ວໄປ. [໗]ພຣະເຢໂຮວາ
ພຣະເຈົ້າໄດ້ເອົາຂີ້ຝຸ່ນດິນມາປັ້ນເປັນມະນຸດ, ພຣະອົງໄດ້ເປົ່າລົມ
ຫາຍໃຈແຫ່ງຊີວິດໃສ່ຮູດັງມະນຸດ ແລ້ວມະນຸດໄດ້ບັງເກີດເປັນຈິດ
ວິນຍານມີຊີວິດຢູ່.

[໘]ພຣະເຢໂຮວາພຣະເຈົ້າໄດ້ປູກສວນແຫ່ງໜຶ່ງໄວ້ຢູ່ໃນທິດຕາເວັນ
ອອກຂອງເອເດນ ແລະພຣະອົງໄດ້ໃຫ້ມະນຸດທີ່ພຣະອົງໄດ້ປັ້ນຂຶ້ນ
ນັ້ນອາໄສຢູ່ໃນສວນນັ້ນ. [໙]ພຣະເຢໂຮວາພຣະເຈົ້າໄດ້ເຮັດໃຫ້ຕົ້ນ
ໝາກໄມ້ທຸກຢ່າງງາມຕາແລະດີສຳລັບກິນເປັນອາຫານ ງອກຂຶ້ນມາ
ຈາກດິນ, ມີຕົ້ນໄມ້ແຫ່ງຊີວິດຢູ່ໃນກາງສວນນັ້ນ ແລະມີຕົ້ນໄມ້ແຫ່ງ
ຄວາມຮູ້ຈັກດີແລະຊົ່ວ. [໑໐]ມີແມ່ນ້ຳສາຍໜຶ່ງອອກມາຈາກເອເດນ
ເພື່ອໄຫຼຫົດສວນນັ້ນ ແລະຈາກບ່ອນນັ້ນມັນໄດ້ແຍກອອກມາເປັນ
ແມ່ນ້ຳສີ່ສາຍ. [໑໑]ແມ່ນ້ຳສາຍທີໜຶ່ງຊື່ວ່າ: ປີໂຊນ ແມ່ນ້ຳສາຍນີ້ໄຫຼ
ອ້ອມທົ່ວປະເທດ ຮາວີລາ ທີ່ນັ້ນມີແຮ່ຄຳ. [໑໒]ຄຳຢູ່ປະເທດນີ້ເປັນຄຳ
ຢ່າງດີ ແລະທີ່ນັ້ນມີຢາງໄມ້ ບະເດລອມ ແລະມີຫີນແກ້ວປະເສີດໂມ
ລາ. [໑໓]ແມ່ນ້ຳສາຍທີສອງຊື່ວ່າ "ກີໂຮນ" ແມ່ນ້ຳສາຍນີ້ໄຫຼອ້ອມທົ່ວ
ປະເທດເອທີໂອເປຍ. [໑໔]ແມ່ນ້ຳສາຍທີສາມຊື່ວ່າ"ຮິດເດເກນ" ແມ່ນ້ຳ
ສາຍນີ້ໄຫຼຜ່ານໄປທາງຕໍ່ໜ້າເມືອງ ອັດຊີເລຍ ແລະແມ່ນ້ຳສາຍທີສີ່
ຊື່ວ່າ "ເອີຟະລັດ". [໑໕]ແລ້ວພຣະເຢໂຮວາພຣະເຈົ້າໄດ້ເອົາມະນຸດຄົນ
ນັ້ນໃຫ້ມາຢູ່ໃນສວນເອເດນ ເພື່ອຈະໄດ້ເຮັດວຽກງານແລະເຝົ້າຮັກ
ສາສວນນັ້ນ. [໑໖]ພຣະເຢໂຮວາພຣະເຈົ້າໄດ້ສັ່ງໃຫ້ແກ່ຄົນນັ້ນວ່າ
"ຕົ້ນໄມ້ທຸກຕົ້ນໃນສວນນີ້ ເຈົ້າກິນໄດ້ຕະຫຼອດເວລາໂດຍບໍ່ເສຍຄ່າ.
[໑໗]ແຕ່ວ່າສຳຫຼັບຕົ້ນໄມ້ແຫ່ງຄວາມຮູ້ຈັກດີແລະຊົ່ວ ເຈົ້າຢ່າກິນ ເພາະ

ວ່າໃນວັນໃດທີ່ເຈົ້າຫາກກິນໝາກໄມ້ນັ້ນ ເຈົ້າຈະຕ້ອງຕາຍໃນວັນ
ນັ້ນຢ່າງແນ່ນອນ”.

໑໘ແລະພຣະເຢໂຮວາພຣະເຈົ້າໄດ້ກ່າວວ່າ “ເປັນການບໍ່ດີທີ່ຊາຍຄົນ
ນັ້ນຈະຢູ່ຜູ້ດຽວ ເຮົາຈະສ້າງຜູ້ຊ່ອຍທີ່ເໝາະສົມຜູ້ໜຶ່ງໃຫ້ແກ່ລາວ.
໑໙ແລ້ວພຣະເຢໂຮວາພຣະເຈົ້າໄດ້ເອົາດິນມາປັ້ນເປັນສັດທັງປວງທີ່
ຢູ່ໃນປ່າ ແລະນົກທັງປວງໃນຟ້າອາກາດ ແລະໄດ້ນຳພວກມັນມາຫາ
ອາດາມ ເພື່ອຈະເບິ່ງວ່າລາວຈະເອີ້ນຊື່ພວກມັນຢ່າງໃດ ແລະຊື່ໃດທີ່
ອາດາມໄດ້ເອີ້ນສັດທັງປວງທີ່ມີຊີວິດນັ້ນກໍເປັນຊື່ຂອງສັດນັ້ນ. ໒໐ອາ
ດາມໄດ້ໃສ່ຊື່ໃຫ້ສັດໃຊ້ງານທັງປວງ, ຝູງນົກໃນອາກາດ, ສັດທັງປວງ
ທີ່ຢູ່ໃນປ່າ. ແຕ່ວ່າຝ່າຍ ອາດາມ ຍັງບໍ່ໄດ້ພົບຜູ້ຊ່ອຍທີ່ເໝາະສົມແກ່
ຕົນເອງ. ໒໑ແລ້ວພຣະເຢໂຮວາພຣະເຈົ້າໄດ້ເຮັດໃຫ້ການນອນຫຼັບ
ສະໜິດເກີດຂຶ້ນກັບອາດາມ ແລະລາວໄດ້ນອນຫຼັບໄປ ພຣະອົງໄດ້
ເອົາກະດູກຂ້າງຂອງລາວອອກມາເຫຼັ້ມໜຶ່ງແລະເຮັດໃຫ້ເນື້ອນັ້ນຫຸ້ມ
ຕິດຈອດກັນຄືນ. ໒໒ກະດູກຂ້າງທີ່ພຣະເຢໂຮວາພຣະເຈົ້າໄດ້ເອົາ
ອອກຈາກຄົນນັ້ນ ພຣະອົງໄດ້ເອົາສ້າງຂຶ້ນເປັນຜູ້ຍິງຄົນໜຶ່ງ ແລະນຳ
ມາໃຫ້ຜູ້ຊາຍນັ້ນ. ໒໓ອາດາມໄດ້ກ່າວວ່າ “ບັດນີ້ ຜູ້ນີ້ແມ່ນກະດູກ
ຈາກກະດູກຂອງເຮົາແລະເນື້ອໜັງຈາກເນື້ອໜັງຂອງເຮົາ ລາວຈະ
ຖືກເອີ້ນຊື່ວ່າ ‘ຜູ້ຍິງ’ ເພາະວ່ານາງອອກມາຈາກຜູ້ຊາຍ”. ໒໔ເຫດສະ
ນັ້ນຜູ້ຊາຍຈະລາຈາກພໍ່ແມ່ຂອງຕົນແລະຈະຕິດພັນຢູ່ກັບເມຍຂອງ
ຕົນແລະເຂົາທັງສອງຈະເປັນເນື້ອໜັງອັນດຽວກັນ. ໒໕ຊາຍຄົນນັ້ນກັບ
ເມຍຂອງຕົນ ທັງສອງກໍເປືອຍກາຍຢູ່ແລະບໍ່ມີຄວາມລະອາຍ.

*2:3 “ວັນບໍລິສຸດ” ຫຼືວ່າ “ວັນສັກສິດ” ຫຼື “ວັນສິນ”*

*2:14 ແມ່ນໍ້າ “ຮິດເດເກນ” ອາດເປັນຊື່ເກົ່າຂອງແມ່ນໍ້າ “ຕີກລິດ”*

# ບົດທີ 3

໑ອັນໜຶ່ງງູເປັນສັດທີ່ສະຫຼາດກວ່າສັດທັງປວງທີ່ຢູ່ໃນປ່າ ທີ່ພຣະເຢ
ໂຮວາພຣະເຈົ້າໄດ້ສ້າງໄວ້ນັ້ນ. ງູໄດ້ຖາມຜູ້ຍິງນັ້ນວ່າ“ຈິງຫຼືພຣະເຈົ້າ
ໄດ້ບອກຫ້າມວ່າ ພວກເຈົ້າຢ່າຊູ່ກິນໝາກໄມ້ທຸກຢ່າງໃນສວນນີ້?”
໒ຜູ້ຍິງໄດ້ຕອບງູວ່າ “ໝາກໄມ້ທັງປວງທີ່ຢູ່ໃນສວນນີ້ ພວກເຮົາກິນ
ໄດ້. ໓ແຕ່ວ່າໝາກໄມ້ທີ່ຢູ່ກາງສວນນັ້ນ ພຣະເຈົ້າໄດ້ຫ້າມວ່າ ‘ຢ່າກິນ
ຫຼືຢ່າຈັບບາຍ ຢ້ານວ່າພວກເຈົ້າຈະຕາຍໄປ’”. ໔ງູໄດ້ກ່າວແກ່ຜູ້ຍິງ
ນັ້ນວ່າ “ພວກເຈົ້າຈະບໍ່ຕາຍຢ່າງແນ່ນອນ ໕ເພາະວ່າພຣະເຈົ້າຮູ້ຢູ່ວ່າ
ໃນວັນໃດພວກເຈົ້າຫາກກິນໝາກໄມ້ນັ້ນ ຕາຂອງພວກເຈົ້າຈະມືນ
ເຫັນແຈ້ງຂຶ້ນໃນວັນນັ້ນ ແລະພວກເຈົ້າຈະເປັນເໝືອນພຣະເຈົ້າ ຊຶ່ງຮູ້
ຈັກຄວາມດີແລະຊົ່ວ”. ໖ຜູ້ຍິງນັ້ນເຫັນວ່າຕົ້ນໄມ້ນັ້ນເປັນຕາໜ້າກິນ
ແລະງາມຕາ ແລະເປັນຕົ້ນໄມ້ທີ່ໜ້າປາຖະໜາເພື່ອໃຫ້ມີປັນຍາຂຶ້ນ
ນາງຈຶ່ງໄດ້ປິດເອົາໝາກໄມ້ນັ້ນມາແລະໄດ້ກິນ ແລ້ວໄດ້ຍື່ນໃຫ້ຜົວທີ່
ຢູ່ດ້ວຍກັນກັບນາງ ແລ້ວຜົວໄດ້ຮັບກິນດ້ວຍ. ໗ແລ້ວຕາຂອງເຂົາທັງ
ສອງກໍໄດ້ມືນເຫັນແຈ້ງຂຶ້ນ ພວກເຂົາຈຶ່ງຮູ້ຈັກວ່າພວກຕົນປະເປືອຍ
ຢູ່ ແລ້ວພວກເຂົາໄດ້ພາກັນເອົາໃບໝາກເດື່ອເທດມາຫຍິບໃສ່ກັນ
ເປັນເຄື່ອງນຸ່ງ.

໘ແລ້ວເຂົາທັງສອງໄດ້ຍິນພຣະສຸລະສຽງຂອງພຣະເຢໂຮວາພຣະ
ເຈົ້າສະເດັດມາໃນສວນໃນຄ່ຳວັນນັ້ນ ອາດາມກັບເມຍໄດ້ພາກັນ
ໄປລີ້ຕົວຢູ່ກາງຕົ້ນໄມ້ໃນສວນນັ້ນເພື່ອໃຫ້ພົ້ນຈາກໜ້າພຣະເຢໂຮ
ວາພຣະເຈົ້າ. ໙ພຣະເຢໂຮວາ ພຣະເຈົ້າໄດ້ເອີ້ນຫາອາດາມ ແລະຊົງ
ກ່າວວ່າ “ເຈົ້າຢູ່ທີ່ໃດ?”. ໑໐ລາວໄດ້ທູນຕອບວ່າ “ຂ້ານ້ອຍໄດ້ຍິນ

ພຣະສຸລະສຽງຂອງພຣະອົງໃນສວນນັ້ນ ແລ້ວຂ້ານ້ອຍຢ້ານ ເພາະ
ຂ້ານ້ອຍປະເປືອຍຢູ່ ຂ້ານ້ອຍຈຶ່ງໄດ້ໄປລີ້ຕົວເສຍ". ໑໑ພຣະອົງໄດ້
ຖາມວ່າ "ໃຜບອກເຈົ້າວ່າ ເຈົ້າປະເປືອຍຢູ່? ເຈົ້າໄດ້ກິນໝາກໄມ້
ທີ່ເຮົາໄດ້ຫ້າມບໍ່ໃຫ້ເຈົ້າກິນນັ້ນຫຼື?". ໑໒ຊາຍຄົນນັ້ນໄດ້ຕອບວ່າ "ຜູ້
ຍິງທີ່ພຣະອົງໄດ້ປະທານໃຫ້ຢູ່ກັບຂ້ານ້ອຍນັ້ນ ໄດ້ເອົາໝາກໄມ້ນັ້ນ
ຍື່ນໃຫ້ຂ້ານ້ອຍ ແລ້ວຂ້ານ້ອຍໄດ້ກິນ". ໑໓ແລ້ວພຣະເຢໂຮວາພຣະ
ເຈົ້າໄດ້ກ່າວແກ່ຜູ້ຍິງນັ້ນວ່າ "ເຈົ້າໄດ້ເຮັດສິ່ງອັນໃດລົງໄປແລ້ວ?"
ຜູ້ຍິງນັ້ນໄດ້ຕອບວ່າ "ງູໄດ້ຫຼອກລວງຂ້ານ້ອຍແລະຂ້ານ້ອຍໄດ້ກິນ
ໝາກໄມ້ນັ້ນ". ໑໔ແລ້ວພຣະເຢໂຮວາໄດ້ກ່າວແກ່ງູວ່າ "ເພາະເຫດ
ເຈົ້າໄດ້ກະທຳການນັ້ນ ເຈົ້າຈຶ່ງຖືກສາບແຊ່ງຫຼາຍກວ່າບັນດາສັດໃຊ້
ງານແລະສັດປ່າທັງປວງເຈົ້າຈະເລືອໄປດ້ວຍທ້ອງຂອງເຈົ້າແລະຈະ
ກິນຂີ້ຝຸ່ນດິນຕະຫຼອດວັນເວລາໃນຊີວິດຂອງເຈົ້າ: ໑໕ເຮົາຈະໃຫ້ເຈົ້າ
ກັບຜູ້ຍິງເປັນສັດຕູກັນ ເຊື້ອສາຍຂອງເຈົ້າກັບເຊື້ອສາຍຂອງຜູ້ຍິງຈະ
ເປັນສັດຕູກັນ ເຊື້ອສາຍຂອງຜູ້ຍິງຈະຢຽບຫົວເຈົ້າໃຫ້ບອມຊ້ຳແລະ
ເຈົ້າຈະເຮັດໃຫ້ສົ້ນຕີນເພິ່ນບອມຊ້ຳໄປ". ໑໖ພຣະອົງໄດ້ກ່າວແກ່ຜູ້ຍິງ
ນັ້ນວ່າ "ເຮົາຈະເພີ່ມຄວາມທຸກລຳບາກອັນໃຫຍ່ໃຫ້ຫຼາຍຂຶ້ນແກ່ເຈົ້າ
ແລະການຕັ້ງທ້ອງຂອງເຈົ້າ, ເຈົ້າຈະເກີດລູກດ້ວຍຄວາມເຈັບປວດ
ແຕ່ເຈົ້າຈະຍັງປາຖະໜາຫາຜົວຂອງເຈົ້າແລະຜົວຈະປົກຄອງເໜືອ
ເຈົ້າ". ໑໗ແລະພຣະອົງໄດ້ກ່າວແກ່ອາດາມວ່າ "ເພາະເຫດເຈົ້າໄດ້
ເຊື່ອຟັງຄວາມເມຍຂອງເຈົ້າ ແລະໄດ້ກິນໝາກໄມ້ທີ່ເຮົາໄດ້ຫ້າມວ່າ
'ຢ່າຊູ່ກິນ' ດິນຈຶ່ງຖືກສາບແຊ່ງຍ້ອນຕົວເຈົ້າ, ເຈົ້າຈະຫາກິນຈາກດິນ
ນັ້ນດ້ວຍຄວາມທຸກຍາກລຳບາກຕະຫຼອດວັນເວລາໃນຊີວິດຂອງ
ເຈົ້າ. ໑໘ດິນນັ້ນຈະງອກຕົ້ນໄມ້ທີ່ມີໜາມ ແລະຫຍ້າມີໜາມຈະຮົກຕໍ່
ເຈົ້າແລະເຈົ້າຈະກິນຜັກກິນຫຍ້າທີ່ຢູ່ຕາມທົ່ງ. ໑໙ເຈົ້າຈະຫາກິນດ້ວຍ

ເຫື່ອໄຫຼອາບໜ້າ ຈົນເຖິງເຈົ້າຈະກັບໄປໃນດິນອີກ ເພາະວ່າເຈົ້າໄດ້
ອອກມາຈາກດິນ, ເພາະເຈົ້າເປັນຂີ້ຝຸ່ນດິນ ແລະເຈົ້າຈະຕ້ອງກັບໄປ
ເປັນຂີ້ຝຸ່ນດິນອີກ". [໒໐]ແລ້ວ ອາດາມ ໄດ້ເອີ້ນຊື່ເມຍຂອງຕົນວ່າ "ເອ
ວາ" ເຫດວ່ານາງເປັນແມ່ຂອງສິ່ງທີ່ມີຊີວິດທັງປວງ. [໒໑]ພຣະເຢໂຮ
ວາ ພຣະເຈົ້າໄດ້ເອົາໜັງສັດເຮັດເສື້ອຜ້າໃຫ້ອາດາມກັບເມຍນຸ່ງຫົ່ມ.

[໒໒]ແລ້ວພຣະເຢໂຮວາ ພຣະເຈົ້າໄດ້ກ່າວວ່າ "ເບິ່ງແມ, ມະນຸດໄດ້
ກາຍເປັນເໝືອນດັ່ງຜູ້ໜຶ່ງໃນພວກເຮົາທີ່ຮູ້ຈັກຄວາມດີແລະຊົ່ວ ແລະ
ບັດນີ້ຢ້ານວ່າລາວຈະຍື່ນມືຈັບເອົາໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ
ມາກິນ ແລະມີຊີວິດໄປເປັນນິດ". [໒໓]ແລ້ວພຣະເຢໂຮວາ ພຣະເຈົ້າ
ໄດ້ຂັບໄລ່ມະນຸດອອກຈາກສວນເອເດນ ໃຫ້ໄປເຮັດໄຮ່ເຮັດນາຈາກ
ດິນທີ່ເຂົາໄດ້ອອກມານັ້ນ. [໒໔]ພຣະອົງໄດ້ຂັບໄລ່ມະນຸດອອກໄປເສຍ
ແລະທາງທິດຕາເວັນອອກຂອງສວນເອເດນ ພຣະອົງໄດ້ຕັ້ງເຄຣຸບ*
ທັງຫຼາຍທີ່ຖືດາບອັນເປັນແປວໄຟແກ່ວງໄປມາທຸກທິດທາງ ເພື່ອເຝົ້າ
ຮັກສາທາງໄປຫາຕົ້ນໄມ້ແຫ່ງຊີວິດນັ້ນ.

*3:24 "ເຄຣຸບ" ເປັນ ເທວະດາ ຈຳພວກໜຶ່ງທີ່ມີໜ້າທີ່ເຝົ້າຮັກສາ*

# ບົດທີ 4

[໑]ອາດາມ ໄດ້ສົມສູ່ກັບ ເອວາ ຜູ້ເປັນເມຍຂອງຕົນ ນາງໄດ້ຕັ້ງທ້ອງ
ແລະໄດ້ປະສູດລູກຊື່ ກາອິນ ນາງໄດ້ກ່າວວ່າ "ຂ້ອຍໄດ້ຮັບຊາຍຄົນ
ໜຶ່ງຈາກພຣະເຢໂຮວາ". [໒]ນາງໄດ້ໃຫ້ກຳເນີດອີກຄັ້ງເປັນນ້ອງຊາຍ
ຂອງ ກາອິນ ຊື່ ອາເບັນ. ອາເບັນ ເປັນຜູ້ລ້ຽງແກະ, ສ່ວນ ກາອິນ ເປັນ

ຄົນເຮັດໄຮ່ໄຖນາ. ໓ຢູ່ມາເມື່ອເວລາລ່ວງໄປ ກາອິນ ໄດ້ເອົາໝາກໄມ້
ທີ່ເກີດຈາກດິນ ມາຖວາຍບູຊາແກ່ພຣະເຢໂຮວາ. ໔ແລະ ອາເບັນ
ໄດ້ເອົາລູກທົວປີຈາກຝູງສັດຂອງຕົນພ້ອມດ້ວຍໄຂມັນຂອງສັດນັ້ນ
ຍົກມາຖວາຍດ້ວຍ.ພຣະເຢໂຮວາໄດ້ຊອບໃຈນຳອາເບັນ ແລະເຄື່ອງ
ບູຊາຂອງລາວນັ້ນ. ໕ແຕ່ວ່າກັບ ກາອິນ ແລະເຄື່ອງບູຊາຂອງລາວ
ພຣະອົງກໍບໍ່ໄດ້ຊອບໃຈ, ກາອິນ ໄດ້ຄຽດແຄ້ນແລະມີໜ້າບູດບຶ້ງ.
໖ພຣະເຢໂຮວາໄດ້ຖາມ ກາອິນ ວ່າ “ເປັນຫຍັງເຈົ້າຈິ່ງຄຽດແຄ້ນແລະ
ມີໜ້າບູດບຶ້ງ? ໗ຖ້າເຈົ້າຫາກເຮັດດີ ເຈົ້າຈະບໍ່ເປັນທີ່ໂຜດຮັບຫຼື?
ນ້ອງຈະຢາກເປັນຄືເຈົ້າ ແລະເຈົ້າຈະຄຸ້ມຄອງລາວ. ແຕ່ຖ້າເຈົ້າຫາກ
ເຮັດບໍ່ດີ ຄວາມບາບກໍນອນດັກຊຸ່ມຢູ່ທີ່ປະຕູ.* ໘ກາອິນ ໄດ້ເວົ້າກັບ
ອາເບັນ ຜູ້ເປັນນ້ອງຊາຍຂອງຕົນ ຢູ່ມາເມື່ອເຂົາທັງສອງຢູ່ທີ່ທົ່ງນາ
ດ້ວຍກັນ ກາອິນ ໄດ້ລຸກຂຶ້ນຕໍ່ສູ້ ອາເບັນ ຜູ້ເປັນນ້ອງຊາຍຂອງຕົນ
ແລະໄດ້ຂ້າລາວເສຍ. ໙ພຣະເຢໂຮວາໄດ້ຖາມ ກາອິນ ວ່າ “ອາເບັນ
ນ້ອງຊາຍຂອງເຈົ້າຢູ່ທີ່ໃດ?” ກາອິນ ໄດ້ຕອບວ່າ “ຂ້ານ້ອຍບໍ່ຮູ້, ຂ້າ
ນ້ອຍເປັນຜູ້ເຝົ້າຮັກສານ້ອງຊາຍຂອງຂ້ານ້ອຍຫຼື?” ໑໐ພຣະອົງໄດ້
ກ່າວວ່າ “ເຈົ້າໄດ້ກະທຳສິ່ງໃດລົງໄປ? ສຽງເລືອດຂອງນ້ອງຊາຍເຈົ້າ
ກໍໄດ້ຮ້ອງຂຶ້ນມາຈາກດິນເຖິງເຮົາ. ໑໑ບັດນີ້ ເຈົ້າຖືກສາບແຊ່ງຈາກ
ດິນທີ່ໄດ້ອ້າປາກຮັບເອົາເລືອດຂອງນ້ອງຊາຍເຈົ້າຈາກມືຂອງເຈົ້າ.
໑໒ເມື່ອເຈົ້າຈະເຮັດໄຮ່ໄຖນາມັນຈະບໍ່ເກີດໝາກຫຼາຍຕໍ່ໄປ, ເຈົ້າຈະ
ເປັນຄົນຫຼົບຫຼີກແລະພະເນຈອນໄປມາເທິງແຜ່ນດິນ”. ໑໓ກາອິນ ໄດ້
ກາບທູນພຣະເຢໂຮວາວ່າ“ໂທດທີ່ຖືກຂ້ານ້ອຍກໍໜັກເຫຼືອທີ່ຂ້ານ້ອຍ
ຈະທົນໄດ້. ໑໔ເບິ່ງແມ ໃນວັນນີ້ພຣະອົງໄດ້ຂັບໄລ່ຂ້ານ້ອຍຈາກພື້ນ
ດິນຂ້ານ້ອຍຈະເປັນທີ່ບັງໄວ້ຈາກໜ້າຂອງພຣະອົງ ຂ້ານ້ອຍຈະເປັນ
ຄົນຫຼົບຫຼີກແລະພະເນຈອນໄປມາເທິງແຜ່ນດິນ ຈາກນັ້ນເມື່ອຄົນ

ໜຶ່ງຄົນໃດພົບຂ້ານ້ອຍກໍຈະຂ້າຂ້ານ້ອຍເສຍ”. ໑໕ພຣະເຢໂຮວາໄດ້
ກ່າວແກ່ລາວວ່າ “ເຫດສະນັ້ນ ຖ້າຜູ້ໃດຈະຂ້າ ກາອິນ ຜູ້ນັ້ນກໍຈະມີ
ໂທດເຖິງເຈັດເທົ່າ” ແລ້ວພຣະເຢໂຮວາໄດ້ເຮັດເຄື່ອງໝາຍສຳຄັນ
ໄວ້ໃນຕົວ ກາອິນ ເພື່ອທຸກຄົນທີ່ພົບລາວ ຈະບໍ່ໄດ້ຂ້າລາວ.

໑໖ກາອິນ ໄດ້ອອກໄປຈາກພຣະພັກພຣະເຢໂຮວາ ແລະໄດ້ອາໄສຢູ່
ໃນດິນແດນຂອງ ໂນດ ຢູ່ທາງທິດຕາເວັນອອກຈາກສວນເອເດນ.
໑໗ກາອິນ ໄດ້ສົມສູ່ກັບເມຍຂອງຕົນ ນາງໄດ້ຕັ້ງທ້ອງ ແລະໃຫ້ກຳເນີດ
ລູກຊື່ ເອນົກ. ກາອິນ ໄດ້ກໍ່ສ້າງເມືອງໜຶ່ງຂຶ້ນ ແລະເອີ້ນຊື່ເມືອງນັ້ນວ່າ
ເອນົກ ຕາມຊື່ລູກຊາຍຂອງຕົນ. ໑໘ເອນົກ ມີລູກຊາຍຊື່ ອີຣາດ, ອີຣາດ
ມີລູກຊາຍຊື່ ເມຮູຢາເອນ, ເມຮູຢາເອນ ມີລູກຊາຍຊື່ ເມທູຊາເອນ
ແລະ ເມທູຊາເອນ ມີລູກຊາຍຊື່ ລາເມັກ. ໑໙ລາເມັກ ໄດ້ເອົາເມຍສອງ
ຄົນ ຄົນທີໜຶ່ງ ຊື່ ອາດາ, ຄົນທີສອງ ຊິນລາ. ໒໐ນາງ ອາດາ ໄດ້ໃຫ້
ກຳເນີດລູກຊາຍຊື່ ຢາບານ ຜູ້ເປັນຕົ້ນຕະກຸນຂອງຄົນທັງຫຼາຍທີ່ອາ
ໄສຢູ່ໃນເຕັນແລະລ້ຽງສັດ. ໒໑ທ່ານ ຢາບານ ມີນ້ອງຊາຍຊື່ ຢູບານ
ຜູ້ເປັນຕົ້ນຕະກຸນຂອງຄົນທັງປວງທີ່ດີດພິນຄູ່ແລະເປົ່າຂຸ່ຍ. ໒໒ນາງ
ຊິນລາ ໄດ້ໃຫ້ກຳເນີດລູກຊາຍຊື່ ຕູບາເລກາອິນ ຜູ້ເປັນຊ່າງຕີເຄື່ອງ
ມືເຮັດດ້ວຍທອງເຫຼືອງແລະດ້ວຍເຫຼັກ ແລະ ຕູບາເລກາອິນ ມີນ້ອງ
ສາວຊື່ ນາອາມາ. ໒໓ລາເມັກ ໄດ້ກ່າວແກ່ເມຍທັງສອງຂອງຕົນວ່າ
“ອາດາແລະຊິນລາ ຈົ່ງຟັງສຽງຂອງເຮົາເຖີດ ເມຍຂອງເລເມັກເອີຍ
ຈົ່ງຕັ້ງໃຈຟັງຖ້ອຍຄຳຂອງເຮົາເຖີດ ເຮົາໄດ້ຂ້າຄົນຜູ້ໜຶ່ງຍ້ອນບາດແຜ
ຂອງເຮົາ ແລະຄົນໜຸ່ມຜູ້ໜຶ່ງຍ້ອນຮອຍຊ້ຳຂອງເຮົາ. ໒໔ຖ້າມີການ
ຕອບແທນສຳຫຼັບຜູ້ທີ່ຂ້າ ກາອິນ ເຖິງເຈັດເທົ່າ ສ່ວນຜູ້ທີ່ຂ້າ ລາເມັກ
ຈະໄດ້ເຖິງເຈັດສິບເຈັດເທົ່າຢ່າງແນ່ນອນ”.

໒໕ອາດາມ ໄດ້ສົມສູ່ກັບເມຍຂອງຕົນອີກ ແລະນາງໄດ້ໃຫ້ກຳເນີດລູກ
ຊາຍຜູ້ໜຶ່ງ ແລະໄດ້ເອີ້ນຊື່ວ່າ ເຊດ  ນາງໄດ້ກ່າວວ່າ "ເພາະພຣະ
ເຈົ້າໄດ້ໂຜດປະທານເຊື້ອສາຍອີກຄົນໜຶ່ງໃຫ້ຂ້ານ້ອຍແທນ ອາເບັນ
ຜູ້ຊຶ່ງ ກາອິນ ໄດ້ຂ້າເສຍແລ້ວ. ໒໖ເຊດ ໄດ້ມີລູກຊາຍຄົນໜຶ່ງດ້ວຍ
ແລະເອີ້ນຊື່ວ່າ ເອໂນດ ຕັ້ງແຕ່ເວລານັ້ນມາ ມະນຸດໄດ້ຕັ້ງຕົ້ນຮ້ອງ
ອອກພຣະນາມຂອງພຣະເຢໂຮວາ.

*4:7 ບາງທີ່ແປວ່າ "ແຕ່ຖ້າເຈົ້າຫາກເຮັດບໍ່ດີ ຄວາມບາບກໍນອນດັກຊຸ່ມຢູ່ທີ່ປະຕູ, ມັນປາຖະໜາຫາຕົວເຈົ້າແລະເຈົ້າຈະຕ້ອງຄຸ້ມຄອງມັນ".*

## ບົດທີ 5

໑ໜັງສືລຳດັບເຊື້ອສາຍຂອງ ອາດາມ ເປັນດັ່ງນີ້: ໃນວັນທີ່ພຣະເຈົ້າ
ໄດ້ຊົງເນລະມິດສ້າງມະນຸດນັ້ນ ພຣະອົງໄດ້ສ້າງຕາມແບບຢ່າງຂອງ
ພຣະເຈົ້າ. ໒ພຣະອົງໄດ້ເນລະມິດສ້າງເຂົາທັງຜູ້ຊາຍແລະຜູ້ຍິງ ແລະ
ໄດ້ອວຍພອນໃຫ້ເຂົາ ແລະໄດ້ເອີ້ນນາມຊື່ເຂົາວ່າ ອາດາມ* ໃນວັນ
ທີ່ເນລະມິດສ້າງເຂົາແລ້ວ. ໓ອາດາມ ອາຍຸໄດ້ 130 ປີແລ້ວ ໄດ້ມີລູກ
ຊາຍຄົນໜຶ່ງຕາມແບບຢ່າງຮູບຮ່າງຄ້າຍຄືກັບຕົນແລະເອີ້ນຊື່ວ່າ
ເຊດ. ໔ແລະຫຼັງຈາກອາດາມ ໄດ້ໃຫ້ກຳເນີດ ເຊດ ທ່ານກໍມີຊີວິດຍືນ
ຍາວຕໍ່ໄປອີກ 800 ປີ ແລະມີລູກຊາຍຍິງຫຼາຍຄົນ. ໕ອາຍຸທັງສິ້ນຂອງ
ອາດາມ ໄດ້ 930 ປີ  ແລະເພິ່ນໄດ້ຕາຍໄປ. ໖ເຊດ ອາຍຸໄດ້ 105 ປີ
ແລ້ວມີລູກຊາຍຊື່ເອໂນດ.໗ແລະຫຼັງຈາກເຊດໄດ້ໃຫ້ກຳເນີດເອໂນດ
ທ່ານກໍມີຊີວິດຍືນຍາວຕໍ່ໄປອີກ 807 ປີ ແລະມີລູກຊາຍຍິງຫຼາຍຄົນ.
໘ອາຍຸທັງສິ້ນຂອງ ເຊດ ໄດ້ 912 ປີ ແລະ ເຊດ ໄດ້ຕາຍໄປ.

໙ເອໂນດ ອາຍຸໄດ້ 90 ປີແລ້ວ ມີລູກຊາຍຊື່ ເກນານ. ໑໐ແລະຫຼັງຈາກ
ເອໂນດ ໄດ້ໃຫ້ກຳເນີດ ເກນານ ທ່ານກໍມີຊີວິດຍືນຍາວຕໍ່ໄປອີກ
815 ປີ ແລະມີລູກຊາຍຍິງຫຼາຍຄົນ. ໑໑ອາຍຸທັງສິ້ນຂອງ ເອໂນດ ໄດ້
905 ປີ ແລະໄດ້ຕາຍໄປ.

໑໒ເກນານ ອາຍຸໄດ້ 70 ປີແລ້ວ ມີລູກຊາຍຊື່ ມາຫາລາເລນ. ໑໓ແລະ
ຫຼັງຈາກເກນານ ໄດ້ໃຫ້ກຳເນີດ ມາຫາລາເລນ ທ່ານກໍມີຊີວິດຍືນ
ຍາວຕໍ່ໄປອີກ 840 ປີ ແລະມີລູກຊາຍຍິງຫຼາຍຄົນ. ໑໔ອາຍຸທັງສິ້ນ
ຂອງ ເກນານ ໄດ້ 910 ປີ ແລະໄດ້ຕາຍໄປ.

໑໕ມາຫາລາເລນ ອາຍຸໄດ້ 65 ປີແລ້ວ ມີລູກຊາຍຊື່ ຢາເລດ. ໑໖ຫຼັງ
ຈາກ ມາຫາລາເລນ ໄດ້ໃຫ້ກຳເນີດ ຢາເລດ ທ່ານກໍມີຊີວິດຍືນຍາວ
ຕໍ່ໄປອີກ 830 ປີ ແລະມີລູກຊາຍຍິງຫຼາຍຄົນ. ໑໗ອາຍຸທັງສິ້ນຂອງ
ມາຫາລາເລນ ໄດ້ 895 ປີ ແລະໄດ້ຕາຍໄປ.

໑໘ຢາເລດ ອາຍຸໄດ້ 162 ປີ ມີລູກຊາຍຊື່ ເອໂນກ ໑໙ແລະຫຼັງຈາກ ຢາ
ເລດ ໄດ້ໃຫ້ກຳເນີດ ເອໂນກ ທ່ານກໍມີຊີວິດຍືນຍາວຕໍ່ໄປອີກ 800 ປີ
ແລະມີລູກຊາຍຍິງຫຼາຍຄົນ. ໒໐ອາຍຸທັງສິ້ນຂອງ ຢາເລດ ໄດ້ 962 ປີ
ແລະໄດ້ຕາຍໄປ.

໒໑ເອໂນກ ອາຍຸໄດ້ 65 ປີ ແລ້ວມີລູກຊາຍຊື່ ເມທູເຊລາ. ໒໒ແລະຫຼັງ
ຈາກ ເອໂນກ ໄດ້ໃຫ້ກຳເນີດ ເມທູເຊລາ ທ່ານໄດ້ເດີນກັບພຣະເຈົ້າ
300 ປີ ແລະມີລູກຊາຍຍິງຫຼາຍຄົນ. ໒໓ອາຍຸທັງສິ້ນຂອງ ເອໂນກ ໄດ້
365ປີ.໒໔ເອໂນກໄດ້ເດີນໄປກັບພຣະເຈົ້າ ແລະໄດ້ຫາຍໄປ ເພາະວ່າ
ພຣະເຈົ້າໄດ້ຮັບເອົາເພິ່ນໄປ.

໒໕ເມທູເຊລາ ອາຍຸໄດ້ 187 ປີແລ້ວ ມີລູກຊາຍຊື່ ເລເມັກ. ໒໖ແລະຫຼັງ
ຈາກ ເມທູເຊລາ ໄດ້ໃຫ້ກຳເນີດ ເລເມັກ ທ່ານກໍມີຊີວິດຍືນຍາວຕໍ່ໄປ
ອີກ 782 ປີ ແລະມີລູກຊາຍຍິງຫຼາຍຄົນ. ໒໗ອາຍຸທັງສິ້ນຂອງ ເມທູ
ເຊລາ ໄດ້ 969 ປີ ແລະໄດ້ຕາຍໄປ.

໒໘ເລເມັກ ອາຍຸໄດ້ 182 ປີແລ້ວ ມີລູກຊາຍຄົນໜຶ່ງ. ໒໙ແລະໄດ້ເອີ້ນ
ຊື່ລູກວ່າ ໂນອາ ແລະເວົ້າວ່າ “ລູກຄົນນີ້ຈະເລົ້າໂລມໃຈຂອງພວກ
ເຮົາກ່ຽວກັບວຽກງານແລະຄວາມອິດເມື່ອຍຂອງມືພວກເຮົາ ຍ້ອນ
ດິນທີ່ພຣະເຢໂຮວາໄດ້ສາບແຊ່ງນັ້ນ”. ໓໐ແລະຫຼັງຈາກເລເມັກໄດ້ໃຫ້
ກຳເນີດ ໂນອາ ທ່ານກໍມີຊີວິດຍືນຍາວຕໍ່ໄປອີກ 595 ປີ ແລະມີລູກ
ຊາຍຍິງຫຼາຍຄົນ. ໓໑ ອາຍຸທັງສິ້ນຂອງ ເລເມັກ ໄດ້ 777 ປີ ແລະ
ທ່ານໄດ້ຕາຍໄປ. ໓໒ເມື່ອໂນອາ ອາຍຸໄດ້ 500 ປີແລ້ວ ແລະໂນອາ
ມີລູກຊາຍສາມຄົນ ຊື່: ເຊມ, ຮາມ ແລະ ຢາເຟດ.

*5:2 ຊື່ “ອາດາມ” (□□□) ນີ້ໝາຍຄວາມວ່າ “ຄົນ” ຫຼື “ມະນຸດ” ແລະມີສຽງຄ້າຍຄື ຄຳອື່ນທີ່ໝາຍຄວາມວ່າ “ດິນແດງ”*

## ບົດທີ 6

໑ແລະຢູ່ຕໍ່ມາ ເມື່ອມະນຸດໄດ້ເພີ່ມທະວີຫຼາຍຂຶ້ນຕາມໜ້າແຜ່ນດິນ
ແລະມີລູກສາວຫຼາຍຄົນ. ໒ລູກຊາຍທັງຫຼາຍຂອງພຣະເຈົ້າໄດ້ເຫັນ
ວ່າລູກສາວຂອງມະນຸດນັ້ນສວຍງາມແລ້ວພວກເຂົາໄດ້ເອົາພວກ
ນາງມາເປັນເມຍຕາມໃຈມັກຂອງພວກເຂົາ. ໓ພຣະເຢໂຮວາໄດ້ກ່າວ
ວ່າ “ວິນຍານຂອງເຮົາຈະບໍ່ຖຽງ*ກັບມະນຸດຢູ່ໄປເປັນນິດ ເພາະວ່າ

ເຂົາກໍເປັນພຽງເນື້ອໜັງ ເຂົາຈະມີຊີວິດຢູ່ໄດ້ພຽງ 120 ປີ”. ໔ໃນຄາວ
ນັ້ນມີມະນຸດຍັກ*ຢູ່ເທິງແຜ່ນດິນໂລກ ແລະພາຍຫຼັງນັ້ນດ້ວຍ ເວລາ
ພວກລູກຊາຍຂອງພຣະເຈົ້າໄດ້ມາສົມສູ່ກັບລູກສາວຂອງມະນຸດ
ແລະພວກນາງກໍໄດ້ກຳເນີດລູກແກ່ພວກເຂົາ ແລະລູກທັງຫຼາຍນີ້ກໍ
ເປັນຄົນມີແຮງ*ຫຼາຍ ຕັ້ງແຕ່ບູຮານເປັນຄົນມີຊື່ສຽງ. ໕ແລະພຣະເຢ
ໂຮວາໄດ້ເຫັນວ່າຄວາມຊົ່ວຂອງມະນຸດມີຫຼາຍຂຶ້ນເທິງແຜ່ນດິນ
ໂລກແລະຈິນຕະນາການທັງສິ້ນແຫ່ງຄວາມຄິດໃນໃຈຂອງເຂົາມີ
ພຽງແຕ່ຄວາມຊົ່ວຮ້າຍທຸກເວລາ. ໖ພຣະເຢໂຮວາໄດ້ກັບໃຈຈາກ
ການສ້າງມະນຸດເທິງແຜ່ນດິນໂລກແລະພຣະໄທຂອງພຣະອົງຊົງ
ເປັນທຸກໂສກ. ໗ພຣະເຢໂຮວາໄດ້ກ່າວວ່າ “ເຮົາຈະທຳລາຍມະນຸດ
ທີ່ເຮົາໄດ້ເນລະມິດສ້າງມານັ້ນໃຫ້ສູນໄປຈາກພື້ນດິນທັງຄົນ, ສັດໃຊ້
ງານ, ສັດເລືອຄານ ແລະນົກໃນຟ້າອາກາດ ດ້ວຍວ່າເຮົາໄດ້ກັບໃຈ
ຈາກການທີ່ເຮົາໄດ້ສ້າງພວກເຂົາ”. ໘ແຕ່ວ່າ ໂນອາ ໄດ້ຮັບພຣະຄຸນ
ໃນສາຍພຣະເນດຂອງພຣະເຢໂຮວາ. ໙ເຊື້ອສາຍຂອງ ໂນອາ ເປັນ
ດັ່ງນີ້: ໂນອາ ເປັນຄົນຊອບທຳ ແລະໄຮ້ຕຳໜິໃນເຊື້ອສາຍຂອງທ່ານ
ແລະ ໂນອາ ໄດ້ເດີນກັບພຣະເຈົ້າ. ໑໐ໂນອາ ມີລູກຊາຍສາມ
ຄົນຊື່: ເຊມ, ຮາມ ແລະຢາເຟດ. ໑໑ແລະແຜ່ນດິນໂລກກໍຊົ່ວຊ້າຕໍ່ພຣະ
ພັກພຣະເຈົ້າ ແຜ່ນດິນໂລກເຕັມໄປດ້ວຍຄວາມທາລຸນໂຫດຮ້າຍ.
໑໒ພຣະເຈົ້າໄດ້ທອດພຣະເນດເທິງແຜ່ນດິນໂລກແລະເຫັນວ່າມີແຕ່
ຄວາມຊົ່ວຊ້າ ເຫດວ່າເນື້ອໜັງທັງໝົດໄດ້ເຮັດໃຫ້ທາງຂອງຕົນຊົ່ວ
ຊ້າໄປທົ່ວແຜ່ນດິນໂລກ.

໑໓ພຣະເຈົ້າໄດ້ກ່າວແກ່ ໂນອາ ວ່າ “ທີ່ສິ້ນສຸດແຫ່ງເນື້ອໜັງທັງໝົດໄດ້
ມາເຖິງຕໍ່ໜ້າເຮົາແລ້ວ ເຫດວ່າແຜ່ນດິນເຕັມໄປດ້ວຍຄວາມໂຫດ

ຮ້າຍທາລຸນຂອງເຂົາ ດັ່ງນັ້ນເຮົາຈະໃຫ້ເຂົາຈິບຫາຍເສຍພ້ອມກັນ
ກັບແຜ່ນດິນໂລກນີ້. ໑໔ເຈົ້າຈົ່ງເອົາໄມ້ ໂຄເຟ ສ້າງເຮືອໃຫຍ່ລຳໜຶ່ງ
ຈົ່ງສ້າງເປັນຫຼາຍຫ້ອງ ເອົາຢາງຂີ້ຊີທາທາງໃນແລະທາງນອກ. ໑໕ເຈົ້າ
ຈົ່ງສ້າງເຮືອນັ້ນຕາມດັ່ງນີ້: ຄວາມຍາວຂອງເຮືອ 300 ສອກ, ກວ້າງ
50 ສອກ, ສູງ 30 ສອກ. ໑໖ເຈົ້າຈົ່ງເຮັດປ່ອງຢ້ຽມອັນໜຶ່ງທາງເທິງເຮືອ
ນັ້ນຂະໜາດສອກໜຶ່ງໃຫ້ແລ້ວ, ສ້າງປະຕູທີ່ຂ້າງເຮືອນັ້ນແລະສ້າງ
ຖານຊັ້ນລຸ່ມ, ຊັ້ນສອງແລະຊັ້ນສາມ. ໑໗ເບິ່ງແມ, ຝ່າຍເຮົາ ເຮົາຈະ
ເຮັດໃຫ້ນ້ຳມາຖ້ວມແຜ່ນດິນໂລກ ເພື່ອທຳລາຍເນື້ອໜັງທັງໝົດທີ່ມີ
ລົມຫາຍໃຈແຫ່ງຊີວິດເສຍຈາກໃຕ້ຟ້າແລະທຸກສິ່ງທີ່ຢູ່ເທິງແຜ່ນດິນ
ຈະຕາຍໄປ. ໑໘ແຕ່ເຮົາຈະຕັ້ງຄຳສັນຍາຂອງເຮົາໄວ້ກັບເຈົ້າ ແລະເຈົ້າ
ຈົ່ງເຂົ້າໄປໃນເຮືອນັ້ນ ທັງເຈົ້າກັບລູກຊາຍ, ເມຍແລະລູກໃພ້ທັງຫຼາຍ
ຂອງເຈົ້າດ້ວຍ. ໑໙ເຈົ້າຈົ່ງນຳເອົາສັດທີ່ມີຊີວິດທຸກຊະນິດທັງໂຕຜູ້
ແລະໂຕແມ່ຢ່າງລະຄູ່ເຂົ້າມາໄວ້ໃນເຮືອດ້ວຍ ເພື່ອຮັກສາຊີວິດພວກ
ມັນໄວ້ກັບເຈົ້າ. ໒໐ຈາກນົກທັງຫຼາຍຕາມຊະນິດຂອງມັນ, ຈາກສັດ
ໃຊ້ງານຕາມຊະນິດຂອງມັນ, ຈາກສັດເລືອຄານຕາມຊະນິດຂອງມັນ
ທຸກຢ່າງ ຢ່າງລະຄູ່ຈົ່ງເອົາເຂົ້າມາຢູ່ນຳເຈົ້າ ເພື່ອຮັກສາພວກມັນໃຫ້
ມີຊີວິດ. ໒໑ຝ່າຍເຈົ້າ ຈົ່ງເອົາອາຫານທຸກຢ່າງທີ່ກິນໄດ້ມາໂຮມໄວ້
ນຳເຈົ້າ ແລະມັນຈະເປັນອາຫານສຳຫຼັບເຈົ້າ ແລະສຳຫຼັບສັດທັງຫຼາຍ
ນັ້ນດ້ວຍ. ໒໒ແລ້ວ ໂນອາ ໄດ້ກະທຳດັ່ງນັ້ນ ຕາມທີ່ພຣະເຈົ້າໄດ້ສັ່ງ
ແລ້ວນັ້ນທຸກປະການ.

*6:3 "ຖຽງກັບມະນຸດ" ຫຼືວ່າ "ຕໍ່ສູ້ກັບມະນຸດ"*

*6:4 "ມະນຸດຍັກ" ຫຼືວ່າ "ຄົນຕົວໃຫຍ່ສູງເຫຼືອເກີນ"*

*6:4 "ມີແຮງຫຼາຍ" ຫຼື "ມີອຳນາດຫຼາຍ" ຫຼື "ເຂັ້ມແຂງຫຼາຍ" ຫຼື "ກ້າຫານຫຼາຍ"*

*6:9 "ແລະບໍລິສຸດໃນເຊື້ອສາຍຂອງທ່ານ" ບາງທີ່ແປວ່າ "ໃນທ່າມກາງຄົນທັງຫຼາຍໃນເວລານັ້ນ"*

*6:14 "ໄມ້ ໂຄເຟ" ນີ້ຄືໄມ້ແປກຊະນິດໜຶ່ງທີ່ມີຢາງໜຽວຫຼາຍ, ມີເນື້ອແຂງແກ່ນແລະບໍ່ໂດກໄວ*

# ບົດທີ 7

໑ແລະພຣະເຢໂຮວາໄດ້ກ່າວແກ່ ໂນອາ ວ່າ "ເຈົ້າຈົ່ງເຂົ້າໄປໃນເຮືອ
ທັງເຈົ້າກັບຄອບຄົວຂອງເຈົ້າທັງໝົດ ເຫດວ່າເຮົາໄດ້ເຫັນເຈົ້າເປັນ
ຄົນຊອບທຳຕໍ່ໜ້າເຮົາໃນຊົ່ວອາຍຸນີ້". ໒ເຈົ້າຈົ່ງນຳເອົາສັດທັງປວງທີ່
ສະອາດທັງໂຕຜູ້ແລະໂຕແມ່ຢ່າງລະເຈັດຄູ່ແລະສັດທັງປວງທີ່ບໍ່
ສະອາດທັງໂຕຜູ້ແລະໂຕແມ່ຢ່າງລະຄູ່. ໓ນົກທັງຫຼາຍທີ່ຢູ່ໃນຟ້າອາ
ກາດກໍເໝືອນກັນ ຢ່າງລະເຈັດຄູ່ທັງໂຕຜູ້ແລະໂຕແມ່ ເພື່ອຈະໄດ້
ຮັກສາແນວພັນຂອງສັດໄວ້ໃຫ້ມີຊີວິດສືບໄປເທິງພື້ນແຜ່ນດິນໂລກ.
໔ເພາະວ່າຍັງອີກເຈັດວັນ ເຮົາຈະໃຫ້ຝົນຕົກເທິງແຜ່ນດິນລະຫວ່າງ
40 ວັນ 40 ຄືນ ແລະທຸກສິ່ງທີ່ເປັນຢູ່ທີ່ເຮົາໄດ້ສ້າງມານັ້ນ ເຮົາຈະໃຫ້
ຈິບຫາຍໄປຈາກໜ້າແຜນດິນໂລກ. ໕ແລະ ໂນອາ ໄດ້ກະທຳຕາມ
ຖ້ອຍຄຳທັງປວງທີ່ພຣະເຢໂຮວາໄດ້ສັ່ງໄວ້ແກ່ທ່ານ.

໖ເມື່ອນ້ຳຖ້ວມແຜ່ນດິນໂລກນັ້ນອາຍຸຂອງໂນອາໄດ້600ປີ.໗ໂນອາ
ໄດ້ເຂົ້າໄປໃນເຮືອພ້ອມກັບລູກຊາຍ, ເມຍ ແລະລູກໃພ້ທັງຫຼາຍຍ້ອນ
ນ້ຳຖ້ວມໃຫຍ່. ໘ສັດທີ່ສະອາດແລະສັດທີ່ບໍ່ສະອາດ, ນົກທັງຫຼາຍ
ແລະສັດທີ່ເລືອຄານທຸກຢ່າງເທິງແຜນດິນ ໙ກໍໄດ້ເຂົ້າໄປໃນເຮືອກັບ
ໂນອາເປັນຄູ່ໆທັງໂຕຜູ້ແລະໂຕແມ່ຕາມທີ່ພຣະເຈົ້າໄດ້ສັ່ງແກ່ໂນອາ

ແລ້ວ. ໑໐ແລະຢູ່ມາອີກເຈັດວັນ ນ້ຳຖ້ວມໃຫຍ່ກໍໄດ້ຕົກໃສ່ເທິງແຜ່ນ
ດິນໂລກ.

໑໑ເມື່ອ ໂນອາ ມີອາຍຸ 600 ປີ ໃນເດືອນທີ 2 ວັນທີ 17 ຂອງເດືອນນັ້ນ
ໃນວັນນັ້ນນ້ຳບາດານທັງຫຼາຍທີ່ຢູ່ເລິກໃຕ້ພື້ນດິນກໍພຸ່ງຂຶ້ນມາແລະ
ປ່ອງເທິງທ້ອງຟ້າໄດ້ເປີດອອກ. ໑໒ແລະຝົນໄດ້ຕົກເທິງແຜ່ນດິນໂລກ
40 ວັນ 40 ຄືນ. ໑໓ໃນວັນນັ້ນເອງ ໂນອາ ກັບລູກຊາຍຂອງທ່ານຄື
ເຊມ, ຮາມ, ຢາເຟດ, ເມຍຂອງໂນອາ ແລະເມຍຂອງລູກຊາຍສາມ
ຄົນໄດ້ພາກັນເຂົ້າໄປໃນເຮືອ. ໑໔ທັງເຂົາແລະສັດປ່າທັງປວງຕາມ
ຊະນິດຂອງມັນ, ສັດໃຊ້ງານທັງຫຼາຍຕາມຊະນິດຂອງມັນ, ສັດທັງ
ປວງທີ່ເລືອຄານເທິງດິນຕາມຊະນິດຂອງມັນ ແລະນົກທັງປວງຕາມ
ຊະນິດຂອງມັນ ຄືບັນດານົກທີ່ມີລັກສະນະແຕກຕ່າງກັນ. ໑໕ສັດທັງ
ປວງທີ່ມີລົມຫາຍໃຈແຫ່ງຊີວິດກໍໄດ້ເຂົ້າໄປໃນເຮືອນຳ ໂນອາ ເປັນ
ຄູ່ໆ. ໑໖ສັດທັງຫຼາຍທີ່ໄດ້ເຂົ້າໄປມີທັງໂຕຜູ້ແລະໂຕແມ່ ມີທຸກຊະນິດ
ຕາມທີ່ພຣະເຈົ້າໄດ້ສັ່ງແກ່ທ່ານແລ້ວນັ້ນ ແລ້ວພຣະເຢໂຮວາໄດ້ປິດ
ປະຕູເຮືອໃຫ້ທ່ານ. ໑໗ນ້ຳໄດ້ຖ້ວມເທິງແຜ່ນດິນໂລກ 40 ວັນ ແລະນ້ຳ
ທັງຫຼາຍໄດ້ເພີ່ມຫຼາຍຂຶ້ນແລະໄດ້ຍົກເອົາເຮືອລອຍຂຶ້ນຈາກດິນ.
໑໘ນ້ຳທັງຫຼາຍໄຫຼແຮງຂຶ້ນ ແລະເພີ່ມທະວີຂຶ້ນຢ່າງຫຼວງຫຼາຍເທິງແຜນ
ດິນ ແລະເຮືອໄດ້ລອຍຢູ່ເທິງໜ້ານ້ຳ. ໑໙ນ້ຳທັງຫຼາຍກໍໄຫຼແຮງທະວີຂຶ້ນ
ຢ່າງຫຼວງຫຼວງເທິງແຜ່ນດິນແລະພູເຂົາທັງປວງທີ່ສູງຢູ່ທົ່ວໃຕ້ຟ້າກໍ
ຖືກນ້ຳຖ້ວມເສຍໝົດສິ້ນ. ໒໐ນ້ຳໄດ້ຖ້ວມພູເຂົາທັງຫຼາຍນັ້ນ ສູງຂຶ້ນ
ໄປອີກ 15 ສອກ. ໒໑ບັນດາເນື້ອໜັງທັງໝົດທີ່ເຄື່ອນໄຫວຢູ່ເທິງແຜນ
ດິນໂລກໄດ້ຕາຍໄປ ທັງນົກ, ສັດໃຊ້ງານ, ສັດປ່າ, ສັດທັງຫຼາຍທີ່ເລືອ
ຄານເທິງດິນ ແລະມະນຸດທຸກຄົນ. ໒໒ສິ່ງທັງປວງທີ່ມີລົມຫາຍໃຈແຫ່ງ

ຊີວິດເຂົ້າອອກທາງຮູດັງ ແລະທີ່ຢູ່ເທິງດິນແຫ້ງກໍໄດ້ຕາຍໄປ. ໒໓ທຸກ
ສິ່ງທີ່ມີຊີວິດຢູ່ເທິງພື້ນດິນໂລກໄດ້ຖືກທຳລາຍເສຍໝົດ ທັງຄົນແລະ
ສັດໃຊ້ງານ, ສັດທີ່ເລືອຄານ ແລະນົກທັງຫຼາຍໃນຟ້າອາກາດໄດ້ຈິບ
ຫາຍເສຍຈາກແຜ່ນດິນ ເຫຼືອຢູ່ແຕ່ ໂນອາ ກັບທຸກສິ່ງທີ່ຢູ່ນຳທ່ານໃນ
ເຮືອນັ້ນ. ໒໔ນ້ຳທັງຫລາຍກໍໄຫຼແຮງມາກທະວີຂຶ້ນເທິງແຜ່ນດິນເປັນ
ເວລາ 150 ວັນ.

## ບົດທີ 8

໑ພຣະເຈົ້າໄດ້ລະນຶກເຖິງ ໂນອາ ກັບສັດທັງປວງທີ່ຢູ່ນຳທ່ານໃນເຮືອ
ແລະພຣະເຈົ້າໄດ້ກະທຳໃຫ້ລົມພັດມາເທິງແຜ່ນດິນແລະນ້ຳທັງ
ຫຼາຍໄດ້ບົກລົງ. ໒ນ້ຳບາດານທີ່ຢູ່ເລິກໃຕ້ພື້ນດິນ ແລະບັນດາປ່ອງ
ແຫ່ງຟ້າສະຫວັນກໍຖືກປິດ ແລະຝົນຈາກຟ້າກໍໄດ້ເຊົາຕົກ. ໓ນ້ຳທັງ
ຫຼາຍໄດ້ຄ່ອຍໆບົກລົງຈາກດິນ ແລະເມື່ອ150 ວັນລ່ວງໄປແລ້ວ ນ້ຳ
ທັງຫຼາຍໄດ້ບົກໜ້ອຍລົງ. ໔ແລະໃນວັນທີ 17 ເດືອນ 7 ເຮືອໄດ້ຄ້າງ
ຢູ່ໃນຍອດພູເຂົາອາຣາຣັດ. ໕ນ້ຳທັງຫຼາຍໄດ້ລຸດລົງຈົນເຖິງເດືອນທີ
10 ໃນມື້ທີ່ 1 ຂອງເດືອນທີ່ 10 ຍອດພູເຂົາທັງຫຼາຍໄດ້ປະກົດອອກ.
໖ແລະຢູ່ມາອີກ 40 ວັນ ໂນອາ ໄດ້ໄຂປ່ອງຢ້ຽມເຮືອທີ່ທ່ານໄດ້ເຮັດ
ໄວ້ນັ້ນ. ໗ແລະໄດ້ປ່ອຍນົກກາໂຕໜຶ່ງອອກໄປ ນົກການັ້ນໄດ້ບິນໄປ
ມາຈົນນ້ຳແຫ້ງລົງເທິງແຜ່ນດິນ. ໘ໂນອາໄດ້ປ່ອຍນົກກາງແກຕົວໜຶ່ງ
ອອກໄປ ເພື່ອຈະໄດ້ເບິ່ງວ່າ ນ້ຳບົກແຫ້ງລົງເທິງພື້ນດິນແລ້ວຫຼືຍັງ.
໙ແຕ່ວ່ານົກກາງແກບໍ່ໄດ້ພົບບ່ອນທີ່ຈະຈັບຢູ່ໄດ້ ແລະໄດ້ກັບມາຫາ
ທ່ານໃນເຮືອ ເພາະວ່ານ້ຳທັງຫຼາຍຍັງຖ້ວມຢູ່ເທິງພື້ນແຜ່ນດິນທົ່ວໄປ
ແລະທ່ານໄດ້ຢຽດມືອອກໄປຈັບນົກນັ້ນເຂົ້າມາໄວ້ກັບທ່ານໃນເຮືອ.

໑໐ທ່ານໄດ້ຄອຍຖ້າອີກເຈັດວັນ ຈິ່ງປ່ອຍນົກກາງແກອອກໄປຈາກ
ເຮືອອີກຄັ້ງໜຶ່ງ. ໑໑ແລະເວລາຄໍ່າ ນົກກາງແກໄດ້ກັບມາຫາທ່ານ
ແລະເບິ່ງແມ ນົກນັ້ນໄດ້ຄາບເອົາໃບໄມ້ຊຽວສົດປົດອອກຈາກຕົ້ນ
ໝາກກອກມາ ດັ່ງນັ້ນ ໂນອາ ຈິ່ງໄດ້ຮູ້ຈັກວ່ານໍ້າໄດ້ບົກລົງແລ້ວເທິງ
ດິນ. ໑໒ແລະທ່ານໄດ້ຄອຍຖ້າອີກເຈັດວັນ ຈິ່ງປ່ອຍນົກກາງແກອອກ
ໄປ ແລະນົກນັ້ນບໍ່ໄດ້ກັບມາຫາທ່ານອີກເລີຍ.

໑໓ແລະຢູ່ມາໃນປີທີ 601 ໃນວັນທີ 1 ຂອງເດືອນທີ 1 ນໍ້າທັງຫຼາຍກໍ
ແຫ້ງໝົດໄປຈາກແຜ່ນດິນແລ້ວ. ໂນອາໄດ້ມ້າງຫຼັງຄາເຮືອອອກເສຍ
ແລະໄດ້ຫຼຽວເບິ່ງ ແລະເບິ່ງແມ ພື້ນດິນກໍໄດ້ແຫ້ງແລ້ວ. ໑໔ແລະໃນ
ເດືອນທີ 2 ວັນທີ 27ຂອງເດືອນນັ້ນ ແຜ່ນດິນໂລກກໍແຫ້ງດີແລ້ວ.

໑໕ພຣະເຈົ້າໄດ້ກ່າວແກ່ ໂນອາ ວ່າ, ໑໖“ຈົ່ງອອກໄປຈາກເຮືອເຖີດ ທັງ
ເຈົ້າກັບເມຍຂອງເຈົ້າ, ລູກຊາຍ ແລະລູກໃພ້ທັງຫຼາຍຂອງເຈົ້າ. ໑໗ແລະ
ສັດທັງປວງທີ່ມີຊີວິດທຸກຢ່າງທີ່ຢູ່ນຳເຈົ້າ ທັງນົກ, ສັດໃຊ້ງານ ແລະ
ສັດທຸກຕົວທີ່ເລືອຄານເທິງດິນເຈົ້າ ຈົ່ງປ່ອຍອອກມາ ແລະໃຫ້ມັນພາ
ກັນອອກແມ່ແຜ່ລູກຢ່າງບໍລິບູນໃນແຜ່ນດິນໂລກ ແລະໃຫ້ມັນມີລູກ
ມາກຫຼາຍແລະເພີ່ມທະວີຂຶ້ນເທິງແຜ່ນດິນໂລກ”. ໑໘ແລ້ວ ໂນອາ ໄດ້
ອອກມາພ້ອມກັບລູກຊາຍ, ເມຍ ແລະລູກໃພ້ທັງຫຼາຍທີ່ຢູ່ກັບທ່ານ.
໑໙ສັດທຸກຕົວ, ສັດທີ່ເລືອຄານທຸກຕົວ, ນົກທຸກຕົວ ແລະທຸກສິ່ງທີ່ເຄື່ອນ
ໄຫວໄປມາເທິງແຜ່ນດິນຕາມຊະນິດຂອງມັນ ກໍໄດ້ອອກມາຈາກ
ເຮືອ. ໒໐ໂນອາ ໄດ້ສ້າງແທ່ນບູຊາແດ່ພຣະເຢໂຮວາ ແລະໄດ້ເອົາສັດ
ທີ່ສະອາດທຸກຢ່າງ ແລະນົກທີ່ສະອາດທຸກຢ່າງ ຖວາຍເປັນເຄື່ອງ
ເຜົາບູຊາເທິງແທ່ນນັ້ນ. ໒໑ພຣະເຢໂຮວາໄດ້ດົມກິ່ນຫອມຫວານແລະ

ພຣະເຢໂຮວາໄດ້ກ່າວໃນພຣະໄທຂອງພຣະອົງວ່າ "ເຮົາຈະບໍ່ສາບ
ແຊ່ງແຜ່ນດິນໂລກຍ້ອນມະນຸດອີກຕໍ່ໄປ ເພາະວ່າເຈຕະນາໃນໃຈ
ຂອງມະນຸດກໍຊົ່ວຕັ້ງແຕ່ໜຸ່ມມາ ແລະເຮົາຈະບໍ່ປະຫານທຸກສິ່ງທີ່ມີ
ຊີວິດຢູ່ອີກຕໍ່ໄປເໝືອນຢ່າງເຮົາໄດ້ກະທຳມາແລ້ວນັ້ນ. ໒໒"ຕັ້ງແຕ່ນີ້
ຕໍ່ໄປຕາບໃດແຜນດິນໂລກຍັງຕັ້ງຢູ່ຈະມີລະດູຫວ່ານກ້າແລະລະດູ
ກ່ຽວ, ລະດູໜາວແລະລະດູຮ້ອນ, ລະດູຝົນແລະລະດູແລ້ງ, ກາງເວັນ
ແລະກາງຄືນ ຈະມີຢູ່ບໍ່ຂາດຈັກເທື່ອ".

## ບົດທີ 9

໑ພຣະເຈົ້າໄດ້ຊົງອວຍພອນໃຫ້ໂນອາກັບລູກຊາຍທັງຫຼາຍຂອງທ່ານ
ແລະກ່າວແກ່ເຂົາວ່າ "ຈົ່ງພາກັນມີລູກມາກແລະເພີ່ມທະວີຂຶ້ນໃຫ້
ເຕັມແຜ່ນດິນໂລກອີກ". ໒ສັດທຸກຕົວທີ່ແຜ່ນດິນ, ນົກທຸກຕົວທີ່ຟ້າ
ອາກາດ, ສັດທັງປວງທີ່ເຄື່ອນໄຫວໄປມາເທິງແຜ່ນດິນ ແລະປາ
ທັງປວງໃນນໍ້າທະເລທັງໝົດນັ້ນຈະມີຄວາມຫວາດຫວັ່ນແລະຢ້ານ
ກົວພວກທ່ານ ສັດທັງປວງນັ້ນເປັນທີ່ມອບໄວ້ໃນມືພວກທ່ານແລ້ວ.
໓ສັດທຸກຕົວທີ່ມີຊີວິດເຄື່ອນໄຫວໄປມາຈະເປັນອາຫານສຳຫຼັບພວກ
ທ່ານ ສັບພະທຸກສິ່ງນັ້ນເຮົາໄດ້ປະທານແກ່ພວກທ່ານເໝືອນດັ່ງຜັກ
ຂຽວ. ໔ແຕ່ຊີ້ນກັບຊີວິດຂອງມັນ ຄືເລືອດຂອງມັນ ພວກເຈົ້າຢ່າກິນ.
໕ແລະຈິງແທ້ ເລືອດນັ້ນເປັນຊີວິດຂອງພວກທ່ານ ເຮົາຈະຮຽກຮ້ອງ
ເອົາ, ເຮົາຈະຮຽກຮ້ອງເອົານຳສັດທັງປວງນັ້ນ ແລະເຮົາຈະຮຽກຮ້ອງ
ເອົານຳມືມະນຸດດ້ວຍ ເຮົາຈະຮຽກຮ້ອງເອົາຊີວິດຄົນນຳມືພີ່ນ້ອງ
ຂອງຕົນທຸກຄົນ. ໖ທຸກຄົນທີ່ເຮັດໃຫ້ເລືອດມະນຸດໄຫຼອອກ ເລືອດຄົນ
ນັ້ນຈະໄຫຼອອກດ້ວຍມືຂອງມະນຸດ ເພາະວ່າພຣະເຈົ້າໄດ້ສ້າງຄົນ

ຕາມແບບຢ່າງຂອງພຣະເຈົ້າ. ໗ແລະຝ່າຍທ່ານທັງຫຼາຍ ຈົ່ງພາກັນ
ເກີດລູກຫຼາຍແລະມາກທະວີຂຶ້ນຈົ່ງແຈກຢາຍໄປໃຫ້ບໍລິບູນທົ່ວແຜ່ນ
ດິນ ແລະເພີ່ມທະວີຫຼາຍຂຶ້ນເທິງແຜ່ນດິນໂລກເຖີດ.

໘ພຣະເຈົ້າໄດ້ກ່າວແກ່ ໂນອາ ແລະແກ່ລູກຊາຍທັງຫຼາຍຂອງຕົນວ່າ,
໙"ບັດນີ້, ເຮົາຕັ້ງຄໍາສັນຍາຂອງເຮົາໄວ້ກັບພວກທ່ານ ແລະກັບເຊື້ອ
ສາຍຂອງພວກທ່ານທີ່ຈະມາພາຍຫຼັງ, ໑໐ແລະກັບສັດທັງປວງທີ່ມີຊີ
ວິດຢູ່ກັບພວກທ່ານ ນົກທັງຫຼາຍກັບສັດໃຊ້ງານ ແລະສັດທຸກຕົວທີ່ຢູ່
ແຜ່ນດິນກັບພວກທ່ານ, ສັບພະທຸກສິ່ງທີ່ໄດ້ອອກມາຈາກເຮືອ ແລະ
ສັດທັງປວງທີ່ແຜ່ນດິນໂລກ. ໑໑ເຮົາຈະຕັ້ງຄໍາສັນຍາຂອງເຮົາໄວ້ກັບ
ພວກທ່ານ ເນື້ອໜັງທຸກຢ່າງຈະບໍ່ຖືກທໍາລາຍດ້ວຍນໍ້າຖ້ວມອີກຕໍ່ໄປ
ແລະຈະບໍ່ມີນໍ້າຖ້ວມໃຫຍ່ທໍາລາຍແຜ່ນດິນໂລກອີກຕໍ່ໄປ". ໑໒ພຣະ
ເຈົ້າໄດ້ກ່າວວ່າ "ອັນນີ້ແມ່ນໝາຍສໍາຄັນແຫ່ງຄໍາສັນຍາທີ່ເຮົາໄດ້ຕັ້ງ
ໄວ້ລະຫວ່າງເຮົາກັບພວກທ່ານ ແລະທຸກສິ່ງທີ່ມີຊີວິດທີ່ຢູ່ກັບພວກ
ທ່ານໃນທຸກຊົ່ວອາຍຸທັງຫຼາຍສືບໆໄປເປັນນິດ. ໑໓ເຮົາຈະຕັ້ງຮຸ້ງກິນ
ນໍ້າຂອງເຮົາໄວ້ທີ່ເມກ ແລະຮຸ້ງນັ້ນຈະເປັນໝາຍສໍາຄັນແຫ່ງຄໍາສັນ
ຍາລະຫວ່າງເຮົາກັບແຜ່ນດິນໂລກ. ໑໔ແລະຕໍ່ມາເມື່ອເຮົາຈະໃຫ້ບັງ
ເກີດເມກເທິງແຜ່ນດິນ ເມື່ອນັ້ນຮຸ້ງຈະປະກົດໃຫ້ເຫັນໃນເມກນັ້ນ
໑໕ແລະເຮົາຈະລະນຶກເຖິງຄໍາສັນຍາຂອງເຮົາລະຫວ່າງເຮົາກັບພວກ
ທ່ານ ແລະສັດທັງປວງທີ່ມີຊີວິດຈາກເນື້ອໜັງທຸກຢ່າງ ແລະນໍ້າທັງ
ຫຼາຍຈະບໍ່ຖ້ວມທໍາລາຍເນື້ອໜັງອີກຕໍ່ໄປ". ໑໖"ຮຸ້ງນັ້ນຈະຢູ່ທີ່ເມກ
ແລະເຮົາຈະເບິ່ງຮຸ້ງນັ້ນ ເພື່ອຈະໄດ້ລະນຶກເຖິງຄໍາສັນຍາອັນຕະ
ຫຼອດໄປເປັນນິດລະຫວ່າງພຣະເຈົ້າກັບສິ່ງສາລະພັດທີ່ມີຊີວິດແຫ່ງ
ເນື້ອໜັງທັງໝົດທີ່ຢູ່ເທິງແຜ່ນດິນໂລກ". ໑໗ພຣະເຈົ້າໄດ້ກ່າວແກ່ ໂນ
ອາ ວ່າ "ສິ່ງນີ້ເປັນໝາຍສໍາຄັນແຫ່ງຄໍາສັນຍາ ທີ່ເຮົາໄດ້ຕັ້ງໄວ້ລະ

ຫວ່າງເຮົາກັບເນື້ອໜັງທັງໝົດທີ່ຢູ່ເທິງແຜ່ນດິນໂລກ”.

໑໘ລູກຊາຍຂອງ ໂນອາ ທີ່ໄດ້ອອກມາຈາກເຮືອຄື ເຊມ, ຮາມ ແລະ
ຢາເຟດ; ຮາມ ເປັນພໍ່ຂອງ ການາອານ. ໑໙ທັງສາມຄົນນີ້ແມ່ນລູກ
ຊາຍຂອງ ໂນອາ. ຈາກຄົນພວກນີ້ ມະນຸດຈຶ່ງໄດ້ແຜ່ກະຈາຍໄປ
ທົ່ວແຜ່ນດິນໂລກ. ໒໐ແລ້ວ ໂນອາ ໄດ້ຕັ້ງຕົ້ນເປັນຄົນເຮັດສວນ ແລະ
ໄດ້ປູກສວນອາງຸ່ນແຫ່ງໜຶ່ງ. ໒໑ແລະໄດ້ກິນເຫຼົ້າອາງຸ່ນຈົນເມົາ ແລະ
ໄດ້ເປືອຍຕົວຢູ່ໃນເຕັນອາໄສຂອງທ່ານ. ໒໒ຮາມ ຜູ້ເປັນພໍ່ຂອງ ການາ
ອານ ໄດ້ເຫັນພໍ່ຂອງຕົນເປືອຍຕົວຢູ່ແລະໄດ້ໄປບອກອ້າຍທັງສອງ
ຢູ່ພາຍນອກ. ໒໓ເຊມ ກັບ ຢາເຟດ ໄດ້ພາກັນເອົາເສື້ອຊັ້ນນອກພາດ
ທີ່ບ່າຂອງເຂົາທັງສອງຄົນ ແລະຍ່າງຖອຍຫຼັງເຂົ້າໄປ ແລະເອົາເສື້ອ
ນັ້ນ ປົກຕົວພໍ່ທີ່ເປືອຍຢູ່ແລະບໍ່ໄດ້ຫຼຽວໜ້າເບິ່ງພໍ່ທີ່ເປືອຍຕົວຢູ່ນັ້ນ.
໒໔ໂນອາ ໄດ້ຕື່ນຈາກເມົາເຫຼົ້າອາງຸ່ນ ແລະໄດ້ຮູ້ວ່າລູກຫຼ້າໄດ້ກະທຳ
ການອັນໃດແກ່ຕົນ. ໒໕ທ່ານໄດ້ກ່າວວ່າ “ຂໍໃຫ້ ການາອານ ຖືກ
ສາບແຊ່ງ, ລາວຈະເປັນທາດແຫ່ງທາດຂອງອ້າຍທັງຫຼາຍຂອງຕົນ”
໒໖ທ່ານໄດ້ກ່າວວ່າ “ຈົ່ງສັນເສີນພຣະເຢໂຮວາພຣະເຈົ້າຂອງ ເຊມ
ແລະໃຫ້ ການາອານ ເປັນທາດຂອງເຂົາ. ໒໗ຂໍພຣະເຈົ້າໂຜດໃຫ້
ຢາເຟດ ທະວີຂຶ້ນເປັນອັນມາກຫຼາຍ ແລະໃຫ້ລາວຢູ່ໃນເຕັນອາໄສ
ທັງຫຼາຍຂອງ ເຊມ ແລະໃຫ້ ການາອານ ເປັນທາດຂອງເຂົາ”. ໒໘ແລະ
ຫຼັງຈາກນ້ຳຖ້ວມໃຫຍ່ແລ້ວ ໂນອາ ມີອາຍຸຕໍ່ໄປອີກ 350 ປີ. ໒໙ແລະ
ອາຍຸທັງສິ້ນຂອງ ໂນອາ ໄດ້ 950 ປີ ແລະທ່ານໄດ້ຕາຍໄປ.

*9:26 “ຈົ່ງສັນເສີນພຣະເຢໂຮວາພຣະເຈົ້າຂອງ ເຊມ” ຫຼືວ່າ “ຈົ່ງສັນເສີນພຣະເຢໂຮວາຜູ້ເປັນພຣະເຈົ້າຂອງເຊມ” ຫຼືວ່າ “ພຣະເຢໂຮວາພຣະເຈົ້າຊົງຮັບການສັນເສີນຈາກເຊມ”*

# ບົດທີ 10

໑ເຊື້ອສາຍທັງຫຼາຍຂອງລູກໂນອາ ຄື: ເຊມ, ຮາມ ແລະ ຢາເຟດ ແລະ
ພາຍຫຼັງນໍ້າຖ້ວມໃຫຍ່ເຂົາໄດ້ມີລູກຊາຍຫຼາຍຄົນ. ໒ລູກຊາຍຂອງ
ຢາເຟດ ຊື່: ໂກເມ, ມາກົກ, ມາດາຍ, ຢາວານ, ຕູບານ, ເມເຊັກແລະ
ຕີລາດ. ໓ລູກຊາຍຂອງ ໂກເມ ຊື່: ອັດເກນາດ, ລີຟາດ ແລະ ໂຕການມາ.
໔ລູກຊາຍຂອງ ຢາວານ ຊື່: ເອລີຊາ, ທາລະຊິດ, ກິດຕີມ ແລະ ໂດດາ
ນີມ. ໕ຈາກຄົນເຫຼົ່ານີ້ເຂດແດນຂອງຊົນຊາດຕ່າງໆໄດ້ແຍກອອກໄປ
ຢູ່ໃນເກາະທັງຫຼາຍ ຕາມພາສາຂອງເຂົາທຸກຄົນ, ຕາມຄອບຄົວຂອງ
ເຂົາ ແລະໃນປະເທດທັງຫຼາຍຂອງເຂົາ.

໖ລູກຊາຍຂອງ ຮາມ ຊື່: ກູເຊ, ມິດຊະລາອີມ, ພູດ ແລະ ການາອານ.
໗ລູກຊາຍຂອງ ກູເຊ ຊື່: ເຊບາ, ຮາວີລາ, ຊັບຕາ, ຣາອາມາ ແລະ
ຊັບເຕກາ ແລະ ລູກຊາຍຂອງ ຣາອາມາ ຊື່: ເຊບາ ແລະ ເດດານ.
໘ກູເຊ ມີລູກຊາຍຊື່: ນິມໂຣດ, ລາວໄດ້ເລີ່ມຕົ້ນເປັນຄົນມີອຳນາດ
ຫຼາຍເທິງແຜ່ນດິນໂລກ. ໙ທ່ານເປັນນາຍພານທີ່ຍິ່ງໃຫຍ່ຕໍ່ໜ້າພຣະ
ເຢໂຮວາ ເພາະເຫດນີ້ ຈຶ່ງມີຄຳເລົ່າລືວ່າ “ເໝືອນດັ່ງ ນິມໂຣດ ນາຍ
ພານຜູ້ຍິ່ງໃຫຍ່ຕໍ່ໜ້າພຣະເຢໂຮວາ”. ໑໐ການເລີ່ມຕົ້ນອານາຈັກຂອງ
ທ່ານແມ່ນເມືອງບາເບັນ, ເມືອງເອເຣກ, ເມືອງອັກກາດ ແລະເມືອງ
ການາເນ ໃນດິນແດນຂອງຊີນານ. ໑໑ຈາກດິນແດນນັ້ນທ່ານໄດ້ຍົກ
ຍ້າຍອອກໄປຢູ່ອັດຊີເລຍ ແລະໄດ້ກໍ່ສ້າງເມືອງນີນາເວ, ເມືອງເຣ
ໂຮໂບດ, ເມືອງກາລາ, ໑໒ແລະເມືອງເຣເຊັນ ຢູ່ລະຫວ່າງກາງເມືອງ
ນີນາເວກັບເມືອງກາລາ ເມືອງນີ້ແມ່ນເມືອງໃຫຍ່. ໑໓ແລະ ມິດຊະລາ
ອີມ ໄດ້ເກີດ ພວກລູດີມ, ພວກອານາມີມ, ພວກເລຮາບີມ, ພວກນັບ

ຕູຮິມ, ໑໔ພວກປາດຣູຊິມ, ພວກກາດລູຮິມ (ພວກຟີລິດສະຕິນ ໄດ້
ເກີດອອກຈາກພວກນີ້) ແລະພວກ ກາບໂຕຣິມ. ໑໕ການາອານ ມີລູກ
ຊາຍກົກຊື່: ຊີໂດນ, ເຮດ, ໑໖ຊາວເຢບູດ, ຊາວອາໂມ, ຊາວກີກາຊີ,

໑໗ຊາວ ຮີວີ, ຊາວອາກີ, ຊາວຊີນີ, ໑໘ຊາວອາວາດີ, ຊາວເສມາຣີ ແລະ
ຊາວຮາມາທີ ແລະພາຍຫຼັງນັ້ນຄອບຄົວທັງຫຼາຍຂອງພວກ ການາ
ອານ ກໍໄດ້ແຜ່ກະຈາຍອອກໄປ. ໑໙ເຂດແດນພວກ ການາອານ ໄດ້
ເລີ່ມຕັ້ງແຕ່ເມືອງ ຊີໂດນ ໄປທາງ ເມືອງເກຣາ ຈົນເຖິງເມືອງກາສາ
ໄປທາງເມືອງໂຊໂດມ, ເມືອງໂກໂມຣາ, ເມືອງອັດມາ, ເມືອງເສບົວ
ອີມ ຈົນເຖິງເມືອງລາຊາ. ໒໐ພວກນີ້ເປັນລູກຊາຍທັງຫຼາຍຂອງຮາມ
ຕາມຄອບຄົວ, ຕາມພາສາຂອງເຂົາ, ໃນດິນແດນ ແລະໃນປະເທດ
ຂອງພວກເຂົາ.

໒໑ເຊມ ຜູ້ເປັນບັນພະບຸລຸດຂອງຄົນ ເອເບີ ທັງປວງ ແລະຜູ້ເປັນອ້າຍ
ກົກຂອງ ຢາເຟດ ກໍມີລູກຫຼາຍຄົນດ້ວຍ. ໒໒ລູກຊາຍຂອງ ເຊມ ນັ້ນຊື່:
ເອລາມ, ອັດຊູເຣ, ອາກປັດສາດ, ລູດ ແລະ ອາຣາມ. ໒໓ລູກຊາຍຂອງ
ອາຣາມຊື່:ອູເຊ,ຮຸນ,ເກເທ ແລະ ມາເຊ.໒໔ອາກປັດສາດມີລູກຊາຍຊື່:
ເຊລາ ແລະເຊລາ ມີລູກຊາຍຊື່: ເອເບີ. ໒໕ເອເບີ ມີລູກຊາຍສອງຄົນ
ຜູ້ໜຶ່ງຊື່: ເປເລກ ເພາະວ່າໃນສະໄໝຂອງເຂົາແຜ່ນດິນໂລກເປັນທີ່
ແບ່ງແຍກ ແລະນ້ອງຊາຍຂອງ ເປເລກ ຊື່: ໂຢກທານ. ໒໖ໂຢກທານ
ມີລູກຊາຍຊື່: ອານໂມດາດ, ເຊເລບ, ຮາຊາຣ-ມາເວດ, ເຢຣາ, ໒໗ຮາ
ໂດຣາມ, ອູຊັນ, ດິກລາ, ໒໘ໂອບານ, ອາບີມາເອນ, ເຊບາ, ໒໙ໂອຟີ,
ຮາວີລາ ແລະ ໂຢບັບ ຄົນທັງປວງນີ້ເປັນລູກຂອງ ໂຢກທານ. ໓໐ແລະ
ບ່ອນທີ່ອາໄສຂອງເຂົາຕັ້ງຢູ່ແຕ່ເມືອງເມຊາ ໄປທາງພູເຂົາ ເຊຟາ

ທິດຕາເວັນອອກ. ໓໑ພວກນີ້ແມ່ນລູກຊາຍທັງຫຼາຍຂອງ ເຊມ ຕາມ
ຄອບຄົວ, ຕາມພາສາຂອງເຂົາ, ຕາມດິນແດນ ແລະຕາມປະເທດ
ຂອງເຂົາ.

໓໒ຄົນທັງຫຼາຍນີ້ແມ່ນ ຄອບຄົວຂອງລູກຊາຍທັງຫຼາຍຂອງ ໂນອາ
ຕາມເຊື້ອສາຍໃນປະເທດຂອງເຂົາ: ພວກຊົນຊາດທັງປວງທີ່ໄດ້ແຜ່
ຂະຫຍາຍໄປຢູ່ເທິງແຜ່ນດິນໂລກ ພາຍຫຼັງນໍ້າຖ້ວມໃຫຍ່ແລ້ວ ກໍໄດ້
ອອກມາຈາກຄົນທັງຫຼາຍນີ້.

## ບົດທີ 11

໑ຄົນທັງປວງທົ່ວແຜ່ນດິນໂລກປາກເວົ້າພາສາອັນດຽວກັນແລະມີຄໍາ
ເວົ້າຢ່າງດຽວກັນ, ໒ແລະຕໍ່ມາພວກເຂົາໄດ້ຍົກຍ້າຍໄປທາງທິດຕາ
ເວັນອອກ ພວກເຂົາໄດ້ພົບທົ່ງຮາບພຽງທົ່ງໜຶ່ງໃນແຜ່ນດິນ ຊີນານ
ພວກເຂົາໄດ້ອາໄສຢູ່ທີ່ນັ້ນ. ໓ພວກເຂົາໄດ້ເວົ້າຕໍ່ກັນແລະກັນວ່າ
"ມາເຖີດ ພວກເຮົາຈົ່ງພາກັນໄປເຮັດດິນຈີ່ ແລະເຜົາໃນໄຟ" ແລ້ວ
ພວກເຂົາໄດ້ເອົາດິນຈີ່ໃຊ້ຕາງຫີນ ແລະເອົານໍ້າມັນດິນໃຊ້ຕາງປູນ
ປັນຊາຍ. ໔ພວກເຂົາໄດ້ເວົ້າກັນວ່າ"ມາເຖີດພວກເຮົາຈົ່ງພາກັນກໍ່
ສ້າງເມືອງແລະຫໍສູງໃຫ້ມີຍອດຮອດຟ້າສະຫວັນສໍາລັບພວກເຮົາ,
ຈົ່ງໃຫ້ພວກເຮົາສ້າງຊື່ສຽງຂອງພວກເຮົາໄວ້ ເພື່ອພວກເຮົາຈະບໍ່
ຕ້ອງພັດພາກຈາກກັນໄປທົ່ວແຜ່ນດິນໂລກ". ໕ພຣະເຢໂຮວາໄດ້ສະ
ເດັດລົງມາເບິ່ງເມືອງ ແລະຫໍທີ່ພວກມະນຸດໄດ້ກໍ່ສ້າງຂຶ້ນ. ໖ພຣະເຢ
ໂຮວາໄດ້ກ່າວວ່າ "ເບິ່ງແມ ຄົນທັງປວງນີ້ເປັນພວກດຽວ ພວກເຂົາ
ມີພາສາອັນດຽວ ພວກເຂົາເລີ່ມຕົ້ນກະທໍາສິ່ງນີ້ ແລະບັດນີ້ຈະບໍ່ມີສິ່ງ

ໃດຢຸດຢັ້ງພວກເຂົາໄດ້ໃນສິ່ງທີ່ພວກເຂົາຄິດຈະເຮັດນັ້ນ. ໗ມາເຖີດ
ໃຫ້ພວກເຮົາລົງໄປກະທຳໃຫ້ພາສາຂອງພວກເຂົາວຸ້ນວາຍໄປ, ໃຫ້
ພວກເຂົາເວົ້າບໍ່ເຂົ້າໃຈກັນ". ໘ແລ້ວພຣະເຢໂຮວາໄດ້ກະທຳໃຫ້ພວກ
ເຂົາກະແຈກກະຈາຍຈາກທີ່ນັ້ນອອກໄປທົ່ວພື້ນແຜ່ນດິນໂລກ ແລະ
ການກໍ່ສ້າງເມືອງນັ້ນພວກເຂົາໄດ້ເລີກເສຍ. ໙ເຫດສະນັ້ນ ຈິ່ງເອີ້ນ
ຊື່ທີ່ນັ້ນວ່າ ບາເບັນ ເພາະວ່າທີ່ນັ້ນພຣະເຢໂຮວາໄດ້ເຮັດໃຫ້ພາສາ
ທັງສິ້ນຂອງແຜ່ນດິນໂລກວຸ້ນວາຍໄປ ແລະຈາກທີ່ນັ້ນພຣະເຢໂຮ
ວາໄດ້ໃຫ້ເຂົາທັງປວງກະຈັດກະຈາຍໄປທົ່ວເທິງພື້ນແຜ່ນດິນໂລກ.
໑໐ເຊື້ອສາຍຂອງ ເຊມ ເປັນດັ່ງນີ້: ເຊມ ອາຍຸໄດ້ 100 ປີແລ້ວ ທ່ານ
ມີລູກຊາຍຊື່ ອາປັກສາດ ພາຍຫຼັງນ້ຳຖ້ວມໃຫຍ່ໄດ້ສອງປີ. ໑໑ຕັ້ງແຕ່
ອາປັກສາດ ໄດ້ກຳເນີດ, ເຊມ ກໍມີຊີວິດຍືນຍາວຕໍ່ໄປອີກ 500 ປີ
ແລະມີລູກຊາຍຍິງຫຼາຍຄົນ.

໑໒ອາປັກສາດ ອາຍຸໄດ້ 35 ປີແລ້ວ ທ່ານມີລູກຊາຍຊື່ ເຊລາ. ໑໓ແລະ
ຕັ້ງແຕ່ ເຊລາ ໄດ້ກຳເນີດ, ອາປັກສາດ ກໍມີຊີວິດຍືນຍາວຕໍ່ໄປອີກ
403 ປີ ແລະມີລູກຊາຍຍິງຫຼາຍຄົນ.

໑໔ເຊລາ ອາຍຸໄດ້ 30 ປີແລ້ວ ທ່ານມີລູກຊາຍຊື່ ເອເບີ. ໑໕ແລະຕັ້ງແຕ່
ເອເບີ ໄດ້ກຳເນີດ, ເຊລາ ກໍມີຊີວິດຍືນຍາວຕໍ່ໄປອີກ 403 ປີ ແລະມີ
ລູກຊາຍຍິງຫຼາຍຄົນ.

໑໖ເອເບີ ອາຍຸໄດ້ 34 ປີ ແລ້ວ ທ່ານມີລູກຊາຍຊື່ ເປເລກ. ໑໗ແລະ
ຕັ້ງແຕ່ ເປເລກ ໄດ້ກຳເນີດ, ເອເບີ ກໍມີຊີວິດຍືນຍາວຕໍ່ໄປອີກ 430
ປີ ແລະມີລູກ ຊາຍຍິງຫຼາຍຄົນ.

໑໘ເປເລກ ອາຍຸໄດ້ 30 ປີແລ້ວ ທ່ານ ມີລູກຊາຍຊື່ ເຣອູ. ໑໙ແລະ
ຕັ້ງແຕ່ ເຣອູ ໄດ້ກຳເນີດ ເປເລກ ກໍມີຊີວິດຍືນຍາວຕໍ່ໄປອີກ 209 ປີ
ແລະມີລູກຊາຍຍິງຫຼາຍຄົນ .

໒໐ເຣອູ ອາຍຸໄດ້ 32 ປີ ແລ້ວທ່ານມີລູກຊາຍຊື່ ເຊຣຸກ. ໒໑ແລະຕັ້ງແຕ່
ເຊຣຸກ ໄດ້ກຳເນີດ, ເຣອູ ກໍມີຊີວິດຍືນຍາວຕໍ່ໄປອີກ 207 ປີ ແລະມີ
ລູກຊາຍຍິງຫຼາຍຄົນ.

໒໒ເຊຣຸກ ອາຍຸໄດ້ 30 ປີແລ້ວ ທ່ານມີລູກຊາຍຊື່ ນາໂຮ. ໒໓ແລະ
ຕັ້ງແຕ່ ນາໂຮ ໄດ້ກຳເນີດ ເຊຣຸກ ກໍມີຊີວິດຍືນຍາວຕໍ່ໄປອີກ 200 ປີ
ແລະມີລູກຊາຍຍິງຫຼາຍຄົນ.

໒໔ນາໂຮ ອາຍຸໄດ້ 29 ປີແລ້ວ ທ່ານມີລູກຊາຍຊື່ ເຕຣາ. ໒໕ແລະ
ຕັ້ງແຕ່ ເຕຣາ ໄດ້ກຳເນີດ ນາໂຮ ກໍມີຊີວິດຍືນຍາວຕໍ່ໄປອີກ 119 ປີ
ແລະມີລູກຊາຍຍິງຫຼາຍຄົນ.

໒໖ເຕຣາ ອາຍຸໄດ້ 70 ປີແລ້ວ ທ່ານມີລູກຊາຍຊື່: ອັບຣາມ, ນາໂຮ
ແລະ ຮາຣານ. ໒໗ເຊື້ອສາຍຂອງ ເຕຣາ ເປັນດັ່ງນີ້: ເຕຣາ ມີລູກຊາຍຊື່:
ອັບຣາມ, ນາໂຮ ແລະ ຮາຣານ ແລະຮາຣານ ມີລູກຊາຍຊື່: ໂລດ.
໒໘ຮາຣານ ໄດ້ຕາຍໄປຕໍ່ໜ້າ ເຕຣາ ພໍ່ຂອງຕົນໃນເມືອງທີ່ຕົນເກີດຄື
ເມືອງອູເຣ ຂອງດິນແດນ ກາລະເດເອັນ. ໒໙ອັບຣາມ ກັບ ນາໂຮ ໄດ້
ເອົາເມຍ: ເມຍຂອງ ອັບຣາມ ຊື່ນາງຊາຣາຍ ແລະເມຍຂອງ ນາໂຮ
ຊື່ ມີລະກາ. ມີລະກາ ເປັນລູກສາວຂອງ ຮາຣານ ຜູ້ເປັນພໍ່ຂອງນາງ
ມີລະກາ ແລະ ຂອງນາງ ອິດສະກາ. ໓໐ນາງ ຊາຣາຍ ນັ້ນເປັນໝັນ,

ນາງຈຶ່ງບໍ່ມີລູກ. ໓໑ເຕຣາ ໄດ້ເອົາ ອັບຣາມ ລູກຊາຍຂອງຕົນກັບໂລດ
ລູກຊາຍຂອງ ຮາຣານ ຜູ້ເປັນຫຼານຂອງຕົນ ແລະນາງ ຊາຣາຍ
ຜູ້ເປັນລູກໃພ້ ຊຶ່ງເປັນເມຍຂອງ ອັບຣາມ ລູກຊາຍຂອງຕົນ ແລະ
ພວກເຂົາໄດ້ພາກັນອອກໄປຈາກເມືອງ ອູເຣ ຂອງດິນແດນ ກາລະ
ເດເອນ ໄປຍັງໃນປະເທດ ການາອານ, ພວກເຂົາໄດ້ໄປເຖິງເມືອງ
ຮາຣານ ແລະອາໄສຢູ່ທີ່ນັ້ນ. ໓໒ອາຍຸ ເຕຣາ ໄດ້ 205 ປີ ແລະ ເຕຣາ
ໄດ້ຕາຍໄປໃນເມືອງ ຮາຣານ.

# ບົດທີ 12

໑ພຣະເຢໂຮວາໄດ້ບອກແກ່ ອັບຣາມແລ້ວວ່າ “ເຈົ້າຈົ່ງອອກມາຈາກ
ປະເທດ,ຈາກຍາດພີ່ນ້ອງແລະຈາກເຮືອນພໍ່ຂອງເຈົ້າໄປຍັງດິນ
ແດນໜຶ່ງທີ່ເຮົາຈະຊີ້ໃຫ້ເຈົ້າເຫັນ ໒ເຮົາຈະເຮັດໃຫ້ເຈົ້າເປັນຊົນຊາດ
ໜຶ່ງທີ່ຍິ່ງໃຫຍ່, ເຮົາຈະອວຍພອນເຈົ້າ ແລະຈະເຮັດໃຫ້ເຈົ້າມີຊື່ສຽງ
ໂດ່ງດັງ ແລະເຈົ້າຈະເປັນແຫຼ່ງພຣະພອນ. ໓ເຮົາຈະອວຍພອນແກ່ຄົນ
ທັງຫຼາຍທີ່ອວຍພອນແກ່ເຈົ້າ ແລະເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງ
ເຈົ້າແລະຄອບຄົວທັງປວງທົ່ວແຜ່ນດິນໂລກຈະໄດ້ຮັບພຣະພອນ
ຍ້ອນເຈົ້າ”. ໔ອັບຣາມ ໄດ້ອອກໄປ ຕາມທີ່ພຣະເຢໂຮວາໄດ້ບອກ
ທ່ານ, ໂລດໄດ້ໄປກັບທ່ານ. ແລະເມື່ອ ອັບຣາມ ໄດ້ອອກໄປຈາກ
ເມືອງ ຮາຣານ ອາຍຸທ່ານໄດ້ 75 ປີ. ໕ອັບຣາມ ໄດ້ເອົານາງ ຊາຣາຍ
ເມຍຂອງຕົນ, ໂລດ ຫຼານຊາຍກັບຊັບສິ່ງຂອງທັງໝົດທີ່ເຂົາໄດ້ທ້ອນ
ໂຮມໄວ້ ພ້ອມທັງຂ້າໃຊ້ທັງຫຼາຍທີ່ພວກເຂົາໄດ້ມີໃນເມືອງຮາຣານ
ນັ້ນ ແລ້ວໄດ້ອອກມາເພື່ອຈະໄປຍັງແຜນດິນ ການາອານ, ພວກເຂົາ
ໄດ້ພາກັນເຂົ້າໄປໃນແຜນດິນ ການາອານ. ໖ອັບຣາມ ໄດ້ຜ່ານແຜນ

ດິນນັ້ນໄປຈົນເຖິງບ່ອນທີ່ເອີ້ນວ່າ ຊີເຄມ ທີ່ທົ່ງພຽງແຫ່ງ ໂມເລ ແລະ
ໃນຄາວນັ້ນຊາວ ການາອານ ກໍຢູ່ທີ່ດິນແດນນັ້ນ. ໗ພຣະເຢໂຮວາ
ໄດ້ປະກົດແກ່ ອັບຣາມ ແລະກ່າວວ່າ "ແຜນດິນນີ້ເຮົາຈະໃຫ້ແກ່ເຊື້ອ
ສາຍຂອງເຈົ້າ". ທີ່ນັ້ນ ອັບຣາມ ໄດ້ສ້າງແທ່ນບູຊາຖວາຍແກ່ພຣະ
ເຢໂຮວາ ຜູ້ທີ່ໄດ້ປະກົດແກ່ຕົນນັ້ນ. ໘ທ່ານໄດ້ຍ້າຍຈາກທີ່ນັ້ນໄປ
ເຖິງພູເຂົາແຫ່ງໜຶ່ງທາງທິດຕາເວັນອອກຂອງເມືອງ ເບດເອນແລະ
ທ່ານໄດ້ຕັ້ງເຕັນອາໄສຢູ່ທີ່ນັ້ນ ໂດຍມີເມືອງ ເບດເອນ ຢູ່ທິດຕາເວັນ
ຕົກແລະເມືອງອາອີຢູ່ທິດຕາເວັນອອກ ແລະທີ່ນັ້ນທ່ານໄດ້ສ້າງແທ່ນ
ບູຊາຖວາຍແກ່ພຣະເຢໂຮວາ ແລະໄດ້ຮ້ອງອອກນາມຊື່ຂອງພຣະ
ເຢໂຮວາ. ໙ອັບຣາມ ຍັງໄດ້ຍົກຍ້າຍເດີນທາງໄປສູ່ທິດໃຕ້.

໑໐ເກີດມີການອຶດຢາກໃນປະເທດນັ້ນ ອັບຣາມ ຈຶ່ງໄດ້ລົງໄປອາໄສ
ຢູ່ໃນປະເທດ ເອຢິບ ເຫດວ່າມີການອຶດຢາກຫຼາຍໃນແຜ່ນດິນນັ້ນ.
໑໑ແລະຢູ່ມາເມື່ອທ່ານມາໃກ້ຈະເຂົ້າໄປປະເທດ ເອຢິບ ທ່ານໄດ້ກ່າວ
ແກ່ນາງ ຊາຣາຍ ເມຍຂອງຕົນວ່າ "ເບິ່ງເຖີດ, ດຽວນີ້ຂ້ອຍຮູ້ຈັກວ່າ
ເຈົ້າເປັນຍິງງາມເປັນຕາໜ້າຮັກ. ໑໒ເມື່ອ ຊາວເອຢິບ ເຫັນເຈົ້າເຂົາ
ຈະເວົ້າວ່າ "ນີ້ເປັນເມຍຂອງລາວ" ແລະເຂົາຈະຂ້າຂ້ອຍເສຍ ແລະ
ຈະຮັກສາເຈົ້າໄວ້ໃຫ້ມີຊີວິດຢູ່. ໑໓ຂໍໃຫ້ເຈົ້າບອກວ່າ, ເຈົ້າເປັນນ້ອງ
ສາວຂອງຂ້ອຍ ເພື່ອຂ້ອຍຈະໄດ້ຢູ່ດີສະບາຍຍ້ອນເຈົ້າແລະຈິດໃຈ
ເຮົາມີຊີວິດຢູ່ເພາະເຈົ້າ. ໑໔ແລະຢູ່ມາເມື່ອ ອັບຣາມ ໄດ້ເຂົ້າໄປໃນ
ປະເທດເອຢິບ ແລ້ວຊາວເອຢິບ ໄດ້ເຫັນວ່າຍິງຄົນນີ້ເປັນຄົນຮູບງາມ
ຫຼາຍແທ້ໆ. ໑໕ພວກເຈົ້ານາຍຂອງກະສັດ ຟາໂຣ ໄດ້ເຫັນນາງ ແລະ
ໄດ້ຍົກຍ້ອງນາງຕໍ່ໜ້າກະສັດ ຟາໂຣ ແລະຍິງນັ້ນຈຶ່ງໄດ້ຖືກພາຕົວໄປ
ຍັງລາຊະວັງຂອງກະສັດຟາໂຣ. ໑໖ກະສັດໄດ້ປະຕິບັດຢ່າງດີແກ່ ອັບ

ຣາມ ຍ້ອນນາງ, ອັບຣາມ ໄດ້ຮັບຝູງສັດນ້ອຍໃຫຍ່, ຝູງງົວຕົວເຖິກ,
ພວກຂ້າໃຊ້ຊາຍຍິງ, ຝູງງົວແມ່ ແລະຝູງອູດ. ໑໗ແລະພຣະເຢໂຮວາ
ໄດ້ກະທຳໃຫ້ໄພພິບັດບັງເກີດແກ່ກະສັດ ຟາໂຣ ແລະແກ່ຄອບຄົວ
ຂອງກະສັດເປັນຢ່າງໜັກ ຍ້ອນນາງ ຊາຣາຍ ເມຍຂອງ ອັບຣາມ.
໑໘ກະສັດ ຟາໂຣ ໄດ້ເອີ້ນ ອັບຣາມ ມາແລະກ່າວວ່າ “ເຈົ້າໄດ້ກະທຳ
ສິ່ງໃດແກ່ເຮົາ? ເປັນຫຍັງເຈົ້າບໍ່ບອກໃຫ້ເຮົາຮູ້ວ່າ ນາງເປັນເມຍ
ຂອງເຈົ້າ? ໑໙ເປັນຫຍັງເຈົ້າຈຶ່ງເວົ້າວ່ານາງເປັນນ້ອງສາວຂອງເຈົ້າ?
ເພາະເຫດນັ້ນເຮົາເກືອບຈະເອົານາງມາເປັນເມຍຂອງເຮົາ,ບັດນີ້ຈົ່ງ
ເບິ່ງເມຍຂອງເຈົ້າ ຈົ່ງເອົານາງໄປ ແລະໜີໄປຕາມທາງຂອງເຈົ້າສາ”.
໒໐ກະສັດ ຟາໂຣ ໄດ້ສັ່ງຂ້າລາຊະການກ່ຽວກັບເລື່ອງອັບຣາມ ແລະ
ພວກເຂົາໄດ້ສົ່ງທ່ານກັບເມຍຂອງທ່ານໃຫ້ໜີໄປເສຍ ພ້ອມກັບສິ່ງ
ຂອງທັງປວງທີ່ເພິ່ນມີຢູ່.

## ບົດທີ 13

໑ອັບຣາມ ໄດ້ຂຶ້ນໄປຈາກປະເທດເອຢິບ ໄປສູ່ທິດໃຕ້ ທັງທ່ານກັບ
ເມຍ ແລະສິ່ງຂອງທັງປວງຂອງຕົນ ໂລດ ກໍໄປດ້ວຍກັນ. ໒ອັບຣາມ
ໄດ້ເປັນຄົນຮັ່ງມີດ້ວຍຝູງສັດ, ເງິນແລະຄຳຫຼວງຫຼາຍ. ໓ທ່ານໄດ້ເດີນ
ທາງຕໍ່ໄປຈາກທິດໃຕ້ຈົນມາເຖິງເມືອງ ເບດເອນ ເຖິງບ່ອນທີ່ທ່ານ
ເຄີຍໄດ້ຕັ້ງເຕັນອາໄສຢູ່ແຕ່ຄາວກ່ອນລະຫວ່າງກາງເມືອງ ເບດເອນ
ກັບເມືອງ ອາອີ. ໔ໃນບ່ອນແທ່ນບູຊາທີ່ທ່ານໄດ້ສ້າງໄວ້ຄາວກ່ອນ
ແລະທີ່ນັ້ນ ອັບຣາມ ໄດ້ຮ້ອງອອກນາມຊື່ພຣະເຢໂຮວາ.

໕ໂລດ ຜູ້ໄປກັບ ອັບຣາມ ນັ້ນກໍມີຝູງສັດນ້ອຍໃຫຍ່ແລະເຕັນອາໄສ
ຫຼວງຫຼາຍຄືກັນ. ໖ແລະແຜ່ນດິນນັ້ນກໍບໍ່ກ້ວາງພໍໃຫ້ຢູ່ນຳກັນ ເພາະ
ພວກເຂົາທັງສອງມີຝູງສັດຫຼາຍ ຈຶ່ງຢູ່ນຳກັນບໍ່ໄດ້. ໗ແລະພວກຄົນ
ລ້ຽງສັດຂອງ ອັບຣາມ ກັບພວກຄົນລ້ຽງສັດຂອງ ໂລດ ກໍໄດ້ຜິດຖຽງ
ກັນຄາວນັ້ນຊາວການາອານ ແລະຊາວເປຣີສີຍັງອາໄສຢູ່ທີ່ນັ້ນດ້ວຍ.
໘ອັບຣາມ ໄດ້ກ່າວແກ່ ໂລດວ່າ “ຂໍຢ່າໃຫ້ເຮົາທັງສອງຜິດຖຽງກັນເລີຍ
ແລະຢ່າໃຫ້ພວກຄົນລ້ຽງສັດຂອງຂ້ອຍກັບຄົນລ້ຽງສັດຂອງເຈົ້າຜິດ
ຖຽງກັນເລີຍ ເພາະວ່າພວກເຮົາເປັນພີ່ນ້ອງກັນ ໙ແຜ່ນດິນທັງໝົດ
ນີ້ຢູ່ຕໍ່ໜ້າເຈົ້າບໍ່ແມ່ນຫຼື? ຂໍໃຫ້ເຈົ້າຈົ່ງແຍກໄປຈາກຂ້ອຍເສຍ ຖ້າເຈົ້າ
ຫາກໄປທາງຊ້າຍມືແລ້ວຂ້ອຍຈະໄປທາງຂວາມື ແລະຖ້າເຈົ້າຫາກ
ໄປທາງຂວາມືແລ້ວຂ້ອຍຈະໄປທາງຊ້າຍມື”. ໑໐ໂລດ ໄດ້ເງີຍໜ້າ
ຂຶ້ນຫຼຽວເບິ່ງ ແລະເຫັນທົ່ງຣາບພຽງຂອງແມ່ນ້ຳ ຢໍແດນ ທີ່ມີນ້ຳບໍລິ
ບູນຢູ່ທຸກທີ່ທຸກບ່ອນ ກ່ອນພຣະເຢໂຮວາໄດ້ທຳລາຍເມືອງ ໂຊໂດມ
ແລະເມືອງ ໂກໂມຣາ, ເປັນເໝືອນສວນຂອງພຣະເຢໂຮວາ ເໝືອນ
ດິນປະເທດ ເອຢິບ ເມື່ອເຈົ້າມາທາງເມືອງໂສອາ. ໑໑ໂລດ ໄດ້ເລືອກ
ທີ່ຣາບພຽງຂອງແມ່ນ້ຳຢໍແດນ ເອົາເປັນສ່ວນຂອງຕົນ ແລະ ໂລດ ໄດ້
ຍົກຍ້າຍເດີນທາງໄປທິດຕາເວັນອອກແລະເຂົາທັງສອງໄດ້ແຍກ
ຈາກກັນໄປ. ໑໒ອັບຣາມ ໄດ້ອາໄສຢູ່ໃນດິນແດນຂອງການາອານ
ແລະ ໂລດ ໄດ້ໄປອາໄສຢູ່ໃນເມືອງທັງຫຼາຍທີ່ທົ່ງຣາບພຽງ ແລະໄດ້
ຕັ້ງເຕັນອາໄສຂອງຕົນໃກ້ເມືອງໂຊໂດມ. ໑໓ຝ່າຍຊາວເມືອງໂຊໂດມ
ນັ້ນເປັນຄົນຊົ່ວຊ້າ ແລະເປັນຄົນບາບຢ່າງຫຼວງຫຼາຍຕໍ່ພຣະພັກພຣະ
ເຢໂຮວາ.

໑໔ແລະເມື່ອ ໂລດ ໄດ້ແຍກໄປຈາກ ອັບຣາມແລ້ວພຣະເຢໂຮວາໄດ້
ກ່າວແກ່ ອັບຣາມ ວ່າ “ຈົ່ງເງີຍໜ້າຂຶ້ນ ແລະເບິ່ງຈາກບ່ອນທີ່ເຈົ້າຢູ່ນີ້

ໄປທາງທິດເໜືອ, ທິດໃຕ້, ທິດຕາເວັນອອກ ແລະທິດຕາເວັນຕົກ:
໑໕ເພາະວ່າແຜ່ນດິນທັງໝົດນີ້ ເຮົາຈະມອບໃຫ້ແກ່ເຈົ້າ ແລະໃຫ້ແກ່
ເຊື້ອສາຍຂອງເຈົ້າສືບໆໄປເປັນນິດ, ໑໖ແລະເຮົາຈະກະທຳໃຫ້ເຊື້ອ
ສາຍຂອງເຈົ້າມີຫຼາຍເໝືອນດັ່ງຂີ້ຝຸ່ນດິນ ດັ່ງນັ້ນ ຖ້າຜູ້ໃດສາມາດນັບ
ຂີ້ຝຸ່ນດິນໄດ້ ກໍສາມາດນັບເຊື້ອສາຍຂອງເຈົ້າໄດ້ດ້ວຍ. ໑໗ເຈົ້າຈົ່ງ
ລຸກຂຶ້ນເດີນໄປທົ່ວແຜ່ນດິນນີ້ທາງດ້ານຍາວແລະທາງດ້ານກວ້າງ
ເຖີດ ເຫດວ່າເຮົາຈະມອບແຜ່ນດິນນີ້ໃຫ້ແກ່ເຈົ້າ". ໑໘ອັບຣາມ ໄດ້ຍົກ
ຍ້າຍເຕັນອາໄສຂອງຕົນໄປຕັ້ງຢູ່ທີ່ຮາບພຽງແຫ່ງມຳເລ ທີ່ຢູ່ເມືອງ
ເຮັບໂຣນ ແລະໄດ້ສ້າງແທ່ນບູຊາຖວາຍແກ່ພຣະເຢໂຮວາທີ່ນັ້ນ.

## ບົດທີ 14

໑ແລະຢູ່ມາໃນຄາວ ອຳລາເຟນ ໄດ້ເປັນກະສັດເມືອງ ຊີນາ, ອາຣີ
ໂອກ ໄດ້ເປັນກະສັດເມືອງ ເອລາຊາ, ເຄໂດລາໂອເມ ໄດ້ເປັນກະ
ສັດເມືອງ ເອລາມ ແລະ ທີດານ ໄດ້ເປັນກະສັດແຫ່ງປະຊາຊາດ.
໒ກະສັດທັງຫຼາຍນີ້ໄດ້ເຮັດເສິກຕໍ່ສູ້ກັບ ເບຣາ ກະສັດເມືອງ ໂຊໂດມ,
ບີຊາ ກະສັດເມືອງ ໂກໂມຣາ, ຊີນາ ກະສັດເມືອງ ອັດມາ, ເຊເມເບ
ກະສັດເມືອງ ເສບົວອີມ ແລະກະສັດແຫ່ງເມືອງ ເບລາ ທີ່ເປັນໂສອາ.
໓ກະສັດທັງປວງນີ້ໄດ້ມາຊຸມນຸມກັນໃນຮ່ອມແຫ່ງຊີດີມ ທີ່ເປັນນ້ຳທະ
ເລເກືອ.໔ກະສັດທັງຫຼາຍນີ້ໄດ້ຍອມຢູ່ໃຕ້ອຳນາດກະສັດ ເຄໂດລາໂອ
ເມ ໄດ້ 12 ປີ ແລະໃນປີທີ 13 ເຂົາໄດ້ພາກັນກໍ່ການກະບົດຂຶ້ນ. ໕ແລະ
ໃນປີທີ 14 ກະສັດ ເຄໂດລາໂອເມ ກັບກະສັດທັງຫຼາຍທີ່ຢູ່ນຳທ່ານ
ນັ້ນກໍໄດ້ພາກັນຍົກທັບມາຕີ ພວກເຣຟາອີມ ແຫ່ງເມືອງ ອັດຊະເຕ

ໂຣດການາອິມ, ພວກ ຊູຊິມ ໃນເມືອງຮາມ, ພວກເອມີມ ໃນເມືອງ
ຊາເວຄີຣິອາທາອິມ, ໖ພວກໂຮຣີທີ່ພູເຂົາເຊອີຂອງເຂົາຈົນເຖິງເມືອງ
ເອນປາຣານ ທີ່ຢູ່ຖິ່ນທຸລະກັນດານ. ໗ແລະເຂົາໄດ້ພາກັນກັບມາເຖິງ
ເມືອງ ເອນມິດສະປັດ ຊຶ່ງແມ່ນ ກາເດັດ ແລະເຂົາໄດ້ຕີຊະນະເມືອງ
ທັງຫຼາຍຂອງພວກອາມາເລກ, ພວກອາໂມ ທີ່ຕັ້ງຢູ່ທີ່ ຮາຊາໂຊນຕາ
ມາ ດ້ວຍ. ໘ກະສັດເມືອງໂຊໂດມ, ກະສັດເມືອງໂກໂມຣາ, ກະສັດ
ເມືອງອັດມາ, ກະສັດເມືອງເສໂບອິມ ແລະກະສັດເມືອງເບລາ (ທີ່
ເອີ້ນຊື່ ໂສອາ ນັ້ນ) ກໍໄດ້ພາກັນອອກໄປ ແລະຍົກກອງທັບມາຮ່ວມ
ເຮັດເສິກຕໍ່ສູ້ກັບກະສັດເຫຼົ່ານັ້ນໃນຮ່ອມພູຊີດິມ. ໙ຄືຕໍ່ສູ້ກັບ ເຄໂດລາ
ໂອເມ ກະສັດເມືອງເອລາມ, ຕີດານ ກະສັດແຫ່ງປະຊາຊາດ, ອຳຣາ
ເຟນ ກະສັດເມືອງຊີນາ ແລະຕໍ່ສູ້ ອາຣີໂອກ ກະສັດເມືອງ ເອນລາ
ຊາ ກະສັດທັງສີ່ນີ້ຕໍ່ສູ້ກະສັດຫ້າອົງ. ໑໐ທີ່ຮ່ອມພູ ຊີດິມ ນັ້ນເຕັມໄປ
ດ້ວຍບໍ່ນ້ຳມັນດິບ ກະສັດເມືອງໂຊໂດມ ກັບກະສັດເມືອງໂກໂມຣາ
ໄດ້ປົບໜີ ແລະໄດ້ຕົກລົງໄປໃນບໍ່ນັ້ນ ແລະຄົນທັງຫຼາຍທີ່ເຫຼືອຢູ່ນັ້ນກໍ
ໄດ້ໜີໄປທີ່ພູເຂົາ. ໑໑ເຂົາໄດ້ເກັບເອົາສິ່ງຂອງ ແລະສະບຽງອາຫານ
ທັງໝົດຈາກເມືອງໂຊໂດມ ແລະຈາກເມືອງໂກໂມຣາ ແລ້ວກໍໄປ.
໑໒ເຂົາໄດ້ຈັບເອົາ ໂລດ ຜູ້ເປັນຫຼານຊາຍຂອງ ອັບຣາມ ພ້ອມກັບສິ່ງ
ຂອງຂອງລາວດ້ວຍ ແລ້ວໄດ້ຈາກໄປ ເພາະວ່າ ໂລດ ໄດ້ຢູ່ໃນເມືອງ
ໂຊໂດມ.

໑໓ແລ້ວມີຜູ້ໜຶ່ງໄດ້ປົບໜີຈາກທີ່ນັ້ນໄດ້ໄປບອກ ອັບຣາມ ຊາວເຮັບເຣີ
ໃຫ້ຮູ້ຈັກເຫດການນັ້ນ, ອັບຣາມ ໄດ້ອາໄສຢູ່ໃກ້ທົ່ງຮາບພຽງແຫ່ງມຳ
ເລ ຊາວອາໂມ ອ້າຍນ້ອງຂອງ ເອັດຊະໂຄນ ແລະອ້າຍນ້ອງຂອງ ອາ
ເນ ຄົນພວກນີ້ເປັນພັນທະມິດກັບ ອັບຣາມ. ໑໔ເມື່ອ ອັບຣາມ ໄດ້ຍິນ

ຂ່າວວ່າເຂົາໄດ້ຈັບຫຼານຊາຍຂອງຕົນໄປເປັນຊະເລີຍທ່ານກໍໄດ້ເອົາ
ອາວຸດໃຫ້ພວກຂ້າໃຊ້ຂອງຕົນຜູ້ທີ່ຊຳນານໃນການເສິກທີ່ເກີດໃນ
ບ້ານຂອງຕົນ 318 ຄົນ ແລະໄດ້ໄລ່ຕິດຕາມກະສັດທັງຫຼາຍນັ້ນ
ໄປຈົນເຖິງເມືອງດານ. ໑໕ອັບຣາມໄດ້ແຍກກອງທັບຂ້າໃຊ້ຂອງຕົນ
ອອກເປັນກອງໆ ແລະເວລາກາງຄືນເຂົາໄດ້ເຂົ້າໂຈມຕີພວກສັດຕູ
ແລະໄລ່ຕິດຕາມພວກສັດຕູໄປຈົນເຖິງ ໂຮບາ ຊຶ່ງຢູ່ເບື້ອງຊ້າຍມື
ຂອງເມືອງ ດາມາສະກັດ. ໑໖ ອັບຣາມ ໄດ້ນຳເອົາສິ່ງຂອງທັງໝົດ
ແລະ ໂລດ ຫຼານຊາຍຂອງຕົນກັບສິ່ງຂອງຂອງເພິ່ນ, ພວກຜູ້ຍິງ ແລະ
ປະຊາຊົນ ພາກັບຄືນມາໄດ້ທັງໝົດ.

໑໗ເມື່ອທ່ານໄດ້ກັບມາຈາກການຂ້າ ກະສັດ ເຄໂອລາໂອເມ ແລະ
ກະສັດທັງຫຼາຍທີ່ເຂົາຢູ່ດ້ວຍກັນນັ້ນແລ້ວ ກະສັດເມືອງ ໂຊໂດມ ໄດ້
ອອກມາຕ້ອນຮັບ ອັບຣາມ ໃນຮ່ອມພູ ຊາເວ ຊຶ່ງເປັນຮ່ອມພູແຫ່ງ
ກະສັດ. ໑໘ແລະ ເມນຄີເຊເດກ ຜູ້ເປັນກະສັດແຫ່ງເມືອງຊາເລມ ໄດ້
ເອົາເຂົ້າຈີ່ກັບເຫຼົ້າອາງຸ່ນມາໃຫ້, ອັນໜຶ່ງ ທ່ານເປັນປະໂລຫິດຂອງ
ພຣະເຈົ້າອົງສູງສຸດ. ໑໙ແລະທ່ານໄດ້ອວຍພອນໃຫ້ແກ່ ອັບຣາມ ວ່າ
“ຂໍພຣະເຈົ້າອົງສູງສຸດ ຜູ້ເປັນເຈົ້າຂອງຟ້າສະຫວັນແລະແຜ່ນດິນ
ໂລກ ໃຫ້ ອັບຣາມ ໄດ້ຮັບພຣະພອນເຖີດ: ໒໐ແລະຂໍໃຫ້ພຣະເຈົ້າອົງ
ສູງສຸດເປັນທີ່ສັນລະເສີນ ຜູ້ໄດ້ມອບສັດຕູທັງຫຼາຍຂອງທ່ານໄວ້ໃນມື
ຂອງທ່ານ” ແລະ ອັບຣາມ ໄດ້ແບ່ງສິ່ງຂອງທັງປວງເປັນ 10 ສ່ວນ
ແລະໄດ້ເອົາສ່ວນໜຶ່ງຍົກຖວາຍໃຫ້ແກ່ ເມນຄີເຊເດກ. ໒໑ແລະກະ
ສັດເມືອງໂຊໂດມ ໄດ້ກ່າວແກ່ ອັບຣາມ ວ່າ “ຂໍສິ່ງຄົນເຫຼົ່ານັ້ນຄືນໃຫ້
ແກ່ເຮົາ ແລະຊັບສິ່ງຂອງນັ້ນທ່ານຈົ່ງເອົາໄປເຖີດ”. ໒໒ແລະອັບຣາມ
ໄດ້ຕອບກະສັດເມືອງ ໂຊໂດມ ວ່າ “ຂ້າພະເຈົ້າໄດ້ຍົກມືຂອງຂ້າພະ

ເຈົ້າຕໍ່ພຣະເຢໂຮວາ ພຣະເຈົ້າອົງສູງສຸດ ຜູ້ເປັນເຈົ້າຂອງຟ້າສະຫວັນ
ແລະແຜ່ນດິນໂລກ, ໒໓ວ່າ ຂ້າພະເຈົ້າຈະບໍ່ເອົາແມ່ນແຕ່ເສັ້ນດ້າຍຫຼື
ສາຍຮັດເກີບເສັ້ນໜຶ່ງ ແລະຂ້າພະເຈົ້າຈະບໍ່ເອົາສິ່ງໃດໆທີ່ເປັນຂອງ
ທ່ານ ເພື່ອທ່ານຈະບໍ່ກ່າວວ່າ 'ເຮົາໄດ້ເຮັດໃຫ້ອັບຣາມ ຮັ່ງມີ', ໒໔ເວັ້ນ
ໄວ້ແຕ່ອາຫານທີ່ພວກຄົນໜຸ່ມໄດ້ກິນແລ້ວເທົ່ານັ້ນ ແລະສ່ວນຂອງ
ອາເນ, ເອດສະໂຄນ ແລະມຳເລ ຜູ້ໄດ້ໄປນຳຂ້າພະເຈົ້ານັ້ນ ໃຫ້ພວກ
ເຂົາຮັບສ່ວນແບ່ງຂອງພວກເຂົາເຖີດ".

## ບົດທີ 15

໑ພາຍຫຼັງເຫດການທັງຫຼາຍນີ້ ພຣະຄຳຂອງພຣະເຢໂຮວາໄດ້ມາເຖິງ
ອັບຣາມ ໃນນິມິດວ່າ "ອັບຣາມ ເອີຍ ເຈົ້າຢ່າຊູ່ຢ້ານ, ເຮົາເປັນໂລ່ແລະ
ເປັນບຳເໜັດອັນໃຫຍ່ຂອງເຈົ້າ". ໒ອັບຣາມ ໄດ້ກາບທູນວ່າ "ໂອ້ພຣະ
ອົງເຈົ້າ ພຣະເຢໂຮວາເຈົ້າຂ້າ ພຣະອົງຈະໂຜດປະທານສິ່ງໃດແກ່
ຂ້ານ້ອຍ ເພາະຂ້ານ້ອຍບໍ່ມີລູກ ແລະ ເອລີເອເຊ ຊາວ ດາມາສະກັດ
ຜູ້ນີ້ຈະເປັນເຈົ້າຂອງມໍລະດົກໃນເຮືອນຂອງຂ້ານ້ອຍ". ໓ອັບຣາມ
ໄດ້ກາບທູນວ່າ "ເບິ່ງແມ, ພຣະອົງບໍ່ໄດ້ປະທານເຊື້ອສາຍໃຫ້ແກ່
ຂ້ານ້ອຍ ດັ່ງນັ້ນຂ້ອຍໃຊ້ໃນເຮືອນຂ້ານ້ອຍ ກໍຈະເປັນເຈົ້າຂອງມໍລະ
ດົກຂອງຂ້ານ້ອຍ". ໔ແລະເບິ່ງແມ ພຣະຄຳຂອງພຣະເຢໂຮວາໄດ້ມາ
ເຖິງທ່ານວ່າ "ຜູ້ນີ້ຈະບໍ່ໄດ້ເປັນເຈົ້າຂອງມໍລະດົກຂອງເຈົ້າ ແຕ່ວ່າຄົນ
ທີ່ອອກມາຈາກແອວຂອງເຈົ້ານັ້ນແຫຼະ ຈະເປັນເຈົ້າຂອງມໍລະດົກ
ຂອງເຈົ້າ". ໕ພຣະອົງໄດ້ພາທ່ານອອກໄປທາງນອກ ແລະໄດ້ບອກວ່າ
"ຈົ່ງເບິ່ງທ້ອງຟ້າ ແລະຖ້າເຈົ້າສາມາດນັບດາວທັງຫຼາຍໄດ້ ຈົ່ງນັບ
ເບິ່ງເຖີດ" ພຣະອົງໄດ້ກ່າວແກ່ທ່ານວ່າ "ເຊື້ອສາຍຂອງເຈົ້າຈະເປັນ

ຢ່າງນັ້ນແຫຼະ". ໖ທ່ານໄດ້ເຊື່ອພຣະເຢໂຮວາ ແລະຄວາມເຊື່ອນັ້ນ
ພຣະອົງໄດ້ຖືວ່າເປັນຄວາມຊອບທຳແກ່ທ່ານ.

໗ພຣະອົງໄດ້ກ່າວແກ່ທ່ານວ່າ "ເຮົາເປັນພຣະເຢໂຮວາ ທີ່ໄດ້ພາເຈົ້າ
ອອກມາຈາກເມືອງ ອູເຣ ຂອງດິນແດນ ກາລະເດເອນ ເພື່ອຈະໄດ້
ປະທານແຜ່ນດິນນີ້ໃຫ້ເປັນມໍລະດົກແກ່ເຈົ້າ". ໘ທ່ານໄດ້ກາບທູນວ່າ
"ໂອພຣະອົງເຈົ້າ ພຣະເຢໂຮວາເຈົ້າຂ້າ ຂ້ານ້ອຍຈະຮູ້ຢ່າງໃດວ່າ ຂ້າ
ນ້ອຍຈະໄດ້ແຜ່ນດິນນີ້ເປັນມໍລະດົກ?" ໙ພຣະອົງໄດ້ບອກທ່ານວ່າ
"ເຈົ້າຈົ່ງເອົາງົວແມ່ໜຸ່ມອາຍຸສາມປີໂຕໜຶ່ງ, ແບ້ແມ່ອາຍຸສາມປີໂຕ
ໜຶ່ງ, ແກະເຖິກອາຍຸສາມປີໂຕໜຶ່ງ, ນົກເຂົາໂຕໜຶ່ງ ແລະນົກກາງແກ
ໜຸ່ມໂຕໜຶ່ງ ມາຖວາຍແກ່ເຮົາ". ໑໐ແລະທ່ານໄດ້ເອົາສັດທັງຫຼາຍນີ້
ມາຜ່າກາງຕົວ ແລະວາງລົງຝ່າຍລະເຄິ່ງຕົວຊື່ກັນ ແຕ່ບັນດານົກນັ້ນ
ທ່ານບໍ່ໄດ້ຜ່າກາງຕົວ.໑໑ແລະຝູງນົກທີ່ມັກກິນຊີ້ນກໍໄດ້ບິນລົງມາເທິງ
ຊີ້ນສັດເຫຼົ່ານີ້ ອັບຣາມ ໄດ້ໄລ່ມັນໄປເສຍ. ໑໒ແລະເມື່ອຕາເວັນກຳ
ລັງຕົກ ການນອນຫຼັບສະໜິດໄດ້ຕົກໃສ່ທ່ານ ອັບຣາມ, ແລະເບິ່ງແມ
ຄວາມມືດອັນໜາເປັນຕາຢ້ານ ມາຕົກໃສ່ທ່ານ. ໑໓ແລະພຣະອົງໄດ້
ກ່າວແກ່ ອັບຣາມ ວ່າ "ເຈົ້າຈົ່ງຮູ້ເຖີດວ່າ ເຊື້ອສາຍຂອງເຈົ້າຈະເປັນ
ຄົນຕ່າງດ້າວໃນແຜ່ນດິນທີ່ບໍ່ແມ່ນຂອງເຂົາ ແລະເຂົາຈະເປັນທາດ
ຮັບໃຊ້ຊາວແຜ່ນດິນນັ້ນ ແລະຊາວແຜ່ນດິນນັ້ນຈະກົດຂີ່ຂົ່ມເຫັງ
ພວກເຂົາເປັນເວລາ 400 ປີ. ໑໔ແຕ່ວ່າປະເທດທີ່ພວກເຂົາເປັນທາດ
ຮັບໃຊ້ນັ້ນ ເຮົາຈະຕັດສິນລົງໂທດ ແລະພາຍຫຼັງນັ້ນເຂົາຈະອອກມາ
ພ້ອມດ້ວຍຊັບສິ່ງຂອງອັນຫຼວງຫຼາຍ. ໑໕ແລະຝ່າຍເຈົ້າຈະໄປຢູ່ກັບ
ປູ່ຍ່າຕາຍາຍຂອງເຈົ້າໃນຄວາມສຸກສຳລານເມື່ອເຈົ້າອາຍຸແກ່ຊະ
ລາແລ້ວ ເຂົາຈະຝັງສົບເຈົ້າໄວ້. ໑໖ແຕ່ໃນຊົ່ວເຊັ່ນຄົນທີສີ່ ພວກເຂົາ

ຈະກັບມາທີ່ນີ້ອີກ ເພາະວ່າຄວາມຊົ່ວຮ້າຍຂອງພວກອາໂມຍັງບໍ່ທັນ
ຄົບຖ້ວນ". ໑໗ແລະຢູ່ມາເມື່ອຕາເວັນຕົກແລ້ວກໍມືດຄໍ່າ ແລະເບິ່ງແມ
ມີເຕົາຄວັນໄຟ ແລະມີໂຄມໄຟເປັນແປວໄຟ ໄດ້ຜ່ານໄປຫວ່າງກາງ
ຊາກສັດທີ່ວາງຢູ່ນັ້ນ. ໑໘ໃນວັນນັ້ນພຣະເຢໂຮວາໄດ້ຕັ້ງຄໍາສັນຍາໄວ້
ກັບ ອັບຣາມ ວ່າ "ເຮົາໄດ້ປະທານແຜ່ນດິນນີ້ໃຫ້ແກ່ເຊື້ອສາຍຂອງ
ເຈົ້າຕັ້ງແຕ່ແມ່ນໍ້າ ເອຢິບ ໄປເຖິງແມ່ນໍ້າໃຫຍ່ແມ່ນໍ້າ ເອີຟະລັດ: ໑໙ທັງ
ແຜນດິນຂອງ ພວກເກນິດ, ເກນິດສີ, ກັດໂມ, ໒໐ພວກ ຮິດຕີ, ເປຣີສີ,
ເຣຟາອີມ, ໒໑ພວກ ອາໂມ, ການາອານ, ກີກາຊີ ແລະເຢບຸດ".

## ບົດທີ 16

໑ນາງ ຊາຣາຍ ຜູ້ເປັນເມຍຂອງ ອັບຣາມ ບໍ່ມີລູກໃຫ້ທ່ານ, ນາງມີສາວ
ໃຊ້ຊາວ ເອຢິບຄົນໜຶ່ງຊື່ວ່າຮາກາ. ໒ນາງຊາຣາຍ ໄດ້ກ່າວແກ່ອັບຣາມ
ວ່າ "ທ່ານເຫັນວ່າພຣະເຢໂຮວາບໍ່ໃຫ້ຂ້ອຍມີລູກໄດ້ ຂໍທ່ານຈົ່ງເຂົ້າ
ໄປຫາສາວໃຊ້ຂອງຂ້ອຍນັ້ນ ບາງທີຂ້ອຍຈະໄດ້ລູກຍ້ອນລາວ" ແລະ
ອັບຣາມ ໄດ້ຟັງຄວາມນາງ ຊາຣາຍ. ໓ເມື່ອ ອັບຣາມ ໄດ້ຢູ່ທີ່ແຜ່ນດິນ
ການາອານໄດ້10ປີແລ້ວນາງຊາຣາຍ ເມຍຂອງອັບຣາມ ໄດ້ເອົານາງ
ຮາກາ ຊາວເອຢິບ ສາວໃຊ້ຂອງຕົນຍົກໃຫ້ ອັບຣາມ ຜົວຂອງຕົນ ໃຫ້
ເປັນເມຍນ້ອຍຂອງທ່ານ. ໔ແລະ ອັບຣາມ ໄດ້ເຂົ້າໄປຫາ ຮາກາ ແລະ
ນາງໄດ້ຕັ້ງທ້ອງ ແລະເມື່ອ ຮາກາ ໄດ້ຮູ້ວ່າຕົນໄດ້ຕັ້ງທ້ອງແລ້ວ ກໍໄດ້
ໝິ່ນປະໝາດນາຍຍິງຂອງຕົນ. ໕ນາງ ຊາຣາຍ ໄດ້ກ່າວແກ່ ອັບຣາມ
ວ່າ "ໃຫ້ຄວາມຜິດຂອງຂ້ອຍຕົກເທິງຕົວທ່ານເຖີດ, ຂ້ອຍໄດ້ຍົກ
ສາວໃຊ້ຂອງຂ້ອຍໃຫ້ໄວ້ທີ່ເອິກຂອງທ່ານ ແລະເມື່ອຍິງນັ້ນຮູ້ວ່າຕົນ
ໄດ້ຕັ້ງທ້ອງແລ້ວກໍໄດ້ໝິ່ນປະໝາດຂ້ອຍ ຂໍໃຫ້ພຣະເຢໂຮວາຕັດສິນ

ຄວາມຂອງຂ້ອຍກັບທ່ານເຖີດ". ໖ອັບຣາມ ໄດ້ກ່າວແກ່ນາງ ຊາຣາຍ
ວ່າ "ເບິ່ງແມ ສາວໃຊ້ຂອງເຈົ້າກໍຢູ່ໃນກໍາມືຂອງເຈົ້າ, ເຈົ້າຈິ່ງກະທໍາ
ແກ່ນາງຕາມທີ່ເຈົ້າເຫັນດີເຖີດ" ນາງ ຊາຣາຍ ໄດ້ຂົ່ມເຫັງຍິງນັ້ນຢ່າງ
ໜັກ ແລະນາງໄດ້ປົບໜີໃຫ້ພົ້ນຈາກໜ້ານາງຊາຣາຍ.

໗ແຕ່ວ່າເທວະດາຂອງພຣະເຢໂຮວາໄດ້ພົບຍິງນັ້ນທີ່ບໍ່ນໍ້າໃນປ່າ ທີ່ຢູ່
ຮິມທາງຈະໄປເມືອງ ຊູເຣ ໘ແລ້ວເທວະດາໄດ້ກ່າວວ່າ "ຮາກາ ສາວ
ໃຊ້ຂອງນາງ ຊາຣາຍ ເຈົ້າມາແຕ່ໃສ? ແລະເຈົ້າຈະໄປໃສ?" ນາງ
ໄດ້ຕອບວ່າ "ຂ້ານ້ອຍໄດ້ປົບໜີໃຫ້ພົ້ນຈາກໜ້ານາງ ຊາຣາຍ ນາຍ
ຍິງຂອງຂ້ານ້ອຍ". ໙ເທວະດາຂອງພຣະເຢໂຮວາໄດ້ກ່າວແກ່ນາງວ່າ
"ຈົ່ງກັບໄປຫານາຍຍິງຂອງເຈົ້າ ແລະຍອມຢູ່ໃຕ້ອໍານາດຂອງເພິ່ນ
ເຖີດ". ໑໐ເທວະດາຂອງພຣະເຢໂຮວາໄດ້ກ່າວແກ່ນາງວ່າ "ເຮົາຈະ
ໃຫ້ເຊື້ອຊາດຂອງເຈົ້າທະວີມາກຂຶ້ນຢ່າງຫຼວງຫຼາຍຈົນນັບບໍ່ໄດ້".
໑໑ເທວະດາຂອງພຣະເຢໂຮວາໄດ້ກ່າວແກ່ນາງວ່າ "ເບິ່ງເຖີດ ເຈົ້າຕັ້ງ
ທ້ອງຢູ່ແລະຈະໃຫ້ກໍາເນີດລູກຊາຍ ແລະຈົ່ງເອີ້ນຊື່ລູກນັ້ນວ່າ 'ອິດ
ຊະມາເອນ' ເພາະພຣະເຢໂຮວາໄດ້ຍິນຄວາມທຸກຮ້ອນຂອງເຈົ້າ.
໑໒ແລະ ອິດຊະມາເອນ ຈະເປັນຄົນປ່າ, ມືຂອງລາວຈະຕໍ່ສູ້ຄົນທັງ
ປວງ ແລະມືຂອງຄົນທັງປວງຈະຕໍ່ສູ້ລາວ ແລະລາວຈະອາໄສຢູ່ຕໍ່ໜ້າ
ພີ່ນ້ອງທັງຫຼາຍຂອງຕົນ". ໑໓ນາງ ຮາກາ ໄດ້ເອີ້ນພຣະນາມຊື່ ພຣະເຢ
ໂຮວາທີ່ໄດ້ກ່າວແກ່ຕົວວ່າ "ພຣະອົງເປັນພຣະເຈົ້າຜູ້ເຫັນຂ້ານ້ອຍ"
ເພາະວ່ານາງໄດ້ກ່າວວ່າ "ພາຍຫຼັງພຣະອົງໄດ້ເຫັນຂ້ານ້ອຍທີ່ນີ້ ຂ້າ
ນ້ອຍໄດ້ເຫັນພຣະອົງບໍ່ແມ່ນຫຼື?" ໑໔ເຫດສະນັ້ນ ຈິ່ງເອີ້ນນໍ້າສ້າງນັ້ນ
ວ່າ ເບເອລາຮາຣອຍ ມັນຢູ່ຫວ່າງກາງ ເມືອງກາເດດ ກັບເມືອງ ເບ
ເຣດ. ໑໕ແລ້ວນາງ ຮາກາ ໄດ້ໃຫ້ກໍາເນີດລູກຊາຍແກ່ ອັບຣາມ ແລະ

ອັບຣາມ ໄດ້ເອີ້ນຊື່ລູກຊາຍຂອງຕົນທີ່ນາງ ຮາກາ ໄດ້ກຳເນີດໃຫ້ນັ້ນ
ວ່າ ‘ອິດຊະມາເອນ’. ໑໖ເມື່ອນາງ ຮາກາ ໄດ້ກຳເນີດ ອິດຊະມາເອນ
ໃຫ້ແກ່ ອັບຣາມ ນັ້ນ ອາຍຸຂອງ ອັບຣາມ ໄດ້ 86 ປີ.

## ບົດທີ 17

໑ເມື່ອ ອັບຣາມ ອາຍຸໄດ້ 99 ປີ ພຣະເຢໂຮວາໄດ້ປະກົດແກ່ ອັບຣາມ
ແລະກ່າວແກ່ທ່ານວ່າ “ເຮົາເປັນພຣະເຈົ້າຊົງຣິດທານຸພາບສູງສຸດ,
ຈົ່ງດຳເນີນຢູ່ຕໍ່ໜ້າເຮົາ ແລະຈົ່ງເປັນຄົນດີຄົບຖ້ວນເຖີດ. ໒ເຮົາຈະ
ເຮັດຄຳສັນຍາຂອງເຮົາລະຫວ່າງເຮົາກັບເຈົ້າ ແລະຈະເຮັດໃຫ້ເຈົ້າ
ມີເຊື້ອສາຍມາກທະວີຂຶ້ນຢ່າງຫຼວງຫຼາຍ”. ໓ອັບຣາມ ໄດ້ໝູບໜ້າລົງ
ເທິງພື້ນດິນ ແລະພຣະເຈົ້າໄດ້ກ່າວແກ່ທ່ານວ່າ, ໔“ສຳລັບເຮົາ ເບິ່ງ
ແມ, ນີ້ຄືຄຳສັນຍາຂອງເຮົາກັບເຈົ້າ ເຈົ້າຈະເປັນບິດາຂອງປະຊາ
ຊາດທັງຫຼາຍ. ໕ແລະຊື່ຂອງເຈົ້າຈະບໍ່ໄດ້ເອີ້ນວ່າ ອັບຣາມ ອີກຕໍ່ໄປ
ແຕ່ເຈົ້າຈະມີຊື່ເປັນ ອັບຣາຮາມ ເພາະວ່າເຮົາໄດ້ຕັ້ງເຈົ້າໄວ້ເປັນບິດາ
ຂອງປະຊາຊາດທັງຫຼາຍ. ໖ເຮົາຈະໃຫ້ເຈົ້າມີເຊື້ອສາຍມາກທະວີຂຶ້ນ
ຢ່າງຫຼວງຫຼາຍ ເຮົາຈະໃຫ້ປະຊາຊາດທັງຫຼາຍ ແລະກະສັດຫຼາຍອົງ
ເກີດມາຈາກເຈົ້າ. ໗ເຮົາຈະຕັ້ງຄຳສັນຍາຂອງເຮົາລະຫວ່າງເຮົາກັບ
ເຈົ້າ ແລະເຊື້ອສາຍຂອງເຈົ້າທີ່ມາພາຍຫຼັງເຈົ້າ ຕະຫຼອດຊົ່ວອາຍຸຄົນ
ຂອງເຂົາເປັນຄຳສັນຍາອັນຕະຫຼອດໄປເປັນນິດ ເພື່ອເຮົາຈະເປັນ
ພຣະເຈົ້າຂອງເຈົ້າ ແລະເຊື້ອສາຍຂອງເຈົ້າທີ່ມາພາຍຫຼັງເຈົ້າ. ໘ເຮົາ
ຈະໃຫ້ແຜ່ນດິນທີ່ເຈົ້າອາໄສຢູ່ຖານະຄົນຕ່າງດ້າວນີ້ຄື ແຜ່ນດິນຂອງ
ການາອານທັງໝົດໃຫ້ແກ່ເຈົ້າ ແລະແກ່ເຊື້ອສາຍຂອງເຈົ້າທີ່ມາພາຍ

ຫຼັງເຈົ້າ ເປັນນິລະດົກອັນຕະຫຼອດໄປເປັນນິດ ແລະເຮົາຈະເປັນພຣະ
ເຈົ້າຂອງເຂົາ”.

໙ພຣະເຈົ້າໄດ້ກ່າວແກ່ ອັບຣາຮາມ ວ່າ “ເຫດສະນັ້ນ ເຈົ້າຈິ່ງຖືຮັກສາ
ຄຳສັນຍາຂອງເຮົາທັງເຈົ້າແລະເຊື້ອສາຍຂອງເຈົ້າທີ່ມາພາຍຫຼັງເຈົ້າ
ຕະຫຼອດຊົ່ວອາຍຸຄົນຂອງເຂົາ. ໑໐ນີ້ເປັນຄຳສັນຍາຂອງເຮົາທີ່ເຈົ້າຈະ
ຖືຮັກສາໄວ້ລະຫວ່າງເຮົາກັບພວກທ່ານແລະເຊື້ອສາຍຂອງເຈົ້າທີ່
ມາພາຍຫຼັງເຈົ້າຄື: ຜູ້ຊາຍທຸກຄົນໃນຖ້າມກາງພວກທ່ານຈະຕ້ອງຮັບ
ພິທີຕັດ. ໑໑ພວກທ່ານຈະຮັບພິທີຕັດໜັງສຸດປາຍອະໄວຍະວະເພດ
ຂອງທ່ານທັງຫຼາຍ ແລະການນີ້ຈະເປັນໝາຍສຳຄັນແຫ່ງຄຳສັນຍາ
ລະຫວ່າງເຮົາກັບພວກທ່ານ. ໑໒ຜູ້ຊາຍທຸກຄົນໃນທ່າມກາງພວກ
ທ່ານເມື່ອອາຍຸໄດ້ 8 ວັນແລ້ວຈະຮັບພິທີຕັດຕະຫຼອດຊົ່ວອາຍຸຄົນ
ຂອງພວກທ່ານ ຜູ້ຊາຍທີ່ໄດ້ເກີດໃນເຮືອນ ແລະຜູ້ທີ່ຊື້ມາດ້ວຍເງິນ
ຈາກພວກຕ່າງຊາດຊຶ່ງບໍ່ແມ່ນເຊື້ອສາຍຂອງເຈົ້າ. ໑໓ຜູ້ທີ່ເກີດໃນ
ເຮືອນຂອງເຈົ້າ ແລະຜູ້ທີ່ໄດ້ຊື້ເອົາແລ້ວດ້ວຍເງິນຂອງເຈົ້າກໍຈະຕ້ອງ
ຮັບພິທີຕັດເໝືອນກັນ ແລະຄຳສັນຍາຂອງເຮົາຈະຢູ່ໃນເນື້ອໜັງຂອງ
ພວກທ່ານເປັນຄຳສັນຍາອັນຕະຫຼອດໄປເປັນນິດ. ໑໔ເດັກຊາຍຜູ້ໃດ
ທີ່ບໍ່ຮັບພິທີຕັດ ຄືຜູ້ທີ່ບໍ່ຮັບພິທີຕັດໜັງສຸດປາຍອະໄວຍະວະເພດ
ຂອງຕົນ ຜູ້ນັ້ນຈະຖືກຕັດອອກຈາກຊົນຊາດຂອງຕົນ ຜູ້ນັ້ນໄດ້ລ່ວງ
ລະເມີດຄຳສັນຍາຂອງເຮົາ”.

໑໕ພຣະເຈົ້າໄດ້ກ່າວແກ່ອັບຣາຮາມ ວ່າ “ຝ່າຍນາງ ຊາຣາຍ ເມຍຂອງ
ເຈົ້າ ເຈົ້າຈະບໍ່ໄດ້ເອີ້ນຊື່ນາງວ່າ “ຊາຣາຍ” ຕໍ່ໄປ ແຕ່ຈະເອີ້ນຊື່ວ່າ
“ຊາຣາ” ໑໖ເຮົາຈະອວຍພອນແກ່ນາງ ແລະຈະໃຫ້ລູກຊາຍຄົນໜຶ່ງ

ແກ່ເຈົ້າຈາກນາງດ້ວຍ ເຮົາຈະອວຍພອນໃຫ້ນາງ ແລະນາງຈະເປັນ
ມານດາຂອງຊົນຊາດທັງຫຼາຍ ແລະກະສັດຫຼາຍອົງຂອງບັນດາປະ
ຊາຊາດຈະອອກມາຈາກນາງ". ໑໗ອັບຣາຮາມ ໄດ້ໝູບໜ້າລົງ ແລ້ວ
ໄດ້ຫົວ ແລະໄດ້ເວົ້າໃນໃຈຂອງຕົນວ່າ "ຄົນອາຍຸໄດ້ 100 ປີຈະມີລູກ
ໄດ້ຫຼື? ແລະນາງ ຊາຣາ ອາຍຸໄດ້ 90 ປີແລ້ວຈະໃຫ້ກຳເນີດລູກໄດ້
ຫຼື?" ໑໘ອັບຣາຮາມ ໄດ້ກາບທູນພຣະເຈົ້າວ່າ "ຂໍໃຫ້ ອິດຊະມາເອນ
ມີຊີວິດຢູ່ຕໍ່ໜ້າພຣະອົງເຖີດ." ໑໙ພຣະເຈົ້າໄດ້ກ່າວວ່າ "ນາງ ຊາຣາ
ເມຍຂອງເຈົ້າຈະໃຫ້ກຳເນີດລູກຊາຍຄົນໜຶ່ງແກ່ເຈົ້າແທ້ໆ ແລະເຈົ້າ
ຈະເອີ້ນຊື່ລູກຊາຍນັ້ນວ່າ"ອີຊາກ" ແລະເຮົາຈະຕັ້ງຄຳສັນຍາຂອງເຮົາ
ໄວ້ກັບລາວ ເປັນຄຳສັນຍາອັນຕະຫຼອດໄປເປັນນິດ ແລະກັບເຊື້ອ
ສາຍຂອງລາວທີ່ມາພາຍຫຼັງລາວ. ໒໐ແລະຝ່າຍ ອິດຊະມາເອນ ເຮົາ
ໄດ້ຟັງຄຳຂໍຂອງເຈົ້າແລ້ວ ເບິ່ງເຖີດ ເຮົາໄດ້ອວຍພອນໃຫ້ລາວ ແລະ
ເຮົາຈະໃຫ້ລາວມີເຊື້ອສາຍມາກທະວີຂຶ້ນຢ່າງຫຼວງຫຼາຍ,ລາວຈະໃຫ້
ກຳເນີດເຈົ້ານາຍ 12 ອົງ ແລະເຮົາຈະເຮັດໃຫ້ລາວເປັນຊົນຊາດ
ໃຫຍ່ຊາດໜຶ່ງ. ໒໑ແຕ່ວ່າຄຳສັນຍາຂອງເຮົາ ເຮົາຈະຕັ້ງໄວ້ກັບ ອີຊາກ
ທີ່ນາງ ຊາຣາ ຈະກຳເນີດໃຫ້ແກ່ເຈົ້າປີໜ້າໃນເວລານີ້". ໒໒ເມື່ອພຣະ
ເຈົ້າໄດ້ກ່າວແລ້ວ ພຣະອົງກໍໄດ້ສະເດັດຂຶ້ນໄປຈາກ ອັບຣາຮາມ.

໒໓ອັບຣາຮາມ ໄດ້ເອົາ ອິດຊະມາເອນ ລູກຊາຍຂອງຕົນ, ຄົນທັງ
ໝົດທີ່ໄດ້ເກີດໃນເຮືອນ ແລະຄົນທີ່ຊື້ເອົາມາດ້ວຍເງິນຂອງຕົນ, ຜູ້
ຊາຍທຸກຄົນທີ່ຢູ່ໃນເຮືອນຂອງ ອັບຣາຮາມ, ທ່ານໄດ້ໃຫ້ເຂົາຮັບພິທີ
ຕັດໜັງສຸດປາຍອະໄວຍະວະເພດຂອງເຂົາໃນວັນນັ້ນ ຕາມທີ່ພຣະ
ເຈົ້າໄດ້ບອກແກ່ທ່ານ. ໒໔ອັບຣາຮາມ ມີອາຍຸໄດ້ 99 ປີ ເມື່ອທ່ານໄດ້
ຮັບພິທີຕັດໜັງສຸດປາຍອະໄວຍະວະເພດຂອງຕົນ. ໒໕ແລະອິດຊະ

ມາເອນ ລູກຂອງທ່ານມີອາຍຸ 13 ປີ ເມື່ອລາວໄດ້ຮັບພິທີຕັດໜັງສຸດ
ປາຍອະໄວຍະວະເພດຂອງຕົນ. ໒໖ໃນວັນດຽວກັນນັ້ນ ອັບຣາຮາມ
ກັບ ອິດຊະມາເອນ ລູກຊາຍຂອງຕົນໄດ້ຮັບພິທີຕັດ. ໒໗ແລະຜູ້ຊາຍ
ທັງໝົດທີ່ຢູ່ໃນເຮືອນຂອງທ່ານ ທັງຄົນທີ່ໄດ້ເກີດໃນເຮືອນ ແລະຄົນ
ທີ່ຊື້ເອົາມາດ້ວຍເງິນຈາກຄົນຕ່າງຊາດກໍໄດ້ຮັບພິທີຕັດພ້ອມກັນກັບ
ທ່ານທຸກຄົນ.

*17:5 "ອັບຣາມ" ຕາມພາສາ ເຮັບເຣີ (□□□□) ໝາຍຄວາມວ່າ "ພໍ່ໃຫຍ່" ແລະ "ອັບຣາຮາມ" (□□□□□) ໝາຍຄວາມວ່າ "ພໍ່ຂອງບັນດາຊົນຊາດທັງຫຼາຍ"*

*17:19 "ອິຊາກ" ຕາມພາສາ ເຮັບເຣີ (□□□□) ໝາຍຄວາມວ່າ "ຫົວເລາະ"*

## ບົດທີ 18

໑ພຣະເຢໂຮວາໄດ້ປະກົດແກ່ທ່ານທີ່ຮາບພຽງແຫ່ງມຳເລ ແລະທ່ານ
ນັ່ງຢູ່ທີ່ປະຕູເຕັນໃນເວລາແດດຮ້ອນ. ໒ທ່ານໄດ້ເງີຍໜ້າຂຶ້ນ ແລະເບິ່ງ
ແມ ມີຊາຍສາມຄົນໄດ້ຢືນຢູ່ໃກ້ທ່ານ ແລະເມື່ອໄດ້ເຫັນພວກເພິ່ນ
ທ່ານໄດ້ແລ່ນອອກຈາກປະຕູເຕັນໄປຕ້ອນຮັບພວກເພິ່ນ ແລະໄດ້
ນ້ອມຕົວລົງເຖິງດິນ. ໓ແລະໄດ້ກາບທູນວ່າ "ເຈົ້ານາຍຂອງຂ້ານ້ອຍ
ຖ້າຂ້ານ້ອຍຫາກເປັນທີ່ຊອບໂຜດໃນສາຍຕາຂອງພວກທ່ານ ຂໍພວກ
ທ່ານຢ່າໄດ້ກາຍໄປຈາກຂ້ານ້ອຍຜູ້ເປັນຂ້າຮັບໃຊ້ຂອງພວກທ່ານ
ເລີຍ. ໔ຂໍອະນຸຍາດໃຫ້ຂ້ານ້ອຍໄດ້ເອົານ້ຳມາລ້າງຕີນທ່ານທັງຫຼາຍ
ຈັກໜ້ອຍໜຶ່ງ ແລະໃຫ້ພວກທ່ານໄດ້ເຊົາເມື່ອຍຢູ່ໃຕ້ຕົ້ນໄມ້ນີ້ເຖີດ.
໕ຂ້ານ້ອຍຈະເອົາເຂົ້າຈີ່ໜ້ອຍໜຶ່ງໃຫ້ພວກທ່ານກິນ ແລະໃຫ້ໃຈຂອງ

ທ່ານສິດຊື່ນ ຫຼັງຈາກນັ້ນພວກທ່ານຈຶ່ງເດີນທາງຕໍ່ໄປເພາະວ່າທ່ານ
ທັງຫຼາຍໄດ້ມາເຖິງຂ້າຮັບໃຊ້ຂອງທ່ານແລ້ວ" ແລະພວກເພິ່ນໄດ້
ກ່າວວ່າ "ຈົ່ງເຮັດຕາມຢ່າງທີ່ເຈົ້າໄດ້ເວົ້ານັ້ນເຖີດ". ໖ອັບຣາຮາມ ໄດ້
ຮີບເຂົ້າໄປໃນເຕັນຫານາງຊາຣາ ແລະບອກວ່າ "ຈົ່ງຮີບເອົາແປ້ງຢ່າງ
ດີສາມຜອງມານວດ ແລະເຮັດເຂົ້າໜົມເຖີດ". ໗ອັບຣາຮາມ ໄດ້ແລ່ນ
ໄປທີ່ຝູງສັດ ເອົາລູກງົວຕົວອ່ອນແລະດີມາ ແລະໄດ້ຍື່ນໃຫ້ຄົນໜຸ່ມ
ຜູ້ໜຶ່ງ ແລ້ວລາວກໍຮີບຈັດແຈງປຸງແຕ່ງເປັນອາຫານ. ໘ອັບຣາຮາມ
ໄດ້ເອົານ້ຳມັນເບີກັບນ້ຳນົມ ແລະຊີ້ນລູກງົວທີ່ໄດ້ປຸງແຕງແລ້ວນັ້ນ
ມາຕັ້ງໄວ້ຕໍ່ໜ້າທ່ານເຫຼົ່ານັ້ນ ແລະອັບຣາຮາມ ໄດ້ຢືນຢູ່ໃກ້ພວກເພິ່ນ
ໃຕ້ຕົ້ນໄມ້ ແລະພວກເພິ່ນໄດ້ຮັບປະທານ.

໙ແລະພວກເພິ່ນໄດ້ຖາມ ອັບຣາຮາມ ວ່າ "ຊາຣາ ເມຍຂອງເຈົ້າ
ຢູ່ໃສ?" ທ່ານໄດ້ຕອບວ່າ "ນາງຢູ່ໃນເຕັນ" ໑໐ເພິ່ນໄດ້ກ່າວວ່າ "ເຮົາ
ຈະກັບມາຫາເຈົ້າອີກແນ່ນອນຕາມເວລາແຫ່ງຊີວິດ* ແລະເບິ່ງເຖີດ
ນາງຊາຣາ ເມຍຂອງເຈົ້າຈະມີລູກຊາຍຄົນໜຶ່ງ" ນາງຊາຣາ ໄດ້ຟັງຢູ່
ທີ່ປະຕູເຕັນ ຊຶ່ງຢູ່ທາງຫຼັງທ່ານ. ໑໑ອັນໜຶ່ງ ອັບຣາຮາມ ກັບນາງ
ຊາຣາ ກໍເຖົ້າແກ່ ແລະມີອາຍຸສູງຫຼາຍແລ້ວ ປະຈຳເດືອນທີ່ພວກຜູ້ຍິງ
ເປັນນາງຊາຣາກໍໄດ້ເຊົາເປັນແລ້ວ. ໑໒ນາງຊາຣາ ໄດ້ຍິ້ມຫົວຢູ່ໃນໃຈ
ຂອງຕົນກ່າວວ່າ "ເມື່ອຂ້ອຍກໍແກ່ເຖົ້າແລ້ວແລະນາຍຂອງຂ້ອຍກໍ
ເຖົ້າແລ້ວ ຈະມີຄວາມສຸກໄດ້ຫຼື?" ໑໓ພຣະເຢໂຮວາໄດ້ຖາມ ອັບຣາ
ຮາມ ວ່າ "ເປັນຫຍັງ ນາງຊາຣາ ຈຶ່ງຫົວ ແລະເວົ້າວ່າ 'ຂ້ອຍເຖົ້າແກ່
ແລ້ວຈະມີລູກຄົນໜຶ່ງໄດ້ແທ້ໆຫຼື?' ໑໔ມີສິ່ງໃດທີ່ຍາກເກີນໄປສຳລັບ
ພຣະເຢໂຮວາຫຼື? ເມື່ອເຖິງເວລາກຳນົດເຮົາຈະກັບມາຫາເຈົ້າ ຕາມ
ເວລາແຫ່ງຊີວິດ ແລະນາງ ຊາຣາ ຈະມີລູກຊາຍຄົນໜຶ່ງ". ໑໕ນາງ

ຊາຣາ ໄດ້ປະຕິເສດວ່າ “ຂ້ານ້ອຍບໍ່ໄດ້ຫົວ” ເພາະວ່ານາງຢ້ານ. ແຕ່
ພຣະອົງໄດ້ກ່າວວ່າ “ບໍ່, ແຕ່ເຈົ້າໄດ້ຫົວແທ້ໆ”.

໑໖ແລະທ່ານທັງສາມໄດ້ເດີນທາງຈາກທີ່ນັ້ນຕັ້ງໜ້າຈະໄປເມືອງ
ໂຊໂດມ, ອັບຣາຮາມ ໄດ້ໄປສົ່ງພວກເພິ່ນຕາມທາງ. ໑໗ພຣະເຢໂຮ
ວາໄດ້ກ່າວວ່າ “ເຮົາຈະປິດບັງ ອັບຣາຮາມ ກ່ຽວກັບສິ່ງທີ່ເຮົາຈະ
ເຮັດຫຼື? ໑໘ດ້ວຍວ່າ ອັບຣາຮາມ ຈະຕ້ອງບັງເກີດເປັນຊົນຊາດໃຫຍ່
ແລະມີອຳນາດຫຼາຍ ແລະບັນດາປະຊາຊາດແຫ່ງແຜ່ນດິນໂລກຈະ
ໄດ້ຮັບພຣະພອນຍ້ອນລາວ. ໑໙ເຫດວ່າ ເຮົາຮູ້ຈັກລາວແລ້ວວ່າລາວ
ຈະສັ່ງສອນລູກຫຼານແລະຄອບຄົວທີ່ມາພາຍຫຼັງລາວ ໃຫ້ຖືຮັກສາວິ
ຖີທາງຂອງພຣະເຢໂຮວາ ເພື່ອຈະກະທຳການຍຸຕິທຳແລະທ່ຽງທຳ
ເພື່ອພຣະເຢໂຮວາຈະປະທານແກ່ ອັບຣາຮາມ ຕາມທີ່ພຣະອົງໄດ້
ກ່າວໄວ້ເຖິງທ່ານແລ້ວ”. ໒໐ແລະພຣະເຢໂຮວາໄດ້ກ່າວວ່າ “ເພາະ
ເຫດສຽງຮ້ອງຂອງຊາວເມືອງ ໂຊໂດມ ແລະເມືອງ ໂກໂມຣາ ນັ້ນ
ໃຫຍ່ຫຼາຍ ແລະເພາະເຫດການບາບຂອງພວກເຂົາໜັກໜາຫຼາຍ.
໒໑ເຮົາຈະສະເດັດລົງໄປເບິ່ງວ່າຄົນທັງຫຼາຍນັ້ນໄດ້ກະທຳຕາມສຽງ
ຮ້ອງທີ່ໄດ້ຂຶ້ນມາເຖິງເຮົານັ້ນ ເປັນຈິງຫຼືບໍ່ ຖ້າບໍ່ແມ່ນເຮົາຈະຮູ້”.

໒໒ແລະທ່ານທັງສອງນັ້ນໄດ້ແຍກຈາກທີ່ນັ້ນໄປສູ່ເມືອງ ໂຊໂດມ ແຕ່
ອັບຣາຮາມ ຍັງຢືນຢູ່ຕໍ່ໜ້າພຣະເຢໂຮວາ. ໒໓ອັບຣາຮາມ ໄດ້ຫຍັບ
ເຂົ້າມາໃກ້ ແລະໄດ້ທູນວ່າ “ພຣະອົງຈະຊົງທຳລາຍຄົນຊອບທຳກັບ
ຄົນຊົ່ວພ້ອມກັນຫຼື? ໒໔ບາງທີມີຄົນຊອບທຳຢູ່ໃນເມືອງ 50 ຄົນ
ພຣະອົງຈະທຳລາຍເມືອງນັ້ນຫຼື? ແລະຈະບໍ່ຍົກເວັ້ນໃຫ້ເມືອງນັ້ນ
ເພາະເຫດຄົນຊອບທຳ 50 ຄົນທີ່ຢູ່ໃນນັ້ນຫຼື? ໒໕ຂໍໃຫ້ການກະທຳ
ຢ່າງນີ້ໄກຈາກພຣະອົງເຖີດ ທີ່ຈະຂ້າຄົນຊອບທຳພ້ອມກັບຄົນຊົ່ວ,

ແລະທີ່ຈະໃຫ້ຄົນຊອບທຳເປັນເໝືອນດັ່ງຄົນຊົ່ວ ຂໍໃຫ້ການເຊັ່ນນີ້ໄກ
ຈາກພຣະອົງເຖີດ: ພຣະຜູ້ພິພາກສາແຫ່ງແຜ່ນດິນໂລກທັງໝົດຈະ
ບໍ່ຕັດສິນຢ່າງຍຸຕິທຳຫຼື?" ໒໖ພຣະເຢໂຮວາໄດ້ກ່າວວ່າ "ຖ້າເຮົາພົບ
ຄົນຊອບທຳຢູ່ໃນເມືອງ ໂຊໂດມ 50 ຄົນ ເຮົາຈະລະເວັ້ນສະຖານທີ່
ນັ້ນທັງໝົດເພາະເຂົາ" ໒໗ອັບຣາຮາມ ໄດ້ກາບທູນຕໍ່ວ່າ "ເບິ່ງແມ,
ບັດນີ້ ຂ້ານ້ອຍຜູ້ເປັນພຽງຂີ້ຝຸ່ນດິນ ແລະຂີ້ເຖົ່າໄຟໄດ້ກ້າກາບທູນ
ຕໍ່ພຣະອົງເຈົ້າ: ໒໘ບາງທີຖ້າຄົນຊອບທຳ 50 ຄົນນັ້ນຫາກຂາດຢູ່ຫ້າ
ຄົນ ພຣະອົງຈະທຳລາຍເມືອງນັ້ນທັງໝົດຍ້ອນຂາດຫ້າຄົນນັ້ນຫຼື?"
ພຣະອົງໄດ້ກ່າວວ່າ "ເຮົາຈະບໍ່ທຳລາຍເມືອງນັ້ນ ຖ້າເຮົາພົບ 45
ຄົນທີ່ນັ້ນ". ໒໙ອັບຣາຮາມ ໄດ້ກາບທູນຕໍ່ພຣະອົງອີກວ່າ "ບາງທີ
ຖ້າຫາກພົບແຕ່ 40 ຄົນຢູ່ທີ່ນັ້ນ" ພຣະອົງໄດ້ກ່າວວ່າ "ເຮົາຈະບໍ່ເຮັດ
ເພາະເຫັນແກ່ 40 ຄົນນັ້ນ" ໓໐ທ່ານໄດ້ກາບທູນວ່າ "ຂໍພຣະອົງເຈົ້າ
ຢ່າໄດ້ຊົງພຣະພິໂລດເລີຍ ແລະຂ້ານ້ອຍຈະກາບທູນອີກ: ບາງທີຖ້າ
ຫາກພົບແຕ່ 30 ຄົນທີ່ນັ້ນ" ພຣະອົງໄດ້ກ່າວວ່າ "ເຮົາຈະບໍ່ກະທຳ
ຖ້າເຮົາພົບ 30 ຄົນທີ່ນັ້ນ". ໓໑ທ່ານໄດ້ກາບທູນວ່າ "ເບິ່ງແມ, ບັດນີ້
ຂ້ານ້ອຍໄດ້ກ້າກາບທູນຕໍ່ພຣະອົງເຈົ້າ: ບາງທີຖ້າຫາກພົບແຕ່ 20
ຄົນທີ່ນັ້ນ."ພຣະອົງໄດ້ກ່າວວ່າ "ເຮົາຈະບໍ່ທຳລາຍເມືອງນັ້ນ ເພາະ
ເຫັນແກ່ 20 ຄົນນັ້ນ". ໓໒ທ່ານໄດ້ກາບທູນວ່າ "ຂໍພຣະອົງເຈົ້າ ຢ່າໄດ້
ຊົງພຣະພິໂລດ ແລະຂ້ານ້ອຍຈະກາບທູນອີກແຕ່ເທື່ອດຽວນີ້ ບາງທີ
ຖ້າຫາກພົບແຕ່ 10 ຄົນທີ່ນັ້ນ". ແລະພຣະອົງໄດ້ກ່າວວ່າ "ເຮົາຈະບໍ່
ທຳລາຍເມືອງນັ້ນ ເພາະເຫັນແກ່ 10 ຄົນນັ້ນ". ໓໓ແລະເມື່ອພຣະເຢ
ໂຮວາໄດ້ສົນທະນາກັບ ອັບຣາຮາມ ແລ້ວ ພຣະອົງໄດ້ສະເດັດໄປ
ແລ້ວອັບຣາຮາມ ໄດ້ກັບຄືນໄປບ່ອນຢູ່ຂອງຕົນ.

*18:10 "ເວລາແຫ່ງຊີວິດ" ນີ້ເວົ້າເຖິງໄລຍະເວລາຕັ້ງທ້ອງຄືເກົ້າເດືອນ*

# ບົດທີ 19

໑ເທວະດາສອງອົງນັ້ນໄດ້ໄປເຖິງເມືອງ ໂຊໂດມ ໃນເວລາຄ່ຳ, ໂລດ
ໄດ້ນັ່ງຢູ່ທີ່ປະຕູເມືອງ ໂຊໂດມ, ໂລດໄດ້ເຫັນພວກເພິ່ນ ແລະໄດ້ລຸກ
ຂຶ້ນໄປຕ້ອນຮັບພວກເພິ່ນ ແລະໄດ້ນ້ອມໝູບໜ້າລົງເຖິງດິນ. ໒ທ່ານ
ໄດ້ກາບທູນວ່າ“ເບິ່ງເຖີດ, ເຈົ້ານາຍຂອງຂ້ານ້ອຍ ຂໍພວກທ່ານຈົ່ງແວ່
ເຂົ້າໄປໃນເຮືອນຂ້າຮັບໃຊ້ຂອງພວກທ່ານ ພັກເຊົາຢູ່ຕະຫຼອດຄືນນີ້,
ລ້າງຕີນຂອງພວກທ່ານ ແລ້ວພວກທ່ານຈຶ່ງລຸກຂຶ້ນແຕ່ເຊົ້າ ແລະເດີນ
ທາງຕໍ່ໄປ”. ເທວະດາໄດ້ກ່າວວ່າ “ຢ່າເລີຍ ແຕ່ພວກເຮົາຈະພັກຢູ່ທີ່
ຖະໜົນໃນຄືນນີ້”. ໓ທ່ານໄດ້ອ້ອນວອນໜ່ວງໜ່ຽວຫຼາຍ ເທວະດາຈຶ່ງ
ໄດ້ມານຳທ່ານ ແລະເຂົ້າໄປໃນເຮືອນຂອງທ່ານ, ທ່ານໄດ້ຈັດແຈງ
ການລ້ຽງສຳຫຼັບພວກເພິ່ນ ໄດ້ເຮັດເຂົ້າຈີ່ບໍ່ມີເຊື້ອ ແລະພວກເພິ່ນ
ໄດ້ຮັບປະທານ. ໔ແຕ່ກ່ອນທີ່ພວກເພິ່ນຈະນອນ ມີພວກຜູ້ຊາຍຂອງ
ຊາວເມືອງ ໂຊໂດມ ທັງຄົນເຖົ້າທັງຄົນໜຸ່ມ ໝົດທຸກຄົນມາຈາກທຸກ
ທິດທາງໄດ້ພາກັນລ້ອມເຮືອນໄວ້. ໕ແລະໄດ້ຮ້ອງເອີ້ນໃສ່ ໂລດ ແລະ
ກ່າວແກ່ທ່ານວ່າ“ຄົນພວກນັ້ນທີ່ໄດ້ມາຫາເຈົ້າໃນຄືນວັນນີ້ຢູ່ໃສ? ຈົ່ງ
ເອົາພວກເຂົາອອກມາໃຫ້ເຮົາທັງຫຼາຍ ເພື່ອເຮົາທັງຫຼາຍຈະໄດ້ສົມ
ສູ່ກັບພວກເຂົາ”. ໖ໂລດ ໄດ້ອອກໄປຫາພວກເຂົາທີ່ປະຕູ ແລະພາຍ
ຫຼັງທ່ານອອກໄປກໍອັດປະຕູໄວ້. ໗ແລະໄດ້ກ່າວວ່າ “ພີ່ນ້ອງທັງຫຼາຍ
ເອີຍ, ເຮົາຂໍນຳພວກທ່ານຢ່າກະທຳຊົ່ວຮ້າຍຢ່າງນີ້ເລີຍ, ໘ເບິ່ງແມ
ຂ້ອຍມີລູກສາວສອງຄົນທີ່ຍັງບໍ່ເຄີຍໄດ້ສົມສູ່ກັບຜູ້ຊາຍ ຂໍໃຫ້ຂ້ອຍ
ພາພວກເຂົາອອກມາຫາພວກທ່ານ ແລະໃຫ້ພວກທ່ານກະທຳແກ່
ພວກເຂົາຕາມພວກທ່ານເຫັນດີເຖີດ ຂໍພຽງແຕ່ຢ່າກະທຳສິ່ງໃດ
ແກ່ຊາຍເຫຼົ່ານີ້ເລີຍ ເຫດວ່າພວກເພິ່ນເປັນແຂກທີ່ໄດ້ເຂົ້າມາໃຕ້

ສາຍຄາເຮືອນຂອງຂ້ອຍແລ້ວ”. ໙ແລ້ວພວກເຂົາໄດ້ກ່າວວ່າ “ເຈົ້າຈົ່ງ
ຫຼີກຖອຍໄປ” ແລະພວກເຂົາໄດ້ກ່າວອີກວ່າ “ຄົນຜູ້ນີ້ໄດ້ເຂົ້າມາຈະ
ອາໄສຢູ່ທີ່ນີ້ ແລະລາວຢາກຕັ້ງຕົວເປັນຜູ້ຕັດສິນ, ບັດນີ້ເຮົາທັງຫຼາຍ
ຈະກະທຳແກ່ເຈົ້າຢ່າງຮ້າຍແຮງກວ່າທີ່ຈະກະທຳແກ່ຄົນເຫຼົ່ານັ້ນ”
ແລະເຂົາໄດ້ຫຸ້ມບຽດສຽດ ໂລດ ຢ່າງແຮງ ແລະໄດ້ເຂົ້າມາໃກ້ເພື່ອ
ຈະມ້າງປະຕູເສຍ. ໑໐ແລະທ່ານທັງສອງນັ້ນໄດ້ຢຽດມືຂອງພວກເພິ່ນ
ອອກດຶງເອົາ ໂລດ ເຂົ້າມາໃນເຮືອນແລະໄດ້ອັດປະຕູ. ໑໑ແລ້ວພວກ
ເພິ່ນໄດ້ກະທຳໃຫ້ຄົນທັງຫຼາຍທີ່ຢູ່ຮີມປະຕູເຮືອນນັ້ນຕາບອດ ທັງຜູ້
ນ້ອຍແລະຜູ້ໃຫຍ່ ພວກເຂົາຈຶ່ງໄດ້ຊອກຫາປະຕູຈົນເມື່ອຍແຕ່ບໍ່ພົບ.
໑໒ແລ້ວທ່ານທັງສອງໄດ້ຖາມ ໂລດ ວ່າ “ທີ່ນີ້ເຈົ້າຍັງມີຜູ້ໃດ? ລູກເຂີຍ
ລູກຊາຍ ລູກຍິງຂອງເຈົ້າ ແລະຄອບຄົວຂອງເຈົ້າໃນເມືອງນີ້ ຈົ່ງພາ
ອອກໄປຈາກທີ່ນີ້ເຖີດ. ໑໓ເຫດວ່າພວກເຮົາໄດ້ມາຈະທຳລາຍເມືອງນີ້
ເພາະວ່າສຽງຮ້ອງຂອງພວກເຂົາໄດ້ດັງຫຼາຍຍິ່ງຂຶ້ນຕໍ່ໜ້າພຣະເຢໂຮ
ວາ ແລະພຣະເຢໂຮວາໄດ້ໃຊ້ພວກເຮົາມາເພື່ອຈະໄດ້ທຳລາຍເມືອງ
ນີ້ເສຍ”. ໑໔ໂລດ ໄດ້ອອກໄປບອກລູກເຂີຍທັງຫຼາຍ ທີ່ໄດ້ເອົາລູກ
ສາວຂອງຕົນວ່າ “ຈົ່ງລຸກຂຶ້ນອອກຈາກທີ່ນີ້ໄປເຖີດ ເຫດວ່າພຣະເຢ
ໂຮວາພວມຈະທຳລາຍເມືອງນີ້” ແຕ່ລູກເຂີຍທັງຫຼາຍໄດ້ຄິດວ່າທ່ານ
ເວົ້າຢອກຫຼິ້ນ.

໑໕ເມື່ອເວລາຮຸ່ງເຊົ້າ ເທວະດາທັງສອງໄດ້ບອກ ໂລດ ຕື່ມວ່າ “ຈົ່ງລຸກ
ຂຶ້ນເອົາເມຍຂອງເຈົ້າ ແລະລູກສາວສອງຄົນທີ່ຢູ່ນີ້ໄປເສຍ ຢ້ານວ່າ
ເຈົ້າຈະຈິບຫາຍດ້ວຍຄວາມອະທຳຂອງເມືອງນີ້”. ໑໖ໂລດ ຍັງຊ້າຢູ່
ທ່ານທັງສອງຈຶ່ງໄດ້ຈັບເອົາມືຂອງທ່ານໄປ ເພາະພຣະເຢໂຮວາໄດ້
ເມດຕາທ່ານ ພວກເພິ່ນໄດ້ຈູງທ່ານອອກໄປ ແລະປະໄວ້ພາຍນອກ
ເມືອງນັ້ນ.

໑໗ແລະຢູ່ມາເມື່ອເທວະດາໄດ້ພາພວກເຂົາອອກໄປນອກແລ້ວ ພວກ
ເພິ່ນໄດ້ສັ່ງວ່າ"ເຈົ້າຈົ່ງໜີເອົາຕົວໃຫ້ພົ້ນຊີວິດເຖີດຢ່າຊູ່ຫຼຽວເບິ່ງທາງ
ຫຼັງຢ່າຢຸດພັກຢູ່ທີ່ທົ່ງຮາບເສລີນີ້ ຈົ່ງໜີໄປທາງພູເຂົາຢ້ານເຈົ້າຈະຈິບ
ຫາຍເສຍ". ໑໘ໂລດໄດ້ກາບທູນວ່າ "ໂອພຣະອົງເຈົ້າຂ້າຂໍຢ່າໃຫ້ເປັນ
ຢ່າງນັ້ນ, ໑໙ບັດນີ້ທາດຂອງພຣະອົງ ໄດ້ພົບພຣະຄຸນຢູ່ຕໍ່ໜ້າພຣະອົງ
ແລ້ວ ແລະພຣະອົງໄດ້ໂຜດຄວາມເມດຕາຫຼາຍແກ່ຂ້ານ້ອຍ ໃຫ້ຊີວິດ
ຂ້ານ້ອຍໄດ້ພົ້ນ ແລະຂ້ານ້ອຍຈະໜີໄປທີ່ພູເຂົາກໍບໍ່ໄດ້ ຢ້ານວ່າການ
ອັນຕະລາຍຈະຖືກຂ້ານ້ອຍ ແລະຂ້ານ້ອຍຈະຕາຍໄປ. ໒໐ເບິ່ງແມ
ດຽວນີ້ເມືອງນີ້ຢູ່ໃກ້ຈະໜີເຖິງໄດ້ ແລະເປັນເມືອງນ້ອຍ ຂໍໃຫ້ຂ້ານ້ອຍ
ໜີໄປທີ່ນັ້ນເຖີດ (ເປັນເມືອງນ້ອຍບໍ່ແມ່ນຫຼື?) ແລະຈິດໃຈຂອງຂ້າ
ນ້ອຍຈະໄດ້ພົ້ນຊີວິດ" ໒໑ພຣະອົງໄດ້ກ່າວແກ່ທ່ານວ່າ "ບັດນີ້ ເຮົາ
ໂຜດໃຫ້ທ່ານຕາມຄຳຂໍນີ້ອີກເຮົາຈະບໍ່ທຳລາຍເມືອງທີ່ເຈົ້າເວົ້ານັ້ນ.
໒໒ເຈົ້າຈົ່ງຮີບໜີໄປທີ່ນັ້ນເພາະເຮົາຈະທຳລາຍສິ່ງໃດກໍບໍ່ໄດ້ກ່ອນ
ເຈົ້າຈະເຖິງທີ່ນັ້ນ"ເຫດສະນັ້ນເຂົາເອີ້ນຊື່ເມືອງນັ້ນວ່າ ໂຈອາດ.

໒໓ໂລດ ໄດ້ເຂົ້າໄປເມືອງ ໂຈອາດ ເວລາຕາເວັນພວມອອກ. ໒໔ແລ້ວ
ພຣະເຢໂຮວາໄດ້ກະທຳໃຫ້ໄຟແລະມາດມາແຕ່ພຣະເຢໂຮວາ ຕົກ
ຈາກຟ້າສະຫວັນລົງເຖິງເມືອງໂຊໂດມ ແລະເມືອງໂກໂມຣາ.໒໕ພຣະ
ອົງໄດ້ທຳລາຍເມືອງທັງຫຼາຍນັ້ນ ທົ່ວທົ່ງຮາບເສລີກັບຊາວເມືອງທັງ
ປວງແລະຕົ້ນໄມ້ຕົ້ນພືດທັງປວງທີ່ງອກຈາກດິນໃຫ້ຈິບຫາຍເສຍ
ໝົດສ້ຽງ.

໒໖ແລະເມຍ ໂລດ ໄດ້ຫຼຽວຄືນເບິ່ງທາງຫຼັງ ແລ້ວຕົວນາງກາຍເປັນ
ເສົາກ້ອນເກືອ.

໒໗ອັບຣາຮາມ ໄດ້ລຸກຂຶ້ນແຕ່ເຊົ້າ ໄປເຖິງບ່ອນທີ່ທ່ານໄດ້ເຝົ້າຢູ່ຕໍ່ໜ້າ
ພຣະເຢໂຮວາເມື່ອກ່ອນ: ໒໘ທ່ານໄດ້ຫຼຽວເບິ່ງເມືອງ ໂຊໂດມ ແລະ
ເມືອງໂກໂມຣາ ແລະທົ່ວປະເທດຮາບເສລີນັ້ນ ແລະເບິ່ງແມ ໄດ້ເຫັນ
ຄວັນໄຟພຸ່ງຂຶ້ນຈາກດິນເໝືອນດັ່ງຄວັນເຕົາໄຟ. ໒໙ແລະຢູ່ມາເມື່ອ
ພຣະເຈົ້າໄດ້ທຳລາຍເມືອງທັງຫຼາຍທີ່ຮາບເສລີແລ້ວ ພຣະເຈົ້າໄດ້
ຄິດເຖິງອັບຣາຮາມ ແລະໄດ້ໂຜດໃຫ້ໂລດອອກຈາກຄວາມຈິບຫາຍ
ເມື່ອພຣະອົງໄດ້ທຳລາຍເມືອງທີ່ ໂລດ ໄດ້ອາໄສຢູ່ນັ້ນ.

໓໐ໂລດໄດ້ອອກຈາກເມືອງໂຈອາດຂຶ້ນໄປຢູ່ທີ່ພູເຂົາລູກສາວທັງສອງ
ໄດ້ໄປດ້ວຍ ເຫດວ່າທ່ານຢ້ານທີ່ຈະອາໄສຢູ່ທີ່ ໂຈອາດ ທ່ານໄດ້ໄປ
ອາໄສຢູ່ໃນຖ້ຳທັງທ່ານກັບລູກສາວທັງສອງຄົນ. ໓໑ແລ້ວຜູ້ເປັນເອື້ອຍ
ໄດ້ກ່າວແກ່ນ້ອງສາວວ່າ “ພໍ່ຂອງພວກເຮົາເຖົ້າແລ້ວ ແລະບໍ່ມີຜູ້ຊາຍ
ໃນແຜ່ນດິນໂລກຈະເຂົ້າມາຫາພວກເຮົາຕາມທຳນຽມທົ່ວແຜ່ນດິນ
ໂລກ. ໓໒ມາເຖີດພວກເຮົາຈົ່ງໃຫ້ພໍ່ກິນເຫຼົ້າອາງຸ່ນແລະຈົ່ງເຂົ້າໄປ
ນອນນຳພໍ່ ເພື່ອຈະໄດ້ສືບເຊື້ອສາຍຂອງພວກເຮົາໄວ້”. ໓໓ແລະໃນ
ຄືນວັນນັ້ນ ເຂົາທັງສອງໄດ້ເອົາເຫຼົ້າອາງຸ່ນໃຫ້ພໍ່ກິນ ຜູ້ເອື້ອຍໄດ້ເຂົ້າ
ໄປນອນນຳພໍ່, ພໍ່ບໍ່ໄດ້ຮູ້ວ່າລູກສາວໄດ້ມານອນ ແລະໄດ້ລຸກຂຶ້ນໄປ
ເມື່ອໃດ. ໓໔ແລະມື້ຕໍ່ມາ ຜູ້ເອື້ອຍໄດ້ກ່າວແກ່ນ້ອງສາວວ່າ “ເບິ່ງແມ
ເມື່ອຄືນນີ້ເຮົາໄດ້ນອນນຳພໍ່ແລະຄືນວັນນີ້ພວກເຮົາຈົ່ງໃຫ້ພໍ່ກິນເຫຼົ້າ
ອາງຸ່ນອີກ ແລ້ວເຈົ້າຈົ່ງໄປນອນນຳພໍ່ເຖີດ ເພື່ອຈະໄດ້ສືບເຊື້ອສາຍ
ຂອງພວກເຮົາໄວ້”. ໓໕ແລ້ວຄືນວັນນັ້ນພວກເຂົາໄດ້ພາກັນເອົາເຫຼົ້າອາ
ງຸ່ນໃຫ້ພໍ່ກິນອີກ ແລ້ວນ້ອງສາວໄດ້ລຸກຂຶ້ນ ເຂົ້າໄປນອນນຳພໍ່, ພໍ່ບໍ່
ໄດ້ຮູ້ວ່າລູກສາວໄດ້ມານອນແລະໄດ້ລຸກຂຶ້ນໄປເມື່ອໃດ. ໓໖ລູກສາວ
ຂອງ ໂລດ ທັງສອງໄດ້ຕັ້ງທ້ອງຍ້ອນພໍ່ຂອງພວກເຂົາ. ໓໗ຜູ້ເອື້ອຍໄດ້

ກໍາເນີດລູກຊາຍ ແລະເອີ້ນຊື່ວ່າ ໂມອາບ ຈົນເຖິງທຸກວັນນີ້. ໓໘ແລະ
ຜູ້ນ້ອງໄດ້ກໍາເນີດລູກຊາຍ ແລະເອີ້ນຊື່ວ່າ ເບນອາມີ ຜູ້ນີ້ເປັນພໍ່ພວກ
ອໍາໂມນ ຈົນເຖິງທຸກວັນນີ້.

## ບົດທີ 20

໑ອັບຣາຮາມ ໄດ້ໜີຈາກທີ່ນັ້ນໄປປະເທດທິດໃຕ້ ແລະໄດ້ອາໄສຢູ່ທີ່
ຫວ່າງກາງເມືອງ ກາເດເຊ ກັບເມືອງ ຊູເຣ ແລະໄດ້ໄປອາໄສທີ່ເມືອງ
ເຄຣານ. ໒ອັບຣາຮາມ ໄດ້ກ່າວເຖິງນາງ ຊາຣາ ເມຍຂອງຕົນວ່າ “ນາງ
ເປັນນ້ອງສາວຂອງເຮົາ” ແລະ ອາບີເມເລັກ ກະສັດເມືອງ ເຄຣານ
ໄດ້ໃຊ້ຄົນໄປເອົານາງຊາຣາມາ. ໓ພຣະເຈົ້າໄດ້ສະເດັດມາຫາກະສັດ
ອາບີເມເລັກ ໃນຄວາມຝັນເວລາກາງຄືນ ແລະໄດ້ກ່າວແກ່ທ່ານວ່າ
“ເບິ່ງເຖີດ ເຈົ້າຕາຍແລ້ວເພາະຜູ້ຍິງທີ່ເຈົ້າໄດ້ເອົາມາໄວ້ນີ້, ເຫດວ່າ
ຍິງນີ້ເປັນເມຍຂອງຊາຍຜູ້ໜຶ່ງ”. ໔ອັນໜຶ່ງ ກະສັດ ອາບີເມເລັກ ບໍ່ໄດ້
ຫຍັບເຂົ້າໄປໃກ້ນາງ ແລະກະສັດໄດ້ກາບທູນວ່າ “ພຣະອົງເຈົ້າຂ້າ
ພຣະອົງຈະໃຫ້ບັນດາປະເທດຊອບທໍາຈິບຫາຍໄປດ້ວຍຫຼື? ໕ທ່ານ
ໄດ້ບອກຂ້ານ້ອຍວ່າ ‘ນາງນີ້ເປັນນ້ອງສາວຂອງທ່ານບໍ່ແມ່ນຫຼື’ ແລະ
ນາງເອງໄດ້ບອກວ່າ ‘ທ່ານເປັນອ້າຍຂອງນາງດ້ວຍ’ ຂ້ານ້ອຍໄດ້ກະ
ທໍາການນີ້ດ້ວຍໃຈສັດຊື່ແລະດ້ວຍມືອັນບໍ່ມີຜິດ”. ໖ພຣະເຈົ້າໄດ້ກ່າວ
ແກ່ກະສັດໃນຄວາມຝັນວ່າ “ເຮົາກໍຮູ້ຈັກວ່າເຈົ້າໄດ້ກະທໍາການນີ້
ດ້ວຍໃຈສັດຊື່ກໍຈິງ ແລະເຮົາໄດ້ຫ້າມເຈົ້າໄວ້ບໍ່ໃຫ້ເຈົ້າກະທໍາຜິດຕໍ່
ເຮົາ ເຫດສະນັ້ນເຮົາບໍ່ໄດ້ອະນຸຍາດໃຫ້ຈັບຕ້ອງຍິງນັ້ນ. ໗ບັດນີ້ ເຈົ້າ
ຈົ່ງເອົາເມຍຂອງທ່ານຜູ້ນັ້ນໄປສົ່ງເສຍ ເພາະທ່ານເປັນຜູ້ທໍານວາຍ
ແລະທ່ານຈະອ້ອນວອນສໍາຫຼັບເຈົ້າ ແລະເຈົ້າຈະມີຊີວິດຢູ່ ແຕ່ວ່າຖ້າ
ເຈົ້າບໍ່ໄປສົ່ງນາງ ຈົ່ງຮູ້ວ່າ ເຈົ້າຈະຕາຍໄປເປັນແທ້ ທັງເຈົ້າກັບສັບພະ

ທຸກສິ່ງທີ່ເປັນຂອງເຈົ້າດ້ວຍ". ໘ເຫດສະນັ້ນ ກະສັດ ອາບີເມເລກ ໄດ້
ລຸກຂຶ້ນແຕ່ເຊົ້າ ແລະໄດ້ຮ້ອງເອີ້ນຂ້າໃຊ້ທັງປວງຂອງຕົນມາ ແລະ
ໄດ້ບອກສິ່ງທັງປວງນີ້ໃຫ້ພວກເຂົາຟັງພວກເຂົາໄດ້ຢ້ານຫຼາຍ. ໙ແລ້ວ
ກະສັດ ອາບີເມເລກ ໄດ້ເອີ້ນ ອັບຣາຮາມ ມາ, ແລະໄດ້ກ່າວແກ່ທ່ານ
ວ່າ "ທ່ານໄດ້ກະທຳສິ່ງໃດແກ່ພວກເຮົາໆໄດ້ກະທຳຜິດຕໍ່ທ່ານຢ່າງ
ໃດ? ທີ່ທ່ານໄດ້ກະທຳຊົ່ວຮ້າຍອັນໃຫຍ່ນີ້ມາຖືກເຮົາແລະພຣະລາ
ຊະອານາຈັກຂອງເຮົາ? ທ່ານໄດ້ກະທຳການຕໍ່ເຮົາຢ່າງບໍ່ສົມຄວນ
ຈະກະທຳ". ໑໐ກະສັດ ອາບີເມເລກ ໄດ້ຖາມ ອັບຣາຮາມ ວ່າ "ທ່ານ
ໄດ້ເຫັນສິ່ງໃດເປັນເຫດໃຫ້ທ່ານກະທຳການຢ່າງນີ້?" ໑໑ອັບຣາຮາມ
ໄດ້ຕອບວ່າ "ເພາະເຫດຂ້ານ້ອຍໄດ້ຄິດວ່າບໍ່ມີຄວາມຢ້ານຢຳພຣະ
ເຈົ້າໃນທີ່ນີ້ ແລະເຂົາຈະຂ້າຂ້ານ້ອຍເສຍຍ້ອນເມຍຂ້ານ້ອຍ. ໑໒ນາງ
ນັ້ນເປັນນ້ອງສາວຂອງຂ້ານ້ອຍກໍຈິງແທ້ ເພາະນາງເປັນລູກຂອງພໍ່
ແຕ່ບໍ່ແມ່ນຂອງແມ່ຂ້ານ້ອຍ ແລະຂ້ານ້ອຍໄດ້ເອົານາງມາເປັນເມຍ.
໑໓ແລະຢູ່ມາເມື່ອພຣະເຈົ້າໄດ້ໃຫ້ຂ້ານ້ອຍເດີນທາງໄປຈາກເຮືອນພໍ່
ຂ້ານ້ອຍໄດ້ກ່າວແກ່ນາງວ່າ "ອັນນີ້ເປັນຄຸນທີ່ເຈົ້າກະທຳແກ່ເຮົາ
ບ່ອນໃດພວກເຮົາຈະໄປທຸກທີ່ທຸກແຫ່ງເຈົ້າຈົ່ງກ່າວວ່າເຮົາເປັນອ້າຍ
ຂອງເຈົ້າ". ໑໔ແລະກະສັດ ອາບີເມເລກ ໄດ້ເອົາຝູງສັດນ້ອຍໃຫຍ່
ແລະທາດຊາຍຍິງທັງຫຼາຍໃຫ້ແກ່ ອັບຣາຮາມ ແລະເອົານາງ ຊາ
ຣາ ເມຍຂອງທ່ານສົ່ງໃຫ້ທ່ານ. ໑໕ກະສັດ ອາບີເມເລກ ໄດ້ກ່າວວ່າ
"ເບິ່ງແມ ແຜ່ນດິນຂອງເຮົາຢູ່ຕໍ່ໜ້າທ່ານໆຈົ່ງອາໄສຢູ່ບ່ອນທີ່ຊອບ
ໃຈທ່ານເຖີດ". ໑໖ກະສັດໄດ້ກ່າວແກ່ນາງ ຊາຣາ ວ່າ "ເບິ່ງແມ ເຮົາ
ໄດ້ປະທານເງິນພັນຫຼຽນໃຫ້ອ້າຍຂອງເຈົ້າ ເພິ່ນຈະຄຸມຕາຂອງເຈົ້າຕໍ່
ໜ້າຄົນທັງຫຼາຍທີ່ຢູ່ນຳເຈົ້າ ແລະຕໍ່ໜ້າຄົນທັງປວງ" ດ້ວຍຄຳເຫຼົ່ານີ້
ນາງໄດ້ຖືກຕິຕຽນ. ໑໗ອັບຣາຮາມ ໄດ້ອ້ອນວອນພຣະເຈົ້າ ແລະພຣະ
ເຈົ້າໄດ້ໂຜດໃຫ້ກະສັດ ອາບີເມເລກ ດີປົກກະຕິພ້ອມທັງເມຍແລະ

ຍິງໃຊ້ທັງຫຼາຍຂອງກະສັດ ແລະເຂົາທັງຫຼາຍກໍມີລູກ. ໑໘ເຫດວ່າພຣະ
ເຢໂຮວາໄດ້ປິດການຕັ້ງທ້ອງຍິງທັງປວງໃນຄອບຄົວກະສັດ ອາບີເມ
ເລກ ຍ້ອນນາງ ຊາຣາ ເມຍຂອງ ອັບຣາຮາມ.

# ບົດທີ 21

໑ແລ້ວພຣະເຢໂຮວາໄດ້ຊົງຢ້ຽມຢາມນາງ ຊາຣາ ຕາມທີ່ພຣະອົງໄດ້
ກ່າວໄວ້ ພຣະເຢໂຮວາໄດ້ກະທຳໃຫ້ນາງ ຊາຣາ ເປັນຕາມຄຳທີ່ພຣະ
ອົງໄດ້ບອກແລ້ວ. ໒ນາງ ຊາຣາ ໄດ້ຕັ້ງທ້ອງ ແລະໄດ້ໃຫ້ກຳເນີດລູກ
ຊາຍແກ່ອັບຣາຮາມ ເວລາທ່ານເຖົ້າແລ້ວ ໃນຍາມກຳນົດທີ່ພຣະເຈົ້າ
ໄດ້ບອກໄວ້ແກ່ທ່ານ. ໓ອັບຣາຮາມ ໄດ້ເອີ້ນຊື່ລູກຊາຍຂອງຕົນທີ່ໄດ້
ເກີດມາໃຫ້ຕົນ ຜູ້ຊຶ່ງນາງ ຊາຣາ ໄດ້ໃຫ້ກຳເນີດມານັ້ນວ່າ “ອີຊາກ”.
໔ແລະເມື່ອ ອີຊາກ ອາຍຸໄດ້ 8 ວັນ ແລ້ວ ອັບຣາຮາມ ໄດ້ໃຫ້ຮັບພິທີ
ຕັດຕາມຄຳທີ່ພຣະເຈົ້າໄດ້ສັ່ງແກ່ທ່ານແລ້ວ. ໕ອັບຣາຮາມ ມີອາຍຸໄດ້
100 ປີ ເມື່ອ ອີຊາກ ລູກຊາຍຂອງທ່ານໄດ້ເກີດມາ. ໖ແລ້ວ ນາງ ຊາຣາ
ໄດ້ກ່າວວ່າ “ພຣະເຈົ້າໄດ້ເຮັດໃຫ້ຂ້ອຍຫົວເລາະ ຄົນທຸກຄົນທີ່ໄດ້ຍິນ
ກໍຈະຫົວເລາະດ້ວຍກັນກັບຂ້ອຍ”. ໗ນາງໄດ້ກ່າວອີກວ່າ “ໃຜຈະເວົ້າກັບ
ອັບຣາຮາມ ໄດ້ວ່າ ຊາຣາ ຈະມີລູກອ່ອນກິນນົມ? ເພາະວ່າຂ້ອຍໄດ້
ກຳເນີດລູກຊາຍໃຫ້ທ່ານເວລາທ່ານເຖົ້າແກ່ແລ້ວ”. ໘ແລະລູກນັ້ນ
ໄດ້ຈະເລີນໃຫຍ່ຂຶ້ນ ແລະໄດ້ເຊົາກິນນົມແລ້ວ ໃນວັນທີ່ອີຊາກໄດ້ເຊົາ
ກິນນົມ ອັບຣາຮາມ ໄດ້ຈັດການລ້ຽງອັນໃຫຍ່. ໙ແລະນາງ ຊາຣາ ໄດ້
ເຫັນລູກຂອງນາງ ຮາກາ ຊາວ ເອຢິບ ທີ່ໄດ້ເກີດໃຫ້ ອັບຣາຮາມ
ພວມຫົວເລາະຢູ່. ໑໐ນາງໄດ້ກ່າວແກ່ອັບຣາຮາມ ວ່າ “ທ່ານຈົ່ງຂັບໄລ່

ຍິງຂ້າໃຊ້ຄົນນີ້ກັບລູກຊາຍຂອງນາງອອກໄປເສຍ ເພາະວ່າລູກຊາຍ
ຂອງຍິງຂ້າໃຊ້ຄົນນີ້ຈະເປັນເຈົ້າມໍລະດົກກັບລູກຊາຍຂອງຂ້ອຍຄື
ອິຊາກ ບໍ່ໄດ້". ໑໑ແລະເລື່ອງນີ້ໄດ້ສ້າງຄວາມໜັກໃຈໃນສາຍຕາຂອງ
ອັບຣາຮາມ ຍ້ອນລູກຊາຍຂອງຕົນ. ໑໒ພຣະເຈົ້າໄດ້ກ່າວແກ່ ອັບຣາ
ຮາມ ວ່າ "ຢ່າໃຫ້ເລື່ອງນີ້ເປັນທີ່ໜັກໃຈໃນສາຍຕາຂອງເຈົ້າ ຍ້ອນລູກ
ຊາຍ ແລະຍິງຂ້າໃຊ້ຂອງເຈົ້ານັ້ນ, ຖ້ອຍຄຳທັງປວງທີ່ນາງ ຊາຣາ ໄດ້
ກ່າວແກ່ເຈົ້ານັ້ນ ຈົ່ງຟັງນາງເຖີດ ເພາະວ່າໃນ ອິຊາກ ເຊື້ອສາຍຂອງ
ເຈົ້າຈະຖືກເອີ້ນ. ໑໓ຝ່າຍລູກຊາຍຂອງຍິງຂ້າໃຊ້ນັ້ນ ເຮົາຈະເຮັດໃຫ້
ເປັນຊົນຊາດໜຶ່ງ ເພາະວ່າລາວເປັນເຊື້ອສາຍຂອງເຈົ້າ". ໑໔ອັບຣາ
ຮາມ ໄດ້ລຸກຂຶ້ນແຕ່ເຊົ້າ ແລະໄດ້ເອົາເຂົ້າຈີ່ກັບຖົງໜັງໃສ່ນ້ຳໃຫ້ນາງ
ຮາກາ ໃສ່ບ່າແລະເອົາລູກໃຫ້ນາງ ແລ້ວສົ່ງໃຫ້ນາງໄປເສຍ, ຮາກາ
ໄດ້ຈາກໄປ ແລະໄດ້ພະເນຈອນໄປໃນຖິ່ນແຫ້ງແລ້ງກັນດານເບເອນ
ເຊບາ. ໑໕ເມື່ອນ້ຳໃນຖົງໜັງໝົດແລ້ວນາງໄດ້ເອົາລູກຖິ້ມໄວ້ໃຕ້ພຸ່ມ
ໄມ້ຕົ້ນໜຶ່ງ. ໑໖ແລະໄດ້ໄປນັ່ງຢູ່ຫ່າງຈາກໜ້າລູກໄກປະມານລູກທະ
ນູຕົກ ເພາະນາງໄດ້ກ່າວວ່າ "ຢ່າໃຫ້ຂ້ອຍໄດ້ເຫັນຄວາມຕາຍຂອງ
ເດັກນັ້ນ"ນາງໄດ້ນັ່ງຢູ່ຕໍ່ໜ້າລູກແລະໄດ້ເປັ່ງສຽງຮ້ອງໄຫ້. ໑໗ພຣະເຈົ້າ
ໄດ້ຍິນສຽງຮ້ອງຂອງເດັກນັ້ນ ແລ້ວເທວະດາຂອງພຣະເຈົ້າໄດ້ເອີ້ນ
ນາງ ຮາກາ ຈາກຟ້າສະຫວັນວ່າ "ຮາກາ ເອີຍ ເຈົ້າເປັນຢ່າງໃດ? ຢ່າ
ຊູ່ຢ້ານ ເຫດວ່າພຣະເຈົ້າໄດ້ຍິນສຽງຮ້ອງຂອງເດັກນັ້ນແລ້ວ. ໑໘ຈົ່ງລຸກ
ຂຶ້ນໄປຍົກເອົາລູກນັ້ນອູ້ມໄວ້ທີ່ມືຂອງເຈົ້າ ເຫດວ່າເຮົາຈະເຮັດໃຫ້
ລາວເປັນຊົນຊາດໃຫຍ່ຊາດໜຶ່ງ" ໑໙ພຣະເຈົ້າໄດ້ເປີດຕາຂອງນາງ
ແລະນາງໄດ້ເຫັນນ້ຳສ້າງ, ນາງເອົາຖົງໜັງໄປຕັກເອົານ້ຳຈົນເຕັມ
ແລ້ວເອົາໃຫ້ລູກກິນ. ໒໐ພຣະເຈົ້າໄດ້ສະຖິດຢູ່ນຳເດັກນັ້ນ ລາວໄດ້ຈະ
ເລີນໃຫຍ່ຂຶ້ນແລ້ວໄດ້ອາໄສຢູ່ໃນປ່າແລ້ງແຫ້ງກັນດານແລະກາຍ

ເປັນນັກຍິງທະນູ. ໒໑ລາວໄດ້ອາໄສຢູ່ໃນປ່າແລ້ງແຫ້ງກັນດານ ປາ
ຣານ ແລະແມ່ຂອງລາວໄດ້ຫາເມຍຄົນໜຶ່ງໃຫ້ຈາກປະເທດ ເອຢິບ.

໒໒ແລະຢູ່ມາໃນຄາວນັ້ນ ກະສັດ ອາບີເມເລກ ແລະ ຟີໂກນ ນາຍກອງ
ທັບທະຫານຂອງຕົນໄດ້ກ່າວແກ່ ອັບຣາຮາມ ວ່າ “ພຣະເຈົ້າຊົງສະ
ຖິດຢູ່ນຳທ່ານໃນການທັງປວງທີ່ທ່ານກະທຳນັ້ນ. ໒໓ບັດນີ້ທ່ານຈົ່ງສາ
ບານກັບເຮົາຕໍ່ໜ້າພຣະເຈົ້າຢູ່ທີ່ນີ້ວ່າ ທ່ານຈະບໍ່ກະທຳການອັນຄົດ
ໂກງກັບເຮົາ ທັງລູກແລະຫຼານທັງຫຼາຍຂອງເຮົາດ້ວຍ, ເຮົາໄດ້ກະທຳ
ຄວາມດີຕໍ່ທ່ານຢ່າງໃດ ທ່ານກໍຈົ່ງກະທຳແກ່ເຮົາ ແລະດິນແດນຂອງ
ເຮົາທີ່ທ່ານໄດ້ອາໄສຢູ່ນີ້ຢ່າງນັ້ນ. ໒໔ອັບຣາຮາມ ໄດ້ກ່າວວ່າ “ຂ້ອຍ
ຈະສາບານ”. ໒໕ແລ້ວ ອັບຣາຮາມ ໄດ້ຕິຕຽນກະສັດ ອາບີເມເລກ
ຍ້ອນນໍ້າສ້າງທີ່ພວກຂ້າໃຊ້ຂອງກະສັດ ອາບີເມເລກ ໄດ້ຍຶດເອົາໄປ
ດ້ວຍການໃຊ້ກຳລັງນັ້ນ. ໒໖ກະສັດ ອາບີເມເລກ ໄດ້ກ່າວວ່າ “ເຮົາ
ບໍ່ຮູ້ຈັກວ່າໃຜໄດ້ກະທຳການນັ້ນ ແລະທ່ານກໍບໍ່ໄດ້ບອກເຮົາດ້ວຍ
ແລະເຮົາບໍ່ໄດ້ຍິນເຖິງເລື່ອງນີ້ເລີຍ ຈົນເຖິງວັນນີ້”. ໒໗ແລ້ວ ອັບຣາ
ຮາມ ໄດ້ເອົາຝູງສັດນ້ອຍໃຫຍ່ໃຫ້ແກ່ກະສັດ ອາບີເມເລກ ແລະເຂົາ
ທັງຫຼາຍໄດ້ຕັ້ງຄຳສັນຍາຕໍ່ກັນ. ໒໘ອັບຣາຮາມ ໄດ້ແຍກເອົາລູກແກະ
ຕົວແມ່ເຈັດຕົວອອກຈາກຝູງມາໄວ້ຕ່າງຫາກ. ໒໙ກະສັດ ອາບີເມເລກ
ໄດ້ຖາມ ອັບຣາຮາມ ວ່າ “ລູກແກະຕົວແມ່ເຈັດຕົວນີ້ ຊຶ່ງທ່ານໄດ້
ແຍກອອກມາໄວ້ຕ່າງຫາກນັ້ນໝາຍຄວາມວ່າຢ່າງໃດ?” ໓໐ທ່ານໄດ້
ຕອບວ່າ “ລູກແກະຕົວແມ່ເຈັດຕົວນີ້ ຂໍໃຫ້ທ່ານຮັບເອົາໄປຈາກມື
ຂ້າພະເຈົ້າ ສິ່ງນີ້ຈະເປັນພະຍານແກ່ຂ້າພະເຈົ້າວ່າ ຂ້າພະເຈົ້າໄດ້
ຂຸດນໍ້າສ້າງນີ້”. ໓໑ດ້ວຍເຫດນີ້ພວກເຂົາຈຶ່ງໄດ້ເອີ້ນຊື່ບ່ອນນັ້ນວ່າ ເບ
ເອນເຊບາ ເພາະວ່າເຂົາທັງສອງໄດ້ສາບານທີ່ນັ້ນ. ໓໒ພວກເຂົາໄດ້

ເຮັດຄຳສັນຍາຕໍ່ກັນທີ່ ເບເອນເຊບາ ກະສັດ ເອບີເມເລກ ກັບຟີໂກນ
ນາຍກອງທັບທະຫານຂອງຕົນກໍໄດ້ພາກັນລຸກຂຶ້ນ ແລະກັບໄປຍັງ
ແຜນດິນຟີລິດສະຕິນ. ໓໓ອັບຣາຮາມ ໄດ້ປູກຝັງກົກຕາມາລີ*ຕົ້ນໜຶ່ງ
ໄວ້ທີ່ ເບເອນເຊບາ ແລະທີ່ນັ້ນທ່ານໄດ້ຮ້ອງອອກພຣະນາມແຫ່ງ
ພຣະເຢໂຮວາ ພຣະເຈົ້າອົງຕັ້ງຢູ່ເປັນນິດ. ໓໔ແລ້ວ ອັບຣາຮາມ ໄດ້
ອາໄສຢູ່ໃນແຜນດິນ ຟີລິດສະຕິນ ເປັນເວລາດົນນານ.

*21:33 ຕົ້ນໄມ້ຕາມາລີນີ້ເປັນຕົ້ນໄມ້ຄ້າຍຄືຕົ້ນໝາກຂາມ ບາງທີບໍ່ໄດ້ເປັນແຕ່ຕົ້ນ ດຽວ ແຕ່ເປັນປ່ານ້ອຍໆ*

## ບົດທີ 22

໑ແລະຢູ່ມາພາຍຫຼັງເຫດການທັງຫຼາຍນີ້ ພຣະເຈົ້າໄດ້ທົດລອງໃຈ ອັບ
ຣາຮາມ ແລະໄດ້ກ່າວແກ່ທ່ານວ່າ “ອັບຣາຮາມ ເອີຍ” ທ່ານໄດ້ທູນ
ຕອບວ່າ “ຂ້ານ້ອຍຢູ່ທີ່ນີ້ພຣະອົງເຈົ້າຂ້າ”. ໒ພຣະອົງໄດ້ກ່າວວ່າ
“ເຈົ້າຈົ່ງເອົາລູກຊາຍຂອງເຈົ້າຄື ອີຊາກ ລູກຊາຍຄົນດຽວຂອງເຈົ້າຜູ້
ທີ່ເຈົ້າຮັກ ໄປຍັງແຜ່ນດິນ ໂມຣີຢາ ແລະທີ່ນັ້ນຈົ່ງເອົາ ອີຊາກ ຖວາຍ
ເປັນເຄື່ອງເຜົາບູຊາເທິງພູເຂົາແຫ່ງໜຶ່ງທີ່ເຮົາຈະບອກແກ່ເຈົ້າ”. ໓ອັບ
ຣາຮາມ ໄດ້ລຸກຂຶ້ນແຕ່ເຊົ້າ ໄດ້ເອົາອານໃສ່ຫຼັງລາຕົວໜຶ່ງ ເອົາຄົນ
ໃຊ້ໜຸ່ມສອງຄົນໄປກັບທ່ານ ແລະ ອີຊາກ ລູກຊາຍຂອງຕົນໄປດ້ວຍ
ແລະໄດ້ຜ່າຟືນໄປສຳລັບເຜົາເຄື່ອງບູຊາ ແລ້ວໄດ້ເດີນທາງໄປເຖິງ
ບ່ອນທີ່ພຣະເຈົ້າໄດ້ບອກແກ່ທ່ານ. ໔ໃນວັນທີ່ສາມ ອັບຣາຮາມ ໄດ້
ເງີຍໜ້າຂຶ້ນ ແລະເຫັນບ່ອນນັ້ນຢູ່ແຕ່ໄກ. ໕ອັບຣາຮາມໄດ້ບອກຄົນໃຊ້

ໝຸ່ມວ່າ "ພວກເຈົ້າຈົ່ງຄອຍຖ້າຢູ່ທີ່ນີ້ກັບໂຕລາ ເຮົາກັບລູກຈະພາກັນ
ໄປທາງໜ້າພຸ້ນ ແລະນະມັດສະການທີ່ນັ້ນ ແລ້ວພວກເຮົາຈະກັບມາ
ຫາພວກເຈົ້າ". ໖ອັບຣາຮາມ ໄດ້ເອົາຟືນສຳລັບເຜົາເຄື່ອງບູຊານັ້ນ
ວາງໄວ້ເທິງບ່າ ອີຊາກ ລູກຂອງຕົນ ທ່ານໄດ້ຖືໄຟກັບມີດຢູ່ໃນມືຂອງ
ທ່ານ ແລ້ວເຂົາທັງສອງໄດ້ໄປດ້ວຍກັນ. ໗ອີຊາກ ໄດ້ກ່າວແກ່ ອັບ
ຣາຮາມ ພໍ່ຂອງຕົນວ່າ "ພໍ່ເອີຍ" ທ່ານໄດ້ຕອບວ່າ "ເຮົາຢູ່ນີ້ລູກເອີຍ"
ອີຊາກ ໄດ້ກ່າວວ່າ "ໄຟແລະຟືນກໍມີຢູ່ແລ້ວ ແຕ່ວ່າລູກແກະສຳລັບ
ເຄື່ອງເຜົາບູຊານັ້ນຢູ່ໃສ?" ໘ອັບຣາຮາມ ໄດ້ກ່າວວ່າ "ລູກເອີຍ, ພຣະ
ເຈົ້າຈະຈັດຫາລູກແກະ ເປັນເຄື່ອງເຜົາບູຊາສຳລັບພຣະອົງເອງ"
ແລະເຂົາທັງສອງໄດ້ເດີນທາງໄປດ້ວຍກັນ. ໙ເຂົາໄດ້ໄປເຖິງບ່ອນທີ່
ພຣະເຈົ້າໄດ້ບອກທ່ານແລ້ວ ແລະ ອັບຣາຮາມ ໄດ້ສ້າງແທ່ນບູຊາ
ທີ່ນັ້ນ ເອົາຟືນລຽນເປັນລຳດັບໄວ້ ແລ້ວໄດ້ມັດ ອີຊາກ ລູກຂອງຕົນ
ແລະວາງໄວ້ເທິງແທ່ນບູຊາເທິງຟືນ. ໑໐ອັບຣາຮາມ ໄດ້ເດ່ມືອອກຈັບ
ເອົາມີດ ເພື່ອຈະຂ້າລູກຊາຍຂອງຕົນ. ໑໑ແຕ່ເທວະດາຂອງພຣະເຢ
ໂຮວາໄດ້ເອີ້ນໃສ່ ອັບຣາຮາມ ຈາກຟ້າສະຫວັນວ່າ "ອັບຣາຮາມ ອັບ
ຣາຮາມ ເອີຍ" ທ່ານໄດ້ຕອບວ່າ "ຂ້ານ້ອຍຢູ່ທີ່ນີ້". ໑໒ພຣະອົງໄດ້ກ່າວ
ວ່າ "ເຈົ້າຢ່າວາງມືລົງເທິງເດັກ ຫຼືຢ່າກະທຳສິ່ງໃດແກ່ລາວ ເພາະວ່າ
ບັດນີ້ ເຮົາຮູ້ວ່າເຈົ້າຢຳເກງພຣະເຈົ້າ ເຫດວ່າເຈົ້າບໍ່ໄດ້ຫວງລູກຊາຍ
ຂອງເຈົ້າ ຄືລູກຊາຍຄົນດຽວຂອງເຈົ້າໄວ້ຈາກເຮົາ". ໑໓ອັບຣາຮາມ
ໄດ້ເງີຍໜ້າຂຶ້ນແລະເຫັນ ເບິ່ງແມ ຢູ່ທາງຫຼັງທ່ານມີແກະເຖິກຕົວໜຶ່ງ
ເຂົາຂອງມັນຄາພຸ່ມໄມ້ຢູ່, ອັບຣາຮາມ ໄດ້ໄປເອົາແກະເຖິກນັ້ນ ມາ
ຖວາຍເປັນເຄື່ອງເຜົາບູຊາແທນລູກຊາຍຂອງຕົນ. ໑໔ອັບຣາຮາມ
ໄດ້ເອີ້ນຊື່ບ່ອນນັ້ນວ່າ "ພຣະເຢໂຮວາຢິເຣ" ເໝືອນເຂົາເວົ້າຈົນເຖິງ
ທຸກວັນນີ້ວ່າ "ທີ່ພູເຂົາຂອງພຣະເຢໂຮວາ ພຣະອົງຈະຊົງຈັດຫາໃຫ້".

໑໕ແລ້ວເທວະດາຂອງພຣະເຢໂຮວາໄດ້ຮ້ອງເອີ້ນໃສ່ ອັບຣາຮາມ
ຈາກຟ້າສະຫວັນອີກເທື່ອທີສອງ. ໑໖ແລະບອກວ່າ “ພຣະເຢໂຮວາ
ໄດ້ກ່າວວ່າ ເຮົາໄດ້ສາບານດ້ວຍເຮົາເອງ ເພາະເຈົ້າໄດ້ກະທຳການ
ນີ້ ແລະບໍ່ໄດ້ຫວງລູກຊາຍຂອງເຈົ້າໄວ້ ຄືລູກຊາຍຄົນດຽວຂອງເຈົ້າ:
໑໗ເຫດສະນັ້ນເຮົາຈະອວຍພອນໃຫ້ເຈົ້າເປັນແນ່ເຮົາຈະໃຫ້ເຊື້ອສາຍ
ຂອງເຈົ້າມາກທະວີຂຶ້ນເໝືອນດັ່ງດວງດາວທັງຫຼາຍໃນທ້ອງຟ້າ
ແລະເໝືອນດັ່ງເມັດຊາຍທີ່ແຄມນ້ຳທະເລ ແລະເຊື້ອສາຍຂອງເຈົ້າ
ຈະໄດ້ປະຕູເມືອງສັດຕູຂອງເຈົ້າເປັນກຳມະສິດ. ໑໘ແລະຊົນຊາດ
ທັງປວງທົ່ວແຜ່ນດິນໂລກຈະໄດ້ພຣະພອນຍ້ອນເຊື້ອສາຍຂອງເຈົ້າ
ເພາະເຫດເຈົ້າໄດ້ເຊື່ອຟັງຄວາມຂອງເຮົາ”. ໑໙ອັບຣາຮາມ ໄດ້ກັບ
ມາທີ່ຄົນໃຊ້ໜຸ່ມສອງຄົນ ພວກເຂົາຈຶ່ງໄດ້ລຸກຂຶ້ນເດີນທາງໄປຍັງ ເບ
ເອນເຊບາ ແລ້ວ ອັບຣາຮາມ ໄດ້ອາໄສຢູ່ທີ່ ເບເອນເຊບາ.

໒໐ແລະຢູ່ມາພາຍຫຼັງການທັງຫຼາຍນີ້ ມີຄົນມາບອກ ອັບຣາຮາມ ວ່າ
“ບັດນີ້ ນາງ ມີລະກາ ເມຍຂອງ ນາໂຮ ນ້ອງຊາຍຂອງທ່ານ ກໍໄດ້
ໃຫ້ກຳເນີດລູກຫຼາຍຄົນ. ໒໑ລູກກົກຊື່ອູເສ, ນ້ອງຊື່ບູເສ ແລະ ເກມູເອນ
ຜູ້ເປັນພໍ່ຂອງອາຣາມ, ໒໒ເກເຊດ, ຮາໂຊ, ພິນດາດ, ຢິດລັບ ແລະ ເບທູ
ເອນ ດ້ວຍ. ໒໓ອັນໜຶ່ງ ເບທູເອນ ມີລູກຊື່ ນາງ ເຣເບກາ ທັງແປດຄົນ
ນີ້ ນາງ ມີລະກາ ໄດ້ກຳເນີດໃຫ້ ນາໂຮ ນ້ອງຊາຍຂອງ ອັບຣາຮາມ.
໒໔ນາໂຮ ມີເມຍນ້ອຍຜູ້ໜຶ່ງຊື່ ຣູມາ, ນາງ ຣູມາ ໄດ້ໃຫ້ກຳເນີດລູກຊື່
ເຕບາ, ກາຮາມ, ຕາຮາດ ແລະ ມາອາກາ.

*22:8 ຫຼືວ່າ “ລູກເອີຍ ພຣະເຈົ້າຈະຫາລູກແກະໃຫ້ພຣະອົງເອງເປັນເຄື່ອງເຜົາບູຊາ”*

*22:8 ຫຼືວ່າ "ລູກເອີຍ ພຣະເຈົ້າຈະໃຫ້ພຣະອົງເອງເປັນລູກແກະເພື່ອເປັນເຄື່ອງບູຊາເຜົາ"*

*22:14 ຫຼືວ່າ "ທີ່ພູເຂົາຂອງພຣະເຢໂຮວາ ພຣະອົງຈະເບິ່ງແຍງດູແລ"*

# ບົດທີ 23

໑ນາງ ຊາຣາ ມີອາຍຸໄດ້ 127 ປີ ຊຶ່ງແມ່ນປີທັງຫຼາຍແຫ່ງຊີວິດ ນາງ
ຊາຣາ. ໒ແລ້ວ ນາງ ຊາຣາ ໄດ້ຕາຍທີ່ເມືອງ ກີຣິຍາດອານບາ, ທີ່ເປັນ
ເມືອງ ເຮັບໂຣນ ໃນແຜນດິນ ການາອານ ແລະ ອັບຣາຮາມ ໄດ້ມາໄວ້
ທຸກໃຫ້ແກ່ ນາງ ຊາຣາ. ໓ອັບຣາຮາມ ໄດ້ລຸກຂຶ້ນໄປຈາກສົບຜູ້ຕາຍ
ແລະໄດ້ກ່າວແກ່ພວກລູກຂອງ ເຮດ ວ່າ, ໔"ຂ້າພະເຈົ້າເປັນຄົນຕ່າງ
ດ້າວມາອາໄສຢູ່ທ່າມກາງທ່ານທັງຫຼາຍ ຂໍທ່ານໃຫ້ທີ່ດິນເປັນບ່ອນ
ຝັງສົບແກ່ຂ້າພະເຈົ້າໃນທ່າມກາງພວກທ່ານ ເພື່ອຂ້າພະເຈົ້າຈະຝັງ
ສົບຜູ້ຕາຍຂອງຂ້າພະເຈົ້າໃຫ້ພົ້ນຈາກສາຍຕາ". ໕ພວກລູກຂອງເຮດ
ໄດ້ຕອບ ອັບຣາຮາມ ວ່າ: ໖"ນາຍເຈົ້າຂ້າ ຈົ່ງຟັງພວກເຮົາເຖີດ
ທ່ານເປັນເຈົ້ານາຍຜູ້ຍິ່ງໃຫຍ່ຈາກພຣະເຈົ້າໃນທ່າມກາງພວກເຮົາ
ທ່ານຈົ່ງເລືອກເອົາບ່ອນຝັງສົບດີທີ່ສຸດຂອງພວກເຮົາ ເພື່ອຝັງສົບຜູ້
ຕາຍຂອງທ່ານ ບໍ່ມີຜູ້ໃດໃນພວກເຮົາຈະຫວງຫ້າມບ່ອນຝັງສົບຂອງ
ຕົນໄວ້ຈາກທ່ານ ແຕ່ຈະຍອມໃຫ້ທ່ານຝັງສົບຜູ້ຕາຍຂອງທ່ານ". ໗ອັບ
ຣາຮາມ ໄດ້ລຸກຂຶ້ນ ແລະໄດ້ໝູບຕົວລົງຕໍ່ໜ້າຊາວເມືອງນັ້ນ ຕໍ່ໜ້າ
ພວກລູກຂອງ ເຮດ. ໘ແລະໄດ້ກ່າວກັບພວກເຂົາວ່າ "ຖ້າທ່ານທັງ
ຫຼາຍເຫັນດີຈະໃຫ້ເຮົາຝັງສົບຜູ້ຕາຍຂອງເຮົາໃຫ້ພົ້ນຕາເຮົາແລ້ວ
ຂໍໂຜດຟັງເຮົາ ແລະໄປຂໍຮ້ອງນຳທ່ານ ເອຟະໂຣນ ລູກຊາຍໂສຮາ
ແກ່ເຮົາເຖີດ. ໙ເພື່ອທ່ານຈະໄດ້ຂາຍຖ້ຳ ມັກເປລາ ທີ່ເປັນຂອງທ່ານ
ຢູ່ທີ່ສຸດປາຍນາຂອງທ່ານໃຫ້ແກ່ເຮົາ ຂໍໃຫ້ທ່ານຂາຍຖ້ຳນັ້ນແກ່ເຮົາ

ຕາມລາຄາຄົບເຕັມ ເພື່ອເຮົາຈະມີບ່ອນໄວ້ຝັງສົບໃນທ່າມກາງພວກ
ທ່ານ". ໑໐ອັນໜຶ່ງ ເອຟະໂຣນ ໄດ້ອາໄສຢູ່ທ່າມກາງພວກລູກຊາຍ
ຂອງ ເຮດ. ແລ້ວ ເອຟະໂຣນ ຊາວ ຮິດຕີ ໄດ້ຕອບ ອັບຣາຮາມ
ໃນທ່າມກາງພວກລູກຫຼານຂອງ ເຮດ ຕໍ່ໜ້າຄົນທັງປວງທີ່ເຂົ້າໄປ
ໃນປະຕູເມືອງຂອງທ່ານວ່າ, ໑໑"ບໍ່ແມ່ນດັ່ງນັ້ນນາຍເຈົ້າຂ້າ, ຈົ່ງຟັງ
ເຮົາເຖີດ ນາທົ່ງນັ້ນເຮົາມອບໃຫ້ແກ່ທ່ານກັບຖ້ຳທີ່ຢູ່ໃນນານັ້ນເຮົາ
ມອບໃຫ້ແກ່ທ່ານ,ຕໍ່ໜ້າພວກລູກຊາຍຊາວເມືອງຂອງເຮົາ ເຮົາມອບ
ໃຫ້ແກ່ທ່ານ ຈົ່ງຝັງສົບຜູ້ຕາຍຂອງທ່ານເຖີດ". ໑໒ອັບຣາຮາມໄດ້ໝູບ
ຕົວລົງຕໍ່ໜ້າພວກຊາວເມືອງນັ້ນ. ໑໓ແລ້ວໄດ້ກ່າວແກ່ ເອຟະໂຣນ
ໃຫ້ຊາວເມືອງນັ້ນຟັງວ່າ "ຖ້າທ່ານຍອມໃຫ້ເຮົາແລ້ວ ຂໍທ່ານໂຜດ
ຟັງເຮົາ ເຮົາຈະໃຫ້ເງິນເປັນຄ່ານານັ້ນຂໍທ່ານຈົ່ງຮັບເອົາຈາກເຮົາເຖີດ
ແລະເຮົາຈະຝັງສົບຜູ້ຕາຍຂອງເຮົາທີ່ນັ້ນ". ໑໔ເອຟະໂຣນ ໄດ້ຕອບ
ອັບຣາຮາມ ວ່າ, ໑໕"ນາຍເຈົ້າຂ້າ ຈົ່ງຟັງເຮົາເຖີດ ທີ່ດິນນັ້ນມີລາຄາ
ເປັນເງິນ 400 ເຊເຄນ ນັ້ນກໍບໍ່ມີຫຍັງລະຫວ່າງເຮົາກັບທ່ານ? ເຫດ
ສະນັ້ນ ຈົ່ງຝັງສົບຜູ້ຕາຍຂອງທ່ານເຖີດ". ໑໖ອັບຣາຮາມ ໄດ້ຟັງ
ເອຟະໂຣນແລ້ວອັບຣາຮາມໄດ້ຊັ່ງເງິນໃຫ້ເອຟະໂຣນຕາມຈຳນວນ
ທີ່ທ່ານໄດ້ເວົ້າຕໍ່ໜ້າພວກລູກຊາຍຂອງ ເຮດ ນັ້ນ ເປັນເງິນ 400 ເຊ
ເຄນ ຕາມທີ່ພວກພໍ່ຄ້າໃຊ້ກັນໃນເວລານັ້ນ.

໑໗ແລ້ວທົ່ງນາຂອງ ເອຟະໂຣນ ຢູ່ໃນ ມັກເປລາ ຊຶ່ງຢູ່ຕໍ່ໜ້າ ມຳເລ
ທັງນາ ແລະຖ້ຳທີ່ຢູ່ໃນນາ, ຕົ້ນໄມ້ທັງປວງທີ່ຢູ່ໃນທົ່ງນາ ແລະເຂດ
ແດນທີ່ອ້ອມຮອບນັ້ນ ຈຶ່ງໄດ້ຂາຍແລ້ວ ໑໘ໃຫ້ແກ່ ອັບຣາຮາມ ເປັນ
ກຳມະສິດຕໍ່ໜ້າພວກລູກຫຼານຂອງ ເຮດ, ຕໍ່ໜ້າຄົນທັງປວງທີ່ໄດ້
ເຂົ້າໄປໃນປະຕູເມືອງນັ້ນ. ໑໙ຫຼັງຈາກສິ່ງເຫຼົ່ານີ້ ອັບຣາຮາມ ກໍໄດ້
ເອົາສົບນາງ ຊາຣາ ເມຍຂອງຕົນມາຝັງໄວ້ໃນຖ້ຳທີ່ທົ່ງນາ ໃນ ມັກເປ

ລາ ຢູ່ຕໍ່ໜ້າ ມຳເລ ຊຶ່ງເປັນເມືອງ ເຮັບໂຣນ ໃນແຜນດິນ ການາອານ.
໒໐ທົ່ງນາແລະຖ້ຳທີ່ຢູ່ໃນນານັ້ນ ພວກລູກຫຼານຂອງ ເຮດ ໄດ້ຂາຍໃຫ້
ແກ່ ອັບຣາຮາມ ເປັນກຳມະສິດເພື່ອໃຊ້ເປັນບ່ອນຝັງສົບ.

## ບົດທີ 24

໑ອັບຣາຮາມ ເຖົ້າແລ້ວມີອາຍຸສູງຫຼາຍ ແລະພຣະເຢໂຮວາໄດ້ອວຍ
ພອນ ອັບຣາຮາມ ໃນທຸກສິ່ງ. ໒ອັບຣາຮາມ ໄດ້ບອກຄົນໃຊ້ຜູ້ອາວຸໂສ
ທີ່ສຸດໃນເຮືອນຂອງທ່ານ ຊຶ່ງເປັນຜູ້ຄຸ້ມຄອງຮັກສາສິ່ງຂອງທັງໝົດ
ຂອງຕົນວ່າ "ເຈົ້າຈົ່ງຢຽດມືຂອງເຈົ້າມາວາງໄວ້ໃຕ້ກົກຂາຂອງເຮົາ.
໓ແລະເຮົາຈະໃຫ້ເຈົ້າສາບານຕໍ່ໜ້າພຣະເຢໂຮວາ ຜູ້ເປັນພຣະເຈົ້າ
ແຫ່ງຟ້າສະຫວັນ ແລະພຣະເຈົ້າແຫ່ງແຜ່ນດິນໂລກວ່າ ເຈົ້າຈະບໍ່ເອົາ
ລູກສາວຂອງພວກ ການາອານ ທີ່ເຮົາອາໄສຢູ່ນຳກັນນີ້ ມາເປັນ
ເມຍຂອງລູກຊາຍເຮົາ. ໔ແຕ່ວ່າ ເຈົ້າຈົ່ງໄປຍັງບ້ານເມືອງຂອງເຮົາ
ແລະພວກຍາດພີ່ນ້ອງຂອງເຮົາ ເພື່ອຫາເມຍຄົນໜຶ່ງໃຫ້ແກ່ ອີຊາກ
ລູກຊາຍເຮົາ". ໕ແລ້ວຄົນໃຊ້ໄດ້ກ່າວແກ່ທ່ານວ່າ "ຫາກວ່າຍິງນັ້ນບໍ່ມີ
ໃຈຈະຕາມຜູ້ຂ້າມາໃນແຜນດິນນີ້ ຜູ້ຂ້າຈະຕ້ອງພາລູກຊາຍຂອງ
ທ່ານໄປຍັງບ້ານເມືອງທີ່ທ່ານໄດ້ອອກມານັ້ນຫຼື?" ໖ອັບຣາຮາມ ໄດ້
ກ່າວແກ່ລາວວ່າ " ເຈົ້າຈົ່ງລະວັງຢ່າພາລູກຊາຍຂອງເຮົາກັບໄປທີ່ນັ້ນ
ອີກ. ໗ພຣະເຢໂຮວາພຣະເຈົ້າແຫ່ງຟ້າສະຫວັນຜູ້ໄດ້ພາເຮົາອອກມາ
ຈາກເຮືອນພໍ່ຂອງເຮົາ ແລະຈາກເມືອງຍາດຕິພີ່ນ້ອງຂອງເຮົາ ໄດ້
ກ່າວກັບເຮົາ ແລະໄດ້ສາບານແກ່ເຮົາວ່າ 'ເຮົາຈະມອບແຜນດິນນີ້
ໃຫ້ແກ່ເຊື້ອສາຍຂອງເຈົ້າ' ພຣະອົງຈະໃຊ້ເທວະດາຂອງພຣະອົງໄປ
ກ່ອນໜ້າເຈົ້າ ແລະເຈົ້າຈົ່ງຫາພັນລະຍາຜູ້ໜຶ່ງໃຫ້ລູກຊາຍຂອງເຮົາ

ຈາກທີ່ນັ້ນ. ໘ແລະຖ້າຍິງນັ້ນຫາກບໍ່ມີໃຈຈະຕາມເຈົ້າມາ ເຈົ້າກໍຈະ
ພົ້ນຈາກຄຳສາບານຕໍ່ເຮົານີ້ ແຕ່ເຈົ້າຢ່າພາລູກຊາຍເຮົາກັບໄປທີ່ນັ້ນ
ອີກ". ໙ຄົນໃຊ້ຈຶ່ງໄດ້ວາງມືຂອງຕົນໄວ້ທີ່ໃຕ້ກົກຂາຂອງ ອັບຣາຮາມ
ຜູ້ເປັນນາຍຂອງຕົນ ແລະໄດ້ສາບານວ່າດ້ວຍການທັງຫຼາຍນີ້. ໑໐ແລ້ວ
ຄົນໃຊ້ໄດ້ເອົາອູດ 10 ໂຕໃນຝູງອູດຂອງນາຍຕົນໄປດ້ວຍວ່າສິ່ງຂອງ
ທັງປວງຂອງນາຍຢູ່ໃນມືຂອງຕົນ ແລະລາວໄດ້ລຸກຂຶ້ນໄປຍັງ ເມໂຊ
ໂປຕາເມຍ ເຖິງເມືອງຂອງ ນາໂຮ. ໑໑ລາວໄດ້ໃຫ້ອູດທັງຫຼາຍຄຸເຂົ່າ
ລົງຢູ່ນອກເມືອງຣິມນ້ຳສ້າງ ຊຶ່ງເປັນເວລາຄ່ຳ ອັນເປັນເວລາທີ່ພວກ
ຜູ້ຍິງອອກໄປຕັກນ້ຳ. ໑໒ລາວໄດ້ອ້ອນວອນວ່າ "ໂອ ພຣະເຢໂຮວາ
ພຣະເຈົ້າຂອງ ອັບຣາຮາມ ນາຍຂອງຂ້ານ້ອຍ, ຂໍພຣະອົງໂຜດ
ໃຫ້ການຂອງຂ້ານ້ອຍສຳເລັດດ້ວຍດີໃນວັນນີ້ ແລະຂໍຊົງໂຜດສຳ
ແດງຄວາມເມດຕາແກ່ ອັບຣາຮາມ ນາຍຂອງຂ້ານ້ອຍແດ່ທ້ອນ.
໑໓ບັດນີ້ ຂ້ານ້ອຍກຳລັງຢືນຢູ່ທີ່ຣິມນ້ຳສ້າງ ແລະລູກສາວທັງຫຼາຍ
ຂອງໄທເມືອງນີ້ກໍກຳລັງອອກມາຕັກນ້ຳ. ໑໔ດ້ວຍເຫດນີ້ ຂໍພຣະອົງ
ກະທຳໃຫ້ເປັນຢ່າງນີ້ ຄື: ຂໍໃຫ້ຍິງສາວທີ່ຂ້ານ້ອຍຈະກ່າວກັບນາງວ່າ
'ຂໍຢ່ອນໄຫນ້ຳລົງໃຫ້ຂ້ອຍດື່ມນ້ຳນຳແດ່' ແລະນາງຈະກ່າວວ່າ 'ເຊີນ
ດື່ມເຖີດແລະຂ້ອຍຈະຕັກໃຫ້ອູດຂອງທ່ານກິນນຳດ້ວຍ' ຂໍໃຫ້ຍິງ
ສາວນັ້ນເປັນຜູ້ທີ່ພຣະອົງໄດ້ໝາຍໄວ້ສຳລັບ ອີຊາກ ຜູ້ຮັບໃຊ້ຂອງ
ພຣະອົງ ແລະດ້ວຍສິ່ງນັ້ນຂ້ານ້ອຍຈະຮູ້ວ່າ ພຣະອົງໄດ້ຊົງສຳແດງ
ຄວາມເມດຕາແກ່ນາຍຂອງຂ້ານ້ອຍ" ໑໕ແລະຕໍ່ມາ ເມື່ອລາວອ້ອນ
ວອນຢູ່ຍັງບໍ່ທັນແລ້ວ ເບິ່ງແມ ນາງ ເຣເບກາ ໄດ້ແບກໄຫນ້ຳອອກມາ,
ນາງ ເຣເບກາ ເປັນລູກສາວ ເບທູເອນ ຜູ້ເປັນລູກຊາຍ ນາງ ມີລະກາ
ເມຍຂອງ ນາໂຮ ຜູ້ເປັນນ້ອງຊາຍຂອງ ອັບຣາຮາມ. ໑໖ແລະນາງ
ເປັນຍິງສາວທີ່ງາມຫຼາຍ ເປັນຕາເບິ່ງຕາຊົມ ເປັນຍິງສາວພົມມະຈາ

ລີ ຍັງບໍ່ໄດ້ສົມສູ່ກັບຜູ້ຊາຍຈັກເທື່ອ ແລະນາງໄດ້ລົງໄປເຖິງນ້ຳສ້າງ
ຕັກນ້ຳເຕັມໄຫແລ້ວກໍຂຶ້ນມາ. ໑໗ຄົນໃຊ້ຈຶ່ງໄດ້ແລ່ນໄປຕ້ອນຮັບນາງ
ແລະກ່າວວ່າ "ຂໍອະນຸຍາດໃຫ້ຂ້ອຍດື່ມນ້ຳຈາກໄຫເຈົ້າຈັກໜ້ອຍ
ໜຶ່ງເຖີດ". ໑໘ນາງໄດ້ກ່າວວ່າ "ນາຍເຈົ້າຂ້າ ເຊີນດື່ມເຖີດ" ແລະນາງ
ໄດ້ຮີບຢ່ອນໄຫນ້ຳລົງທີ່ມືຂອງຕົນແລະໃຫ້ລາວດື່ມ. ໑໙ແລະເມື່ອ
ໃຫ້ລາວດື່ມແລ້ວ ນາງໄດ້ກ່າວວ່າ "ຂ້ອຍຈະຕັກນ້ຳໃຫ້ອູດຂອງທ່ານ
ດື່ມຈົນອີ່ມດ້ວຍ". ໒໐ແລ້ວນາງໄດ້ຮີບຖອກນ້ຳຈາກໄຫລົງໃນຮາງ
ແລະແລ່ນລົງໄປຕັກນ້ຳໃນສ້າງມາອີກເພື່ອໃຫ້ຝູງອູດດື່ມ. ໒໑ຊາຍ
ຄົນນັ້ນໄດ້ເບິ່ງນາງດ້ວຍໃຈປະຫຼາດແລະສະຫງົບ ເພື່ອຈະໄດ້ຮູ້ວ່າ
ພຣະເຢໂຮວາໄດ້ເຮັດໃຫ້ການເດີນທາງຂອງຕົນສຳເລັດຜົນຫຼືບໍ່.
໒໒ຕໍ່ມາເມື່ອອູດທັງຫຼາຍໄດ້ດື່ມນ້ຳອີ່ມແລ້ວ ຊາຍຄົນນັ້ນໄດ້ເອົາຕຸ້ມ
ຫູຄຳໜັກເຄິ່ງເຊເຄນກັບກ້ອງແຂນຄຳຄູ່ໜຶ່ງໜັກ 10 ເຊເຄນອອກມາ
ໃຫ້. ໒໓ແລະໄດ້ຖາມວ່າ "ນາງເປັນລູກສາວຂອງຜູ້ໃດ? ຂໍບອກຂ້ອຍ
ໃຫ້ຮູ້ຈັກເຖີດ, ໃນບ້ານພໍ່ຂອງນາງມີບ່ອນພໍໃຫ້ພວກຂ້ອຍພັກອາໄສ
ຢູ່ໄດ້ຫຼືບໍ?" ໒໔ນາງໄດ້ກ່າວແກ່ລາວວ່າ "ຂ້ອຍເປັນລູກສາວຂອງ ເບ
ທູເອນ ຜູ້ເປັນລູກຊາຍຂອງນາງ ມີລະກາ ທີ່ ນາງ ມີລະກາ ໄດ້ກຳເນີດ
ໃຫ້ແກ່ ນາໂຮ". ໒໕ແລ້ວນາງໄດ້ກ່າວຕື່ມວ່າ "ໃນບ້ານພວກເຮົາມີ
ເຟືອງ, ມີຫຍ້າພຽງພໍ ແລະມີບ່ອນໃຫ້ພັກນຳດ້ວຍ". ໒໖ຊາຍຄົນນັ້ນ
ໄດ້ກົ້ມຫົວລົງ ແລະນະມັດສະການພຣະເຢໂຮວາ. ໒໗ແລະໄດ້ກາບ
ທູນວ່າ "ຂໍໃຫ້ພຣະເຢໂຮວາເປັນທີ່ສັນລະເສີນພຣະເຈົ້າຂອງອັບຣາ
ຮາມ ນາຍຂອງຂ້ານ້ອຍ, ພຣະອົງບໍ່ໄດ້ປະຖິ້ມຄວາມເມດແລະ
ຄວາມຈິງຂອງພຣະອົງຕໍ່ນາຍຂ້ານ້ອຍ ເມື່ອຂ້ານ້ອຍໄປໃນທາງພຣະ
ເຢໂຮວາໄດ້ພາຂ້ານ້ອຍໄປເຖິງເຮືອນພີ່ນ້ອງຂອງນາຍຂ້ານ້ອຍ.

໒໘ລູກສາວນັ້ນໄດ້ແລ່ນໄປເລົ່າເລື່ອງນີ້ໃຫ້ຄົນໃນຄົວເຮືອນແມ່ຂອງ
ຕົນຟັງ. ໒໙ອັນໜຶ່ງນາງເຣເບກາມີອ້າຍຜູ້ໜຶ່ງຊື່ລາບານ ແລະລາບານ
ໄດ້ແລ່ນອອກໄປຫາຄົນນັ້ນທີ່ນ້ຳສ້າງ. ໓໐ແລະຕໍ່ມາເມື່ອລາບານໄດ້
ເຫັນຕຸ້ມຫູແລະກ້ອງແຂນທີ່ຂໍ້ແຂນນ້ອງສາວແລະເມື່ອໄດ້ຍິນຄຳທີ່
ນາງ ເຣເບກາ ນ້ອງສາວໄດ້ເວົ້າວ່າ “ຄົນນັ້ນໄດ້ກ່າວແກ່ຂ້ອຍຢ່າງນີ້”
ລາບານ ໄດ້ໄປຫາຄົນນັ້ນ ແລະເບິ່ງແມ ຄົນນັ້ນໄດ້ຢູ່ກັບຝູງອູດທີ່ນ້ຳ
ສ້າງ. ໓໑ລາບານໄດ້ກ່າວວ່າ“ເຊີນທ່ານຜູ້ໄດ້ຮັບພອນຈາກພຣະເຢໂຮ
ວາ ຈົ່ງເຂົ້າມາເຖີດ ເປັນຫຍັງທ່ານຢືນຢູ່ພາຍນອກ ເຫດວ່າຂ້ອຍໄດ້
ຈັດແຈງເຮືອນແລະບ່ອນສຳລັບຝູງອູດຢູ່”.

໓໒ຄົນໃຊ້ໄດ້ເຂົ້າໄປໃນເຮືອນ ເຂົາໄດ້ປົດຕ່າງອູດ ໄດ້ເອົາເຟືອງກັບ
ຫຍ້າໃຫ້ອູດກິນ ແລະເອົານ້ຳໃຫ້ຄົນໃຊ້ລ້າງຕີນກັບຄົນທັງຫຼາຍທີ່ໄດ້
ມານຳລາວ. ໓໓ເຂົາໄດ້ຍົກອາຫານມາຕັ້ງຕໍ່ໜ້າໃຫ້ລາວກິນ ແຕ່ລາວ
ໄດ້ກ່າວວ່າ “ຂ້ອຍຈະບໍ່ກິນຈົນກວ່າຂ້ອຍຈະໄດ້ບອກເຖິງໜ້າທີ່ຂອງ
ຂ້ອຍທີ່ຖືກມອບໝາຍມານັ້ນໃຫ້ທ່ານຟັງກ່ອນ” ເຂົາໄດ້ກ່າວວ່າ
“ເຊີນເວົ້າເຖີດ”. ໓໔ແລ້ວລາວໄດ້ກ່າວວ່າ “ຂ້ອຍເປັນຂ້າໃຊ້ຂອງ ອັບ
ຣາຮາມ. ໓໕ພຣະເຢໂຮວາໄດ້ອວຍພອນໃຫ້ແກ່ນາຍຂອງຂ້ອຍຢ່າງ
ຫຼວງຫຼາຍ, ທ່ານກາຍເປັນຜູ້ທີ່ຍິ່ງໃຫຍ່ແລະພຣະອົງໄດ້ປະທານໃຫ້
ທ່ານມີຝູງສັດນ້ອຍໃຫຍ່, ມີເງິນ, ມີຄຳ, ມີພວກຂ້າໃຊ້ຊາຍຍິງ ແລະ
ຝູງອູດຝູງລາ. ໓໖ນາງ ຊາຣາ ເມຍຂອງນາຍຂ້ອຍໄດ້ກຳເນີດລູກ
ຊາຍຜູ້ໜຶ່ງໃຫ້ນາຍຂ້ອຍເມື່ອນາງເຖົ້າແກ່ແລ້ວ ແລະສິ່ງຂອງທັງປວງ
ຂອງທ່ານກໍໄດ້ມອບໃຫ້ລູກຊາຍນັ້ນ. ໓໗ນາຍຂອງຂ້ອຍໄດ້ໃຫ້ຂ້ອຍ
ສາບານວ່າ “ເຈົ້າຢ່າໄດ້ເອົາຜູ້ຍິງຈາກລູກສາວທັງຫຼາຍຂອງພວກກາ
ນາອານ ໃນແຜ່ນດິນທີ່ເຮົາອາໄສຢູ່ນີ້ມາເປັນເມຍຂອງລູກຊາຍເຮົາ.

໓໘ແຕ່ວ່າເຈົ້າຈົ່ງໄປເຖິງເຮືອນພໍ່ຂອງເຮົາແລະພວກຍາດຕິພີ່ນ້ອງ
ຂອງເຮົາ ຫາເມຍສຳຫຼັບລູກຊາຍເຮົາເຖີດ”. ໓໙ແລະຂ້ອຍໄດ້ກ່າວ
ແກ່ນາຍຂອງຂ້ອຍວ່າ “ຖ້າຫາກວ່າຜູ້ຍິງນັ້ນບໍ່ຍອມຕາມຜູ້ຂ້ານ້ອຍ
ມາເດ່”. ໔໐ນາຍໄດ້ກ່າວແກ່ຂ້ອຍວ່າ “ພຣະເຢໂຮວາ ພຣະເຈົ້າທີ່
ເຮົາໄດ້ດຳເນີນຢູ່ຕໍ່ໜ້າພຣະອົງນັ້ນຈະຊົງໃຊ້ເທວະດາຂອງພຣະອົງ
ໄປນຳເຈົ້າ ແລະຈະໃຫ້ການຂອງເຈົ້າສຳເລັດແລະເຈົ້າຈົ່ງໄປຫາຜູ້ຍິງ
ຈາກເຊື້ອສາຍຂອງຍາດຕິພີ່ນ້ອງຂອງເຮົາແລະເຮືອນພໍ່ຂອງເຮົາໃຫ້
ເປັນເມຍສຳລັບລູກຊາຍເຮົາ. ໔໑ເມື່ອເຈົ້າໄປເຖິງພວກຍາດຕິພີ່ນ້ອງ
ຂອງເຮົາແລ້ວ ເຈົ້າຈະພົ້ນຈາກຄຳສາບານຕໍ່ເຮົາ ຖ້າເຂົາຫາກບໍ່ຍອມ
ໃຫ້ຍິງນັ້ນແກ່ເຈົ້າ, ເຈົ້າກໍຈະພົ້ນຈາກຄຳສາບານຕໍ່ເຮົາ. ໔໒ແລ້ວວັນ
ນີ້ຂ້ອຍໄດ້ມາເຖິງນ້ຳສ້າງ ແລະໄດ້ອ້ອນວອນວ່າ “ໂອ ພຣະເຢໂຮ
ວາ ພຣະເຈົ້າຂອງ ອັບຣາຮາມ ນາຍຂອງຂ້ານ້ອຍ ບັດນີ້ຖ້າພຣະອົງ
ຈະໂຜດໃຫ້ທາງທີ່ຂ້ານ້ອຍໄປນັ້ນໄດ້ສຳເລັດ. ໔໓ບັດນີ້ ຂ້ານ້ອຍຢືນ
ຢູ່ຣິມນ້ຳສ້າງ ຂໍພຣະອົງຊົງກະທຳໃຫ້ເປັນດັ່ງນີ້ ຄື: ເມື່ອຂ້ານ້ອຍຈະ
ກ່າວແກ່ຍິງພົມມະຈາລີຜູ້ໜຶ່ງທີ່ອອກມາຕັກນ້ຳວ່າ ‘ຂໍໃຫ້ຂ້ອຍດື່ມ
ນ້ຳຈາກໄຫນ້ຳຂອງເຈົ້າຈັກໜ້ອຍແດ່’. ໔໔ແລ້ວນາງນັ້ນຈະກ່າວແກ່
ຂ້ານ້ອຍວ່າ ‘ເຊີນທ່ານດື່ມເຖີດ ແລະຂ້ອຍຈະຕັກນ້ຳໃຫ້ຝູງອູດຂອງ
ທ່ານດື່ມດ້ວຍ’ ຂໍໃຫ້ຜູ້ນັ້ນເປັນຍິງທີ່ພຣະເຢໂຮວາໄດ້ໝາຍໄວ້ສຳ
ຫຼັບລູກຊາຍຂອງນາຍຂ້ານ້ອຍເຖີດ”. ໔໕ເມື່ອຂ້ອຍອ້ອນວອນໃນໃຈ
ບໍ່ທັນຂາດຄຳ ແລະເບິ່ງແມ ນາງ ເຣເບກາ ໄດ້ອອກມາແບກໄຫນ້ຳ
ລົງໄປເຖິງສ້າງ ແລະຕັກນ້ຳມາ ແລະຂ້ອຍໄດ້ກ່າວແກ່ນາງວ່າ ‘ຂໍໃຫ້
ຂ້ານ້ອຍດື່ມນ້ຳແດ່ເຖີດ’ ໔໖ນາງໄດ້ຮີບຢ່ອນໄຫນ້ຳລົງຈາກບ່າຂອງ
ຕົນ ແລະໄດ້ກ່າວວ່າ ‘ເຊີນທ່ານດື່ມເຖີດ ແລະຂ້ອຍຈະຕັກນ້ຳໃຫ້
ຝູງອູດຂອງທ່ານດື່ມດ້ວຍ’ ຂ້ອຍໄດ້ດື່ມແລະນາງໄດ້ໃຫ້ອູດທັງຫຼາຍ

ດື່ມດ້ວຍ. ໔໗ແລ້ວຂ້ອຍໄດ້ຖາມນາງວ່າ ‘ນາງເປັນລູກຂອງຜູ້ໃດ’ ນາງ
ໄດ້ກ່າວວ່າ ‘ຂ້ອຍເປັນລູກຂອງ ເບທູເອນ, ຜູ້ເປັນລູກຊາຍຂອງນາໂຮ
ທີ່ນາງ ມີລະກາ ໄດ້ໃຫ້ກຳເນີດແກ່ທ່ານ’ ແລ້ວຂ້ອຍໄດ້ເອົາຕຸ້ມຫູ
ວົງແຫວນໃສ່ທີ່ດັງ ກັບສາຍແຂນໃສ່ທີ່ຂໍ້ແຂນຂອງນາງ. ໔໘ຂ້ອຍຈຶ່ງ
ກົ້ມຫົວລົງກາບໄຫວ້ນະມັດສະການພຣະເຢໂຮວາ ແລະໄດ້ສັນລະ
ເສີນພຣະເຢໂຮວາ ພຣະເຈົ້າຂອງ ອັບຣາຮາມ ນາຍຂອງຂ້ອຍ ທີ່ໄດ້
ນຳພາຂ້ອຍໄປໃນທາງຖືກຕ້ອງ ເພື່ອຈະເອົາລູກສາວຂອງນ້ອງຊາຍ
ນາຍຂອງຂ້ອຍມາເປັນເມຍໃຫ້ແກ່ລູກຊາຍຂອງທ່ານ. ໔໙ແລະດຽວ
ນີ້ຖ້າທ່ານທັງຫຼາຍຈະສະແດງຄວາມເມດ ແລະຄວາມຈິງແກ່ນາຍ
ຂອງຂ້ອຍ ຂໍເຊີນບອກຂ້ອຍ: ແລະຖ້າບໍ່ແມ່ນ, ກໍເຊີນບອກຂ້ອຍເຖີດ
ເພື່ອຂ້ອຍຈະຫັນໄປທາງຂວາມືຫຼືຊ້າຍມື”. ໕໐ລາບານກັບ ເບທູເອນ
ໄດ້ຕອບວ່າ “ການນີ້ມາແຕ່ພຣະເຢໂຮວາ ພວກເຮົາຈະເວົ້າຮ້າຍຫຼືດີ
ກັບເຈົ້າກໍບໍ່ໄດ້. ໕໑ເບິ່ງເຖີດນາງເຣເບກາຢູ່ຕໍ່ໜ້າທ່ານ ຈົ່ງເອົານາງໄປ
ແລະກັບເມືອເຖີດ ແລະໃຫ້ນາງເປັນເມຍລູກຊາຍນາຍຂອງທ່ານ
ຕາມຄຳທີ່ພຣະເຢໂຮວາໄດ້ບອກໄວ້ແລ້ວ”. ໕໒ແລະຢູ່ມາເມື່ອຄົນໃຊ້
ຂອງ ອັບຣາຮາມ ໄດ້ຍິນເຂົາເວົ້າຢ່າງນັ້ນແລ້ວລາວໄດ້ໝູບລົງທີ່ດິນ
ກາບໄຫວ້ນະມັດສະການພຣະເຢໂຮວາ. ໕໓ແລ້ວຄົນໃຊ້ໄດ້ນຳເອົາ
ເຄື່ອງເງິນ, ເຄື່ອງຄຳ ແລະເຄື່ອງນຸ່ງຫົ່ມໃຫ້ນາງ ເຣເບກາ ແລະລາວ
ໄດ້ເອົາໃຫ້ແກ່ອ້າຍແລະໃຫ້ແກ່ແມ່ຂອງນາງດ້ວຍ. ໕໔ເຂົາໄດ້
ຮັບກິນແລະດື່ມ ທັງຄົນໃຊ້ກັບຄົນທັງຫຼາຍທີ່ໄດ້ມານຳລາວແລ້ວເຂົາ
ໄດ້ນອນຢູ່ທີ່ນັ້ນ ເຂົາໄດ້ລຸກຂຶ້ນໃນເວລາເຊົ້າ ແລະລາວໄດ້ກ່າວວ່າ
“ຂໍໃຫ້ຂ້ອຍລາກັບເມືອຫານາຍຂອງຂ້ອຍເຖີດ”. ໕໕ອ້າຍກັບແມ່ຂອງ
ຜູ້ສາວໄດ້ກ່າວວ່າ “ຂໍໃຫ້ນາງຢູ່ກັບພວກເຮົາຈັກໜ້ອຍໜຶ່ງກ່ອນ ຢ່າງ
ໜ້ອຍກໍຈັກ 10 ວັນແລ້ວຈຶ່ງໃຫ້ນາງໄປ”. ໕໖ແລ້ວຄົນໃຊ້ໄດ້ກ່າວແກ່

ເຂົາວ່າ “ຢ່າໜ່ວງໜ່ຽວຂ້ອຍໃຫ້ຊ້າຢູ່ເລີຍ ເຫດວ່າພຣະເຢໂຮວາໄດ້
ໃຫ້ການຂອງຂ້ອຍສຳເລັດແລ້ວ; ຂໍໃຫ້ຂ້ອຍລາເມືອເຖີດ ເພື່ອຂ້ອຍ
ຈະໄປຫານາຍຂອງຂ້ອຍ”. ໕໗ແລ້ວເຂົາໄດ້ກ່າວວ່າ “ພວກເຮົາຈະ
ເອີ້ນຜູ້ສາວມາ ແລະຖາມນາງກ່ອນ”. ໕໘ເຂົາໄດ້ເອີ້ນນາງ ເຣເບກາ
ມາ ແລະຖາມວ່າ “ເຈົ້າຢາກໄປນຳຜູ້ນີ້ຫຼື?” ນາງໄດ້ຕອບວ່າ “ຂ້ອຍ
ຈະໄປ”. ໕໙ເຂົາຈຶ່ງໄດ້ສົ່ງນາງ ເຣເບກາ ນ້ອງສາວຂອງເຂົາ ແລະ
ແມ່ນົມຂອງນາງໄປນຳຄົນໃຊ້ຂອງ ອັບຣາຮາມ ແລະຄົນທັງຫຼາຍທີ່
ໄດ້ມານຳລາວ. ໖໐ເຂົາໄດ້ອວຍພອນໃຫ້ນາງ ເຣເບກາ ແລະກ່າວວ່າ
“ນ້ອງສາວຂອງພວກເຮົາເອີຍ ຂໍໃຫ້ເຈົ້າມີລູກຫຼານເປັນແສນເປັນ
ລ້ານ* ແລະຂໍໃຫ້ເຊື້ອສາຍຂອງເຈົ້າໄດ້ປະຕູເມືອງຂອງຄົນທີ່ກຽດຊັງ
ເຈົ້າເປັນກຳມະສິດ”. ໖໑ນາງ ເຣເບກາ ໄດ້ລຸກຂຶ້ນກັບທັງສາວໃຊ້ທັງ
ຫຼາຍຂອງຕົນ ແລະເຂົາໄດ້ຂີ່ອູດຕາມຄົນນັ້ນໄປ ຄົນໃຊ້ໄດ້ເອົານາງ
ເຣເບກາ ໄປ ແລະໄດ້ເດີນທາງກັບເມືອ.

໖໒ອີຊາກ ພວມມາຈາກນ້ຳສ້າງຊື່ ລາຮາຍຣອຍ ເພາະທ່ານໄດ້ອາໄສ
ຢູ່ໃນແຜ່ນດິນທາງທິດໃຕ້ ໖໓ເວລາຄ່ຳອີຊາກໄດ້ອອກໄປທົ່ງນາເພື່ອ
ຈະໄດ້ຄຶດຕຶກຕອງຄວາມໃນໃຈ ລາວໄດ້ເງີຍໜ້າຂຶ້ນແລະເຫັນ ເບິ່ງ
ແມ ມີຝູງອູດພວມມາ. ໖໔ນາງ ເຣເບກາ ໄດ້ເງີຍໜ້າຂຶ້ນແລະເມື່ອໄດ້
ເຫັນ ອີຊາກ ນາງ ໄດ້ລົງຈາກຫຼັງອູດ. ໖໕ເພາະວ່າກ່ອນນັ້ນນາງໄດ້
ຖາມຄົນໃຊ້ແລ້ວວ່າ “ຄົນທີ່ຍ່າງມາຕ້ອນຮັບພວກເຮົາໃນທົ່ງນານັ້ນ
ແມ່ນຜູ້ໃດ?” ຄົນໃຊ້ໄດ້ກ່າວວ່າ “ແມ່ນນາຍຂອງຂ້ອຍ” ນາງໄດ້ເອົາ
ຜ້າປົກໜ້າຄຸມຕົວໄວ້. ໖໖ຄົນໃຊ້ໄດ້ເລົ່າເລື່ອງທຸກຢ່າງທີ່ຕົນໄດ້ກະທຳ
ນັ້ນໃຫ້ອີຊາກຟັງ. ໖໗ແລ້ວອີຊາກໄດ້ພານາງເຂົ້າໄປໃນເຕັນອາໄສ
ຂອງນາງ ຊາຣາ ແມ່ຂອງຕົນ, ອີຊາກ ໄດ້ຮັບເອົານາງ ເຣເບກາໄວ້
ແລະນາງກໍກາຍເປັນພັນລະຍາຂອງຕົນ ແລະລາວໄດ້ຮັກນາງ, ອີ

ຊາກ ກໍໄດ້ຮັບຄວາມເລົ້າໂລມໃຈພາຍຫຼັງແມ່ຂອງຕົນໄດ້ຕາຍແລ້ວ
*24:60 "ຂໍໃຫ້ເຈົ້າມີລູກຫຼານເປັນແສນເປັນລ້ານ" ຫຼືວ່າ "ຂໍໃຫ້ເຈົ້າມີລູກຫຼານເປັນ*
*ຫຼາຍພັນລ້ານ"*

# ບົດທີ 25

໑ອັບຣາຮາມ ໄດ້ເອົາເມຍອີກຄົນໜຶ່ງຊື່ ເກທູຣາ. ໒ແລ້ວນາງໄດ້ໃຫ້
ກໍາເນີດລູກຊາຍແກ່ທ່ານຊື່: ຊີມຣານ, ໂຢກຊານ, ເມດານ, ມີດີອານ,
ອີຊະບາກ ແລະ ຊູອາ. ໓ໂຢກຊານ ໃຫ້ກໍາເນີດລູກຊາຍຊື່: ເຊບາ ແລະ
ເດດານ. ລູກຊາຍທັງຫຼາຍຂອງ ເດດານ ຊື່: ອັດຊູຣີມ, ເລຕູຊີມ ແລະ
ເລອູມມີມ.໔ລູກຊາຍທັງຫຼາຍຂອງມີດີອານຄື: ເອຟາ, ເອເຟີ,ຮາໂນກ,
ອາບີດາ ແລະ ເອັນດາອາ ຄົນທັງປວງນີ້ເປັນລູກຫຼານຂອງນາງ ເກ
ຕູຣາ.

໕ອັບຣາຮາມ ມອບຊັບສິ່ງຂອງທຸກຢ່າງທີ່ຕົນມີຢູ່ໃຫ້ແກ່ ອີຊາກ ໖ແຕ່
ພວກລູກຊາຍຂອງເມຍທັງຫຼາຍຂອງ ອັບຣາຮາມ, ອັບຣາຮາມ ໄດ້
ເອົາຂອງຂວັນໃຫ້ພວກເຂົາ ແລະທ່ານໄດ້ໃຫ້ພວກເຂົາອອກໜີໄປ
ເສຍຈາກ ອີຊາກ ລູກຊາຍຂອງຕົນ ໄປທາງຕາເວັນອອກເຖິງປະເທດ
ທິດຕາເວັນອອກເມື່ອທ່ານຍັງມີຊີວິດຢູ່.໗ແລະນີ້ຄືວັນແຫ່ງປີທັງຫຼາຍ
ຂອງຊີວິດ ອັບຣາຮາມ ຄື 175 ປີ. ໘ອັບຣາຮາມ ໄດ້ຖອດຈິດວິນຍານ
ອອກ ແລະຕາຍໄປເວລາອາຍຸສູງຫຼາຍ ທ່ານເປັນຄົນເຖົ້າແລະອາຍຸ
ຍືນ ແລະທ່ານຖືກໂຮມໄວ້ກັບພວກຂອງຕົນ. ໙ອີຊາກ ແລະ ອິດຊະ
ມາເອນ ລູກຊາຍຂອງຕົນໄດ້ເອົາສົບທ່ານໄປຝັງໄວ້ໃນຖໍ້າ ມັກເປລາ
ທີ່ຢູ່ຕໍ່ໜ້າ ມຳເລ ໃນນາຂອງ ເອຟະໂຣນ ລູກຊາຍຂອງ ໂສຮາ ພວກ

ຮິດຕີ. ໑໐ເປັນທົ່ງນາທີ່ ອັບຣາຮາມ ໄດ້ຊື້ໄວ້ຈາກພວກ ເຮດ ເຂົາໄດ້
ເອົາສົບ ອັບຣາຮາມ ໄປຝັງໄວ້ຢູ່ທີ່ນັ້ນກັບນາງ ຊາຣາ ເມຍຂອງຕົນ.

໑໑ແລະຢູ່ມາເມື່ອພາຍຫຼັງ ອັບຣາຮາມ ຕາຍໄປແລ້ວ ພຣະເຈົ້າໄດ້
ອວຍພອນໃຫ້ແກ່ ອີຊາກ ລູກຊາຍຂອງທ່ານ. ອີຊາກໄດ້ອາໄສ
ຢູ່ຮິມນໍ້າສ້າງຊື່ ລາຮາຍຣອຍ ນັ້ນ. ໑໒ຕໍ່ໄປນີ້ເປັນເຊື້ອສາຍຂອງ ອິດ
ຊະມາເອນ ລູກຊາຍຂອງ ອັບຣາຮາມ ທີ່ນາງ ຮາກາ ຊາວ ເອຢິບ
ຜູ້ເປັນສາວໃຊ້ຂອງນາງຊາຣາໄດ້ໃຫ້ກໍາເນີດແກ່ອັບຣາຮາມເປັນດັ່ງ
ນີ້: ໑໓ແລະນີ້ຄືຊື່ລູກຊາຍທັງຫຼາຍຂອງ ອິດຊະມາເອນ ຕາມຊື່ ຕາມ
ເຊື້ອສາຍຂອງລາວເປັນດັ່ງນີ້: ລູກກົກຂອງ ອິດຊະມາເອນ ຊື່ ເນບາ
ໂຢດ, ເກດາ, ອັດເບເອນ, ມິບຊາມ, ໑໔ມິຊະມາ, ດູມາ, ມັດສາ,
໑໕ຮາດາ, ເຕມາ, ເຢຕູລາ, ນາຟິດ ແລະ ເກດາມາ: ໑໖ຄົນທັງຫຼາຍ
ນີ້ແມ່ນລູກຊາຍຂອງ ອິດຊະມາເອນແລະຊື່ເຫຼົ່ານີ້ເປັນຊື່ຂອງພວກ
ເຂົາຕາມເມືອງແລະຕາມຄ້າຍທັງຫຼາຍຂອງພວກເຂົາ ເປັນເຈົ້ານາຍ
12 ຄົນ ຕາມຕະກູນຂອງພວກເຂົາ. ໑໗ແລະນີ້ຄືອາຍຸປີທັງຫຼາຍແຫ່ງ
ຊີວິດຂອງ ອິດຊະມາເອນ ຄື 137 ປີ ທ່ານໄດ້ຖອດຈິດວິນຍານອອກ
ແລະໄດ້ຕາຍໄປ ແລະຖືກໂຮມໄວ້ກັບພວກຂອງຕົນ. ໑໘ແລະພວກ
ອິດຊະມາເອນ ໄດ້ອາໄສຢູ່ຕັ້ງແຕ່ເມືອງ ຮາວິລາ ຈົນເຖິງເມືອງ ຊູເຣ
ຊຶ່ງຢູ່ຕໍ່ໜ້າປະເທດ ເອຢິບ ຕາມທາງທີ່ໄປສູ່ເມືອງອັດຊີເຣຍ ແລະອິດ
ຊະມາເອນ ໄດ້ຕາຍຢູ່ ຕໍ່ໜ້າພີ່ນ້ອງທັງຫຼາຍຂອງຕົນ. ໑໙ແລະເຊື້ອ
ສາຍຂອງ ອີຊາກ ລູກຊາຍຂອງ ອັບຣາຮາມ ເປັນດັ່ງນີ້: ອັບຣາຮາມ
ມີລູກຊາຍຊື່ ອີຊາກ: ໒໐ເມື່ອ ອີຊາກ ມີອາຍຸໄດ້ 40 ປີແລ້ວ ທ່ານໄດ້
ເອົານາງ ເຣເບກາ ມາເປັນເມຍ, ນາງເປັນລູກສາວຂອງ ເບທູເອນ
ຊາວ ຊີເຣຍ ແຫ່ງ ເມືອງປາດານາຣາມ ແລະເປັນນ້ອງສາວ ລາບານ
ຊາວຊີເຣຍ. ໒໑ອີຊາກໄດ້ອ້ອນວອນຂໍພຣະເຢໂຮວາສໍາລັບເມຍ

ຂອງຕົນ ເພາະວ່ານາງເປັນໝັນ ແລະພຣະເຢໂຮວາໄດ້ໂຜດໃຫ້ແກ່
ອີຊາກ ຕາມຄຳອ້ອນວອນນັ້ນ ແລະນາງ ເຣເບກາ ເມຍຂອງທ່ານ
ໄດ້ຕັ້ງທ້ອງ. ໒໒ລູກຝາແຝດໃນທ້ອງຂອງນາງໄດ້ບຽດສຽດກັນ ແລະ
ນາງໄດ້ກ່າວວ່າ“ຖ້າດັ່ງນັ້ນເປັນຫຍັງຕົວເຮົາຍັງເປັນຢູ່?”*ນາງໄດ້ໄປ
ອ້ອນວອນຖາມພຣະເຢໂຮວາ.໒໓ແລະພຣະເຢໂຮວາໄດ້ກ່າວແກ່ນາງວ່າ“ໃນ
ທ້ອງຂອງເຈົ້າມີສອງຊົນຊາດ ແລະປະຊາຊົນສອງພວກຈະແຍກກັນ
ຕັ້ງແຕ່ເກີດຈາກທ້ອງເຈົ້າ ແລະພວກໜຶ່ງຈະມີແຮງຫຼາຍກວ່າອີກ
ພວກໜຶ່ງ ແລະຜູ້ເປັນອ້າຍຈະຮັບໃຊ້ນ້ອງ”. ໒໔ແລະເມື່ອເຖິງເວລາ
ຈະກຳເນີດລູກ ເບິ່ງແມ ມີລູກຝາແຝດຢູ່ໃນທ້ອງຂອງນາງ. ໒໕ແລະ
ຜູ້ທີ່ເກີດມາກ່ອນຕົວແດງມີຂົນເຕັມຕົວຄືເສື້ອທີ່ເຮັດດ້ວຍຂົນສັດ
ແລ້ວເຂົາໄດ້ເອີ້ນຊື່ລາວວ່າ ເອຊາວ. ໒໖ແລ້ວນ້ອງໄດ້ເກີດມາ ແລະມື
ຂອງລາວໄດ້ຈັບເອົາສົ້ນຕີນຂອງເອຊາວໄວ້ແລະເຂົາໄດ້ເອີ້ນຊື່ລາວ
ວ່າ ຢາໂຄບ. ແລະ ອີຊາກ ມີອາຍຸໄດ້ 60 ປີ ເມື່ອນາງໄດ້ໃຫ້ກຳເນີ
ດພວກເຂົານັ້ນ. ໒໗ເດັກນ້ອຍທັງສອງນີ້ໄດ້ຈະເລີນໃຫຍ່ຂຶ້ນ ເອຊາວ
ເປັນນາຍພານທີ່ຊຳນານ, ເປັນຄົນແຫ່ງທົ່ງນາ ແລະ ຢາໂຄບ ເປັນ
ຄົນງຽບໆແລະຢູ່ໃນເຕັນອາໄສ. ໒໘ອີຊາກ ໄດ້ຮັກ ເອຊາວ ເພາະໄດ້
ກິນເນື້ອທີ່ລາວຈັບມາໄດ້ ແຕ່ວ່ານາງ ເຣເບກາ ໄດ້ຮັກ ຢາໂຄບ.

໒໙ຢາໂຄບ ພວມຕົ້ມແກງຜັກຢູ່ ເອຊາວ ກັບມາຈາກທົ່ງນາ ແລະ
ລາວອິດອ່ອນເມື່ອຍແຮງຫຼາຍ. ໓໐ເອຊາວ ໄດ້ກ່າວແກ່ ຢາໂຄບ ວ່າ
“ຂໍໃຫ້ຂ້ອຍກິນແກງຜັກແດງແດ່, ເພາະຂ້ອຍອິດເມື່ອຍຫຼາຍ” ເຫດ
ສະນັ້ນ ເຂົາໄດ້ເອີ້ນຊື່ ເອຊາວ ວ່າ ເອໂດມ. ໓໑ຢາໂຄບ ໄດ້ກ່າວວ່າ
“ຂາຍສິດທິອ້າຍກົກໃຫ້ຂ້ອຍກ່ອນໃນວັນນີ້”.໓໒ແລ້ວເອຊາວໄດ້ກ່າວ
ວ່າ “ເບິ່ງແມ ຂ້ອຍເກືອບຈະຕາຍຢູ່ແລ້ວ ແລະສິດທິອ້າຍກົກນັ້ນຈະ

ເປັນປະໂຫຍດອັນໃດແກ່ຂ້ອຍ?" ໓໓ຢາໂຄບ ໄດ້ກ່າວວ່າ "ຈົ່ງສາບານ
ໃຫ້ຂ້ອຍໃນວັນນີ້ກ່ອນ" ແລ້ວ ເອຊາວ ໄດ້ສາບານໃຫ້ລາວ ແລ້ວລາວ
ໄດ້ຂາຍສິດທິອ້າຍກົກໃຫ້ແກ່ຢາໂຄບ. ໓໔ຢາໂຄບ ໄດ້ຍົກເອົາເຂົ້າຈີ່
ກັບແກງຜັກຖົ່ວແດງໃຫ້ ເອຊາວ, ລາວໄດ້ກິນ ແລະດື່ມແລ້ວໄດ້ລຸກ
ຂຶ້ນໄປ ເອຊາວ ໄດ້ໝິ່ນປະໝາດສິດທິອ້າຍກົກຂອງຕົນ.

*25:22 "ຖ້າດັ່ງນັ້ນ ເປັນຫຍັງຕົວເຮົາຍັງເປັນຢູ່?" ຫຼືວ່າ "ຖ້າເປັນຢ່າງນີ້ ເປັນຫຍັງຂ້ອຍຍັງຢາກມີລູກ?"*

*25:26 "ຢາໂຄບ" ຕາມພາສາ ເຮັບເຣີ ແປວ່າ "ຜູ້ຈັບສົ້ນຕີນ" ແລະໝາຍຄວາມວ່າ "ຜູ້ຢຶດອຳນາດ" ຫຼື "ຜູ້ໃຊ້ເລ່ກົນ"*

## ບົດທີ 26

໑ແລະຄວາມອຶດຢາກໄດ້ບັງເກີດມາໃນແຜ່ນດິນນັ້ນ ຕ່າງຈາກຄວາມ
ອຶດຢາກຄັ້ງກ່ອນ ໃນຄາວ ອັບຣາຮາມ ແລະ ອີຊາກ ໄດ້ໄປຫາ ອາບີ
ເມເລກ ກະສັດພວກ ຟີລິດສະຕິນ ໃນເມືອງ ເກຣາ. ໒ພຣະເຢໂຮວາ
ໄດ້ປະກົດແກ່ ອີຊາກ ແລະກ່າວວ່າ "ຢ່າລົງໄປເຖິງປະເທດ ເອຢິບ,
ຈົ່ງອາໄສຢູ່ໃນດິນແດນທີ່ເຮົາໄດ້ບອກເຈົ້າແລ້ວ. ໓ຈົ່ງອາໄສຢູ່ແຜ່ນ
ດິນນີ້, ເຮົາຈະສະຖິດຢູ່ກັບເຈົ້າ, ເຮົາຈະອວຍພອນໃຫ້ເຈົ້າ, ເຫດວ່າ
ປະເທດທັງປວງນີ້ ເຮົາຈະປະທານໃຫ້ເຈົ້າ, ແລະໃຫ້ເຊື້ອສາຍຂອງ
ເຈົ້າ ແລະຄຳສາບານທີ່ເຮົາໄດ້ສາບານແກ່ ອັບຣາຮາມ ພໍ່ຂອງເຈົ້າ
ເຮົາຈະກະທຳໃຫ້ສຳເລັດ. ໔ເຮົາຈະໃຫ້ເຊື້ອສາຍ ຂອງເຈົ້າມາກທະວີ
ຂຶ້ນເໝືອນດັ່ງດວງດາວທັງຫຼາຍທີ່ທ້ອງຟ້າ ປະເທດທັງປວງນີ້ເຮົາຈະ
ໃຫ້ແກ່ເຊື້ອສາຍຂອງເຈົ້າ, ແລະຊາວປະເທດທັງປວງທົ່ວແຜ່ນດິນ

ໂລກຈະໄດ້ພຣະພອນຍ້ອນເຊື້ອສາຍຂອງເຈົ້າ,໕ເຫດວ່າອັບຣາຮາມ
ໄດ້ເຊື່ອຟັງຄວາມຂອງເຮົາ ແລະໄດ້ຖືຮັກສາຄຳບັງຄັບ, ຄຳສັ່ງ, ກຳ
ນົດກົດໝາຍ ແລະຂໍ້ບັນຍັດທັງຫຼາຍຂອງເຮົາ.

໖ແລ້ວ ອີຊາກ ໄດ້ອາໄສຢູ່ເມືອງ ເກຣາ: ໗ຄົນທັງຫຼາຍຢູ່ບ່ອນນັ້ນໄດ້
ຖາມເຖິງເມຍຂອງທ່ານແລະທ່ານໄດ້ບອກວ່າ “ນາງເປັນນ້ອງສາວ
ຂອງຂ້ອຍ” ເພາະທ່ານຢ້ານທີ່ຈະເວົ້າວ່າ “ນາງເປັນເມຍຂອງຕົນ”
ເພາະຢ້ານວ່າ “ຄົນທັງຫຼາຍໃນບ່ອນນີ້ຈະຂ້າເພິ່ນເສຍຍ້ອນນາງ ເຣ
ເບກາ” ເຫດວ່ານາງມີໜ້າຕາງາມໜ້າຊົມ. ໘ແລະຢູ່ມາເມື່ອ ອີຊາກ
ໄດ້ຢູ່ທີ່ນັ້ນດົນນານ ອາບີເມເລກ ກະສັດພວກ ຟີລິດສະຕິນ ໄດ້ສ່ອງ
ເບິ່ງໃນປ່ອງຢ້ຽມຈຶ່ງເຫັນ ແລະ ເບິ່ງແມ ອີຊາກ ກັບນາງ ເຣເບກາ
ເມຍຂອງຕົນພວມຢອກກັນຫຼິ້ນຢູ່. ໙ກະສັດ ອາບີເມເລັກ ໄດ້ຮ້ອງ
ອີຊາກ ມາແລະກ່າວວ່າ “ເບິ່ງແມ ນາງເປັນເມຍຂອງທ່ານແທ້ໆ
ເປັນຫຍັງທ່ານຈຶ່ງບອກວ່ານາງເປັນນ້ອງສາວຂອງທ່ານ?” ອີຊາກ
ໄດ້ກ່າວແກ່ກະສັດວ່າ “ເພາະຂ້ານ້ອຍໄດ້ຄິດວ່າ, ຢ້ານຂ້ານ້ອຍຈະ
ຕາຍໄປຍ້ອນນາງ”. ໑໐ກະສັດ ອາບີເມເລກ ໄດ້ກ່າວວ່າ “ທ່ານໄດ້
ເຮັດສິ່ງໃດແກ່ພວກເຮົາ? ເບິ່ງແມ ຄົນໜຶ່ງຄົນໃດໃນພວກປະຊາຊົນ
ນີ້ອາດຈະເຂົ້າໄປນອນນຳເມຍຂອງທ່ານ ແລະທ່ານຈະນຳຄວາມ
ຜິດມາສູ່ພວກເຮົາ”. ໑໑ແລ້ວກະສັດ ອາບີເມເລກ ໄດ້ບອກສັ່ງແກ່
ຄົນທັງປວງວ່າ “ບຸກຄົນໃດທີ່ຈັບຕ້ອງຄົນຜູ້ນີ້ຫຼືເມຍຂອງທ່ານ ຜູ້ນັ້ນ
ຈະຖືກໂທດປະຫານຊີວິດຢ່າງແນ່ນອນ”. ໑໒ແລ້ວ ອີຊາກ ໄດ້ເຮັດນາ
ຫວ່ານເຂົ້າທີ່ດິນນັ້ນ ແລະເກັບກ່ຽວເຂົ້າໄດ້ 100 ທໍ່ໃນປີນັ້ນ ພຣະ
ເຢໂຮວາໄດ້ອວຍພອນໃຫ້ທ່ານ. ໑໓ທ່ານໄດ້ຮັ່ງມີທະວີຂຶ້ນເລື້ອຍໆ
ຈົນກາຍເປັນຜູ້ຍິ່ງໃຫຍ່ຫຼາຍ. ໑໔ເພາະທ່ານໄດ້ມີຝູງສັດນ້ອຍຝູງສັດ

ໃຫຍ່ຈຳນວນຫຼວງຫຼາຍ ທັງຂ້າໃຊ້ຍິງຊາຍຈຳນວນຫຼວງຫຼາຍ ແລະ
ຊາວຟີລິດສະຕິນ ໄດ້ອິດສາທ່ານ. ໑໕ແລະນ້ຳສ້າງທັງຫຼາຍທີ່ພວກ
ຂ້າໃຊ້ຂອງພໍ່ທ່ານໄດ້ຂຸດໄວ້ໃນຄາວ ອັບຣາຮາມ ພໍ່ຂອງທ່ານຊາວ
ຟີລິດສະຕິນ ໄດ້ຕັນເສຍ ແລະເອົາຂີ້ດິນຖົມໃຫ້ເຕັມ. ໑໖ກະສັດ ອາບີ
ເມເລັກ ໄດ້ບອກ ອີຊາກ ວ່າ “ຈົ່ງໜີເສຍຈາກພວກເຮົາເທີ້ນ ເຫດວ່າ
ທ່ານມີອຳນາດໃຫຍ່ຫຼວງກວ່າພວກເຮົາອີກ”. ໑໗ອີຊາກ ໄດ້ຍົກຍ້າຍ
ໜີຈາກທີ່ນັ້ນໄປເຖິງຮ່ອມພູແຫ່ງ ເກຣາ ແລະໄດ້ຕັ້ງເຕັນອາໄສຢູ່ທີ່
ນັ້ນ. ໑໘ອີສາກໄດ້ຂຸດນ້ຳສ້າງທີ່ໄດ້ຂຸດໄວ້ແຕ່ເມື່ອ ອັບຣາຮາມ
ພໍ່ຂອງຕົນຍັງຢູ່ນັ້ນຄືນໃໝ່ ເຫດວ່າເມື່ອ ອັບຣາຮາມ ໄດ້ຕາຍໄປ
ພວກ ຟີລິດສະຕິນ ໄດ້ຖົມນ້ຳສ້າງນັ້ນເສຍ ແລະລາວໄດ້ເອີ້ນຊື່
ນ້ຳສ້າງນັ້ນຕາມຊື່ພໍ່ຂອງຕົນໄດ້ເອີ້ນໄວ້ແລ້ວແຕ່ກ່ອນ.໑໙ພວກຂ້າ
ໃຊ້ຂອງ ອີຊາກ ໄດ້ຂຸດລົງໃນຮ່ອມພູນັ້ນ ແລະໄດ້ພົບບໍ່ນ້ຳພຸ້ງຂຶ້ນ.
໒໐ແລະພວກຜູ້ລ້ຽງສັດຂອງເມືອງ ເກຣາ ໄດ້ຖຽງກັນກັບຜູ້ລ້ຽງສັດ
ຂອງ ອີຊາກ ວ່າ “ບໍ່ນ້ຳນີ້ເປັນຂອງພວກເຮົາ” ແລ້ວທ່ານໄດ້ເອີ້ນ
ຊື່ບໍ່ນ້ຳນັ້ນວ່າ ເອເຊກ ເພາະວ່າເຂົາໄດ້ຖຽງກັນກັບທ່ານ. ໒໑ພວກ
ຂ້າໃຊ້ໄດ້ຂຸດນ້ຳສ້າງອີກແຫ່ງໜຶ່ງ ແລະເຂົາໄດ້ຖຽງກັນເພາະນ້ຳສ້າງ
ນັ້ນອີກ ທ່ານໄດ້ເອີ້ນຊື່ນ້ຳສ້າງນັ້ນວ່າ ຊິດນາ. ໒໒ແລ້ວທ່ານໄດ້ໜີຈາກ
ທີ່ນັ້ນ ໄດ້ຂຸດນ້ຳສ້າງອີກແຫ່ງໜຶ່ງ ເຂົາບໍ່ໄດ້ຖຽງກັນເພາະນ້ຳສ້າງນັ້ນ
ທ່ານໄດ້ເອີ້ນຊື່ນ້ຳສ້າງນັ້ນວ່າ ເຣໂຫໂບດ ທ່ານໄດ້ກ່າວວ່າ “ເພາະ
ດຽວນີ້ພຣະເຢໂຮວາໄດ້ໃຫ້ເຮົາທັງຫຼາຍມີບ່ອນກວ້າງຂວາງຢູ່ແລະ
ເຮົາທັງຫຼາຍຈະແຜ່ຂະຫຍາຍໄປໃນແຜ່ນດິນນີ້”. ໒໓ແລ້ວທ່ານໄດ້
ຍົກຍ້າຍຈາກທີ່ນັ້ນຂຶ້ນໄປເຖິງ ເບເອນເຊບາ. ໒໔ໃນກາງຄືນວັນນັ້ນ
ພຣະເຢໂຮວາໄດ້ປະກົດແກ່ ອີຊາກ ແລະໄດ້ບອກວ່າ “ເຮົາເປັນ
ພຣະເຈົ້າຂອງ ອັບຣາຮາມ ພໍ່ຂອງເຈົ້າ: ເຈົ້າຢ່າຊູ່ຢ້ານ ເຫດວ່າ

ເຮົາສະຖິດຢູ່ນຳເຈົ້າ ເຮົາຈະອວຍພອນໃຫ້ເຈົ້າ, ແລະໃຫ້ເຊື້ອສາຍ
ຂອງເຈົ້າມາກທະວີຂຶ້ນເພາະເຫັນແກ່ ອັບຣາຮາມ ຂ້າໃຊ້ຂອງເຮົາ"
໒໕ແລ້ວ ອີຊາກ ໄດ້ກໍ່ສ້າງແທ່ນບູຊາທີ່ນັ້ນ ແລະໄດ້ອ້ອນວອນອອກ
ນາມຊື່ພຣະເຢໂຮວາ, ໄດ້ຕັ້ງເຕັນອາໄສຢູ່ທີ່ນັ້ນ ແລະພວກຂ້າໃຊ້
ຂອງ ອີຊາກ ໄດ້ຂຸດນ້ຳສ້າງຢູ່ທີ່ນັ້ນ.

໒໖ກະສັດ ອາບີເມເລັກ ກັບ ອາຮູສາດ ສ່ຽວຂອງຕົນ ແລະ ຟີໂກນ
ນາຍທະຫານຂອງຕົນ ໄດ້ອອກຈາກເມືອງ ເກຣາ ໄປຫາ ອີຊາກ.
໒໗ອີຊາກ ໄດ້ຖາມເຂົາວ່າ "ດ້ວຍເຫດໃດທ່ານທັງຫຼາຍຈິ່ງມາຫາເຮົາ?
ເຫດວ່າທ່ານທັງຫຼາຍໄດ້ກຽດຊັງເຮົາ ແລະໄດ້ໄລ່ເຮົາໄປເສຍຈາກ
ທ່ານທັງຫຼາຍແລ້ວ". ໒໘ພວກເຂົາໄດ້ຕອບວ່າ "ພວກເຮົາໄດ້ເຫັນຢ່າງ
ແນ່ນອນແລ້ວວ່າ ພຣະເຢໂຮວາໄດ້ສະຖິດຢູ່ກັບທ່ານ ພວກເຮົາຈິ່ງ
ຄິດວ່າ, ໃຫ້ພວກເຮົາເຮັດຄຳສາບານລະຫວ່າງພວກເຮົາ ຄືພວກເຮົາ
ກັບທ່ານ ແລະໃຫ້ພວກເຮົາເຮັດຄຳສັນຍາກັບທ່ານ ໒໙ຄືທ່ານຈະບໍ່
ເຮັດອັນຕະລາຍແກ່ພວກເຮົາເໝືອນດັ່ງພວກເຮົາບໍ່ໄດ້ຈັບຕ້ອງທ່ານ
ແລະບໍ່ໄດ້ເຮັດຫຍັງໃຫ້ທ່ານ ເວັ້ນແຕ່ການດີເທົ່ານັ້ນແລະໄດ້ສົ່ງທ່ານ
ໄປເປັນຢ່າງສັນຕິ ບັດນີ້ພຣະເຢໂຮວາໄດ້ອວຍພອນແກ່ທ່ານແລ້ວ".
໓໐ອີຊາກ ໄດ້ເຮັດງານລ້ຽງສູ່ພວກເຂົາ ແລະພວກເຂົາໄດ້ພາກັນກິນ
ແລະດື່ມ.໓໑ພວກເຂົາໄດ້ລຸກຂຶ້ນແຕ່ເຊົ້າ ແລະໄດ້ຕັ້ງຄຳສາບານຕໍ່ກັນ
ແລ້ວອີຊາກໄດ້ສົ່ງພວກເຂົາໄປ ແລ້ວພວກເຂົາໄດ້ລາໄປຢ່າງສັນຕິ.
໓໒ແລະຢູ່ມາໃນວັນດຽວກັນນັ້ນ ພວກຂ້າໃຊ້ຂອງ ອີຊາກ ໄດ້ມາແລະ
ໄດ້ບອກທ່ານວ່າດ້ວຍນ້ຳສ້າງທີ່ເຂົາໄດ້ຂຸດນັ້ນວ່າ "ພວກຂ້ານ້ອຍ
ໄດ້ພົບນ້ຳແລ້ວ". ໓໓ແລະທ່ານໄດ້ເອີ້ນຊື່ນ້ຳສ້າງນັ້ນວ່າ ເຊບາ ເຫດ
ສະນັ້ນເຂົາໄດ້ເອີ້ນຊື່ເມືອງນັ້ນວ່າ ເບເອນເຊບາ ຈົນເຖິງທຸກວັນນີ້.

໓໔ເອຊາວ ອາຍຸໄດ້ 40 ປີ ແລະໄດ້ເອົາເມຍສອງຄົນ ຄົນໜຶ່ງຊື່ ຢູດິດ
ເປັນລູກຂອງ ເບເອລີ ຊາວ ຮິດຕີ ຄົນໜຶ່ງຊື່ ບາຊາມາດ ເປັນລູກ
ຂອງ ເອໂລນ ຊາວຮິດຕີ. ໓໕ແລະເມຍທັງສອງນັ້ນເປັນເຫດທີ່ພາໃຫ້
ອີຊາກ ກັບນາງ ເຣເບກາ ມີຄວາມທຸກຂົມໃຈຫຼາຍ.

## ບົດທີ 27

໑ແລະຢູ່ມາເມື່ອ ອີຊາກ ເຖົ້າແລ້ວ ແລະມີຕາມືດມົວໄປຈຶ່ງເບິ່ງບໍ່ເຫັນ
ສິ່ງໃດ ທ່ານໄດ້ເອີ້ນ ເອຊາວ ລູກກົກຂອງຕົນມາ ແລະບອກລາວວ່າ
“ລູກເອີຍ” ແລ້ວ ເອຊາວ ໄດ້ຕອບວ່າ “ຂ້ອຍຢູ່ນີ້”. ໒ທ່ານໄດ້ກ່າວວ່າ
“ບັດນີ້ ພໍ່ກໍແກ່ເຖົ້າແລ້ວ ພໍ່ບໍ່ຮູ້ວ່າວັນໃດພໍ່ຈະຕາຍ. ໓ດຽວນີ້ຂໍເຈົ້າເອົາ
ເຄື່ອງອາວຸດ,ລູກທະນູກັບໜ້າທະນູຂອງເຈົ້າ ອອກໄປໃນປ່າຫາເນື້ອ
ມາໃຫ້ພໍ່ແດ່, ໔ແລະເຮັດອາຫານເນື້ອສິດແຊບໆທີ່ພໍ່ມັກກິນນັ້ນ ເອົາ
ມາໃຫ້ພໍ່ກິນ ເພື່ອຈິດໃຈຂອງພໍ່ຈະໄດ້ອວຍພອນໃຫ້ເຈົ້າກ່ອນພໍ່ຕາຍ
ໄປ”. ໕ນາງ ເຣເບກາ ໄດ້ຍິນ ອີຊາກ ພວມກ່າວກັບ ເອຊາວ ລູກຊາຍ
ຂອງຕົນ ແລະ ເອຊາວ ໄດ້ອອກໄປໃນປ່າເພື່ອຈະໄດ້ຫາເນື້ອມາ.

໖ແລ້ວນາງ ເຣເບກາ ໄດ້ກ່າວແກ່ ຢາໂຄບ ລູກຊາຍຂອງຕົນວ່າ “ເບິ່ງ
ແມ ແມ່ໄດ້ຍິນພໍ່ຂອງເຈົ້າພວມກ່າວກັບ ເອຊາວ ອ້າຍຂອງເຈົ້າວ່າ
໗ຈຶ່ງໄປຫາເນື້ອມາໃຫ້ເຮົາແລະເຮັດອາຫານເນື້ອສິດແຊບໆໃຫ້ພໍ່
ເພື່ອພໍ່ຈະກິນ ແລະອວຍພອນໃຫ້ເຈົ້າ ຕໍ່ໜ້າພຣະເຢໂຮວາ ກ່ອນ
ພໍ່ຕາຍໄປ’. ໘ບັດນີ້ລູກເອີຍ ເຈົ້າຈຶ່ງຟັງຄຳທີ່ແມ່ສັ່ງແກ່ເຈົ້າເຖີ້ນ: ໙ເຈົ້າ
ຈຶ່ງໄປທີ່ຝູງແບ້ແລະເອົາລູກແບ້ນ້ອຍໂຕດີໆສອງໂຕມາແລ້ວ ແມ່ຈະ
ເຮັດອາຫານເນື້ອສິດແຊບໆໃຫ້ພໍ່ຂອງເຈົ້າຕາມທີ່ທ່ານມັກກິນ.

໑໐ແລ້ວເຈົ້າຈຶ່ງເອົາໄປໃຫ້ພໍ່ຂອງເຈົ້າກິນ ເພື່ອເພິ່ນຈະອວຍພອນໃຫ້
ເຈົ້າກ່ອນເພິ່ນຕາຍໄປ”. ໑໑ຢາໂຄບ ໄດ້ກ່າວແກ່ນາງ ເຣເບກາ ແມ່
ຂອງຕົນວ່າ “ເບິ່ງແມ ອ້າຍ ເອຊາວ ເປັນຄົນມີຂົນຫຼາຍ ແຕ່ຂ້ອຍ
ເປັນຄົນຜິວກ້ຽງບໍ່ມີຂົນ: ໑໒ຫາກວ່າພໍ່ຈະຈັບຕົວຂ້ອຍ ແລະຈະຄິດວ່າ
ຂ້ອຍເປັນຄົນຫຼອກລວງເພິ່ນ ແລ້ວຂ້ອຍຈະນຳຄວາມສາບແຊ່ງມາ
ເທິງຂ້ອຍ ບໍ່ແມ່ນຄວາມອວຍພອນ”. ໑໓ແມ່ໄດ້ກ່າວແກ່ລາວວ່າ
“ລູກເອີຍ ຂໍໃຫ້ຄວາມສາບແຊ່ງຕົກຢູ່ເທິງແມ່ເທີ້ນ ແຕ່ເຈົ້າຈົ່ງຟັງ
ຄວາມຂອງແມ່ ແລະໄປເອົາລູກແບ້ນັ້ນມາໃຫ້ແມ່”. ໑໔ແລ້ວ ຢາໂຄບ
ໄດ້ໄປຫາລູກແບ້ນັ້ນມາໃຫ້ແມ່ ແລ້ວແມ່ໄດ້ເຮັດອາຫານເນື້ອສິດ
ແຊບໆຕາມພໍ່ຂອງທ່ານມັກກິນ. ໑໕ແລ້ວນາງ ເຣເບກາ ໄດ້ເອົາເສື້ອ
ຜ້າຢ່າງດີຂອງ ເອຊາວ ລູກກົກຂອງຕົນຊຶ່ງຢູ່ນຳນາງໃນເຮືອນ ນາງ
ໄດ້ໃຫ້ ຢາໂຄບ ລູກຫຼ້າຂອງຕົນນຸ່ງຫົ່ມ ໑໖ນາງໄດ້ເອົາໜັງຂອງລູກ
ແບ້ປົກມື ແລະຄໍອັນລຽບກ້ຽງຂອງທ່ານ ໑໗ແລ້ວນາງໄດ້ເອົາອາຫານ
ເນື້ອສິດແຊບໆກັບເຂົ້າຈີ່ທີ່ຕົນໄດ້ຈັດແຈງໄວ້ນັ້ນ ໃສ່ໃນມື ຢາໂຄບ
ລູກຊາຍຂອງຕົນ.

໑໘ແລ້ວ ຢາໂຄບ ໄດ້ເຂົ້າໄປຫາພໍ່ ແລະໄດ້ກ່າວວ່າ “ພໍ່ເອີຍ” ພໍ່ໄດ້
ຕອບວ່າ “ພໍ່ຢູ່ທີ່ນີ້ລູກເອີຍ ເຈົ້າແມ່ນຜູ້ໃດ?” ໑໙ຢາໂຄບ ໄດ້ກ່າວແກ່
ພໍ່ວ່າ “ຂ້ອຍແມ່ນ ເອຊາວ ລູກຊາຍກົກຂອງທ່ານ, ລູກໄດ້ກະທຳ
ຕາມພໍ່ໄດ້ສັ່ງໄວ້ ຂໍເຊີນລຸກຂຶ້ນນັ່ງກິນເນື້ອທີ່ລູກຫາມາໄດ້ນີ້ ເພື່ອ
ຈິດໃຈຂອງທ່ານຈະໄດ້ອວຍພອນໃຫ້ລູກ”. ໒໐ອີຊາກ ໄດ້ຖາມລູກວ່າ
“ລູກເອີຍ ເຈົ້າເຮັດຈັ່ງໃດຈຶ່ງໄດ້ເນື້ອມາໄວແທ້ໆ?” ລາວໄດ້ຕອບວ່າ
“ເພາະພຣະເຢໂຮວາພຣະເຈົ້າຂອງທ່ານໄດ້ໂຜດນຳມາໃຫ້ລູກ”.
໒໑ແລ້ວ ອີຊາກ ໄດ້ກ່າວແກ່ ຢາໂຄບ ວ່າ “ລູກເອີຍ ເຊີນຫຍັບເຂົ້າມາ

ໃກ້ ແລະເຮົາຈະຈັບບາຍເຈົ້າເບິ່ງວ່າ ເຈົ້າແມ່ນ ເອຊາວ ລູກຂອງເຮົາ
ຈິງຫຼືບໍ່". ໒໒ຢາໂຄບ ໄດ້ຫຍັບເຂົ້າໄປໃກ້ ອີຊາກ ພໍ່ຂອງຕົນ ແລະພໍ່ໄດ້
ຈັບບາຍລາວເບິ່ງ ແລະກ່າວວ່າ "ສຽງປາກແມ່ນສຽງປາກຂອງ ຢາ
ໂຄບ ແຕ່ວ່າມືແມ່ນມື ເອຊາວ". ໒໓ທ່ານບໍ່ໄດ້ຮູ້ຈັກລາວ ເຫດວ່າ
ຢາໂຄບ ມີຂົນທີ່ມືເໝືອນ ເອຊາວ ມືນັ້ນ, ແລ້ວທ່ານໄດ້ອວຍພອນ
ໃຫ້ລາວ. ໒໔ທ່ານໄດ້ຖາມວ່າ "ເຈົ້າແມ່ນ ເອຊາວ ລູກຊາຍຂອງເຮົາ
ແທ້ຫຼື?" ລາວໄດ້ຕອບວ່າ "ແມ່ນແລ້ວ". ໒໕ທ່ານໄດ້ກ່າວວ່າ "ເອົາເນື້ອ
ມາໃກ້ ແລະເຮົາຈະກິນເນື້ອທີ່ລູກຊາຍຂອງເຮົາຫາມາ ເພື່ອຈິດໃຈ
ຂອງເຮົາຈະໄດ້ອວຍພອນໃຫ້ເຈົ້າ" ຢາໂຄບ ໄດ້ເອົາເນື້ອໄປໃຫ້ທ່ານ
ແລ້ວທ່ານໄດ້ກິນ, ຢາໂຄບ ໄດ້ເອົາເຫຼົ້າອາງຸ່ນມາແລະທ່ານໄດ້ດື່ມ.
໒໖ແລ້ວ ອີຊາກ ພໍ່ຂອງຕົນໄດ້ກ່າວແກ່ລາວວ່າ "ລູກເອີຍ, ຫຍັບເຂົ້າ
ມາໃກ້ ແລະຈູບພໍ່ແດ່". ໒໗ຢາໂຄບ ໄດ້ຫຍັບເຂົ້າໄປໃກ້ ແລະໄດ້ຈູບ
ພໍ່, ພໍ່ໄດ້ດົມກິ່ນເສື້ອຜ້າຂອງລາວ ແລະໄດ້ອວຍພອນໃຫ້ລາວແລະ
ກ່າວວ່າ "ເບິ່ງແມ, ລູກຂອງເຮົາມີກິ່ນຫອມເໝືອນດັ່ງທົ່ງນາທີ່ພຣະ
ເຢໂຮວາໄດ້ອວຍພອນ, ໒໘ຂໍໃຫ້ພຣະເຈົ້າອວຍພອນໃຫ້ເຈົ້າມີນ້ຳ
ໝອກຈາກຟ້າອາກາດ, ປະທານແຜນດິນທີ່ອຸດົມສົມບູນໄປດ້ວຍ
ເຂົ້າກັບນ້ຳອາງຸ່ນອັນບໍລິບູນ. ໒໙ຂໍໃຫ້ຊົນຊາດທັງຫຼາຍຮັບໃຊ້ເຈົ້າ
ແລະປະເທດຕ່າງໆກົ້ມກາບລົງຕໍ່ໜ້າເຈົ້າ, ຂໍໃຫ້ເຈົ້າເປັນນາຍເໜືອ
ພີ່ນ້ອງທັງຫຼາຍຂອງເຈົ້າ ແລະໃຫ້ລູກຊາຍທັງຫຼາຍຂອງແມ່ເຈົ້າກົ້ມ
ກາບລົງຕໍ່ໜ້າເຈົ້າ, ບຸກຄົນຜູ້ໃດສາບແຊ່ງເຈົ້າໃຫ້ຜູ້ນັ້ນຖືກສາບແຊ່ງ
ບຸກຄົນຜູ້ໃດອວຍພອນໃຫ້ເຈົ້າ ໃຫ້ຜູ້ນັ້ນໄດ້ຮັບພຣະພອນ".

໓໐ແລະຕໍ່ມາເມື່ອ ອີຊາກ ໄດ້ອວຍພອນໃຫ້ ຢາໂຄບ ສຳເລັດແລ້ວ,
ຢາໂຄບ ໄດ້ອອກໄປຈາກໜ້າ ອີຊາກ ພໍ່ຂອງຕົນພຽງບຶດດຽວ ແລ້ວ

ເອຊາວ ອ້າຍຂອງຕົນໄດ້ກັບມາຈາກການລ່າເນື້ອ. ໓໑ເອຊາວ ໄດ້ເຮັດ
ອາຫານເນື້ອສິດແຊບໆ ແລ້ວໄດ້ເອົາມາໃຫ້ພໍ່ຂອງຕົນ ແລະໄດ້ກ່າວ
ແກ່ພໍ່ວ່າ “ຂໍເຊີນພໍ່ລຸກຂຶ້ນ ແລະກິນເນື້ອທີ່ລູກຊາຍຂອງພໍ່ຫາມາ ເພື່ອ
ຈິດໃຈພໍ່ຈະໄດ້ອວຍພອນໃຫ້ລູກ”. ໓໒ອີຊາກ ພໍ່ຂອງຕົນໄດ້ຖາມລາວ
ວ່າ “ເຈົ້າແມ່ນໃຜ?” ເອຊາວ ໄດ້ຕອບວ່າ “ຂ້ອຍແມ່ນ ເອຊາວ ລູກຊາຍ
ກົກຂອງທ່ານ”. ໓໓ເມື່ອນັ້ນ ອີຊາກ ໄດ້ສະດຸ້ງຕົກໃຈຕົວສັ່ນຫຼາຍ ແລະ
ໄດ້ກ່າວວ່າ “ແລ້ວແມ່ນໃຜ? ຜູ້ທີ່ໄດ້ຈັບເນື້ອ ແລະໄດ້ເອົາມາໃຫ້ພໍ່
ແລະພໍ່ໄດ້ກິນໝົດແລ້ວກ່ອນເຈົ້າມາ ແລະເຮົາໄດ້ອວຍພອນໃຫ້ລາວ
ແລ້ວ ເພາະສະນັ້ນລາວຈະເປັນຜູ້ໄດ້ຮັບພຣະພອນ”. ໓໔ເມື່ອ ເອຊາວ
ໄດ້ຍິນພໍ່ເວົ້າດັ່ງນັ້ນແລ້ວ ລາວໄດ້ຮ້ອງໄຫ້ດ້ວຍສຽງອັນດັງອັນຂົມ
ຂື່ນຫຼາຍ ແລະໄດ້ກ່າວແກ່ພໍ່ວ່າ “ພໍ່ເອີຍ ຂໍອວຍພອນໃຫ້ລູກດ້ວຍ
ເທີ້ນ”. ໓໕ພໍ່ໄດ້ກ່າວວ່າ “ນ້ອງຊາຍຂອງເຈົ້າໄດ້ມາດ້ວຍກົນອຸບາຍ
ແລະໄດ້ຫຼອກເອົາຄວາມພອນຂອງເຈົ້າໄປແລ້ວ”. ໓໖ເອຊາວ ໄດ້ກ່າວ
ວ່າ “ລາວມີຊື່ວ່າ ຢາໂຄບ ກໍຖືກຕ້ອງແລ້ວບໍ່ແມ່ນຫຼື? ລາວໄດ້ຫຼອກ
ລວງ* ໃຫ້ຂ້ອຍເສຍຫາຍສອງເທື່ອແລ້ວ: ລາວໄດ້ເອົາສິດທິອ້າຍກົກ
ຂອງຂ້ອຍໄປແລ້ວ ແລະເບິ່ງແມ ບັດນີ້ໄດ້ເອົາຄວາມພອນຂອງຂ້ອຍ
ໄປດ້ວຍ” ແລ້ວ ເອຊາວ ໄດ້ຖາມວ່າ “ທ່ານບໍ່ໄດ້ຮັກສາຄວາມພອນ
ເອົາໄວ້ໃຫ້ຂ້ອຍແດ່ຫຼື?” ໓໗ອີຊາກ ໄດ້ຕອບແລະໄດ້ກ່າວແກ່ ເອຊາວ
ວ່າ, “ບັດນີ້ ເຮົາໄດ້ຕັ້ງລາວໄວ້ເປັນນາຍຂອງເຈົ້າ ແລະພີ່ນ້ອງທັງປວງ
ຂອງຕົນ ເຮົາໄດ້ມອບໃຫ້ເປັນຂ້າໃຊ້ຂອງລາວ ແລະໃຫ້ລາວມີເຂົ້າ
ກັບນ້ຳອາງຸ່ນບໍລິບູນ ລູກເອີຍ ບັດນີ້ເຮົາຈະກະທຳສິ່ງໃດໃຫ້ເຈົ້າ
ໄດ້ອີກ?” ໓໘ເອຊາວ ໄດ້ກ່າວແກ່ພໍ່ວ່າ “ພໍ່ເອີຍ, ພໍ່ມີຄວາມພອນອັນ
ດຽວເທົ່ານັ້ນຫຼື? ໂອພໍ່ເອີຍ ຂໍອວຍພອນໃຫ້ຂ້ອຍດ້ວຍເທີ້ນ” ເອຊາວ
ໄດ້ເປັ່ງສຽງຮ້ອງໄຫ້ອັນດັງ. ໓໙ແລ້ວ ອີຊາກ ພໍ່ຂອງຕົນໄດ້ຕອບແລະ

ກ່າວແກ່ລາວວ່າ “ເບິ່ງເຖີດ ເຈົ້າຈະອາໄສຢູ່ໃນແຜນດິນອັນອຸດົມ
ສົມບູນ ແລະໃນນ້ຳໝອກຈາກຟ້າອາກາດເບື້ອງເທິງ. ໔໐ເຈົ້າຈະລ້ຽງ
ຊີວິດດ້ວຍດາບຂອງເຈົ້າ ຈະເປັນຂ້າໃຊ້ຂອງນ້ອງຊາຍເຈົ້າ ແລະຢູ່
ມາເມື່ອເຈົ້າມີອຳນາດ ເຈົ້າຈະເຮັດໃຫ້ແອກນ້ອງຊາຍຫັກເສຍຈາກ
ຄໍຂອງເຈົ້າ”. ໔໑ເອຊາວ ໄດ້ຄຽດຊັງ ຢາໂຄບ ຍ້ອນຄວາມພອນ
ທີ່ພໍ່ໄດ້ໃຫ້ແກ່ລາວເອຊາວ ໄດ້ຄິດໃນໃຈວ່າ “ມື້ໄວ້ທຸກໃຫ້ພໍ່ ກໍໃກ້
ເຂົ້າມາແລ້ວແລະຂ້ອຍຈະຂ້າຢາໂຄບນ້ອງຊາຍຂອງຂ້ອຍ”. ໔໒ແລະ
ຖ້ອຍຄຳນີ້ຂອງ ເອຊາວລູກຊາຍກົກຂອງນາງ ເຂົາໄດ້ໄປບອກນາງ
ເຣເບກາ, ນາງໄດ້ໃຊ້ຄົນໄປເອີ້ນ ຢາໂຄບ ລູກຊາຍຫຼ້າຂອງຕົນມາ
ແລະໄດ້ກ່າວແກ່ລາວວ່າ“ເບິ່ງແມ, ເອຊາວ ອ້າຍຂອງເຈົ້າກໍອອຍ
ໃຈຂອງຕົນໂດຍການຄິດຈະຂ້າເຈົ້າເສຍ. ໔໓ແລະບັດນີ້ລູກເອີຍ, ຈົ່ງ
ຟັງຄວາມແມ່ ຈົ່ງລຸກຂຶ້ນໜີໄປຫາ ລາບານ ອ້າຍຂອງແມ່ ທີ່ເມືອງ
ຮາຣານ. ໔໔ແລະຄອຍຢູ່ນຳ ລາບານ ຊົ່ວຄາວ ຈົນກວ່າຄວາມຄຽດ
ຂອງອ້າຍເຈົ້າຈະຫາຍໄປ. ໔໕ຈົນກວ່າອ້າຍຂອງເຈົ້າເຊົາຄຽດແຄ້ນ
ເຈົ້າແລະອ້າຍເຈົ້າລືມການທີ່ເຈົ້າໄດ້ເຮັດແກ່ລາວ, ແລ້ວແມ່ຈະໃຊ້
ຄົນໄປເອົາເຈົ້າກັບມາຈາກທີ່ນັ້ນອີກ ດ້ວຍເຫດໃດເຮົາຈະຕ້ອງເສຍ
ເຈົ້າທັງສອງໄປໃນວັນດຽວ?” ໔໖ແລະນາງ ເຣເບກາ ໄດ້ກ່າວແກ່ ອີ
ຊາກ ວ່າ “ຂ້ອຍເບື່ອໜ່າຍຊີວິດຍ້ອນລູກຍິງຂອງຊາວເມືອງ ເຮດ
ນັ້ນ, ຖ້າແມ່ນ ຢາໂຄບ ຈະເອົາລູກຍິງຂອງຊາວເມືອງ ເຮດ ຢ່າງນີ້,
ຈາກລູກຍິງຂອງຊາວເມືອງປະເທດນີ້ມາເປັນເມຍແລ້ວ ຊີວິດຂອງ
ຂ້ອຍຈະເປັນປະໂຫຍດອັນໃດໃຫ້ແກ່ຂ້ອຍ?”

*27:26 “ຫຼອກລວງ” ຫຼືວ່າ “ແທນບ່ອນ”*

# ບົດທີ 28

໑ອີຊາກ ໄດ້ຮ້ອງ ຢາໂຄບ ມາ ແລະໄດ້ອວຍພອນໃຫ້ທ່ານ, ແລະໄດ້
ສັ່ງບອກວ່າ "ເຈົ້າຢ່າເອົາຍິງຊາວ ການາອານ ມາເປັນເມຍຂອງ
ເຈົ້າ. ໒ຈົ່ງເດີນທາງໄປທີ່ເມືອງ ປາດັນອາຣຳ ເຖິງບ້ານ ເບທູເອນ ຜູ້
ເປັນພໍ່ຂອງແມ່ເຈົ້າ, ແລະທີ່ນັ້ນຈົ່ງເອົາຜູ້ໜຶ່ງໃນພວກລູກສາວຂອງ
ລາບານ ຜູ້ເປັນອ້າຍຂອງແມ່ເຈົ້າ ມາເປັນເມຍເຈົ້າ. ໓ແລະຂໍໃຫ້ພຣະ
ເຈົ້າຜູ້ຊົງຣິດທານຸພາບສູງສຸດອວຍພອນໃຫ້ເຈົ້າ ແລະໃຫ້ເຊື້ອສາຍ
ຂອງເຈົ້າເກີດທະວີມາກຂຶ້ນ ເພື່ອເຈົ້າຈະໄດ້ກາຍເປັນປະເທດໃຫຍ່.
໔ແລະຂໍພຣະອົງໂຜດປະທານຄວາມພອນຂອງ ອັບຣາຮາມ ໃຫ້ເຈົ້າ
ແລະໃຫ້ເຊື້ອສາຍຂອງເຈົ້າດ້ວຍ, ເພື່ອເຈົ້າຈະໄດ້ແຜ່ນດິນທີ່ເຈົ້າໄດ້
ອາໄສຢູ່ເປັນຄົນຕ່າງດ້າວນີ້ເປັນມໍລະດົກ ຊຶ່ງພຣະເຈົ້າໄດ້ປະທານ
ໃຫ້ແກ່ອັບຣາຮາມ ແລ້ວ". ໕ແລ້ວອີຊາກໄດ້ສົ່ງຢາໂຄບໄປ ແລະທ່ານ
ໄດ້ໄປທີ່ເມືອງປາດັນອາຣຳ ເຖິງລາບານລູກ ເບທູເອນຊາວຊີເຣຍຜູ້
ເປັນອ້າຍຂອງນາງ ເຣເບກາ ແມ່ຂອງ ຢາໂຄບ ແລະ ເອຊາວ.

໖ເອຊາວ ໄດ້ເຫັນວ່າ ອີຊາກ ໄດ້ອວຍພອນໃຫ້ ຢາໂຄບ ແລະໄດ້ສົ່ງ
ລາວໄປທີ່ເມືອງ ປາດັນອາຣຳ ເພື່ອຈະໄດ້ຫາເມຍທີ່ນັ້ນ ແລະເມື່ອ
ພໍ່ໄດ້ອວຍພອນໃຫ້ ຢາໂຄບ ພໍ່ໄດ້ສັ່ງແກ່ທ່ານວ່າ "ຢ່າເອົາຍິງຊາວ
ການາອານ ມາເປັນເມຍ". ໗ແລະເຫັນວ່າ ຢາໂຄບ ໄດ້ຟັງຄວາມພໍ່
ແມ່ຈຶ່ງໄດ້ໄປທີ່ເມືອງ ປາດັນອາຣຳ ແລ້ວ. ໘ເມື່ອນັ້ນ ເອຊາວ ໄດ້ເຫັນ
ວ່າ ອີຊາກ ພໍ່ຂອງຕົນບໍ່ຊອບໃຈກັບລູກຍິງທັງຫຼາຍຂອງຊາວ ການາ
ອານ. ໙ແລ້ວ ເອຊາວ ໄດ້ໄປຫາ ອິດຊະມາເອນ ແລະ ນອກຈາກເມຍ
ທັງສອງຂອງຕົນ ກໍຍັງເອົາເມຍຄົນໜຶ່ງຊື່ ມາຮາລາດ ລູກຂອງ ອິດ

ຊະມາເອນ ຜູ້ເປັນລູກຊາຍຂອງ ອັບຣາຮາມ ຍິງນັ້ນແມ່ນນ້ອງສາວ
ຂອງ ເນບາໂຢດ.

໑໐ຢາໂຄບ ໄດ້ອອກຈາກເມືອງ ເບເອນເຊບາ ແລະໄດ້ໄປທີ່ເມືອງ
ຮາຣານ. ໑໑ແລະໄດ້ມາເຖິງບ່ອນແຫ່ງໜຶ່ງ ໄດ້ພັກເຊົາຄືນໜຶ່ງທີ່ນັ້ນ
ເພາະວ່າຕາເວັນໄດ້ຕົກແລ້ວ, ທ່ານໄດ້ເອົາຫີນຈາກທີ່ນັ້ນມາວາງ
ເປັນໝອນໜູນຫົວ ແລະນອນຢູ່ນັ້ນ. ໑໒ທ່ານໄດ້ຝັນ, ແລະເບິ່ງແມ
ມີຂັ້ນໄດຕັ້ງຢູ່ທີ່ດິນ ແລະຍອດສູງຂຶ້ນໄປເຖິງຟ້າສະຫວັນ: ເບິ່ງແມ
ພວກເທວະດາຂອງພຣະເຈົ້າໄດ້ຂຶ້ນໄປລົງມາທີ່ຂັ້ນໄດນັ້ນ. ໑໓ແລະ
ເບິ່ງແມ ພຣະເຢໂຮວາຊົງປະທັບຢູ່ເທິງຍອດຂັ້ນໄດນັ້ນ ພຣະອົງໄດ້
ກ່າວວ່າ "ເຮົາຄືພຣະເຢໂຮວາພຣະເຈົ້າຂອງ ອັບຣາຮາມ ພໍ່ປູ່*ຂອງ
ເຈົ້າ ແລະພຣະເຈົ້າຂອງອີຊາກ: ແຜນດິນທີ່ເຈົ້ານອນຢູ່ນັ້ນ ເຮົາຈະໃຫ້
ແກ່ເຈົ້າ, ແລະແກ່ເຊື້ອສາຍຂອງເຈົ້າ; ໑໔ເຊື້ອສາຍຂອງເຈົ້າຈະເປັນ
ເໝືອນດັ່ງເມັດຂີ້ຝຸ່ນດິນ, ເຈົ້າຈະແຜ່ກ້ວາງໄປທາງທິດຕາເວັນຕົກ,
ທິດຕາເວັນອອກ, ທິດເໜືອ ແລະທິດໃຕ້ ແລະຄອບຄົວທັງປວງທົ່ວ
ແຜ່ນດິນໂລກຈະໄດ້ຮັບພຣະພອນຍ້ອນເຈົ້າ ແລະຍ້ອນເຊື້ອສາຍ
ຂອງເຈົ້າ. ໑໕ແລະເບິ່ງເຖີດ ເຮົາສະຖິດຢູ່ນຳເຈົ້າ ແລະຈະປົກປັກ
ຮັກສາເຈົ້າໄວ້ທຸກທີ່ທຸກບ່ອນທີ່ເຈົ້າຈະໄປນັ້ນ ແລະຈະພາເຈົ້າກັບມາ
ເຖິງແຜນດິນນີ້ອີກ; ເພາະວ່າເຮົາຈະບໍ່ປະຖິ້ມເຈົ້າຈົນເຖິງຈະໄດ້ກະ
ທຳສິ່ງທີ່ເຮົາໄດ້ບອກເຈົ້າໄວ້ນັ້ນແລ້ວ".

໑໖ແລ້ວ ຢາໂຄບ ໄດ້ຕື່ນຈາກຫຼັບ ແລະກ່າວວ່າ "ຈິງແທ້ພຣະເຢໂຮວາ
ຢູ່ທີ່ນີ້ ແຕ່ຂ້ອຍບໍ່ໄດ້ຮູ້ຈັກການນັ້ນ". ໑໗ທ່ານໄດ້ຢ້ານ ແລະໄດ້ກ່າວ
ວ່າ "ທີ່ນີ້ເປັນຕາຢ້ານແທ້! ບໍ່ແມ່ນສິ່ງໃດເວັ້ນໄວ້ແຕ່ວິຫານຂອງພຣະ

ເຈົ້າແລະເປັນປະຕູແຫ່ງຟ້າສະຫວັນ". ໑໘ຢາໂຄບ ໄດ້ລຸກຂຶ້ນແຕ່ເຊົ້າ
ໄດ້ເອົາກ້ອນຫີນທີ່ໄດ້ເຮັດເປັນໝອນໝູນຫົວໄວ້ນັ້ນປັກຕັ້ງຂຶ້ນເປັນ
ເສົາສຳຄັນ ແລະເອົານ້ຳມັນຖອກເທິງຫີນນັ້ນ. ໑໙ທ່ານໄດ້ເອີ້ນຊື່
ບ່ອນນັ້ນວ່າ ເບດເອນ ແຕ່ເດີມເມືອງນັ້ນຊື່ວ່າ ລູເຊ. ໒໐ຢາໂຄບ
ໄດ້ຕັ້ງຄຳປະຕິຍານສາບານໄວ້ວ່າ "ຖ້າພຣະເຈົ້າຢູ່ນຳຂ້ານ້ອຍ, ປົກ
ປັກຮັກສາໃນທາງທີ່ຂ້ານ້ອຍຈະໄປ, ໃຫ້ຂ້ານ້ອຍມີອາຫານກິນ ແລະ
ໃຫ້ມີເສື້ອຜ້ານຸ່ງຫົ່ມ, ໒໑ຈົນຂ້ານ້ອຍກັບມາທີ່ເຮືອນຂອງພໍ່ຂ້ານ້ອຍ
ອີກຢ່າງສັນຕິແລ້ວ; ພຣະເຢໂຮວາຈະເປັນພຣະເຈົ້າຂອງຂ້ານ້ອຍ,
໒໒ແລະກ້ອນຫີນທີ່ຂ້ານ້ອຍໄດ້ປັກຕັ້ງຂຶ້ນເປັນເສົາສຳຄັນຈະເປັນ
ວິຫານຂອງພຣະເຈົ້າ ແລະສິ່ງສາລະພັດທີ່ພຣະອົງຈະປະທານໃຫ້
ຂ້ານ້ອຍ, ແນ່ນອນຂ້ານ້ອຍຈະແບ່ງເປັນ ສິບສ່ວນ ແລະເອົາສ່ວນ
ໜຶ່ງມາຖວາຍແກ່ພຣະອົງ".

*28:13 "ພໍ່ປູ່" ນີ້ຕາມພາສາເຮັບເຣີກໍແປອອກວ່າ "ບັນພະບຸລຸດ"*

*28:21 "ຢ່າງສັນຕິ" ຫຼືວ່າ "ໂດຍສະຫວັດດີພາບ"*

## ບົດທີ 29

໑ຢາໂຄບໄດ້ເດີນທາງມາເຖິງແຜນດິນຂອງຊາວຕາເວັນອອກ. ໒ແລະ
ທ່ານໄດ້ເບິ່ງອອກໄປ ແລະເບິ່ງແມ ມີນ້ຳສ້າງຢູ່ໃນທົ່ງນາ, ມີຝູງສັດ
ສາມຝູງນອນຢູ່ໃກ້ນ້ຳສ້າງນັ້ນ ເພາະວ່າຝູງສັດເຄີຍກິນນ້ຳຈາກສ້າງ
ນັ້ນ ແລະມີກ້ອນຫີນໃຫຍ່ອັດປາກສ້າງນັ້ນໄວ້. ໓ຝູງສັດທັງປວງ
ໄດ້ມາໂຮມກັນຢູ່ທີ່ນັ້ນ ແລະມີຄົນມາກິ້ງກ້ອນຫີນອອກຈາກປາກ

ສ້າງຕັກນໍ້າໃຫ້ຝູງສັດກິນ ແລ້ວໄດ້ເອົາຫີນອັດປາກສ້າງອີກດັ່ງເກົ່າ.
໔ຢາໂຄບ ໄດ້ຖາມເຂົາວ່າ "ພີ່ນ້ອງເອີຍ, ທ່ານທັງຫຼາຍມາແຕ່ໃສ?"
ເຂົາໄດ້ຕອບວ່າ "ພວກເຮົາແມ່ນຊາວເມືອງ ຮາຣານ". ໕ຢາໂຄບ ໄດ້
ຖາມພວກເຂົາວ່າ "ພວກທ່ານຮູ້ຈັກ ລາບານ ລູກຂອງ ນາໂຮ ບໍ?"
ພວກເຂົາໄດ້ຕອບວ່າ "ພວກເຮົາຮູ້ຈັກທ່ານ". ໖ຢາໂຄບ ໄດ້ຖາມວ່າ
"ລາບານ ຍັງຄ່ອຍສະບາຍບໍ?" ພວກເຂົາໄດ້ຕອບວ່າ "ສະບາຍຢູ່
ແລະເບິ່ງແມ ລູກສາວຂອງທ່ານຊື່ນາງຣາເຊນພວມພາຝູງແກະມາ".
໗ຢາໂຄບ ໄດ້ກ່າວວ່າ "ເບິ່ງແມ ຕາເວັນຍັງຢູ່ສູງ ບໍ່ເປັນເວລາທີ່ຈະໃຫ້
ຝູງສັດມາໂຮມກັນ, ຈົ່ງຕັກນໍ້າໃຫ້ສັດກິນ ແລະໃຫ້ໄປກິນຫຍ້າອີກ".
໘ພວກເຂົາໄດ້ຕອບວ່າ "ພວກເຮົາເຮັດຢ່າງນັ້ນບໍ່ໄດ້ ຈົນກວ່າຝູງສັດ
ທັງປວງໄດ້ມາໂຮມກັນແລ້ວ ເມື່ອນັ້ນເຂົາຈິ່ງກິ້ງກ້ອນຫີນຈາກປາກ
ສ້າງ ພວກເຮົາຈິ່ງຈະເອົານໍ້າໃຫ້ຝູງແກະກິນໄດ້".

໙ເມື່ອພວກເຂົາຍັງເວົ້າກັນຢູ່ນາງ ຣາເຊນ ໄດ້ພາຝູງແກະຂອງພໍ່ຕົນ
ມາຮອດ ເພາະວ່ານາງເປັນຜູ້ລ້ຽງແກະ. ໑໐ແລະຢູ່ມາເມື່ອ ຢາໂຄບ
ໄດ້ເຫັນນາງ ຣາເຊນ ລູກສາວຂອງ ລາບານ ຜູ້ເປັນອ້າຍແມ່ຂອງຕົນ,
ແລະຝູງແກະຂອງ ລາບານ ຜູ້ເປັນອ້າຍແມ່ຂອງຕົນນັ້ນ, ຢາໂຄບ
ໄດ້ຫຍັບເຂົ້າໄປໃກ້ ແລະໄດ້ກິ້ງກ້ອນຫີນຈາກປາກສ້າງນັ້ນອອກຕັກ
ນໍ້າໃຫ້ຝູງສັດຂອງ ລາບານ ຜູ້ເປັນອ້າຍຂອງແມ່ຕົນກິນ. ໑໑ແລະ ຢາ
ໂຄບ ໄດ້ຈູບນາງ ຣາເຊນ ແລະໄດ້ຍົກສຽງຂຶ້ນຮ້ອງໄຫ້. ໑໒ຢາໂຄບ
ໄດ້ບອກນາງ ຣາເຊນ ໃຫ້ຮູ້ວ່າ ຕົນເປັນພີ່ນ້ອງຂອງພໍ່ນາງ ແລະເປັນ
ລູກນາງ ເຣເບກາ ແລ້ວນາງ ຣາເຊນ ໄດ້ແລ່ນໄປບອກພໍ່ຂອງຕົນ.
໑໓ແລະເມື່ອ ລາບານ ໄດ້ຍິນຂ່າວວ່າ ຢາໂຄບ ລູກນ້ອງສາວຂອງ
ຕົນມາ ເພິ່ນໄດ້ແລ່ນອອກໄປຕ້ອນຮັບທ່ານ ແລະໄດ້ກອດຈູບທ່ານ

ແລະໄດ້ພາທ່ານເຂົ້າໄປໃນເຮືອນຂອງຕົນ ແລ້ວ ຢາໂຄບ ໄດ້ເລົ່າ
ເລື່ອງທັງໝົດໃຫ້ ລາບານ ຟັງທຸກປະການ. ໑໔ລາບານ ໄດ້ກ່າວແກ່
ລາວວ່າ "ເຈົ້າເປັນກະດູກເປັນເນື້ອໜັງຂອງເຮົາແທ້ໆ". ແລ້ວ ຢາ
ໂຄບ ໄດ້ອາໄສຢູ່ກັບ ລາບານ ເດືອນໜຶ່ງ.

໑໕ແລ້ວ ລາບານ ໄດ້ກ່າວແກ່ ຢາໂຄບ ວ່າ "ເພາະເຫດເຈົ້າເປັນພີ່
ນ້ອງກັບເຮົາ ເຈົ້າຈະບົວລະບັດເຮົາລ້າໆ ຈະສົມຄວນຫຼື? ຈົ່ງບອກ
ເຮົາເຖີດ ເຈົ້າຈະໄດ້ຄ່າຈ້າງເທົ່າໃດ". ໑໖ອັນໜຶ່ງ ລາບານ ມີລູກສາວ
ສອງຄົນ, ເອື້ອຍຊື່ນາງ ເລອາ ນ້ອງສາວຊື່ນາງ ຣາເຊນ. ໑໗ນາງ ເລອາ
ເປັນຕາອ່ອນ ແຕ່ວ່ານາງຣາເຊນມີຮູບຮ່າງງາມແລະເປັນຕາໜ້າຊົມ.
໑໘ຢາໂຄບ ໄດ້ຮັກນາງ ຣາເຊນ ແລະໄດ້ກ່າວວ່າ "ຜູ້ຂ້າຈະບົວລະບັດ
ທ່ານເຈັດປີ ເພື່ອຈະໄດ້ນາງ ຣາເຊນ ລູກສາວຫຼ້າຂອງທ່ານ". ໑໙ລາ
ບານ ໄດ້ກ່າວວ່າ "ທີ່ເຮົາຈະຍົກນາງໃຫ້ເຈົ້ານັ້ນກໍດີກວ່າທີ່ຈະຍົກ
ໃຫ້ຄົນອື່ນ ເຈົ້າຈົ່ງຢູ່ນຳເຮົາເຖີດ". ໒໐ຢາໂຄບ ໄດ້ບົວລະບັດຢູ່ເຈັດປີ
ສຳລັບນາງ ຣາເຊນ ແລະເຈັດປີນັ້ນ ຢາໂຄບ ໄດ້ເຫັນເປັນເໝືອນດັ່ງ
ໜ້ອຍວັນ ຍ້ອນຄວາມຮັກທີ່ທ່ານໄດ້ມີຕໍ່ນາງ.

໒໑ແລ້ວ ຢາໂຄບ ໄດ້ກ່າວແກ່ ລາບານ ວ່າ "ເວລາທີ່ກຳນົດໄວ້ກໍ
ຄົບຖ້ວນແລ້ວ, ຂໍໂຜດຍົກເມຍໃຫ້ຂ້ານ້ອຍເທີ້ນ ເພື່ອຂ້ານ້ອຍຈະ
ໄດ້ເຂົ້າໄປຫານາງ". ໒໒ແລ້ວ ລາບານ ໄດ້ເຊີນເພື່ອນບ້ານທັງປວງ
ມາໂຮມກັນແລະຈັດງານກິນລ້ຽງ. ໒໓ແລະຢູ່ມາເມື່ອເຖິງເວລາຄ່ຳ
ລາບານ ໄດ້ເອົາລູກສາວຊື່ນາງ ເລອາ ຍົກໃຫ້ແກ່ ຢາໂຄບ ແລະ
ຢາໂຄບ ໄດ້ເຂົ້າໄປຫານາງ. ໒໔ແລ້ວ ລາບານ ໄດ້ເອົາສາວໃຊ້
ຜູ້ໜຶ່ງຊື່ ຊິລະປາ ໃຫ້ເປັນສາວໃຊ້ຂອງນາງ ເລອາ ລູກຂອງຕົນ

໒໕ແລະຕໍ່ມາເມື່ອຮຸ່ງເຊົ້າແລ້ວ ເບິ່ງແມ ແມ່ນນາງ ເລອາ, ຢາໂຄບໄດ້
ກ່າວແກ່ ລາບານວ່າ "ທ່ານໄດ້ກະທຳສິ່ງໃດແກ່ຂ້ານ້ອຍ? ເບິ່ງແມ
ຂ້ານ້ອຍໄດ້ບົວລະບັດທ່ານເພື່ອຈະໄດ້ນາງ ຣາເຊນ ບໍ່ແມ່ນຫຼື?
ດ້ວຍເຫດໃດທ່ານໄດ້ຫຼອກລວງຂ້ານ້ອຍ?" ໒໖ລາບານ ໄດ້ຕອບວ່າ
"ໃນເມືອງເຮົານີ້ບໍ່ເຄີຍຍົກໃຫ້ນ້ອງສາວເອົາຜົວກ່ອນເອື້ອຍກົກ. ໒໗ຂໍ
ໃຫ້ຄົບເຈັດວັນຂອງນາງຜູ້ນີ້ແລ້ວ ແລະເຮົາຈະຍົກນາງຜູ້ນັ້ນໃຫ້ເປັນ
ເມຍເຈົ້າເໝືອນກັນ ຊຶ່ງເຈົ້າຈະຕ້ອງບົວລະບັດເຮົາສຳລັບນາງຜູ້ນີ້
ອີກເຈັດປີຕື່ມ. ໒໘ແລ້ວ ຢາໂຄບ ໄດ້ກະທຳຢ່າງນັ້ນ ແລະໄດ້ຄົບ
ເຈັດວັນນາງຜູ້ນີ້ ແລະ ລາບານ ໄດ້ຍົກນາງ ຣາເຊນ ລູກສາວຫຼ້າໃຫ້
ເປັນເມຍຂອງ ຢາໂຄບ ດ້ວຍ. ໒໙ລາບານ ໄດ້ເອົາສາວໃຊ້ຄົນໜຶ່ງຊື່
ບິນຮາໃຫ້ເປັນສາວໃຊ້ຂອງນາງຣາເຊນລູກສາວຂອງຕົນ. ໓໐ຢາໂຄບ
ໄດ້ເຂົ້າໄປຫານາງ ຣາເຊນ ດ້ວຍແລະໄດ້ຮັກນາງ ຣາເຊນ ຫຼາຍກວ່າ
ນາງ ເລອາ, ຢາໂຄບ ໄດ້ຢູ່ບົວລະບັດ ລາບານ ອີກເຈັດປີຕື່ມ.

໓໑ພຣະເຢໂຮວາໄດ້ເຫັນວ່ານາງ ເລອາ ເປັນທີ່ກຽດຊັງແລ້ວ ພຣະອົງ
ໄດ້ໃຫ້ນາງ ເລອາ ໄດ້ຕັ້ງທ້ອງ, ແຕ່ວ່ານາງ ຣາເຊນ ເປັນໝັນ. ໓໒ນາງ
ເລອາ ໄດ້ຕັ້ງທ້ອງ ໄດ້ປະສູດລູກຊາຍຄົນໜຶ່ງ ແລະໄດ້ເອີ້ນຊື່ລູກນັ້ນ
ວ່າຣູເບນ ເຫດວ່ານາງໄດ້ກ່າວວ່າ "ເພາະເຫດພຣະເຢໂຮວາໄດ້ເຫັນ
ຄວາມທຸກໃຈຂອງຂ້ອຍ ບັດນີ້ຜົວຈະຮັກຂ້ອຍ". ໓໓ນາງ ເລອາ ໄດ້
ຕັ້ງທ້ອງອີກ ໄດ້ປະສູດລູກຊາຍອີກຄົນໜຶ່ງ ແລະໄດ້ກ່າວວ່າ "ເພາະ
ເຫດພຣະເຢໂຮວາໄດ້ຍິນວ່າ ຂ້ອຍເປັນທີ່ກຽດຊັງ ພຣະອົງໄດ້
ປະທານຜູ້ນີ້ໃຫ້ຂ້ອຍອີກ" ແລະນາງໄດ້ເອີ້ນຊື່ຊາຍນັ້ນວ່າ ຊີເມໂອນ.
໓໔ນາງໄດ້ຕັ້ງທ້ອງອີກ ໄດ້ປະສູດລູກຊາຍອີກ ແລະໄດ້ກ່າວວ່າ "ເບິ່ງ
ເຖີດ ຄັ້ງນີ້ ຜົວຈະຕິດພັນກັບຂ້ອຍ, ເພາະຂ້ອຍໄດ້ປະສູດລູກຊາຍ

ສາມຄົນໃຫ້ລາວ" ເຫດສັນນີ້ຈຶ່ງໄດ້ເອີ້ນຊື່ເດັກຊາຍນັ້ນວ່າ ເລວີ.
໓໕ນາງໄດ້ຕັ້ງທ້ອງອີກ ໄດ້ປະສູດລູກຊາຍອີກ ແລະໄດ້ກ່າວວ່າ "ຄັ້ງນີ້
ຂ້ອຍຈະສັນລະເສີນພຣະເຢໂຮວາ" ເຫດສັນນີ້ ນາງໄດ້ເອີ້ນຊື່ເດັກ
ຊາຍນັ້ນວ່າ ຢູດາ ແລະນາງໄດ້ເຊົາປະສູດລູກ.

*27:17 ຄຳວ່າ "ຕາອ່ອນ" ອາດຈະໝາຍຄວາມວ່າ "ສາຍຕາສັ້ນ" ຫຼື "ຕາແດງ" ຫຼື "ມີຕາງາມ"*

# ບົດທີ 30

໑ນາງ ຣາເຊນ ໄດ້ເຫັນວ່າຕົນບໍ່ມີລູກໃຫ້ ຢາໂຄບ, ນາງ ຣາເຊນ
ໄດ້ເກີດຄວາມອິດສາຕໍ່ເອື້ອຍຂອງຕົນ, ແລະໄດ້ກ່າວແກ່ ຢາໂຄບ
ວ່າ "ຂໍໃຫ້ລູກແກ່ຂ້ອຍແດ່ ຫຼືບໍ່ດັ່ງນັ້ນຂ້ອຍຈະຕາຍ". ໒ແລ້ວຄວາມ
ໃຈຮ້າຍຂອງ ຢາໂຄບ ໄດ້ລຸກພຸ່ງຂຶ້ນຕໍ່ສູ້ນາງ ຣາເຊນ ແລະທ່ານໄດ້
ກ່າວວ່າ "ເຮົາເປັນເໝືອນພຣະເຈົ້າ ຜູ້ບໍ່ໃຫ້ເຈົ້າມີລູກບັງເກີດຈາກ
ທ້ອງເຈົ້າຫຼື?" ໓ນາງໄດ້ກ່າວວ່າ "ບິນຮາ ສາວໃຊ້ຂອງຂ້ອຍກໍຢູ່ນີ້
ທ່ານຈິ່ງເຂົ້າໄປຫາລາວ ແລະລາວຈະປະສູດລູກໄວ້ທີ່ຕັກຂອງຂ້ອຍ
ແລະຂ້ອຍຈະມີລູກດ້ວຍຍິງນັ້ນ". ໔ນາງ ຣາເຊນ ໄດ້ເອົາ ນາງ ບິນຮາ
ສາວໃຊ້ຂອງຕົນ ຍົກໃຫ້ເປັນເມຍຂອງ ຢາໂຄບ ແລະທ່ານໄດ້ເຂົ້າ
ຫາຍິງນັ້ນ. ໕ນາງ ບິນຮາ ໄດ້ຕັ້ງທ້ອງ ແລະໄດ້ປະສູດລູກຊາຍໃຫ້ ຢາ
ໂຄບ. ໖ນາງ ຣາເຊນ ໄດ້ກ່າວວ່າ "ພຣະເຈົ້າໄດ້ຊົງຕັດສິນເລື່ອງຂ້ອຍ,
ຊົງໄດ້ຍິນສຽງປາກຂອງຂ້ອຍ ແລະໄດ້ປະທານລູກຊາຍໃຫ້ຂ້ອຍ"
ເຫດສັນນີ້ນາງໄດ້ເອີ້ນລູກຊາຍນັ້ນວ່າ ດານ. ໗ນາງ ບິນຮາ ສາວໃຊ້

ຂອງນາງ ຣາເຊນ ໄດ້ຕັ້ງທ້ອງ ແລະໄດ້ປະສູດລູກຊາຍໃຫ້ ຢາໂຄບ
ອີກຄົນໜຶ່ງ. ໘ນາງ ຣາເຊນ ໄດ້ກ່າວວ່າ "ດ້ວຍການປ້ຳສູ້ອັນແສນ
ລຳບາກ ຂ້ອຍໄດ້ຕໍ່ສູ້ກັບເອື້ອຍຂອງຂ້ອຍ ແລະຂ້ອຍໄດ້ຊະນະລາວ
ແລ້ວ" ແລະນາງໄດ້ເອີ້ນຊື່ລູກຊາຍນັ້ນວ່າ ເນບທາລີ.

໙ແລະນາງເລອາໄດ້ເຫັນວ່າຕົນເຊົາມີລູກແລ້ວລາວໄດ້ເອົາສິລະປາ
ສາວໃຊ້ຂອງຕົນຍົກໃຫ້ເປັນເມຍ ຢາໂຄບ. ໑໐ນາງ ສິລະປາ ສາວໃຊ້
ຂອງນາງ ເລອາ ໄດ້ປະສູດລູກຊາຍໃຫ້ທ່ານຄົນໜຶ່ງ. ໑໑ນາງ ເລອາ
ໄດ້ກ່າວວ່າ "ກອງທະຫານກຳລັງມາແລ້ວ" ແລະນາງໄດ້ເອີ້ນຊື່ລູກ
ຊາຍນັ້ນວ່າ ກາດ. ໑໒ສິລະປາ ສາວໃຊ້ຂອງນາງ ເລອາ ໄດ້ປະສູດລູກ
ຊາຍຄົນໜຶ່ງອີກໃຫ້ ຢາໂຄບ. ໑໓ນາງ ເລອາ ໄດ້ກ່າວວ່າ "ຂ້ອຍມີ
ຄວາມສຸກຫຼາຍ ເຫດວ່າລູກຍິງທັງຫຼາຍຈະເອີ້ນຂ້ອຍວ່າໄດ້ຮັບພຣະ
ພອນ" ແລະນາງໄດ້ເອີ້ນຊື່ຊາຍນັ້ນວ່າ ອາເຊ.

໑໔ໃນລະດູກ່ຽວເຂົ້າ ຣູເບນ ໄດ້ອອກໄປນາ ແລະໄດ້ພົບໝາກຕົ້ນ
ດູດາອິມ ແລ້ວໄດ້ເອົາມາໃຫ້ນາງ ເລອາ ແມ່ຂອງຕົນ, ນາງ ຣາເຊນ
ໄດ້ກ່າວແກ່ນາງ ເລອາ ວ່າ "ຂໍໝາກດູດາອິມຂອງລູກຊາຍເຈົ້າໃຫ້
ເຮົາແດ່ເທີ້ນ". ໑໕ນາງ ເລອາ ໄດ້ຕອບລາວວ່າ "ທີ່ເຈົ້າໄດ້ເອົາຜົວ
ຂອງຂ້ອຍໄປນັ້ນຍັງບໍ່ພໍຫຼື? ບັດນີ້ຈະເອົາໝາກດູດາອິມຂອງລູກ
ຊາຍຂອງຂ້ອຍດ້ວຍຫຼື?" ນາງ ຣາເຊນ ໄດ້ຕອບວ່າ "ຖ້າເຈົ້າເອົາ
ໝາກດູດາອິມຂອງລູກຊາຍເຈົ້າໃຫ້ແກ່ຂ້ອຍ ຜົວຈະນອນນຳເຈົ້າໃນ
ຄືນນີ້". ໑໖ຢາໂຄບໄດ້ກັບມາຈາກນາໃນເວລາຄ່ຳ,ນາງເລອາໄດ້ອອກ
ໄປຕ້ອນຮັບທ່ານ ແລະໄດ້ບອກວ່າ "ທ່ານຈະຕ້ອງເຂົ້າມາຫາຂ້ອຍ

ເພາະຂ້ອຍໄດ້ຈ້າງທ່ານແລ້ວ ດ້ວຍໝາກດູດາອີມຂອງລູກຊາຍ
ຂ້ອຍ" ໃນຄືນວັນນັ້ນ ຢາໂຄບ ໄດ້ເຂົ້ານອນຢູ່ນຳລາວ. ໑໗ພຣະເຈົ້າ
ໄດ້ຟັງນາງ ເລອາ, ນາງໄດ້ຕັ້ງທ້ອງ ແລະໄດ້ປະສູດລູກຊາຍຄົນທີຫ້າ
ໃຫ້ແກ່ ຢາໂຄບ. ໑໘ນາງ ເລອາ ໄດ້ກ່າວວ່າ "ພຣະເຈົ້າໄດ້ປະທານຄ່າ
ຈ້າງໃຫ້ແກ່ຂ້ອຍ ເພາະຂ້ອຍໄດ້ຍົກສາວໃຊ້ຂອງຂ້ອຍໃຫ້ແກ່ຜົວ"
ນາງໄດ້ເອີ້ນຊື່ຊາຍນັ້ນວ່າ ອິດຊາຄາ. ໑໙ນາງ ເລອາ ໄດ້ຕັ້ງທ້ອງອີກ
ແລະໄດ້ປະສູດລູກຊາຍຄົນທີຫົກໃຫ້ ຢາໂຄບ. ໒໐ນາງ ເລອາ ໄດ້
ກ່າວວ່າ "ພຣະເຈົ້າໄດ້ໃຫ້ຂ້ອຍມີຂອງປະທານອັນດີ ບັດນີ້ຜົວຂອງ
ຂ້ອຍຈະຢູ່ນຳຂ້ອຍ ເພາະຂ້ອຍໄດ້ປະສູດລູກຊາຍໃຫ້ທ່ານຫົກຄົນ".
ແລະນາງໄດ້ເອີ້ນຊື່ຊາຍນັ້ນວ່າ ຊາບູໂລນ. ໒໑ພາຍຫຼັງນັ້ນນາງໄດ້
ປະສູດລູກຍິງຜູ້ໜຶ່ງ ແລະໄດ້ເອີ້ນຊື່ຍິງນັ້ນວ່າ ດີນາ.

໒໒ພຣະເຈົ້າໄດ້ລະນຶກເຖິງນາງ ຣາເຊນ ພຣະເຈົ້າໄດ້ຟັງນາງ ແລະ
ໄດ້ຊົງເປີດທ້ອງຂອງນາງ. ໒໓ນາງ ຣາເຊນ ໄດ້ຕັ້ງທ້ອງ ໄດ້ປະສູດລູກ
ຊາຍຄົນໜຶ່ງ ແລະໄດ້ກ່າວວ່າ "ພຣະເຈົ້າໄດ້ຍົກຄວາມລະອາຍຂອງ
ຂ້ອຍໄປເສຍ".໒໔ນາງໄດ້ເອີ້ນຊື່ລູກຊາຍນັ້ນວ່າ ໂຢເຊບ ແລະກ່າວວ່າ
"ຂໍພຣະເຢໂຮວາໃຫ້ຂ້ານ້ອຍມີລູກຊາຍຕື່ມອີກຄົນໜຶ່ງເທີ້ນ"

໒໕ແລະຢູ່ມາເມື່ອນາງ ຣາເຊນ ໄດ້ປະສູດ ໂຢເຊບ ແລ້ວ ຢາໂຄບ
ໄດ້ກ່າວແກ່ລາບານວ່າ "ຂໍທ່ານໄດ້ອະນຸຍາດໃຫ້ຂ້ານ້ອຍລາເມືອ
ບ້ານຂອງຂ້ານ້ອຍ ແລະປະເທດຂອງຂ້ານ້ອຍ. ໒໖ເມຍທັງຫຼາຍທີ່ຂ້າ
ນ້ອຍໄດ້ຍ້ອນການບົວລະບັດທ່ານກັບລູກທັງຫຼາຍນັ້ນ ຂໍໃຫ້ໄປດ້ວຍ
ແລະຂ້ານ້ອຍຈະໄປ ເພາະວ່າການບົວລະບັດທ່ານທີ່ຂ້ານ້ອຍໄດ້
ເຮັດນັ້ນ ທ່ານກໍຮູ້ວ່າເປັນຢ່າງໃດແລ້ວ". ໒໗ລາບານ ໄດ້ຕອບລາວວ່າ

“ລຸງຂໍຮ້ອງ, ຖ້າລຸງຫາກຍັງເປັນທີ່ພໍໃຈຂອງເຈົ້າ ເພາະລຸງໄດ້ຮຽນຮູ້
ດ້ວຍປະສົບການແລ້ວວ່າ ພຣະເຢໂຮວາໄດ້ອວຍພອນລຸງຍ້ອນ
ເຈົ້າ”. ໒໘ລາບານ ໄດ້ກ່າວວ່າ “ເຈົ້າຈະເອົາຄ່າຈ້າງເທົ່າໃດ? ໃຫ້ບອກ
ມາແລ້ວ ລຸງຈະໃຫ້”. ໒໙ຢາໂຄບ ໄດ້ຕອບທ່ານວ່າ “ທ່ານກໍຮູ້ແລ້ວວ່າ
ຂ້ານ້ອຍໄດ້ບົວລະບັດທ່ານຢ່າງໃດ ແລະຝູງສັດຂອງທ່ານໄດ້ບັງເກີດ
ຢ່າງໃດຍ້ອນຂ້ານ້ອຍ. ໓໐ເຫດວ່າກ່ອນຂ້ານ້ອຍໄດ້ມານັ້ນທ່ານມີແຕ່
ໜ້ອຍດຽວ ບັດນີ້ທ່ານມີຝູງສັດທະວີຂຶ້ນຫຼວງຫຼາຍ ແລະພຣະເຢ
ໂຮວາໄດ້ອວຍພອນໃຫ້ທ່ານຕັ້ງແຕ່ຂ້ານ້ອຍມາຢູ່ນຳ ແລະບັດນີ້ເມື່ອ
ໃດຂ້ານ້ອຍຈະເຮັດການ ເພື່ອຈັດຫາລ້ຽງຄອບຄົວຂອງຂ້ານ້ອຍ
ໄດ້?” ໓໑ລາບານ ໄດ້ກ່າວວ່າ “ເຮົາຈະເອົາສິ່ງໃດໃຫ້ແກ່ເຈົ້າ?”
ຢາໂຄບໄດ້ຕອບວ່າ “ທ່ານບໍ່ຕ້ອງເອົາສິ່ງໃດໃຫ້ຂ້ານ້ອຍ ຖ້າທ່ານ
ຈະເຮັດສິ່ງນີ້ແກ່ຂ້ານ້ອຍແລ້ວ ຂ້ານ້ອຍຈະຢູ່ລ້ຽງຮັກສາຝູງສັດຂອງ
ທ່ານຕໍ່ໄປອີກ. ໓໒ວັນນີ້ຂ້ານ້ອຍຈະໄປທີ່ຝູງສັດທັງຫຼາຍຂອງທ່ານ
ແລະຈະເລືອກຄັດເອົາທຸກໂຕທີ່ມີສີລາຍ, ສີດາວ ແລະສີດຳໃນຝູງ
ແກະ ແລະທຸກໂຕທີ່ມີສີລາຍ, ສີດ່າງ ໃນຝູງແບ້ ສັດທັງຫຼາຍນີ້ຈະເອົາ
ເປັນຄ່າຈ້າງຂອງຂ້ານ້ອຍ. ໓໓ດັ່ງນີ້ຄວາມຊອບທຳຂອງຂ້ານ້ອຍຈະ
ເປັນຄຳຕອບຂອງຂ້ານ້ອຍ ເມື່ອພາຍໜ້າມາ ຄືເວລາທ່ານຈະມາ
ກວດເບິ່ງຄ່າຈ້າງຂອງຂ້ານ້ອຍໃນຝູງແບ້ຂອງຂ້ານ້ອຍທຸກໂຕທີ່ບໍ່ມີ
ສີລາຍ, ບໍ່ມີສີດ່າງ ແລະໃນຝູງແກະທຸກໂຕທີ່ບໍ່ມີສີດຳ ຈະຖືວ່າເປັນ
ຂອງລັກເອົາມາ”. ໓໔ລາບານ ໄດ້ຕອບວ່າ “ຖ້າດັ່ງນັ້ນ ຈົ່ງເຮັດຕາມ
ຖ້ອຍຄຳຂອງເຈົ້າເທີ້ນ”. ໓໕ແລະໃນວັນນັ້ນທ່ານຢາໂຄບໄດ້ຄັດ
ເລືອກເອົາແບ້ເຖິກທີ່ມີສີລາຍ, ສີດາວແລະແບ້ໂຕແມ່ທີ່ມີສີດ່າງ, ສີ
ດາວ ທຸກໂຕທີ່ມີສີຂາວໜ້ອຍໜຶ່ງ ແລະລູກແກະທີ່ສີດຳໃນຝູງແກະ
ນັ້ນອອກ ແລະມອບໄວ້ໃນມືຂອງລູກຊາຍຂອງຕົນ. ໓໖ແລະທ່ານ

ໄດ້ແຍກສັດອອກໄປທັງໝົດຫ່າງໄກຈາກ ຢາໂຄບ ເປັນໄລຍະການ
ເດີນທາງປະມານສາມວັນ ແລະສັດທີ່ເຫຼືອນັ້ນທີ່ເປັນຂອງ ລາບານ
ຢາໂຄບກໍໄດ້ລ້ຽງໄວ້.[໓໗]ຢາໂຄບໄດ້ເອົາງ່າໄມ້ຂຽວຈາກຕົ້ນໂພ, ຈາກ
ຕົ້ນໝາກບົກ ແລະຈາກຕົ້ນປະລາຕານ ລອກເປືອກໃຫ້ເປັນແຊກ
ເປັນລາຍ. [໓໘]ໄມ້ທີ່ລອກເປືອກເປັນລາຍນັ້ນທ່ານໄດ້ເອົາວາງໄວ້ທີ່
ຮາງນໍ້າຕໍ່ໜ້າຝູງສັດ ໃນບ່ອນຝູງສັດມາກິນນໍ້າ ແລະສັດໄດ້ປະສົມ
ພັນແລະຖືພາເມື່ອມາກິນນໍ້າ. [໓໙]ສັດປະສົມພັນແລະຖືພາຕໍ່ໜ້າງ່າ
ໄມ້ນັ້ນ ແລະໄດ້ອອກລູກເປັນສີລາຍ, ສີດ່າງ ແລະສີເປັນຈຸດໆ. [໔໐]ຢາ
ໂຄບ ໄດ້ແຍກລູກແກະອອກຈາກຝູງແກະ ແລະໃຫ້ຝູງນັ້ນຫຼຽວໜ້າ
ເບິ່ງສັດທີ່ມີສີດ່າງ, ສີດໍາໃນຝູງຂອງລາບານນັ້ນ ແລະຝູງສັດຂອງຕົນ
ທ່ານໄດ້ໃຫ້ຢູ່ຕ່າງຫາກບໍ່ໃຫ້ຢູ່ກັບຝູງສັດຂອງ ລາບານ. [໔໑]ແລະຢູ່ມາ
ເມື່ອສັດທັງຫຼາຍທີ່ອ້ວນພີມີແຮງປະສົມພັນ ຢາໂຄບ ໄດ້ເອົາງ່າໄມ້
ທີ່ລອກເປືອກນັ້ນໄປວາງໄວ້ໃນຮາງນໍ້າໃຫ້ສັດເຫັນ ຈະໄດ້ປະສົມ
ພັນຕໍ່ໜ້າງ່າໄມ້ນັ້ນ. [໔໒]ແຕ່ວ່າເມື່ອສັດທັງຫຼາຍທີ່ອ່ອນແອປະສົມພັນ
ທ່ານບໍ່ໄດ້ເອົາງ່າໄມ້ນັ້ນມາວາງໄວ້ຕໍ່ໜ້າ ດັ່ງນັ້ນສັດທັງປວງທີ່ອ່ອນ
ແອຈຶ່ງເປັນຂອງ ລາບານ ແລະສັດທີ່ແຂງແຮງກໍເປັນຂອງ ຢາໂຄບ.
[໔໓]ຢາໂຄບໄດ້ຈະເລີນຮັ່ງມີຂຶ້ນຢ່າງຫຼວງຫຼາຍ, ມີຝູງສັດ, ມີພວກຂ້າ
ໃຊ້ຍິງຊາຍ, ມີຝູງອູດ ແລະຝູງລາຈໍານວນຫຼວງຫຼາຍ.

## ບົດທີ 31

[໑]ຢາໂຄບໄດ້ຍິນຄໍາເວົ້າຈາກພວກລູກຊາຍຂອງລາບານກ່າວວ່າ“ຢາ
ໂຄບໄດ້ເອົາສິ່ງຂອງທັງປວງຂອງພໍ່ເຮົາໄປ ລາວມີຊັບສົມບັດຫຼວງ
ຫຼາຍຍ້ອນເອົາຊັບສົມບັດຂອງພໍ່ເຮົາໄປ”. [໒]ແລະ ຢາໂຄບ ໄດ້ສັງເກດ

ເບິ່ງໜ້າຂອງລາບານແລະເບິ່ງແມບໍ່ຄືແຕ່ກ່ອນທີ່ມີຕໍ່ຢາໂຄບ. ໕ແລະ
ພຣະເຢໂຮວາໄດ້ກ່າວແກ່ ຢາໂຄບ ວ່າ "ເຈົ້າຈົ່ງກັບໄປທີ່ແຜ່ນດິນ
ປູ່ຍ່າຕາຍາຍແລະຍາດຕິພີ່ນ້ອງຂອງເຈົ້າເທີ້ນ ເຮົາຈະສະຖິດຢູ່ກັບ
ເຈົ້າ". ໔ຢາໂຄບ ໄດ້ໃຊ້ຄົນໄປເອີ້ນນາງ ຣາເຊນ ກັບນາງ ເລອາ
ມາຫາຕົນໃນທົ່ງລ້ຽງຝູງສັດຂອງສັດ, ໕ແລະໄດ້ບອກພວກເຂົາວ່າ
"ເຮົາໄດ້ເຫັນສີໜ້າພໍ່ຂອງພວກເຈົ້າທີ່ມີຕໍ່ເຮົາບໍ່ຄືແຕ່ກ່ອນ ແຕ່ວ່າ
ພຣະເຈົ້າຂອງພໍ່ເຮົາໄດ້ສະຖິດຢູ່ນຳເຮົາ. ໖ເຈົ້າທັງສອງຮູ້ແລ້ວວ່າເຮົາ
ໄດ້ບົວລະບັດພໍ່ຂອງພວກເຈົ້າດ້ວຍໝົດເຫື່ອແຮງຂອງເຮົາແລ້ວ.
໗ແລະພໍ່ຂອງພວກເຈົ້າໄດ້ຫຼອກລວງເຮົາ ແລະໄດ້ປ່ຽນຄ່າຈ້າງຂອງ
ເຮົາ10ເທື່ອແລ້ວ; ແຕ່ວ່າພຣະເຈົ້າບໍ່ໄດ້ອະນຸຍາດໃຫ້ລາວໄດ້ທຳອັນ
ຕະລາຍແກ່ເຮົາ. ໘ເມື່ອພໍ່ໄດ້ເວົ້າຢ່າງນີ້ວ່າ 'ສັດທີ່ສີດ່າງຈະເປັນຄ່າ
ຈ້າງເຈົ້າ' ໃນເວລານັ້ນສັດທັງປວງມີລູກເປັນສີດ່າງ, ແລະເມື່ອພໍ່ໄດ້
ເວົ້າຢ່າງນີ້ວ່າ 'ສັດທີ່ສີລາຍຈະເປັນຄ່າຈ້າງເຈົ້າ' ໃນວັນນັ້ນສັດທັງ
ປວງມີລູກເປັນສີລາຍ. ໙ພຣະເຈົ້າໄດ້ຍຶກເອົາຝູງສັດຂອງພໍ່ພວກເຈົ້າ
ປະທານໃຫ້ແກ່ເຮົາ. ໑໐ແລະຢູ່ມາເມື່ອຝູງສັດນັ້ນປະສົມພັນເຮົາໄດ້
ເງີຍໜ້າເບິ່ງ ແລະເຫັນໃນຄວາມຝັນ ແລະເບິ່ງແມ ແກະຜູ້ທີ່ປະສົມ
ພັນກັບແກະແມ່ນັ້ນເປັນສີລາຍ ເປັນສີດ່າງ, ເປັນສີດາວ. ໑໑ແລະເທ
ວະດາຂອງພຣະເຈົ້າໄດ້ກ່າວກັບເຮົາໃນຄວາມຝັນວ່າ 'ຢາໂຄບເອີຍ'
ເຮົາໄດ້ຕອບວ່າ 'ຂ້ານ້ອຍຢູ່ທີ່ນີ້ ເຈົ້າຂ້າ'. ໑໒ພຣະອົງໄດ້ບອກວ່າ
'ເຈົ້າຈົ່ງເງີຍໜ້າຂຶ້ນ ແລະເບິ່ງສັດໂຕຜູ້ທັງປວງທີ່ປະສົມພັນກັບໂຕ
ແມ່ ເປັນສີລາຍ, ເປັນສີດ່າງ, ເປັນສີດາວ ເຫດວ່າເຮົາໄດ້ເຫັນການ
ທັງປວງທີ່ ລາບານໄດ້ເຮັດຕໍ່ເຈົ້າ. ໑໓ເຮົາແມ່ນພຣະເຈົ້າແຫ່ງ ເບດ
ເອນ ບ່ອນທີ່ເຈົ້າໄດ້ເອົານ້ຳມັນຖອກ*ໃສ່ຫີນສຳຄັນໄວ້ ທີ່ເຈົ້າໄດ້
ຕັ້ງຄຳປະຕິຍານສາບານໄວ້ຕໍ່ເຮົານັ້ນ, ບັດນີ້ເຈົ້າຈົ່ງລຸກຂຶ້ນອອກ

ໄປຈາກປະເທດນີ້ກັບໄປຍັງແຜນດິນແຫ່ງຍາດພີ່ນ້ອງຂອງເຈົ້າ'."
໑໔ນາງ ຣາເຊນ ແລະນາງເລອາ ໄດ້ຕອບແລະໄດ້ກ່າວແກ່ທ່ານວ່າ
"ພວກເຮົາຍັງມີສ່ວນມູນມໍລະດົກໃນເຮືອນພໍ່ຂອງເຮົາອີກຫຼື?" ໑໕ພໍ່
ໄດ້ຖືພວກເຮົາເປັນຄົນແປກໜ້າແລ້ວບໍ່ແມ່ນຫຼື? ເຫດວ່າລາວໄດ້
ຂາຍພວກເຮົາ ແລະໄດ້ກືນກິນເງິນພວກເຮົາແລ້ວ. ໑໖ເຫດວ່າສິ່ງຂອງ
ທັງປວງທີ່ພຣະເຈົ້າໄດ້ຖອດເອົາອອກຈາກພໍ່ພວກເຮົານັ້ນ ກໍເປັນ
ຂອງພວກເຮົາ ແລະຂອງລູກທັງຫຼາຍຂອງພວກເຮົາ ແລະບັດນີ້ພຣະ
ເຈົ້າໄດ້ບອກສິ່ງໃດແກ່ທ່ານ ຈົ່ງກະທຳຕາມເທີ້ນ".

໑໗ຢາໂຄບ ໄດ້ລຸກຂຶ້ນ ເອົາລູກເມຍທັງຫຼາຍຂຶ້ນຂີ່ອູດໄປ, ໑໘ແລະໄດ້
ເອົາຝູງສັດ ແລະສິ່ງຂອງທັງປວງຂອງຕົນ ທີ່ຕົນໄດ້ໂຮມໄວ້ ຝູງສັດທີ່
ໄດ້ໃນເມືອງ ປາດັນອາຣຳ ເພື່ອຈະໄດ້ໄປຫາ ອີຊາກ ພໍ່ຂອງຕົນໃນ
ປະເທດ ການາອານ. ໑໙ລາບານ ໄດ້ໄປຕັດຂົນຝູງແກະຂອງຕົນ, ນາງ
ຣາເຊນ ໄດ້ລັກເອົາຮູບພະທັງຫຼາຍຂອງພໍ່ໄປເສຍ. ໒໐ຢາໂຄບ ໄດ້
ລັກໜີໄປຈາກ ລາບານ ຊາວ ຊີເຣຍ, ບໍ່ບອກໃຫ້ເພິ່ນຮູ້ວ່າຈະໜີໄປ.
໒໑ຢາໂຄບ ໄດ້ລັກໜີພ້ອມກັບສິ່ງຂອງທັງປວງຂອງຕົນ ໄດ້ເດີນທາງ
ຂ້າມແມ່ນ້ຳ ແລະໄດ້ຕັ້ງໜ້າຈະໄປສູ່ພູເຂົາ ກີເລອາດ. ໒໒ແລະໃນ
ວັນທີ່ສາມ ມີຄົນໄດ້ບອກ ລາບານ ວ່າ "ຢາໂຄບ ໄດ້ລັກໜີໄປແລ້ວ"
໒໓ແລ້ວ ລາບານ ໄດ້ເອົາພວກພີ່ນ້ອງຂອງຕົນໄປນຳຕິດຕາມໄດ້ເຈັດ
ວັນ ແລະທັນ ຢາໂຄບ ທີ່ພູເຂົາ ກີເລອາດ. ໒໔ແລະໃນຄືນວັນນັ້ນ
ພຣະເຈົ້າໄດ້ສະເດັດລົງມາຫາ ລາບານ ຊາວ ຊີເຣຍ ໃນຄວາມຝັນ
ແລະໄດ້ກ່າວແກ່ທ່ານວ່າ "ຈົ່ງລະວັງ, ທ່ານຢ່າເວົ້າດີຫຼືຊົ່ວແກ່ຢາ
ໂຄບ". ໒໕ແລ້ວ ລາບານ ໄດ້ຕາມມາທັນ ຢາໂຄບ, ຢາໂຄບ
ໄດ້ຕັ້ງເຕັນອາໄສຢູ່ທີ່ພູເຂົານັ້ນແລ້ວ ແລະ ລາບານ ກັບພວກພີ່ນ້ອງ
ຂອງຕົນກໍໄດ້ຕັ້ງເຕັນຢູ່ທີ່ພູເຂົາ ກີເລອາດ. ໒໖ລາບານ ໄດ້ຖາມ ຢາ

ໂຄບ ວ່າ "ເຈົ້າໄດ້ເຮັດຫຍັງໄປແລ້ວນີ້ ເຈົ້າໄດ້ລັກໜີໄປຈາກເຮົາ
ໂດຍບໍ່ໄດ້ໃຫ້ເຮົາຮູ້ ແລະໄດ້ເອົາລູກຍິງຂອງເຮົາໄປເໝືອນດັ່ງຊະ
ເລີຍທີ່ຈັບໄດ້ດ້ວຍດາບ. ໒໗ດ້ວຍເຫດໃດເຈົ້າຈຶ່ງໄດ້ປົບໜີມາຢ່າງລັບ
ລີ້ ແລະໄດ້ລັກໜີຈາກເຮົາໂດຍບໍ່ບອກໃຫ້ເຮົາຮູ້ຈັກ? ຖ້າບໍ່ດັ່ງນັ້ນ
ເຮົາຈະໄດ້ສົ່ງເຈົ້າໄປດ້ວຍຄວາມຍິນດີ ດ້ວຍການເຕັ້ນລຳ, ຕີຕະ
ພອນແລະດີດພິນຄູ່. ໒໘ແລະເຈົ້າບໍ່ໄດ້ໃຫ້ເຮົາຈູບລູກຊາຍຍິງທັງຫຼາຍ
ຂອງເຮົາ, ເຈົ້າໄດ້ກະທຳດັ່ງນີ້ເປັນການໂງ່. ໒໙ເຮົາມີອຳນາດໃນມືທີ່
ຈະທຳອັນຕະລາຍແກ່ເຈົ້າໄດ້ ແຕ່ວ່າໃນຄືນວັນນີ້ພຣະເຈົ້າຂອງພໍ່
ເຈົ້າໄດ້ກ່າວແກ່ເຮົາວ່າ 'ຈົ່ງລະວັງ, ທ່ານຢ່າເວົ້າດີຫຼືຊົ່ວແກ່ຢາໂຄບ'.
໓໐ແລະບັດນີ້ເຈົ້າຕ້ອງການໄປເພາະຄິດຮອດເຮືອນພໍ່ຂອງເຈົ້າຫຼາຍ
ດ້ວຍເຫດໃດເຈົ້າໄດ້ລັກຮູບພະທັງຫຼາຍຂອງເຮົາໄປດ້ວຍ?" ໓໑ຢາ
ໂຄບໄດ້ຕອບແລະກ່າວແກ່ ລາບານ ວ່າ "ເພາະຂ້ານ້ອຍຄິດຢ້ານວ່າ
ທ່ານຈະຍຶດເອົາລູກສາວຂອງທ່ານດ້ວຍກຳລັງຄືນຈາກຂ້ານ້ອຍ
ເສຍ. ໓໒ສ່ວນຮູບພະທັງຫຼາຍຂອງທ່ານນັ້ນ ຖ້າພົບຢູ່ນຳຄົນໃດກໍຕາມ
ຢ່າໃຫ້ຄົນນັ້ນມີຊີວິດ, ຕໍ່ໜ້າຍາດຕິພີ່ນ້ອງຂອງເຮົາທ່ານຈົ່ງກວດເບິ່ງ
ສິ່ງຂອງທີ່ເປັນຂອງທ່ານຢູ່ທີ່ນີ້ແລະຈົ່ງເອົາໄປເທີ້ນ". ເພາະ ຢາໂຄບ
ບໍ່ໄດ້ຮູ້ຈັກວ່ານາງ ຣາເຊນ ໄດ້ລັກເອົາຮູບພະທັງຫຼາຍນັ້ນ. ໓໓ແລ້ວ
ລາບານ ໄດ້ເຂົ້າໄປໃນເຕັນອາໄສຂອງ ຢາໂຄບ, ໃນເຕັນນາງ ເລ
ອາ ແລະໄດ້ເຂົ້າໄປໃນເຕັນນາງ ຣາເຊນ. ໓໔ອັນໜຶ່ງນາງ ຣາເຊນ ໄດ້
ເອົາຮູບພະນັ້ນເຊື່ອງໄວ້ໃນຕ່າງອູດ ແລະໄດ້ນັ່ງທັບຢູ່ເທິງ. ລາບານ
ໄດ້ຊອກຄົ້ນຈົນທົ່ວເຕັນ ແຕ່ບໍ່ໄດ້ເຫັນສິ່ງໃດ. ໓໕ແລ້ວນາງ ຣາເຊນ
ໄດ້ກ່າວແກ່ພໍ່ວ່າ "ຂໍເຈົ້ານາຍຂອງຂ້ານ້ອຍ ຢ່າໄດ້ຮ້າຍທີ່ຂ້ານ້ອຍ
ລຸກຂຶ້ນຕ້ອນຮັບທ່ານບໍ່ໄດ້ ເຫດວ່າຂ້ານ້ອຍກຳລັງເປັນປະຈຳເດືອນ
ຢູ່" ແລະທ່ານໄດ້ຊອກຫາ ແຕ່ວ່າບໍ່ໄດ້ພົບຮູບພະທັງຫຼາຍນັ້ນ.

໓໖ຢາໂຄບ ໃຈຮ້າຍແລະໄດ້ຖຽງກັບ ລາບານ, ຢາໂຄບ ໄດ້ກ່າວຕອບ
ກັບ ລາບານ ວ່າ "ຂ້ານ້ອຍໄດ້ເຮັດຜິດອັນໃດ ໄດ້ບາບປະການໃດ
ທ່ານຈິ່ງໄດ້ຕິດຕາມຂ້ານ້ອຍມາຢ່າງຮ້ອນຮົນດັ່ງນີ້? ໓໗ທ່ານໄດ້ຈົກ
ຄົ້ນເບິ່ງສິ່ງຂອງຂ້ານ້ອຍທັງໝົດແລ້ວ ທ່ານໄດ້ພົບສິ່ງໃດແດ່ທີ່ເປັນ
ຂອງມາຈາກເຮືອນທ່ານ ຈົ່ງເອົາສິ່ງຂອງນັ້ນມາວາງໄວ້ທີ່ນີ້ຕໍ່ໜ້າພີ່
ນ້ອງຂອງຂ້ານ້ອຍ ແລະພີ່ນ້ອງຂອງທ່ານ ແລະໃຫ້ເຂົາຕັດສິນລະ
ຫວ່າງເຮົາທັງສອງເທີ້ນ. ໓໘ຂ້ານ້ອຍໄດ້ຢູ່ກັບທ່ານ 20 ປີແລ້ວ, ແກະ
ແລະແບ້ໂຕແມ່ຂອງທ່ານບໍ່ໄດ້ລຸລູກ ແລະແກະຜູ້ໃນຝູງຂອງທ່ານຂ້າ
ນ້ອຍກໍບໍ່ໄດ້ກິນ. ໓໙ສັດຂອງທ່ານທີ່ສັດຮ້າຍໄດ້ກັດກິນແລ້ວ ຂ້ານ້ອຍ
ກໍບໍ່ໄດ້ເອົາມາໃຫ້ທ່ານ ຂ້ານ້ອຍໄດ້ໃຊ້ແທນເສຍ, ສິ່ງທີ່ຂະໂມຍໄດ້
ລັກເອົາໄປໃນກາງເວັນແລະກາງຄືນ ທ່ານໄດ້ຫັກເອົາຈາກມືຂ້າ
ນ້ອຍແລ້ວ. ໔໐ຂ້ານ້ອຍເຄີຍເປັນຢ່າງນີ້ຄື ກາງເວັນຂ້ານ້ອຍໄດ້ແຂ່ງ
ແດດຮ້ອນ, ກາງຄືນໄດ້ຖືກນ້ຳໝອກແຂງໜາວ ແລະຂ້ານ້ອຍບໍ່ໄດ້
ຫຼັບບໍ່ໄດ້ນອນ. ໔໑ນັ້ນຄືຕະຫຼອດ 20 ປີ ທີ່ຂ້ານ້ອຍໄດ້ອາໄສຢູ່ບ້ານ
ຂອງທ່ານ, ຂ້ານ້ອຍໄດ້ບົວລະບັດທ່ານ 14 ປີ ເພື່ອຈະໄດ້ລູກສາວ
ສອງຄົນຂອງທ່ານ ແລະອີກ 6 ປີ ເພື່ອຈະໄດ້ຝູງສັດຂອງທ່ານແລະ
ທ່ານໄດ້ປ່ຽນຄ່າຈ້າງຂອງຂ້ານ້ອຍ 10 ເທື່ອແລ້ວ. ໔໒ຖ້າແມ່ນພຣະ
ເຈົ້າຂອງພໍ່ຂ້ານ້ອຍ, ພຣະເຈົ້າຂອງ ອັບຣາຮາມ ແລະພຣະເຈົ້າທີ່
ອີຊາກຢຳເກງບໍ່ໄດ້ຢູ່ນຳຂ້ານ້ອຍແລ້ວ ຄັ້ງນີ້ທ່ານຈະໃຫ້ຂ້ານ້ອຍໄປ
ມືເປົ່າຢ່າງແນ່ນອນ ພຣະເຈົ້າໄດ້ເຫັນຄວາມທຸກຍາກລຳບາກຂອງ
ຂ້ານ້ອຍແລະການງານທີ່ມືຂ້ານ້ອຍໄດ້ເຮັດ ແລະພຣະເຈົ້າໄດ້ຕິຕຽນ
ທ່ານໃນຄືນວານນີ້".

໔໓ລາບານ ໄດ້ກ່າວຕອບ ຢາໂຄບ ວ່າ "ຜູ້ຍິງທັງຫຼາຍນີ້ແມ່ນລູກສາວ
ຂອງເຮົາ, ເດັກນ້ອຍເຫຼົ່ານີ້ກໍແມ່ນເດັກນ້ອຍຂອງເຮົາ, ສັດທັງປວງ

ເຫຼົ່ານີ້ກໍແມ່ນຝູງສັດຂອງເຮົາແລະທຸກສິ່ງທຸກຢ່າງທີ່ເຈົ້າເຫັນຢູ່ນີ້ກໍ
ແມ່ນຂອງເຮົາ ແລະວັນນີ້ເຮົາຈະເຮັດສິ່ງໃດໄດ້ແກ່ພວກລູກສາວ
ຂອງເຮົາ ແລະແກ່ລູກທັງຫຼາຍທີ່ເຂົາໄດ້ເກີດອອກມານັ້ນ? ໔໔ບັດນີ້
ເຈົ້າຈົ່ງມາເທີ້ນ ໃຫ້ເຮົາທັງສອງພາກັນເຮັດຄຳສັນຍາເພື່ອເປັນພະ
ຍານລະຫວ່າງເຮົາກັບເຈົ້າ”. ໔໕ຢາໂຄບ ໄດ້ເອົາຫີນກ້ອນໜຶ່ງປັກ
ຕັ້ງໄວ້ໃຫ້ເປັນເສົາສຳຄັນ. ໔໖ຢາໂຄບ ໄດ້ກ່າວແກ່ພີ່ນ້ອງຂອງຕົນວ່າ
“ຈົ່ງໂຮມເອົາກ້ອນຫີນມາເທີ້ນ” ເຂົາໄດ້ເອົາກ້ອນຫີນເຮັດເປັນກອງ
ແລະເຂົາໄດ້ກິນອາຫານເທິງກອງຫີນນັ້ນ. ໔໗ລາບານ ໄດ້ເອີ້ນຊື່ກ້ອນ
ຫີນນັ້ນວ່າ ເຢກາສາຮາດູທາ ແລະ ຢາໂຄບ ໄດ້ເອີ້ນວ່າ ຄາລີເອັດ.
໔໘ລາບານ ໄດ້ກ່າວວ່າ “ວັນນີ້ກອງຫີນນີ້ເປັນພະຍານລະຫວ່າງເຮົາ
ທັງສອງ”. ເຫດສະນັ້ນ ຈຶ່ງໄດ້ເອີ້ນຊື່ກອງຫີນນັ້ນວ່າ ຄາລີເອັດ ໔໙ແລະ
ມີສະປາ ເພາະທ່ານໄດ້ກ່າວວ່າ “ຂໍໃຫ້ພຣະເຢໂຮວາເຝົ້າຮັກສາ
ລະຫວ່າງເຮົາທັງສອງ ເມື່ອພວກເຮົາພັດພາກຈາກກັນໄປ. ໕໐ຖ້າ
ເຈົ້າຫາກຂົ່ມເຫັງລູກສາວຂອງເຮົາ ຫຼືຖ້າເຈົ້າຫາກເອົາເມຍອື່ນອີກ
ນອກຈາກລູກສາວຂອງເຮົາ: ເຖິງບໍ່ມີຄົນຢູ່ນຳພວກເຮົາ, ຈົ່ງຮູ້ເຖີດ
ວ່າ ພຣະເຈົ້າເປັນພະຍານລະຫວ່າງເຮົາທັງສອງ”. ໕໑ລາບານ ໄດ້
ກ່າວແກ່ ຢາໂຄບ ວ່າ “ເບິ່ງແມ ກອງຫີນນີ້ ແລະເສົາຫີນນີ້ທີ່ເຮົາ
ໄດ້ປັກຕັ້ງໄວ້ລະຫວ່າງເຮົາກັບເຈົ້າ. ໕໒ກອງຫີນນີ້ຈະເປັນພະຍານ
ແລະເສົາຫີນນີ້ຈະເປັນພະຍານວ່າ ເຮົາຈະບໍ່ລ່ວງຂ້າມກອງຫີນນີ້ໄປ
ຫາເຈົ້າ ແລະເຈົ້າກໍຈະບໍ່ລ່ວງຂ້າມກອງຫີນ ແລະເສົາຫີນນີ້ມາຫາເຮົາ
ເພື່ອເຮັດອັນຕະລາຍແກ່ກັນແລະກັນ. ໕໓ຂໍໃຫ້ພຣະເຈົ້າຂອງ ອັບຣາ
ຮາມແລະພຣະເຈົ້າຂອງ ນາໂຮ ພຣະເຈົ້າຂອງພໍ່ຂອງພວກເພິ່ນຕັດ
ສິນລະຫວ່າງເຮົາກັບເຈົ້າ”. ແລ້ວ ຢາໂຄບ ໄດ້ສາບານໂດຍອ້າງເຖິງ
ຜູ້ທີ່ ອີຊາກ ພໍ່ຂອງຕົນຢຳເກງ. ໕໔ຢາໂຄບ ໄດ້ຖວາຍບູຊາຢູ່ເທິງພູ

ເຂົານັ້ນ ໄດ້ເຊີນພວກພີ່ນ້ອງຂອງຕົນມາກິນເຂົ້າ ພວກເຂົາໄດ້ກິນ
ເຂົ້າແລະໄດ້ຄ້າງຢູ່ເທິງພູເຂົາໃນຄືນວັນນັ້ນ. ໕໕ແລ້ວ ລາບານ ໄດ້ລຸກ
ຂຶ້ນແຕ່ເຊົ້າ ໄດ້ກອດຈູບລູກຊາຍລູກຍິງທັງຫຼາຍຂອງຕົນ ແລະໄດ້
ອວຍພອນໃຫ້ພວກເຂົາ ແລະ ລາບານ ໄດ້ລາຈາກພວກເຂົາກັບໄປ
ບ່ອນຢູ່ຂອງຕົນ.

*31:13 "ຖອກ" ຫຼື "ເຈີມ"*

*31:47 ຄຳສັບ "ເຢກາສາຮາດູທາ" ເປັນພາສາ ຊີເຣຍ ທີ່ໝາຍຄວາມວ່າ "ກອງພະຍານ", ຄຳສັບ "ຄາລີເອັດ" ເປັນພາສາ ເຮັບເຣີ ທີ່ໝາຍຄວາມວ່າ "ກອງຜູ້ພະຍານ"*

## ບົດທີ 32

໑ຢາໂຄບ ໄດ້ເດີນທາງໄປ ແລະພວກເທວະດາຂອງພຣະເຈົ້າໄດ້ພົບ
ທ່ານ. ໒ແລະເມື່ອ ຢາໂຄບ ໄດ້ເຫັນເທວະດານັ້ນທ່ານໄດ້ກ່າວວ່າ
"ພວກນີ້ແມ່ນກອງທັບຂອງພຣະເຈົ້າ" ແລະທ່ານໄດ້ເອີ້ນຊື່ທີ່ນັ້ນວ່າ
ມະຫານາອິມ. ໓ແລະ ຢາໂຄບ ໄດ້ໃຊ້ພວກຜູ້ສົ່ງຂ່າວໄປກ່ອນໜ້າ
ທ່ານໄປຫາເອຊາວອ້າຍຂອງຕົນທີ່ແຜ່ນດິນເຊອີໃນເມືອງເອໂດມ.
໔ທ່ານໄດ້ສັ່ງພວກເຂົາວ່າ "ຈົ່ງໄປບອກ ເອຊາວເຈົ້ານາຍຂອງເຮົາ
ດັ່ງນີ້ວ່າ ຢາໂຄບ ຜູ້ຮັບໃຊ້ຂອງທ່ານໄດ້ກ່າວດັ່ງນີ້ວ່າ 'ຂ້ານ້ອຍ
ໄດ້ອາໄສກັບ ລາບານ ແລະໄດ້ຄ້າງຢູ່ທີ່ນັ້ນຈົນເຖິງທຸກວັນນີ້.
໕ຂ້ານ້ອຍມີຝູງງົວ, ຝູງລາ, ຝູງສັດນ້ອຍ ແລະຂ້າໃຊ້ຊາຍຍິງທັງຫຼາຍ
ແລະຂ້ານ້ອຍໄດ້ໃຊ້ຄົນມາກາບຮຽນຕໍ່ນາຍຂອງຂ້ານ້ອຍ ເພື່ອຈະ
ໄດ້ຮັບຄວາມກະລຸນາຄຸນໃນສາຍຕາຂອງທ່ານ'."

໖ແລະຜູ້ສົ່ງຂ່າວໄດ້ກັບມາຫາ ຢາໂຄບ ກ່າວວ່າ "ພວກຂ້ານ້ອຍໄດ້
ໄປເຖິງ ເອຊາວ ອ້າຍຂອງທ່ານແລ້ວ ແລະ ເອຊາວ ກໍພວມຈະມາ
ພົບທ່ານແລະມີຄົນມານຳ 400 ຄົນ". ໗ຢາໂຄບ ໄດ້ຢ້ານຫຼາຍແລະ
ທຸກໃຈຫຼາຍ ແລະໄດ້ແບ່ງຄົນທັງຫຼາຍທີ່ມາກັບທ່ານ, ຝູງສັດນ້ອຍຝູງ
ສັດໃຫຍ່ແລະຝູງອູດອອກເປັນສອງກອງ. ໘ທ່ານໄດ້ກ່າວວ່າ "ຖ້າ ເອ
ຊາວມາຕີກອງທີ່ໜຶ່ງແລ້ວກອງທີ່ເຫຼືອນັ້ນຈະຫຼົບໜີໄປໄດ້".໙ຢາໂຄບ
ໄດ້ກ່າວທູນວ່າ "ໂອ້ ພຣະເຈົ້າຂອງ ອັບຣາຮາມ ປູ່ຂອງຂ້ານ້ອຍ,
ພຣະເຈົ້າຂອງ ອີຊາກ ພໍ່ຂອງຂ້ານ້ອຍ ແລະພຣະເຢໂຮວາຜູ້ໄດ້ສັ່ງ
ແກ່ຂ້ານ້ອຍວ່າ 'ຈົ່ງກັບໄປທີ່ເມືອງຍາດຕິພີ່ນ້ອງຂອງເຈົ້າແລະເຮົາ
ຈະກະທຳການດີແກ່ເຈົ້າ': ໑໐ຂ້ານ້ອຍບໍ່ສົມຄວນຈະຮັບພຣະຄຸນທັງ
ປວງ ແລະຄວາມຈິງທັງສິ້ນຂອງພຣະອົງ ທີ່ພຣະອົງໄດ້ໂຜດປະທານ
ແກ່ຂ້າຮັບໃຊ້ຂອງພຣະອົງ; ເຫດວ່າຂ້ານ້ອຍໄດ້ຂ້າມແມ່ນ້ຳ ຈໍແດນ
ນີ້ມີແຕ່ໄມ້ເທົ້າ ແລະບັດນີ້ຂ້ານ້ອຍໄດ້ມີເປັນສອງກອງ.໑໑ຂໍພຣະອົງ
ໂຜດຊ່ອຍຂ້ານ້ອຍໃຫ້ພົ້ນຈາກມືຂອງອ້າຍຂ້ານ້ອຍ ຄືຈາກມືຂອງ
ເອຊາວ, ເຫດວ່າຂ້ານ້ອຍຢ້ານເພິ່ນຈະມາຕີຂ້ານ້ອຍ ແລະທັງແມ່ກັບ
ລູກທັງຫຼາຍດ້ວຍ. ໑໒ພຣະອົງໄດ້ກ່າວໄວ້ວ່າ "ເຮົາຈະກະທຳການດີ
ແກ່ເຈົ້າຢ່າງແນ່ນອນແລະຈະກະທຳໃຫ້ເຊື້ອສາຍຂອງເຈົ້າທະວີ
ມາກຂຶ້ນເໝືອນດັ່ງເມັດດິນຊາຍໃນທະເລຊຶ່ງຫຼວງຫຼາຍຈົນບໍ່ສາ
ມາດນັບໄດ້".

໑໓ແລະໃນຄືນວັນນັ້ນທ່ານໄດ້ພັກເຊົາຢູ່ທີ່ນັ້ນ ແລະໄດ້ຄັດເອົາຂອງທີ່
ມີຢູ່ໃຕ້ມືຂອງຕົນມາຕັ້ງໄວ້ເປັນຂອງຂວັນຕ້ອນແກ່ ເອຊາວ ອ້າຍ
ຂອງຕົນ. ໑໔ແບ້ແມ່ 200 ໂຕ, ແບ້ຜູ້ 20 ໂຕ, ແກະແມ່ 200 ໂຕ,
ແກະຜູ້ 20 ໂຕ. ໑໕ອູດໂຕແມ່ກັບລູກນ້ອຍກິນນົມຢູ່ 30 ໂຕ, ງົວແມ່

40 ໂຕ, ງົວຜູ້ 10 ໂຕ, ລາແມ່ 20 ໂຕ ແລະລູກລາ 10 ໂຕ. ໑໖ຝູງສັດ
ທັງຫຼາຍເຫຼົ່ານີ້ທ່ານໄດ້ມອບໄວ້ໃນມືຄົນຮັບໃຊ້ຂອງຕົນ ແຕ່ລະຝູງຢູ່
ຕ່າງຫາກ ແລະໄດ້ສັ່ງແກ່ພວກຮັບໃຊ້ວ່າ “ຈົ່ງໄປກ່ອນເຮົາ ແລະໃຫ້
ມີໄລຍະຫ່າງລະຫວ່າງແຕ່ລະຝູງສັດ”. ໑໗ທ່ານໄດ້ສັ່ງແກ່ຄົນຜູ້ໄປ
ກ່ອນໜ້ານັ້ນວ່າ “ເມື່ອ ເອຊາວ ອ້າຍຂອງເຮົາມາພົບເຈົ້າແລະຖາມ
ວ່າ ‘ເຈົ້າເປັນຜູ້ໃດ? ເຈົ້າຈະໄປໃສ? ແລະສິ່ງເຫຼົ່ານີ້ທີ່ຢູ່ຕໍ່ໜ້າທ່ານ
ເປັນຂອງຜູ້ໃດ?’ ໑໘ຈົ່ງຕອບວ່າ ‘ຂອງນີ້ເປັນຂອງ ຢາໂຄບ ຜູ້ຮັບໃຊ້
ຂອງທ່ານສົ່ງມາເປັນຂອງຂວັນຕ້ອນແກ່ ເອຊາວ ຜູ້ເປັນເຈົ້ານາຍ
ຂອງຂ້ານ້ອຍ ແລະ ຢາໂຄບ ເອງມາພາຍຫຼັງພວກເຮົາ’.” ໑໙ທ່ານໄດ້
ສັ່ງແກ່ຜູ້ຮັບໃຊ້ຝູງທີສອງ, ຝູງທີສາມ ແລະແກ່ຄົນທັງປວງທີ່ໄດ້ຄຸ້ມ
ຄອງຝູງສັດນັ້ນວ່າ “ເມື່ອພວກເຈົ້າຈະພົບ ເອຊາວ ຈົ່ງກ່າວກັບທ່ານ
ຢ່າງດຽວກັນນີ້ເຫີ້ນ. ໒໐ແລະພວກເຈົ້າຈົ່ງເວົ້າອີກວ່າ ‘ເບິ່ງແມ ຢາໂຄບ
ຜູ້ຮັບໃຊ້ຂອງທ່ານພວມມາພາຍຫຼັງພວກເຮົາ’ ” ເພາະວ່າ ຢາໂຄບ
ຄິດວ່າ “ເຮົາຈະໃຫ້ອ້າຍເຊົາຄຽດດ້ວຍຂອງຂວັນທີ່ໄປກ່ອນເຮົາ ແລະ
ພາຍຫຼັງເຮົາຈະເຫັນໜ້າຂອງອ້າຍໄດ້ ຫາກວ່າອ້າຍຈະຕ້ອນຮັບເອົາ
ເຮົາ”. ໒໑ແລະຝູງສັດທີ່ຈະໃຫ້ເປັນຂອງຂວັນນັ້ນກໍໄດ້ລ່ວງໜ້າໄປ
ກ່ອນ ແຕ່ທ່ານເອງຍັງຄ້າງພັກຢູ່ໃນຄ້າຍໃນຄືນວັນນັ້ນ. ໒໒ແລະໃນ
ກາງຄືນວັນນັ້ນ ທ່ານໄດ້ລຸກຂຶ້ນພາເມຍສອງຄົນກັບສາວໃຊ້ສອງຄົນ
ແລະລູກ 11 ຄົນຂ້າມນໍ້າ ຢາໂບກ. ໒໓ທ່ານໄດ້ສົ່ງໃຫ້ເຂົາຂ້າມນໍ້າ
ໄປກັບສິ່ງຂອງທັງປວງຂອງຕົນດ້ວຍ. ໒໔ແລະ ຢາໂຄບ ໄດ້ຄ້າງຢູ່ທີ່
ນັ້ນຄົນດຽວ ແລະຄົນຜູ້ໜຶ່ງໄດ້ມາປໍ້າກັບທ່ານຈົນເຖິງເວລາຮຸ່ງເຊົ້າ.
໒໕ເມື່ອທ່ານຜູ້ນັ້ນເຫັນວ່າຈະຕໍ່ສູ້ເອົາຊະນະຢາໂຄບບໍ່ໄດ້ ຈຶ່ງຈັບຕ້ອງ
ກະໂພກ ແລະກະໂພກຂອງ ຢາໂຄບ ໄດ້ຫຼຸດອອກຈາກຂໍ້ຕໍ່ຂອງມັນ
ຂະນະທີ່ພວມປໍ້າສູ້ຢູ່ກັບທ່ານຜູ້ນັ້ນ. ໒໖ແລະທ່ານຜູ້ນັ້ນໄດ້ກ່າວວ່າ

“ໃຫ້ເຮົາໄປເທີ້ນ ເພາະຮຸ່ງເຊົ້າຂຶ້ນມາແລ້ວ” ຢາໂຄບ ໄດ້ກ່າວຕອບ
ວ່າ “ຂ້ານ້ອຍຈະບໍ່ໃຫ້ທ່ານໄປ ນອກຈາກທ່ານຈະອວຍພອນໃຫ້
ຂ້ານ້ອຍ”. ໒໗ທ່ານຜູ້ນັ້ນໄດ້ຖາມ ຢາໂຄບ ວ່າ “ເຈົ້າຊື່ຫຍັງ?” ທ່ານໄດ້
ຕອບວ່າ “ຂ້ານ້ອຍຊື່ ຢາໂຄບ”. ໒໘ທ່ານນັ້ນໄດ້ກ່າວວ່າ “ຊື່ຂອງເຈົ້າ
ຈະບໍ່ໄດ້ເອີ້ນວ່າ ຢາໂຄບ ອີກຕໍ່ໄປ, ແຕ່ວ່າຈະເອີ້ນວ່າ ອິດສະຣາເອນ
ເພາະວ່າເຈົ້າເປັນເໝືອນເຈົ້າຊາຍຜູ້ມີອຳນາດກັບພຣະເຈົ້າ ແລະມະ
ນຸດ ແລະໄດ້ໄຊຊະນະ”.

໒໙ຢາໂຄບ ໄດ້ຖາມຄືນນັ້ນວ່າ “ຂໍທ່ານບອກຂ້ານ້ອຍແດ່ວ່າທ່ານຊື່
ຫຍັງ” ທ່ານຜູ້ນັ້ນໄດ້ບອກວ່າ “ດ້ວຍເຫດໃດເຈົ້າຈິ່ງຖາມຊື່ຂອງເຮົາ?”
ຢູ່ທີ່ນັ້ນ ເພິ່ນໄດ້ອວຍພອນໃຫ້ ຢາໂຄບ. ໓໐ຢາໂຄບ ໄດ້ເອີ້ນຊື່ທີ່ນັ້ນ
ວ່າ “ເປນີເອນ ເຫດວ່າຂ້ອຍໄດ້ເຫັນພຣະພັກພຣະເຈົ້າແລະຊີວິດ
ຂອງຂ້ອຍຍັງມີຊີວິດຢູ່”. ໓໑ແລະເມື່ອ ຢາໂຄບ ຂ້າມທີ່ ເປນີເອນ ໄປ
ຕາເວັນກໍກຳລັງຂຶ້ນ ທ່ານໄດ້ຍ່າງຂາເຢກໄປເພາະເຈັບກະໂພກ.
໓໒ເພາະເຫດນີ້ພວກລູກຫຼານ ອິດສະຣາເອນ ບໍ່ກິນຊີ້ນເອັນຊື່ງຢູ່ຂໍ້
ຕໍ່ກະໂພກນັ້ນຈົນເຖິງທຸກວັນນີ້ ເພາະທ່ານຜູ້ນັ້ນໄດ້ຈັບຕ້ອງກະໂພກ
ຂອງ ຢາໂຄບ ທີ່ເອັນກະໂພກນັ້ນ.

## ບົດທີ 33

໑ຢາໂຄບ ໄດ້ເງີຍໜ້າຂຶ້ນເບິ່ງ ແລະເບິ່ງແມ ເອຊາວ ກຳລັງມາພ້ອມ
ກັບຄົນ 400 ຄົນ. ແລ້ວ ຢາໂຄບ ໄດ້ແບ່ງເດັກນ້ອຍໃຫ້ຢູ່ກັບນາງ
ເລອາ, ກັບນາງ ຣາເຊນ ແລະກັບສາວໃຊ້ສອງຄົນເປັນໝູ່ຕ່າງກັນ.
໒ແລະທ່ານໄດ້ໃຫ້ສາວໃຊ້ສອງຄົນກັບລູກຂອງເຂົາໄປກ່ອນ, ໃຫ້ນາງ

ເລອາ ກັບລູກໄປພາຍຫຼັງ ແລະໃຫ້ນາງ ຣາເຊນ ກັບ ໂຢເຊບ ຢູ່ທາງ
ຫຼັງສຸດ. ໓ແລະທ່ານໄດ້ໄປກ່ອນໜ້າພວກເຂົາ ແລະໝູບໜ້າລົງເຖິງ
ດິນເຈັດເທື່ອ ຈົນກວ່າລາວຈະຫຍັບເຂົ້າໄປໃກ້ອ້າຍຂອງຕົນ. ໔ເອ
ຊາວ ໄດ້ແລ່ນອອກໄປຕ້ອນຮັບຢາໂຄບ ກອດແລະກົ້ມລົງທີ່ຄໍຈູບ
ຢາໂຄບ ແລະເຂົາທັງສອງໄດ້ພາກັນຮ້ອງໄຫ້. ໕ເອຊາວ ໄດ້ເງີຍໜ້າ
ເບິ່ງ ແລະເຫັນພວກຜູ້ຍິງກັບເດັກນ້ອຍທັງຫຼາຍ ແລະໄດ້ຖາມວ່າ
“ຄົນທີ່ຢູ່ກັບທ່ານເຫຼົ່ານີ້ແມ່ນໃຜ?” ຢາໂຄບ ໄດ້ກ່າວວ່າ “ແມ່ນລູກ
ທັງຫຼາຍທີ່ພຣະເຈົ້າໄດ້ໂຜດພຣະກະລຸນາຄຸນປະທານໃຫ້ແກ່ຜູ້ຮັບ
ໃຊ້ຂອງທ່ານ”. ໖ແລະສາວໃຊ້ສອງຄົນກັບລູກທັງຫຼາຍຂອງເຂົາກໍໄດ້
ຫຍັບເຂົ້າມາໃກ້ ແລະພາກັນໝູບໜ້າລົງ, ໗ນາງ ເລອາ ກັບລູກ
ທັງຫຼາຍຂອງຕົນກໍໄດ້ຫຍັບເຂົ້າມາໃກ້ດ້ວຍ ແລະພາກັນໝູບໜ້າລົງ
ແລະພາຍຫຼັງ ໂຢເຊບ ກັບນາງ ຣາເຊນ ໄດ້ຫຍັບເຂົ້າມາໃກ້ດ້ວຍ
ແລະພາກັນໝູບໜ້າລົງ. ໘ເອຊາວ ໄດ້ຖາມວ່າ “ຝູງຄົນແລະສັດທັງ
ໝົດທີ່ເຮົາໄດ້ພົບມານັ້ນໝາຍຄວາມວ່າຢ່າງໃດ?” ຢາໂຄບ ໄດ້ກ່າວ
ວ່າ “ເພື່ອຂ້ານ້ອຍຈະໄດ້ຮັບຄວາມກະລຸນາຄຸນໃນສາຍຕາຂອງເຈົ້າ
ນາຍຂ້ານ້ອຍ”. ໙ເອຊາວ ໄດ້ຕອບວ່າ “ອ້າຍມີສິ່ງຂອງພຽງພໍຢູ່ແລ້ວ
ນ້ອງເອີຍ ຈົ່ງເກັບສິ່ງຂອງຂອງເຈົ້ານັ້ນໄວ້ສຳລັບເຈົ້າເອງເຖີດ”. ໑໐ຢາ
ໂຄບ ໄດ້ຕອບວ່າ “ຂໍຢ່າເຮັດຢ່າງນັ້ນ ຖ້າຂ້ານ້ອຍຫາກເປັນທີ່ກະລຸ
ນາຄຸນໃນສາຍຕາຂອງທ່ານ ຂໍທ່ານຮັບຂອງຕ້ອນນັ້ນຈາກມືຂອງຂ້າ
ນ້ອຍເທີ້ນ ເພາະເຫດວ່າຂ້ານ້ອຍໄດ້ເຫັນໜ້າທ່ານກໍເໝືອນຂ້ານ້ອຍ
ໄດ້ເຫັນພຣະພັກພຣະເຈົ້າແລະທ່ານໄດ້ຕ້ອນຮັບຂ້ານ້ອຍດ້ວຍ
ຄວາມຊອບໃຈ. ໑໑ຂໍທ່ານຮັບພຣະພອນຂອງຂ້ານ້ອຍທີ່ໄດ້ນຳມາໃຫ້
ທ່ານນັ້ນເທີ້ນ ເຫດວ່າພຣະເຈົ້າໄດ້ໂຜດພຣະຄຸນໃຫ້ຂ້ານ້ອຍ ແລະ
ຂ້ານ້ອຍມີເຂົ້າຂອງພຽງພໍແລ້ວ”. ຢາໂຄບ ໄດ້ອ້ອນວອນ ເອຊາວ

ແລະທ່ານໄດ້ຍອມຮັບເອົາ. ໑໒ເອຊາວ ໄດ້ກ່າວວ່າ "ໃຫ້ເຮົາທັງສອງ
ພາກັນເດີນທາງໄປເຖີດ ແລະ ອ້າຍຈະນຳໜ້າເຈົ້າໄປ". ໑໓ຢາໂຄບ
ໄດ້ກ່າວວ່າ "ນາຍເຈົ້າຂ້າ ທ່ານຮູ້ຈັກວ່າພວກເດັກນ້ອຍກໍຍັງອ່ອນ
ຢູ່ແລະຝູງສັດທີ່ມີລູກນ້ອຍທີ່ຍັງກິນນົມຢູ່ກັບຂ້ານ້ອຍ ຖ້າຈະເລັ່ງຮີບ
ໄລ່ໄປພຽງວັນດຽວ ສັດທັງປວງຈະຕາຍເສຍໝົດ. ໑໔ຂໍເຈົ້ານາຍຂອງ
ຂ້ານ້ອຍໄປກ່ອນຜູ້ຮັບໃຊ້ຂອງທ່ານເຖີດ ແລະຂ້ານ້ອຍຈະຄ່ອຍໆໄປ
ຕາມກຳລັງຂອງຝູງສັດທັງຫຼາຍນີ້ ແລະພວກເດັກນ້ອຍຈະທົນໄດ້ຈົນ
ກວ່າຂ້ານ້ອຍມາເຖິງເຈົ້ານາຍຂອງຂ້ານ້ອຍທີ່ ເຊອີ". ໑໕ເອຊາວ ໄດ້
ກ່າວວ່າ "ບັດນີ້ຂໍໃຫ້ອ້າຍປະຄົນທີ່ມານຳອ້າຍບາງສ່ວນກັບເຈົ້າ"
ຢາໂຄບ ໄດ້ກ່າວວ່າ "ມີຄວາມຈຳເປັນອັນໃດຫຼື? ຂໍໃຫ້ຂ້ານ້ອຍໄດ້
ຄວາມກະລຸນາໃນສາຍຕາເຈົ້ານາຍຂອງຂ້ານ້ອຍເທີ້ນ". ໑໖ແລະໃນ
ວັນນັ້ນ ເອຊາວ ໄດ້ກັບໄປຕາມທາງຂອງຕົນເຖິງ ເຊອີ.

໑໗ຢາໂຄບ ໄດ້ໄປເຖິງ ຊຸກໂກດ ແລະໄດ້ປຸກເຮືອນຫຼັງໜຶ່ງສຳຫຼັບຕົນ
ເອງຢູ່ທີ່ນັ້ນ ແລະໄດ້ສ້າງຄອກໃຫ້ຝູງສັດຢູ່ ເຫດສະນັ້ນເຂົາຈຶ່ງເອີ້ນ
ຊື່ທີ່ນັ້ນວ່າ ຊຸກໂກດ.

໑໘ແລະເວລາໄດ້ອອກມາຈາກເມືອງ ປາດັນອາຣຳ ແລ້ວ ຢາໂຄບ
ໄດ້ມາເຖິງບ້ານ ເຊເລມ ເມືອງຊີເຄມ ໃນປະເທດ ການາອານ ແລະ
ໄດ້ຕັ້ງເຕັນອາໄສຢູ່ຕໍ່ໜ້າເມືອງນັ້ນ. ໑໙ທ່ານໄດ້ຊື້ເອົາທີ່ງນາສ່ວນໜຶ່ງ
ທີ່ທ່ານຕັ້ງເຕັນອາໄສນັ້ນຈາກພວກລູກ ຮາໂມ ຜູ້ເປັນພໍ່ຂອງ ຊີເຄມ
ເປັນເງິນ100 ຫຼຽນ. ໒໐ແລະທ່ານໄດ້ສ້າງແທ່ນບູຊາທີ່ນັ້ນ ແລະເອີ້ນ
ຊື່ວ່າ ເອນເອໂລເຮ ອິດສະຣາເອນ.

# ບົດທີ 34

໑ນາງ ດີນາ ລູກສາວທີ່ນາງ ເລອາ ໄດ້ກຳເນີດໃຫ້ແກ່ ຢາໂຄບ ກໍໄດ້
ອອກໄປຢ້ຽມຢາມຍິງສາວທັງຫຼາຍທີ່ເມືອງນັ້ນ. ໒ຊີເຄມ ລູກ ຮາໂມ
ຊາວ ຮີວີ ຜູ້ເປັນເຈົ້າເມືອງນັ້ນໄດ້ເຫັນນາງ ດີນາ ກໍໄດ້ກຸມເອົານາງ
ໄປ ແລະນອນນຳນາງເຮັດໃຫ້ນາງເສຍກຽດຕິຍົດ. ໓ແລະຈິດໃຈຂອງ
ຊີເຄມ ໄດ້ຕິດພັນກັບນາງ ດີນາ ລູກ ຢາໂຄບ ລາວໄດ້ຮັກນາງ ແລະ
ເວົ້າຈາເລົ້າໂລມໃຈນາງ. ໔ແລ້ວ ຊີເຄມ ໄດ້ກ່າວແກ່ ຮາໂມ ພໍ່ຂອງ
ຕົນວ່າ “ໄປຂໍຜູ້ສາວນີ້ໃຫ້ມາເປັນເມຍຂອງຂ້ອຍເທີ້ນ”. ໕ຢາໂຄບ
ໄດ້ຍິນຂ່າວວ່າລາວໄດ້ເຮັດຜິດຕໍ່ນາງ ດີນາ ລູກຂອງຕົນໃຫ້ເສຍກຽດ
ແລະທ່ານໄດ້ນັ່ງມິດງຽບຢູ່ຈົນເຖິງພວກລູກຊາຍທີ່ຢູ່ທົ່ງນາລ້ຽງສັດ
ໄດ້ກັບມາບ້ານ.

໖ຮາໂມ ພໍ່ຂອງ ຊີເຄມ ໄດ້ໄປຫາ ຢາໂຄບ ເວົ້າຈາປຶກສາກັນ. ໗ພວກ
ລູກຊາຍ ຢາໂຄບ ໄດ້ກັບມາແຕ່ທົ່ງນາ ເມື່ອໄດ້ຍິນຂ່າວນັ້ນ ຄົນພວກ
ນັ້ນໄດ້ມີຄວາມທຸກໂສກ ແລະໄດ້ຄຽດແຄ້ນ ໃຈຮ້າຍຫຼາຍຍ້ອນຄົນ
ນັ້ນໄດ້ທຳຊົ່ວຕໍ່ພວກ ອິດສະຣາເອນ ຄືໄດ້ນອນນຳລູກສາວຂອງ ຢາ
ໂຄບ ເປັນການທີ່ບໍ່ສົມຄວນເຮັດ. ໘ແລ້ວ ຮາໂມ ໄດ້ເວົ້າກັບເຂົາວ່າ
“ຈິດໃຈ ຊີເຄມ ລູກຊາຍຂອງເຮົາໄດ້ຕິດພັນຢູ່ກັບລູກສາວຂອງທ່ານ
ຂໍທ່ານໂຜດຍົກຍິງນັ້ນໃຫ້ມາເປັນເມຍຂອງລາວເທີ້ນ. ໙ແລະຂໍໃຫ້
ທ່ານທັງຫຼາຍໄດ້ທຳການແຕ່ງງານກັບພວກເຮົາ ຈົ່ງຍົກພວກຜູ້ສາວ
ຂອງທ່ານໃຫ້ພວກເຮົາ ແລະຈົ່ງເອົາພວກລູກສາວຂອງພວກເຮົາສຳ
ຫຼັບພວກທ່ານ. ໑໐ຈົ່ງອາໄສຢູ່ກັບພວກເຮົາ ແລະແຜ່ນດິນນີ້ຈະຢູ່ຕໍ່
ໜ້າພວກທ່ານ ຈົ່ງອາໄສຢູ່ທີ່ນີ້ ຈົ່ງຄ້າຂາຍ ແລະຄອບຄອງຊັບສົມບັດ

ໃນແຜ່ນດິນນີ້ເທີ້ນ". ໑໑ແລ້ວ ຊີເຄມ ໄດ້ກ່າວຕໍ່ພໍ່ກັບອ້າຍຂອງນາງ ດີ
ນາ ວ່າ "ຈົ່ງເຫັນຊອບແກ່ເຮົາເທີ້ນ ແລະທ່ານທັງຫຼາຍຈະຂໍສິ່ງໃດເຮົາ
ຈະໃຫ້ສິ່ງນັ້ນ. ໑໒ທ່ານຈົ່ງຂໍເງິນສິນສອດຫຼາຍກວ່າທຳນຽມກັບຂອງ
ຂວັນຫຼາຍສິ່ງ ແລະເຮົາຈະໃຫ້ຕາມທ່ານຈະຂໍ, ແຕ່ຂໍຈົ່ງຍົກຜູ້ສາວ
ນັ້ນໃຫ້ເປັນເມຍຂອງເຮົາເທີ້ນ". ໑໓ພວກລູກຊາຍ ຢາໂຄບ ໄດ້ຕອບ
ຊີເຄມ ແລະ ຮາໂມ ພໍ່ຂອງລາວເປັນກົນອຸບາຍ ຍ້ອນວ່າລາວໄດ້ກະ
ທຳຜິດຕໍ່ນາງ ດີນາ ນ້ອງສາວຂອງເຂົາໃຫ້ເສຍກຽດ. ໑໔ແລະພວກ
ເຂົາໄດ້ກ່າວແກ່ລາວວ່າ "ພວກເຮົາຈະຍົກນ້ອງສາວພວກເຮົາໃຫ້ແກ່
ຄົນທີ່ບໍ່ໄດ້ຮັບສິນຕັດບໍ່ໄດ້ ເພາະຈະເປັນທີ່ອັບອາຍຂາຍໜ້າແກ່
ພວກເຮົາ, ໑໕ພວກເຮົາຈະຍອມເຫັນດີກັບພວກທ່ານ ຖ້າພວກທ່ານ
ຈະເປັນເໝືອນດັ່ງພວກເຮົາເປັນ ຄືວ່າໃຫ້ຜູ້ຊາຍທຸກຄົນໃນພວກ
ທ່ານຮັບສິນຕັດ, ໑໖ເມື່ອນັ້ນພວກເຮົາຈະຍົກລູກສາວທັງຫຼາຍຂອງ
ພວກເຮົາໃຫ້ແກ່ພວກທ່ານ ແລະຈະຮັບລູກສາວທັງຫຼາຍຂອງພວກ
ທ່ານມາເປັນເມຍຂອງພວກເຮົາ ແລະຈະຕັ້ງຢູ່ນຳພວກທ່ານເປັນ
ພວກດຽວກັນ. ໑໗ແຕ່ວ່າ ຖ້າທ່ານທັງຫຼາຍບໍ່ຟັງຄວາມຂອງພວກ
ເຮົາ, ບໍ່ຮັບສິນຕັດ ພວກເຮົາຈະພາກັນເອົາລູກສາວຂອງພວກ
ເຮົາໄປແລະຈະຍົກຍ້າຍໜີເສຍ". ໑໘ແລະຄຳທັງຫຼາຍຂອງພວກເຂົາ
ເປັນທີ່ພໍໃຈແກ່ ຮາໂມ ແລະແກ່ ຊີເຄມ ລູກຊາຍຂອງ ຮາໂມ. ໑໙ແລ້ວ
ຊາຍໜຸ່ມນັ້ນກໍບໍ່ໄດ້ຊັກຊ້າທີ່ຈະກະທຳການນັ້ນ ເພາະລາວໄດ້ຮັກ
ລູກສາວຂອງ ຢາໂຄບ ຫຼາຍ ແລະລາວເປັນທີ່ເຄົາລົບນັບຖືຫຼາຍ
ກວ່າຄົນທັງປວງໃນຄອບຄົວຂອງພໍ່ລາວ.

໒໐ຮາໂມກັບຊີເຄມລູກຂອງຕົນໄດ້ພາກັນອອກໄປທີ່ປະຕູເມືອງແລະ
ໄດ້ບອກຊາວເມືອງນັ້ນວ່າ: ໒໑"ຄົນທັງຫຼາຍນັ້ນເປັນມິດກັບພວກເຮົາ

ໃຫ້ພວກເຂົາອາໄສຢູ່ໃນແຜ່ນດິນນີ້ຄ້າຂາຍ ແລະເບິ່ງແຍງ ແຜ່ນດິນນີ້ກໍກວ້າງຂວາງພຽງພໍໃຫ້ເຂົາຢູ່ໄດ້ ພວກເຮົາຈະເອົາລູກສາວທັງຫຼາຍຂອງພວກເຂົາມາເປັນເມຍ ແລະຍົກລູກສາວທັງຫຼາຍຂອງພວກເຮົາໃຫ້ເປັນເມຍພວກເຂົາ. [໒໒]ແຕ່ວ່າພວກເຂົາຈະຍອມອາໄສຢູ່ເປັນພວກດຽວກັບພວກເຮົາທັງຫຼາຍບໍ່ໄດ້ເວັ້ນໄວ້ແຕ່ຜູ້ຊາຍທຸກຄົນໃນທ່າມກາງພວກເຮົາຈະຮັບສິນຕັດເໝືອນດັ່ງພວກເຂົາໄດ້ຮັບພິທີຕັດ. [໒໓]ຝູງສັດກັບສິ່ງຂອງທັງປວງຂອງພວກເຂົາກໍຈະເປັນຂອງພວກເຮົາບໍ່ແມ່ນຫຼື? ພຽງແຕ່ວ່າພວກເຮົາຈິ່ງສິມຍອມກະທຳດັ່ງນີ້ ແລະພວກເຂົາຈະຍອມຢູ່ກັບພວກເຮົາ". [໒໔]ແລະຄົນທັງປວງທີ່ອອກໄປທາງປະຕູເມືອງນັ້ນໄດ້ຟັງ ຮາໂມ ກັບ ຊີເຄມ ລູກຊາຍຂອງຕົນ ແລ້ວຜູ້ຊາຍທຸກຄົນທີ່ອອກໄປທາງປະຕູເມືອງ ກໍໄດ້ຮັບສິນຕັດ.

[໒໕]ແລະຢູ່ມາເມື່ອວັນທີ່ສາມ ເມື່ອພວກເຂົາກຳລັງເຈັບປວດຢູ່ ລູກຊາຍຂອງ ຢາໂຄບ ສອງຄົນຊື່ ຊີເມໂອນ ແລະ ເລວີ ຜູ້ເປັນອ້າຍນາງດີນາ, ກໍໄດ້ຖືດາບຂອງພວກເຂົາ ແລະພາກັນໄປໃນເມືອງດ້ວຍໃຈກ້າຫານ ແລະໄດ້ຂ້າຜູ້ຊາຍທຸກຄົນໃນເມືອງນັ້ນ. [໒໖]ແລະເຂົາໄດ້ຂ້າຮາໂມ ກັບ ຊີເຄມ ລູກຊາຍຂອງທ່ານດ້ວຍຄົມດາບ ແລະໄດ້ພານາງດີນາ ອອກມາຈາກເຮືອນ ຊີເຄມ ໄປເສຍ. [໒໗]ລູກຊາຍຂອງ ຢາໂຄບໄດ້ເຂົ້າໄປຕາມເຮືອນຄົນຕາຍທັງຫຼາຍ ແລະໄດ້ປຸ້ນເມືອງນັ້ນຍ້ອນພວກເຂົາໄດ້ກະທຳຜິດຕໍ່ນ້ອງສາວຂອງພວກເຂົາໃຫ້ເສຍກຽດ. [໒໘]ແລ້ວພວກເຂົາໄດ້ເອົາຝູງແກະ, ຝູງງົວ,ຝູງລາ ກັບສິ່ງຂອງທີ່ຢູ່ໃນເມືອງແລະຢູ່ໃນທົ່ງນາ, [໒໙]ແລະເອົາເຂົ້າຂອງຊັບສົມບັດທັງປວງຂອງພວກນັ້ນ, ຈັບເມຍທັງຫຼາຍຂອງພວກນັ້ນແລະເດັກນ້ອຍໄປເປັນສະເລີຍ ແລະໄດ້ປຸ້ນເອົາຂອງທັງໝົດໃນເຮືອນຂອງພວກນັ້ນດ້ວຍ. [໓໐]ຢາ

ໂຄບ ໄດ້ກ່າວແກ່ ຊີເມໂອນ ແລະແກ່ ເລວີ ວ່າ “ພວກເຈົ້າໄດ້ກະທຳ
ໃຫ້ເຮົາທຸກລຳບາກໃຈ, ເຮັດໃຫ້ເຮົາເປັນທີ່ກຽດຊັງຕໍ່ຊາວຊົນປະເທດ
ນີ້, ຊາວ ການາອານ ກັບຊາວ ເປລີສີ ດ້ວຍ ແລະຝ່າຍເຮົາມີຄົນຈຳ
ນວນພຽງໜ້ອຍດຽວ, ພວກເຂົາຈະໂຮມກັນມາຕໍ່ສູ້ກັບພວກເຮົາແລະ
ຈະຂ້າພວກເຮົາເສຍ ແລະຈະໃຫ້ພວກເຮົາ ແລະຄອບຄົວຂອງພວກ
ເຮົາຈິບຫາຍເສຍໝົດ”. ໓໑ພວກເຂົາໄດ້ຕອບວ່າ “ມັນຈະເຮັດກັບນ້ອງ
ສາວຂອງພວກເຮົາເໝືອນເຮັດກັບຍິງແມ່ຈ້າງຫຼື?”

## ບົດທີ 35

໑ພຣະເຈົ້າໄດ້ກ່າວແກ່ ຢາໂຄບ ວ່າ “ຈົ່ງລຸກຂຶ້ນໄປທີ່ ເບດເອນ ແລະ
ອາໄສຢູ່ທີ່ນັ້ນ ຈົ່ງສ້າງແທ່ນບູຊາແກ່ພຣະເຈົ້າທີ່ໄດ້ປະກົດແກ່ເຈົ້າ
ເມື່ອເຈົ້າໄດ້ໜີຈາກໜ້າ ເອຊາວ ອ້າຍຂອງເຈົ້າ”. ໒ດັ່ງນັ້ນ ຢາໂຄບ
ຈຶ່ງໄດ້ກ່າວແກ່ຄອບຄົວ ແລະແກ່ຄົນທັງປວງທີ່ຢູ່ກັບທ່ານວ່າ “ຈົ່ງປະ
ຖິ້ມເສຍ ບັນດາພະຕ່າງດ້າວທີ່ຢູ່ໃນທ່າມກາງພວກເຈົ້າ ແລະຈົ່ງຊຳ
ລະຕົວໃຫ້ສະອາດ ແລະປ່ຽນຖ່າຍເສື້ອຜ້າເສຍ. ໓ເຮົາທັງຫຼາຍຈະ
ຍົກຍ້າຍຂຶ້ນໄປທີ່ ເບດເອນ ແລະຢູ່ທີ່ນັ້ນເຮົາຈະສ້າງແທ່ນບູຊາແກ່
ພຣະເຈົ້າທີ່ໄດ້ຕອບເຮົາໃນວັນທີ່ເຮົາທຸກລຳບາກໃຈ ແລະໄດ້ສະຖິດ
ຢູ່ກັບເຮົາໃນທາງທີ່ເຮົາໄດ້ໄປນັ້ນ”. ໔ພວກເຂົາໄດ້ເອົາຮູບພະຕ່າງ
ດ້າວທັງປວງທີ່ຢູ່ໃນມືຂອງພວກເຂົາກັບຕຸ້ມຫູມາໃຫ້ ຢາໂຄບ ແລ້ວ
ຢາໂຄບ ໄດ້ເອົາສິ່ງຂອງນັ້ນໄປຝັງໄວ້ໃຕ້ຕົ້ນໄມ້ສົນທີ່ຢູ່ໃກ້ເມືອງ ຊີ
ເຄມ. ໕ພວກເຂົາໄດ້ຍົກຍ້າຍເດີນທາງໄປ ແລະຄວາມຢ້ານຕໍ່ພຣະ
ເຈົ້າໄດ້ຢູ່ເໜືອຊາວເມືອງທັງຫຼາຍທີ່ອ້ອມຮອບພວກເຂົານັ້ນ ແລະ
ພວກນັ້ນບໍ່ໄດ້ໄລ່ຕິດຕາມພວກລູກຊາຍ ຢາໂຄບໄປ.

໖ສະນັ້ນ ຢາໂຄບ ກັບຄົນທັງປວງທີ່ຢູ່ນຳທ່ານກໍໄດ້ມາເຖິງເຂດ ລູເຊ,
ເມືອງ ເບດເອນ ໃນແຜນດິນ ການາອານ. ໗ຢາໂຄບ ໄດ້ກໍ່ສ້າງແທ່ນ
ບູຊາໄວ້ຢູ່ທີ່ນັ້ນ ແລະເອີ້ນຊື່ບ່ອນນັ້ນວ່າ ເອນເບດເອນ ເຫດວ່າທີ່ນັ້ນ
ພຣະເຈົ້າໄດ້ປະກົດແກ່ທ່ານ ເມື່ອຄາວປົບໜີຈາກໜ້າອ້າຍຂອງຕົນ.
໘ແລະແມ່ນົມຂອງນາງ ເຣເບກາ ຊື່ ເດໂບລາ ໄດ້ຕາຍ ແລ້ວພວກເຂົາ
ໄດ້ເອົາສົບໄປຝັງໄວ້ໃຕ້ຕົ້ນໄມ້ສົນໃຕ້ ເບດເອນ ພວກເຂົາໄດ້ເອີ້ນຊື່
ຕົ້ນໄມ້ນັ້ນວ່າ ອາໂລນບາຄຸດ.

໙ເມື່ອ ຢາໂຄບ ໄດ້ອອກມາຈາກເມືອງ ປາດັນອາຣາມ ແລ້ວ, ພຣະເຈົ້າ
ໄດ້ປະກົດແກ່ທ່ານອີກ ແລະໄດ້ອວຍພອນໃຫ້ທ່ານ. ໑໐ພຣະເຈົ້າໄດ້
ກ່າວແກ່ທ່ານວ່າ "ເຈົ້າມີຊື່ວ່າ ຢາໂຄບ, ຊື່ຂອງເຈົ້າຈະບໍ່ຖືກເອີ້ນວ່າ
ຢາໂຄບ ອີກ, ແຕ່ຈະເອີ້ນຊື່ວ່າ ອິດສະຣາເອນ ແລະພຣະອົງໄດ້ເອີ້ນ
ຊື່ທ່ານວ່າອິດສະຣາເອນ. ໑໑ພຣະເຈົ້າໄດ້ກ່າວແກ່ທ່ານວ່າ "ເຮົາແມ່ນ
ພຣະເຈົ້າອົງມລິດທານຸພາບສູງສຸດ ເຈົ້າຈົ່ງມີເຊື້ອສາຍເກີດທະວີຂຶ້ນ
ເປັນປະເທດໜຶ່ງ ແລະບັນດາປະເທດທັງຫຼາຍຈະເກີດມາຈາກເຈົ້າ
ແລະກະສັດຫຼາຍອົງຈະອອກມາຈາກແອວຂອງເຈົ້າ; ໑໒ແຜນດິນທີ່
ເຮົາໄດ້ມອບໃຫ້ແກ່ ອັບຣາຮາມ, ອີຊາກ ແລະເຮົາຈະໃຫ້ແກ່ເຈົ້າ
ດ້ວຍ ແລະ ເຮົາຈະໃຫ້ແຜນດິນນີ້ແກ່ເຊື້ອສາຍທີ່ຈະມາພາຍຫຼັງເຈົ້າ".
໑໓ແລ້ວພຣະເຈົ້າໄດ້ສະເດັດຂຶ້ນໄປຈາກທ່ານໃນບ່ອນທີ່ພຣະອົງໄດ້
ກ່າວກັບ ຢາໂຄບ ນັ້ນ. ໑໔ແລ້ວ ຢາໂຄບ ໄດ້ເອົາເສົາສຳຄັນປັກຕັ້ງໄວ້
ໃນບ່ອນນັ້ນທີ່ພຣະອົງໄດ້ກ່າວກັບທ່ານ ເປັນເສົາຫີນແລະໄດ້ເອົາ
ເຄື່ອງດື່ມບູຊາກັບນ້ຳມັນຖອກໃສ່ຍອດເສົາຫີນນັ້ນ. ໑໕ແລະ ຢາໂຄບ
ໄດ້ເອີ້ນຊື່ບ່ອນທີ່ພຣະເຈົ້າໄດ້ກ່າວກັບທ່ານນັ້ນວ່າ ເບດເອນ.

໑໖ພວກເຂົາໄດ້ຍົກຍ້າຍໄປຈາກ ເບດເອນ ແລະມາໃກ້ຈະເຖິງເມືອງ
ເອຟາຣາດ ແລະນາງ ຣາເຊນ ໄດ້ປະສູດລູກເປັນການຍາກຫຼາຍ.
໑໗ແລະຢູ່ມາເມື່ອນາງເຈັບທ້ອງຫຼາຍ ຍິງໝໍຕຳແຍໄດ້ກ່າວແກ່ນາງວ່າ
"ຢ່າຊູ່ຢ້ານ ເຫດວ່ານາງໄດ້ລູກຜູ້ຊາຍອີກ". ໑໘ແລະຢູ່ມາເມື່ອຈິດວິນ
ຍານຂອງນາງພວມອອກຈາກຕົວນັ້ນ (ເພາະນາງໄດ້ຕາຍໄປ) ນາງ
ໄດ້ເອີ້ນຊື່ລູກຊາຍນັ້ນວ່າ ເບນໂອນີ ແຕ່ພໍ່ໄດ້ເອີ້ນຊື່ວ່າ ເບນຢາມິນ.
໑໙ນາງ ຣາເຊນ ໄດ້ຕາຍໄປ ພວກເຂົາໄດ້ເອົາສົບໄປຝັງໄວ້ຮີມທາງ
ທີ່ໄປເມືອງເອຟາຣາດ ຊຶ່ງແມ່ນເມືອງ ເບດເລເຮັມ. ໒໐ແລະເມື່ອນັ້ນ
ຢາໂຄບ ໄດ້ເອົາເສົາຫີນປັກໄວ້ທີ່ເທິງບ່ອນຝັງສົບນັ້ນ, ເສົາຫີນທີ່ຊຸມ
ຝັງສົບນາງ ຣາເຊນ ຍັງຢູ່ຈົນເຖິງທຸກວັນນີ້.

໒໑ອິດສະຣາເອນ ໄດ້ຍົກຍ້າຍໄປຕັ້ງເຕັນອາໄສຢູ່ຟາກໜຶ່ງຂອງຫໍ
ຄອຍ ເອເດ. ໒໒ແລະຢູ່ມາເມື່ອ ອິດສະຣາເອນ ອາໄສທີ່ແຜນດິນນັ້ນ ຣູ
ເບນໄດ້ໄປນອນນຳນາງບິນຮາເມຍນ້ອຍຂອງພໍ່ ແລະອິດສະຣາເອນ
ໄດ້ຍິນຂ່າວເຫດການນັ້ນ, ຝ່າຍລູກຊາຍຂອງ ຢາໂຄບ ມີ 12 ຄົນ.
໒໓ລູກຊາຍນາງ ເລອາ ຊື່: ຣູເບນ ຜູ້ເປັນລູກກົກຂອງ ຢາໂຄບ, ຊີເມ
ໂອນ, ເລວີ, ຢູດາ, ອິດຊາຄາ ແລະ ຊາບູໂລນ. ໒໔ລູກຊາຍນາງ ຣາ
ເຊນ ຊື່: ໂຢເຊບ ແລະ ເບນຢາມິນ. ໒໕ລູກຊາຍ ບິນຮາ ສາວໃຊ້ຂອງ
ນາງ ຣາເຊນ ຊື່: ດານ ແລະ ເນບທາລີ. ໒໖ລູກຊາຍ ສິລະປາ ສາວໃຊ້
ຂອງນາງ ເລອາ ຊື່:ກາດ ແລະ ອາເຊ ແລະຄົນທັງຫຼາຍນີ້ແມ່ນ ລູກ
ຊາຍຂອງ ຢາໂຄບ ທີ່ໄດ້ເກີດຈາກທ່ານໃນເມືອງ ປາດັນອາຣຳ.

໒໗ແລ້ວຢາໂຄບໄດ້ມາຫາອີຊາກພໍ່ຂອງຕົນທີ່ມຳເລທີ່ເມືອງອານບາ
ຄື ເຮັບໂຣນ, ບ່ອນທີ່ ອັບຣາຮາມ ແລະ ອີຊາກ ໄດ້ອາໄສຢູ່ແຕ່ກ່ອນ.

໒໘ອາຍຸ ອີຊາກ ໄດ້ 180 ປີ. ໒໙ແລ້ວ ອີຊາກ ໄດ້ຖອດຈິດວິນຍານອອກ
ແລະຕາຍໄປ ແລະໄດ້ຮວບຮວມໄວ້ກັບພັກພວກຂອງຕົນ ທ່ານເປັນ
ຄົນເຖົ້າແກ່ ແລະອາຍຸຍືນຄົບຖ້ວນ. ເອຊາວ ແລະ ຢາໂຄບ ລູກຊາຍ
ຂອງຕົນໄດ້ເອົາສົບເພິ່ນໄປຝັງໄວ້.

*35:8 “ອາໂລນບາຄຸດ” ໃນພາສາເຮັບເຣີໝາຍຄວາມວ່າ “ຕົ້ນໄມ້ຮ້ອງໄຫ້”*

*35:21 “ເອເດ” ໃນພາສາເຮັບເຣີໝາຍຄວາມວ່າ “ຫໍຝູງສັດ”*

## ບົດທີ 36

໑ເຊື້ອສາຍຂອງ ເອຊາວ ແມ່ນ ເອໂດມ ເປັນດັ່ງນີ້: ໒ເອຊາວ ໄດ້ເອົາ
ເມຍຈາກພວກລູກສາວຊາວການາອານຄົນໜຶ່ງຊື່ວ່າອາດາ ລູກຂອງ
ເອໂລນ ຊາວ ຮິດຕີ, ຄົນໜຶ່ງຊື່ວ່າ ໂອໂຮລີບາມາ ລູກນາງ ອານາ ລູກ
ສາວ ສິເບໂອນ ຊາວ ຮີວີ. ໓ແລະຄົນໜຶ່ງຊື່ວ່າ ບາເຊມາດ ລູກ ອິດຊະ
ມາເອນ ແລະນ້ອງສາວ ເນບາໂຢດ. ໔ນາງ ອາດາ ໄດ້ປະສູດລູກໃຫ້
ເອຊາວ ຊື່ ເອລີຟາດ ແລະນາງ ບາເຊມາດ ມີລູກຊາຍຊື່ ເຣອູເອນ.
໕ນາງ ໂອໂຮລີບາມາ ມີລູກຊື່ ເຢອຸດ, ຢາລາມ ແລະ ໂກຣາ ຄົນທັງຫຼາຍ
ນີ້ແມ່ນລູກຊາຍຂອງ ເອຊາວ ທີ່ໄດ້ເກີດແກ່ທ່ານໃນແຜນດິນ ການາ
ອານ. ໖ເອຊາວ ໄດ້ເອົາເມຍກັບລູກຊາຍຍິງທັງຫຼາຍ ແລະຄົນທັງປວງ
ທີ່ຢູ່ໃນບ້ານຂອງຕົນກັບຝູງສັດທັງປວງ ກັບສັບພະທຸກສິ່ງທີ່ໄດ້ໂຮມ
ໄວ້ໃນປະເທດ ການາອານ ພາອອກໄປຈາກໜ້າ ຢາໂຄບ ນ້ອງຊາຍ
ຂອງຕົນໄປຢູ່ປະເທດອື່ນ. ໗ເພາະເຂົາທັງສອງມີເຂົ້າຂອງຫຼວງຫຼາຍ
ໂພດເກີນທີ່ຈະຢູ່ຮ່ວມກັນໄດ້, ແຜ່ນດິນທີ່ພວກເຂົາໄດ້ອາໄສນັ້ນ ກໍ
ແຄບບໍ່ສາມາດຮອງຮັບພວກເຂົາຢູ່ນຳກັນໄດ້ ເພາະພວກເຂົາມີຝູງ

ສັດຫຼາຍ. ໘ແລະ ເອຊາວ ໄດ້ໄປອາໄສຢູ່ພູເຂົາຊື່ ເຊອີ, ເອຊາວ ນັ້ນຄື
ພວກ ເອໂດມ. ໙ແລະເຊື້ອສາຍຂອງ ເອຊາວ ພໍ່ພວກ ເອໂດມ ທີ່ພູເຂົາ
ເຊອີ ກໍເປັນດັ່ງນີ້: ໑໐ຊື່ລູກຊາຍ ເອຊາວ ມີດັ່ງນີ້ຄື: ເອລີຟາດ ເປັນລູກ
ນາງ ອາດາ, ເມຍຂອງ ເອຊາວ ແລະ ເຣອູເອນ ເປັນລູກຂອງ ນາງ
ບາຊະມາດ, ເມຍຂອງ ເອຊາວ. ໑໑ເອລີຟາດ ມີລູກຊື່: ເຕມານ, ໂອ
ມານ, ເສໂຟ, ຄາຕາມ ແລະ ເກນາດ. ໑໒ນາງ ທີມນາ ເປັນເມຍນ້ອຍ
ຂອງ ເອລີຟາດ ລູກ ເອຊາວ, ນາງນັ້ນໄດ້ປະສູດລູກໃຫ້ ເອລີຟາດ ຊື່
ອາມາເລກ, ຄົນທັງຫຼາຍນີ້ແມ່ນລູກຊາຍນາງ ອາດາ ເມຍ ເອຊາວ.
໑໓ຕໍ່ໄປນີ້ແມ່ນລູກຊາຍຂອງ ເຣອູເອນ ມີ: ນາຮາດ, ເຊຣາ, ຊາມມາ
ແລະ ມິດສາ ຄົນທັງຫຼາຍນີ້ແມ່ນລູກນາງ ບາຊະມາດ ເມຍ ເອຊາວ.

໑໔ນາງ ໂອໂຮລີບາມາ ລູກນາງ ອານາ ລູກສາວຂອງ ສິເບໂອນ ເມຍ
ເອຊາວ ນາງນັ້ນໄດ້ປະສູດລູກຊາຍໃຫ້ ເອຊາວ ຊື່ ເຢອຸດ, ຢາລາມ
ແລະ ໂກຣາ.

໑໕ຄົນທັງຫຼາຍນີ້ແມ່ນພວກເຈົ້ານາຍແຫ່ງລູກຂອງ ເອຊາວ: ລູກທັງ
ຫຼາຍຂອງ ເອລີຟາດ ລູກກົກ ເອຊາວ ແມ່ນ: ເຈົ້ານາຍ ເຕມານ,
ເຈົ້ານາຍ ໂອມານ, ເຈົ້ານາຍ ເສໂຟ, ເຈົ້ານາຍ ເກນາດ, ໑໖ເຈົ້ານາຍ
ໂກຣາ, ເຈົ້ານາຍ ຄາຕາມ ແລະເຈົ້ານາຍ ອາມາເລກ, ເຈົ້ານາຍທັງ
ຫຼາຍນີ້ໄດ້ເກີດມາຈາກ ເອລີຟາດ ໃນປະເທດ ເອໂດມ ເປັນລູກຫຼານ
ນາງ ອາດາ.

໑໗ແລະຕໍ່ໄປນີ້ແມ່ນລູກທັງຫຼາຍຂອງ ເຣອູເອນ, ລູກຂອງ ເອຊາວ:
ເຈົ້ານາຍ ນາຮາດ, ເຈົ້ານາຍ ເຊຣາກ, ເຈົ້ານາຍ ຊາມມາ, ແລະເຈົ້າ

ນາຍ ມິດສາ, ເຈົ້ານາຍທັງຫຼາຍນີ້ໄດ້ເກີດມາຈາກ ເຣອູເອນ ໃນປະ
ເທດ ເອໂດມ, ເປັນລູກຂອງນາງ ບາຊະມາດ ເມຍຂອງ ເອຊາວ.

[໑໘]ແລະຄົນທັງຫຼາຍນີ້ແມ່ນລູກຂອງນາງ ໂອໂຮລີບາມາ ເມຍຂອງ
ເອຊາວ: ເຈົ້ານາຍ ເຢອຸດ, ເຈົ້ານາຍ ຢາລາມ ແລະເຈົ້ານາຍ
ໂກຣາ, ເຈົ້ານາຍທັງຫຼາຍນີ້ໄດ້ເກີດມາຈາກນາງ ໂອໂຮລີບາມາ
ລູກຂອງນາງ ອານາ ເມຍຂອງ ເອຊາວ. [໑໙]ຄົນທັງຫຼາຍນີ້ແມ່ນລູກ
ຊາຍຂອງ ເອຊາວ ຄື ເອໂດມ ແລະເຈົ້ານາຍຂອງພວກເຂົາ.

[໒໐]ຄົນທັງຫຼາຍນີ້ແມ່ນລູກຊາຍຂອງ ເຊອີ ຊາວ ໂຮຣີ, ຜູ້ໄດ້ອາໄສຢູ່ໃນ
ປະເທດນັ້ນ: ໂລຕານ, ໂຊບານ, ສີເບໂອນ, ອານາ, [໒໑]ດີໂຊນ, ເອເສ
ແລະ ດີຊານ ຄົນທັງຫຼາຍນີ້ແມ່ນເຈົ້ານາຍພວກ ໂຮຣີ, ລູກຂອງ ເຊອີ
ໃນປະເທດ ເອໂດມ. [໒໒]ແລະລູກຂອງ ໂລຕັນ ມີລູກຊື່ ໂຮຣີ ແລະ
ເຮມານ ແລະນ້ອງສາວຂອງ ໂລຕັນ ຊື່ ຕິມນາ. [໒໓]ໂຊບານ ມີລູກຊື່:
ອັນວານ, ມານາຮາດ, ເອບານ, ເຊໂຟ ແລະ ໂອນາມ. [໒໔]ສີເບໂອນ
ນັ້ນມີລູກຊື່: ອາອີຢາ ແລະນາອາ: ເປັນຄົນນັ້ນທີ່ໄດ້ພົບໂຕລໍໃນປ່າ
ເມື່ອລ້ຽງຝູງລາຂອງ ສີເບໂອນ ພໍ່ຂອງຕົນ. [໒໕]ອານາ ມີລູກຊື່: ດີໂຊນ
ແລະ ໂອໂຮລີບາມາ ຜູ້ເປັນລູກສາວຂອງ ອານາ. [໒໖]ດີໂຊນ ມີລູກຊື່:
ເຮັມດານ, ເອັດຊະບານ, ອິທະຣານ, ເຄຣານ. [໒໗]ເອດເຊເຣ ມີລູກຊື່
ບິນຮານ, ສາອາວານ ແລະ ອາການ. [໒໘]ດີຊານ ມີລູກຊື່ ອູສະ ແລະ
ອາຣານ. [໒໙]ຄົນທັງຫຼາຍນີ້ແມ່ນເຈົ້ານາຍຂອງພວກ ໂຮຣີ: ເຈົ້ານາຍ
ໂລຕັນ, ເຈົ້ານາຍ ໂຊບານ, ເຈົ້ານາຍ ສີເບໂອນ, ເຈົ້ານາຍ ອານາ,
[໓໐]ເຈົ້ານາຍ ດີໂຊນ, ເຈົ້ານາຍ ເອເສ, ເຈົ້ານາຍ ດີຊານ: ຄົນທັງຫຼາຍ
ນີ້ແມ່ນເຈົ້ານາຍຂອງພວກ ໂຮຣີ ໃນທ່າມກາງເຈົ້ານາຍທັງຫຼາຍໃນ
ແຜນດິນ ເຊອີ.

໓໑ຕໍ່ໄປນີ້ແມ່ນກະສັດທັງຫຼາຍທີ່ໄດ້ປົກຄອງໃນປະເທດເອໂດມກ່ອນ
ມີກະສັດປົກຄອງໃນພວກລູກຫຼານຂອງ ອິດສະຣາເອນ. ໓໒ກະສັດ
ເບລາ ລູກ ເບໂອ ໄດ້ປົກຄອງໃນແຜນດິນ ເອໂດມ, ເມືອງທ່ານຊື່ວ່າ
ດິນຮາບາ. ໓໓ເມື່ອ ເບລາ ໄດ້ຕາຍໄປ ແລ້ວ ໂຢບັບ ລູກຂອງ ເຊຣາ
ຊາວເມືອງໂບສະຣາ ໄດ້ຂຶ້ນປົກຄອງແທນລາວ. ໓໔ເມື່ອ ໂຢບັບ ໄດ້
ຕາຍໄປ ແລ້ວ ຮູຊາມ ຊາວປະເທດ ເຕມານ ໄດ້ຂຶ້ນປົກຄອງແທນ
ລາວ. ໓໕ເມື່ອ ຮູຊາມ ໄດ້ຕາຍໄປ ແລ້ວ ຮາດັດ ລູກ ເບດັດ ໄດ້ຂຶ້ນ
ປົກຄອງແທນລາວ, ຜູ້ໄດ້ຕີຊະນະພວກ ມີດີອານ ໃນທົ່ງ ໂມອາບ
ແລະຂຶ້ນປົກຄອງແທນ ເມືອງຫຼວງຂອງທ່ານຊື່ວ່າ ອາວິດ. ໓໖ເມື່ອ
ຮາດັດ ໄດ້ຕາຍໄປ ແລ້ວ ຊາມລາ ຊາວເມືອງ ມາສະເຣກາ ໄດ້
ຂຶ້ນປົກຄອງແທນລາວ. ໓໗ເມື່ອ ຊາມລາ ໄດ້ຕາຍໄປ ແລ້ວ ຊາອູນ
ຊາວເມືອງ ເຣໂຮໂບດ ຢູ່ທີ່ຮີມແມ່ນ້ຳກໍໄດ້ຂຶ້ນປົກຄອງແທນລາວ.
໓໘ເມື່ອ ຊາອູນ ໄດ້ຕາຍໄປ ແລ້ວ ບາອານຮານານ ລູກຂອງ ອັກໂບ
ໄດ້ຂຶ້ນປົກຄອງແທນລາວ. ໓໙ເມື່ອ ບາອານຮານານ ລູກຂອງ ອັກ
ໂບ ໄດ້ຕາຍໄປ ແລ້ວ ຮາດາ ໄດ້ຂຶ້ນປົກຄອງແທນລາວ ແລະເມືອງ
ຫຼວງຂອງທ່ານຊື່ວ່າ ປາອູ ແລະເມຍທ່ານຊື່ວ່ານາງ ເມເຫຕາເບນ,
ລູກສາວຂອງນາງ ມັດເຣດ, ລູກສາວຂອງ ເມສາຮາບ.

໔໐ ຕໍ່ໄປນີ້ແມ່ນຊື່ພວກເຈົ້ານາຍຂອງ ເອຊາວ ຕາມຄອບຄົວ, ຕາມ
ບ່ອນຢູ່, ຕາມຊື່ຂອງພວກເຂົາເປັນດັ່ງນີ້: ເຈົ້ານາຍ ຕິມນາ, ເຈົ້ານາຍ
ອານວາ, ເຈົ້ານາຍ ຢາເທັດ, ໔໑ເຈົ້ານາຍ ໂອໂຮລີບາມາ, ເຈົ້ານາຍ
ເອລາ, ເຈົ້ານາຍ ປີໂນນ, ໔໒ເຈົ້ານາຍ ເກນັດ, ເຈົ້ານາຍ ເຕມານ,
ເຈົ້ານາຍ ມິບສາ, ໔໓ເຈົ້ານາຍ ມັກດີເອນ ແລະ ເຈົ້ານາຍ ອີຣາມ:
ຄົນທັງຫຼາຍນີ້ແມ່ນເຈົ້ານາຍ ເອໂດມ ຕາມບ່ອນຢູ່ຂອງເຂົາໃນ

ປະເທດທີ່ເປັນແຜນດິນມູນມໍລະດົກຂອງເຂົາ, ເອຊາວ ແມ່ນພໍ່ຊາວ
ເອໂດມ.

## ບົດທີ 37

໑ຢາໂຄບ ໄດ້ມາອາໄສຢູ່ໃນແຜນດິນ ທີ່ພໍ່ຂອງຕົນໄດ້ອາໄສຢູ່ເປັນ
ຄົນຕ່າງດ້າວແຕ່ກ່ອນໃນແຜນດິນ ການາອານ. ໒ເຊື້ອສາຍຂອງ ຢາ
ໂຄບ ເປັນດັ່ງນີ້: ໂຢເຊບ ເມື່ອອາຍຸ 17 ປີ ໄດ້ລ້ຽງຝູງສັດນ້ອຍກັບ
ພວກອ້າຍ ແລະເມື່ອຍັງໜຸ່ມລາວກໍຢູ່ກັບພວກລູກນາງ ບິນຮາ ແລະ
ກັບລູກ ນາງ ສີລະປາ ຜູ້ເປັນເມຍພໍ່ຂອງຕົນ ແລະ ໂຢເຊບ ໄດ້ເອົາ
ຄວາມຊົ່ວທີ່ພວກອ້າຍໄດ້ກະທຳ ມາບອກໃຫ້ພໍ່ຟັງ. ໓ອິດສະຣາເອນ
ໄດ້ຮັກ ໂຢເຊບ ຫຼາຍກວ່າລູກທັງໝົດ ເພາະວ່າ ໂຢເຊບ ໄດ້ເກີດເມື່ອ
ເວລາຕົນແກ່ເຖົ້າແລ້ວ ແລະທ່ານໄດ້ເຮັດເສື້ອສີລາຍຕ່າງໆໃຫ້ແກ່
ໂຢເຊບ. ໔ແລະພວກອ້າຍໄດ້ເຫັນວ່າພໍ່ໄດ້ຮັກ ໂຢເຊບ ຫຼາຍກວ່າ
ອ້າຍທັງໝົດ, ພວກເຂົາຈຶ່ງຊັງໂຢເຊບ ແລະເວົ້າດີກັບລາວບໍ່ໄດ້.

໕ໂຢເຊບ ໄດ້ຝັນແລະໄດ້ເລົ່າເລື່ອງຄວາມຝັນໃຫ້ພວກອ້າຍຟັງ ພວກ
ເຂົາຍິ່ງໄດ້ຊັງລາວຫຼາຍຂຶ້ນກວ່າເກົ່າອີກ. ໖ໂຢເຊບ ໄດ້ກ່າວແກ່
ພວກເຂົາວ່າ "ພວກເຈົ້າຈົ່ງຟັງຄວາມຝັນທີ່ຂ້ອຍໄດ້ຝັນນັ້ນ: ໗ເບິ່ງແມ
ພວກກຳລັງເຮົາພາກັນມັດຟ່ອນເຂົ້າຢູ່ໃນນາ ແລະທັນໃດນັ້ນ ຟ່ອນ
ເຂົ້າຂອງຂ້ອຍໄດ້ຕັ້ງຂຶ້ນຢືນຢູ່ແລະເບິ່ງແມ ຟ່ອນເຂົ້າຂອງພວກອ້າຍ
ໄດ້ພາກັນມາລ້ອມຮອບ ແລະກາບໄຫວ້ຟ່ອນເຂົ້າຂອງຂ້ອຍ". ໘ແລ້ວ
ອ້າຍທັງຫຼາຍໄດ້ຕອບລາວວ່າ "ເຈົ້າຈະປົກຄອງພວກເຮົາຈິງຫຼື? ເຈົ້າ
ຈະມີອຳນາດເໜືອພວກເຮົາຈິງຫຼື?" ແລ້ວພວກເຂົາຍິ່ງຊັງລາວຫຼາຍ

ຂຶ້ນກວ່າເກົ່າອີກ ຍ້ອນຄວາມຝັນ ແລະຖ້ອຍຄຳຂອງລາວ. ໙ໂຢເຊບ
ໄດ້ຝັນອີກ ແລະໄດ້ເລົ່າຄວາມຝັນນັ້ນໃຫ້ພວກອ້າຍຟັງ ແລະລາວໄດ້
ກ່າວວ່າ“ຂ້ອຍໄດ້ຝັນອີກ ແລະເບິ່ງແມ ດວງຕາເວັນ,ດວງເດືອນ ແລະ
ດາວ 11 ດວງໄດ້ກາບໄຫວ້ຂ້ອຍ”. ໑໐ແລ້ວລາວໄດ້ເລົ່າເລື່ອງນີ້ໃຫ້ພໍ່
ແລະພວກອ້າຍຟັງ, ພໍ່ໄດ້ຕິຕຽນ ແລະໄດ້ກ່າວແກ່ລາວວ່າ “ຄວາມ
ຝັນທີ່ເຈົ້າໄດ້ຝັນນີ້ຈະແມ່ນຫຍັງ? ພໍ່ກັບແມ່ແລະອ້າຍທັງຫຼາຍຂອງ
ເຈົ້າຈະມາໝູບໜ້າລົງກາບໄຫວ້ເຈົ້າເຖິງດິນຈິງຫຼື?” ໑໑ແລະອ້າຍທັງ
ຫຼາຍໄດ້ອິດສາລາວ ແຕ່ວ່າພໍ່ໄດ້ເກັບຮັກສາຖ້ອຍຄຳນັ້ນໄວ້ໃນໃຈ.

໑໒ແລ້ວພວກອ້າຍໄດ້ໄປລ້ຽງຝູງສັດຂອງພໍ່ຢູ່ທີ່ເມືອງ ຊີເຄມ. ໑໓ອິດ
ສະຣາເອນ ໄດ້ກ່າວແກ່ ໂຢເຊບ ວ່າ “ພວກອ້າຍຂອງເຈົ້າລ້ຽງຝູງ
ສັດຢູ່ທີ່ເມືອງ ຊີເຄມ ບໍ່ແມ່ນຫຼື? ມານີ້ ພໍ່ຈະໃຊ້ເຈົ້າໄປຫາພວກເຂົາ”
ໂຢເຊບ ໄດ້ຕອບພໍ່ວ່າ “ຂ້ອຍຢູ່ທີ່ນີ້”. ໑໔ພໍ່ໄດ້ບອກ ໂຢເຊບ ວ່າ “ພໍ່ຂໍ
ໃຫ້ເຈົ້າໄປເບິ່ງພວກອ້າຍຂອງເຈົ້າຍັງຢູ່ສະບາຍດີຫຼືບໍ່? ແລະຝູງສັດ
ນັ້ນຍັງດີຢູ່ຫຼືບໍ່? ແລະຈິ່ງກັບມາບອກຂ່າວໃຫ້ພໍ່ຮູ້ຈັກ.” ພໍ່ໄດ້ໃຊ້ ໂຢ
ເຊບ ໄປຈາກຮ່ອມພູ ເຮັບໂຣນ ແລະລາວໄດ້ໄປທີ່ເມືອງ ຊີເຄມ.

໑໕ແລ້ວຊາຍຜູ້ໜຶ່ງໄດ້ພົບ ໂຢເຊບ ແລະເບິ່ງແມ ໂຢເຊບຍ່າງວົນໄປ
ມາໃນທົ່ງນາ, ຊາຍນັ້ນຈິ່ງຖາມລາວວ່າ “ເຈົ້າຊອກຫາຫຍັງ?” ໑໖ໂຢ
ເຊບ ໄດ້ຕອບວ່າ “ຂ້ອຍຊອກຫາພວກອ້າຍຂອງຂ້ອຍ, ຂໍທ່ານບອກ
ຂ້ອຍແດ່ເທີ້ນ ພວກເຂົາລ້ຽງຝູງສັດຢູ່ທີ່ໃດ”. ໑໗ຊາຍນັ້ນໄດ້ຕອບວ່າ
“ເຂົາໄດ້ອອກຈາກທີ່ນີ້ແລ້ວ ເພາະຂ້ອຍໄດ້ຍິນເຂົາເວົ້າວ່າ ‘ພວກ
ເຮົາຈົ່ງໄປທີ່ເມືອງ ໂດທານ ເຖີດ’” ແລ້ວ ໂຢເຊບ ໄດ້ຕາມພວກອ້າຍ
ຂອງຕົນໄປແລະໄດ້ພົບພວກເຂົາທີ່ເມືອງ ໂດທານ. ໑໘ເມື່ອພວກອ້າຍ

ໄດ້ເຫັນ ໂຢເຊບ ພວມມາແຕ່ໄກ ແລະກ່ອນລາວຈະເຂົ້າມາໃກ້,
ພວກເຂົາໄດ້ຮ່ວມກັນຄິດອຸບາຍຊົ່ວຈະຂ້າລາວເສຍ. ໑໙ພວກເຂົາໄດ້
ເວົ້າກັນວ່າ “ເບິ່ງແມ ເຈົ້ານັກຝັນຜູ້ນີ້ກຳລັງມາ. ໒໐ເຫດສະນັ້ນ ຈົ່ງມາ
ເທີ້ນ ໃຫ້ພວກເຮົາຂ້າມັນເສຍ ແລະເອົາຖິ້ມລົງນ້ຳສ້າງແຫ່ງໜຶ່ງ ແລ້ວ
ພວກເຮົາຈະເວົ້າວ່າ ‘ສັດຮ້າຍໄດ້ມາກັດກິນມັນເສຍ’ ແລະພວກ
ເຮົາຈະເບິ່ງວ່າຄວາມຝັນຂອງມັນຈະເກີດເປັນຢ່າງໃດ”. ໒໑ຣູເບນ
ໄດ້ຍິນຄຳນັ້ນແລະຢາກຊ່ອຍລາວໃຫ້ພົ້ນຈາກເງື້ອມມືຂອງພວກ
ເຂົາ ແລະໄດ້ກ່າວວ່າ “ພວກເຮົາຢ່າຂ້າມັນເທາະ”. ໒໒ຣູເບນໄດ້ກ່າວ
ແກ່ພວກເຂົາວ່າ “ຢ່າເຮັດໃຫ້ເລືອດໄຫຼອອກເລີຍ ເອົາມັນໄປຖິ້ມລົງ
ນ້ຳສ້າງທີ່ປ່ານີ້ ຢ່າໃຫ້ມືເຮົາຈັບຕ້ອງມັນເທາະ” ເພາະວ່າ ຣູເບນ
ໄດ້ຄິດທີ່ຈະຊ່ອຍນ້ອງໃຫ້ພົ້ນຈາກມືພວກເຂົາ ເພື່ອຈະໄດ້ນຳໄປສົ່ງ
ໃຫ້ພໍ່ອີກ. ໒໓ແລະຢູ່ມາເມື່ອ ໂຢເຊບ ໄດ້ມາເຖິງພວກອ້າຍແລ້ວ
ພວກເຂົາໄດ້ພາກັນຖອດເສື້ອ ໂຢເຊບ ອອກເສຍ ແມ່ນເສື້ອສີລາຍ
ຕ່າງໆ ທີ່ລາວນຸ່ງຫົ່ມ.໒໔ພວກເຂົາໄດ້ພາກັນຈັບເອົາລາວ ແລະຖິ້ມລົງ
ໃນນ້ຳສ້າງ, ແຕ່ນ້ຳສ້າງນັ້ນຫວ່າງເປົ່າບໍ່ມີນ້ຳ. ໒໕ແລ້ວພວກເຂົາກໍ
ພາກັນນັ່ງລົງກິນເຂົ້າ ແລະເມື່ອພວກເຂົາໄດ້ເງີຍໜ້າຂຶ້ນ ແລະເບິ່ງ
ແນໄດ້ເຫັນພວກຊາວອິດຊະມາເອນມາແຕ່ເມືອງກີເລອາດມີຝູງອູດ
ຖືເຄື່ອງຫອມກັບກຳຍານ ແລະຢາງໄມ້ຫອມຈະເອົາລົງໄປທີ່ປະເທດ
ເອຢິບ. ໒໖ຢູດາ ໄດ້ກ່າວແກ່ອ້າຍນ້ອງທັງປວງວ່າ “ຖ້າພວກເຮົາຈະ
ຂ້ານ້ອງເສຍ ແລະເຊື່ອງເລືອດໄວ້ ຈະມີປະໂຫຍດອັນໃດ? ໒໗ມາ
ເທີ້ນ ໃຫ້ພວກເຮົາຂາຍນ້ອງໃຫ້ພວກ ອິດຊະມາເອນ ນີ້, ຢ່າໃຫ້ມື
ເຮົາຈັບຕ້ອງລາວ ເຫດວ່າ ລາວກໍແມ່ນນ້ອງຊາຍ, ແມ່ນເນື້ອໜັງອັນ
ດຽວກັບພວກເຮົາ”. ແລະພວກອ້າຍນ້ອງຂອງລາວກໍພໍໃຈ. ໒໘ພວກ
ພໍ່ຄ້າຊາວ ມີດີອານ ໄດ້ກາຍມາທາງນັ້ນ, ພວກເຂົາໄດ້ພາກັນໄປດຶງ

ແລະຍົກເອົາ ໂຢເຊບ ຂຶ້ນຈາກນ້ຳສ້າງ ແລະໄດ້ຂາຍ ໂຢເຊບ ໃຫ້
ແກ່ພວກ ອິດຊະມາເອນ ໄດ້ເງິນ 20 ຫຼຽນ ແລະພວກພໍ່ຄ້ານີ້ໄດ້ເອົາ
ໂຢເຊບ ໄປຍັງປະເທດ ເອຢິບ.

໒໙ແລ້ວ ຣູເບນ ໄດ້ກັບໄປທີ່ນ້ຳສ້າງ ແລະເບິ່ງແມ ໂຢເຊບ ບໍ່ໄດ້ຢູ່
ທີ່ນ້ຳສ້າງແລ້ວ ລາວໄດ້ຈີກເສື້ອຜ້າຂອງຕົນ. ໓໐ແລະໄດ້ໄປຫານ້ອງ
ທັງຫຼາຍແລະກ່າວວ່າ "ເດັກນ້ອຍນັ້ນບໍ່ຢູ່ໃນທີ່ນັ້ນແລ້ວ ແລະຂ້ອຍ
ຈະໄປທີ່ໃດ?"

໓໑ພວກເຂົາໄດ້ພາກັນເອົາເສື້ອຂອງ ໂຢເຊບ ມາ ແລະໄດ້ຂ້າແບ້
ນ້ອຍຜູ້ຕົວໜຶ່ງ ແລ້ວໄດ້ເອົາເສື້ອນັ້ນຈຸ່ມລົງໃນເລືອດ, ໓໒ແລ້ວເອົາ
ເສື້ອສີລາຍຕ່າງໆ ຝາກສິ່ງໄປໃຫ້ພໍ່ເບິ່ງ ແລະໄດ້ກ່າວວ່າ "ພວກເຮົາ
ໄດ້ພົບເສື້ອນີ້ ຂໍໃຫ້ພໍ່ເບິ່ງວ່າແມ່ນເສື້ອລູກຊາຍຂອງພໍ່ຫຼືບໍ່". ໓໓ພໍ່
ໄດ້ຈື່ເສື້ອນັ້ນ ແລະໄດ້ກ່າວວ່າ "ອັນນີ້ແມ່ນເສື້ອຂອງລູກຊາຍເຮົາແທ້
ສັດຮ້າຍຕົວໜຶ່ງໄດ້ກັດກິນລາວເສຍ, ໂຢເຊບ ຕ້ອງຖືກຈີກປັນຕ່ອນໆ
ແນ່ນອນ". ໓໔ຢາໂຄບ ໄດ້ຈີກເສື້ອຜ້າຂອງຕົນ ແລະໄດ້ເອົາຜ້າກະ
ສອບເຂົ້າມານຸ່ງ ຮ້ອງໄຫ້ໂສກເສົ້າຍ້ອນລູກຊາຍຢູ່ຫຼາຍວັນ. ໓໕ແລະ
ລູກຊາຍຍິງທັງປວງຂອງທ່ານໄດ້ພາກັນລຸກຂຶ້ນມາເລົ້າໂລມໃຈ
ທ່ານ, ແຕ່ວ່າທ່ານບໍ່ຮັບຄວາມເລົ້າໂລມໃຈ ແລະໄດ້ກ່າວວ່າ "ເຮົາ
ຈະໂສກເສົ້າຈົນເຖິງເຮົາຈະລົງໄປໃນຫຼຸມຝັງສົບຕາມລູກເຮົາໄປ"
ນັ້ນຄືພໍ່ຂອງທ່ານໄດ້ຮ້ອງໄຫ້ຍ້ອນ ໂຢເຊບ. ໓໖ແລ້ວພວກມີດີອານ
ໄດ້ເອົາ ໂຢເຊບ ໄປຂາຍໃຫ້ແກ່ຂຸນນາງຊື່ ໂປຕີຟາ ຜູ້ເປັນນາຍ
ທະຫານຮັກສາກະສັດ ຟາໂຣ ໃນປະເທດ ເອຢິບ.

# ບົດທີ 38

໑ແລະຢູ່ມາຄາວນັ້ນ ຢູດາ ໄດ້ເດີນທາງອອກຈາກພວກອ້າຍນ້ອງໄປ
ອາໄສຢູ່ກັບຄົນໜຶ່ງຊື່ ຮີຣາ ເປັນຊາວ ອາດູລາມ. ໒ແລະທີ່ນັ້ນ ຢູດາ ໄດ້
ເຫັນຍິງຜູ້ໜຶ່ງເປັນຊາວ ການາອານ ຊື່ ຊູອາ, ທ່ານໄດ້ແຕ່ງງານກັບຍິງ
ນັ້ນ ແລະເຂົ້າໄປຫາລາວ. ໓ຍິງນັ້ນໄດ້ຖືພາ ແລະປະສູດລູກຊາຍ
ແລະເອີ້ນຊື່ວ່າ ເອຣະ. ໔ລາວໄດ້ຖືພາອີກ ແລະປະສູດລູກຊາຍອີກ
ແລະເອີ້ນຊື່ວ່າ ໂອນານ. ໕ລາວຍັງໄດ້ປະສູດລູກຊາຍອີກ ແລະເອີ້ນ
ຊື່ວ່າ ເຊລາ, ເມື່ອລາວໄດ້ປະສູດຜູ້ນີ້ ຢູດາ ຢູ່ທີ່ ເກຊິບ. ໖ແລ້ວ ຢູດາ
ໄດ້ເອົາຍິງຜູ້ໜຶ່ງຊື່ ຕາມາ ໃຫ້ເປັນເມຍຂອງ ເອຣະ ລູກຊາຍກົກຂອງ
ຕົນ. ໗ເອຣະ ລູກຊາຍກົກຂອງ ຢູດາ ເປັນຄົນຊົ່ວຮ້າຍຫຼາຍຕໍ່ພຣະ
ພັກພຣະເຢໂຮວາ; ພຣະເຢໂຮວາໄດ້ຂ້າລາວເສຍ. ໘ຢູດາ ໄດ້ກ່າວ
ແກ່ ໂອນານ ວ່າ “ເຈົ້າຈົ່ງໄປຫາເມຍອ້າຍຂອງເຈົ້າ ແລະຈົ່ງສືບເຊື້ອ
ສາຍອ້າຍຂອງເຈົ້າໄວ້”. ໙ໂອນານ ໄດ້ຮູ້ວ່າເຊື້ອສາຍນັ້ນຈະບໍ່ແມ່ນ
ຂອງຕົນ, ເມື່ອໄດ້ໄປຫາເມຍອ້າຍນັ້ນ ລາວໄດ້ໃຫ້ນ້ຳການຕົກລົງທີ່
ດິນເສຍ ຢ້ານວ່າຈະໃຫ້ມີເຊື້ອສາຍໃຫ້ແກ່ອ້າຍຂອງຕົນ. ໑໐ແລະ
ການທີ່ ໂອນານ ໄດ້ເຮັດນັ້ນເປັນການຊົ່ວຕໍ່ພຣະພັກພຣະເຢໂຮວາ,
ພຣະອົງຈຶ່ງໄດ້ຂ້າລາວເສຍເໝືອນກັນ. ໑໑ແລ້ວ ຢູດາ ໄດ້ບອກນາງ
ຕາມາ ຜູ້ເປັນລູກໃພ້ວ່າ “ເຈົ້າຈົ່ງຄອຍເປັນແມ່ໝ້າຍຢູ່ໃນເຮືອນພໍ່
ຂອງເຈົ້າເທີ້ນ ຈົນເຖິງ ເຊລາ ລູກຊາຍຂອງເຮົາຈະໃຫຍ່” ເພາະລາວ
ໄດ້ກ່າວວ່າ “ຢ້ານວ່າ ເຊລາ ຈະຕາຍໄປເໝືອນດັ່ງອ້າຍຂອງລາວ”
ນາງ ຕາມາ ໄດ້ໄປອາໄສຢູ່ໃນເຮືອນພໍ່ຂອງຕົນ.

໑໒ຢູ່ມາຜ່ານການເວລາມາ ລູກສາວຂອງ ຊູອາ ເມຍຂອງ ຢູດາ ໄດ້
ຕາຍໄປ ແລະ ຢູດາ ໄດ້ຄວາມເລົ້າໂລມໃຈ ແລະໄດ້ຂຶ້ນໄປຫາຄົນ

ທັງຫຼາຍທີ່ຕັດຂົນແກະຂອງຕົນທີ່ບ້ານ ຕິມນາ ລາວໄດ້ໄປກັບ ຮີຣາ
ຊາວ ອາດູລາມ ສ່ຽວຂອງຕົນ. ໑໓ແລະມີຄົນໄປບອກນາງ ຕາມາ ວ່າ
"ເບິ່ງແມ ພໍ່ຜົວຂອງເຈົ້າຂຶ້ນໄປທີ່ເມືອງ ຕິມນາ ເພື່ອຕັດຂົນແກະ".
໑໔ແລະຍິງນັ້ນໄດ້ຖອດເສື້ອສຳຫຼັບແມ່ໝ້າຍອອກເສຍ ແລະໄດ້ເອົາ
ຜ້າປົກຫົວບັງໜ້າຕົນ ແລະໄປນັ່ງຢູ່ທີ່ບ່ອນກາງແຈ້ງໃນທາງທີ່ຈະໄປ
ຕິມນາ ເພາະນາງໄດ້ເຫັນວ່າ ເຊລາ ໄດ້ໃຫຍ່ແລ້ວ ແຕ່ນາງຍັງບໍ່ໄດ້
ຖືກຍົກໃຫ້ເປັນເມຍຂອງລາວ. ໑໕ແລ້ວ ຢູດາ ໄດ້ເຫັນຍິງນັ້ນ ແລະຄິດ
ວ່ານາງເປັນແມ່ຈ້າງ ເພາະລາວເອົາຜ້າປົກບັງໜ້າໄວ້. ໑໖ແລ້ວທ່ານ
ໄດ້ແວ່ເຂົ້າໄປຫານາງທີ່ແຄມທາງ ແລະໄດ້ກ່າວວ່າ "ຂໍອະນຸຍາດໃຫ້
ເຮົາເຂົ້າໄປຫາເຈົ້າ" (ເຫດວ່າທ່ານບໍ່ຮູ້ວ່າຍິງນັ້ນແມ່ນລູກໃພ້ຂອງ
ຕົນ) ແລ້ວຍິງນັ້ນໄດ້ຖາມວ່າ "ທ່ານຈະເອົາສິ່ງໃດໃຫ້ກັບຂ້ານ້ອຍ
ເພື່ອທ່ານຈະມາຫາຂ້ານ້ອຍໄດ້?" ໑໗ຢູດາ ໄດ້ຕອບວ່າ "ເຮົາຈະ
ຝາກລູກແບ້ມາຈາກຝູງ ສິ່ງມາໃຫ້ເຈົ້າໂຕໜຶ່ງ" ແລ້ວຍິງນັ້ນໄດ້ຖາມ
ວ່າ "ທ່ານຈະເອົາສິ່ງໃດມາມັດຈຳໄວ້ ຈົນກວ່າຈະໄດ້ລູກແບ້ນັ້ນ?"
໑໘ຢູດາ ໄດ້ຖາມວ່າ "ເຮົາຈະເອົາສິ່ງໃດມາມັດຈຳໄວ້?" ແລ້ວຍິງນັ້ນ
ໄດ້ຕອບວ່າ "ຂໍເຄື່ອງປະທັບຕາ, ເຊືອກນ້ອຍ ແລະໄມ້ເທົ້າທີ່ຢູ່ໃນມື
ຂອງທ່ານ" ຢູດາ ໄດ້ຍອມໃຫ້ແລະໄດ້ເຂົ້າໄປຫາຍິງນັ້ນ ແລ້ວຍິງນັ້ນ
ໄດ້ຖືພາຍ້ອນ ຢູດາ. ໑໙ຍິງນັ້ນໄດ້ລຸກຂຶ້ນກັບໄປບ້ານ ແລະຖອດຜ້າ
ທີ່ບັງໜ້າອອກເສຍ ແລ້ວນຸ່ງຫົ່ມເສື້ອຜ້າສຳຫຼັບແມ່ໝ້າຍອີກ. ໒໐ແລ້ວ
ຢູດາ ໄດ້ເອົາລູກແບ້ຝາກສ່ຽວຊາວອາດູລາມ ໄປໄຖ່ເອົາຂອງມັດຈຳ
ຈາກມືຂອງຍິງນັ້ນ ແຕ່ວ່າລາວບໍ່ໄດ້ພົບຍິງນັ້ນ. ໒໑ລາວໄດ້ຖາມຄົນ
ທັງຫຼາຍທີ່ຢູ່ບ່ອນນັ້ນວ່າ "ຍິງແມ່ຈ້າງທີ່ນັ່ງຢູ່ບ່ອນກາງແຈ້ງ ໃນແຄມ
ທາງນັ້ນໄປໃສ?" ເຂົາໄດ້ຕອບວ່າ"ທີ່ນີ້ບໍ່ໄດ້ມີຍິງແມ່ຈ້າງ". ໒໒ລາວໄດ້
ກັບໄປຫາ ຢູດາ ແລະກ່າວວ່າ "ເຮົາຊອກຫາຍິງນັ້ນບໍ່ພົບ ແລະຄົນທັງ

ປວງທີ່ຢູ່ນັ້ນໄດ້ກ່າວວ່າ ທີ່ນີ້ບໍ່ໄດ້ມີຍິງແມ່ຈ້າງ". [໒໓]ຢູດາ ໄດ້ກ່າວວ່າ "ໃຫ້ຍິງນັ້ນເອົາຂອງມັດຈຳໄວ້ເທີ້ນບໍ່ດັ່ງນັ້ນເຮົາຈະມີຄວາມລະອາຍເບິ່ງເຖີດ ເຮົາໄດ້ສົ່ງລູກແບ້ໄປໃຫ້ແລ້ວ ແຕ່ເຈົ້າບໍ່ໄດ້ພົບຍິງນັ້ນ".

[໒໔]ແລ້ວຢູ່ມາອີກປະມານສາມເດືອນ ມີຄົນມາບອກ ຢູດາ ວ່າ "ນາງຕາມາ ລູກໃພ້ຂອງທ່ານໄດ້ເປັນຍິງໂສເພນີແລະເບິ່ງແມ ດຽວນີ້ລາວຖືພາດ້ວຍການຜິດຊາຍແລ້ວ" ຢູດາ ໄດ້ບອກວ່າ "ຈົ່ງພາລາວອອກມາທີ່ນີ້ ແລະເຜົາໄຟເສຍ". [໒໕]ເມື່ອເຂົາກຳລັງພາຍິງນັ້ນອອກມາ, ຍິງນັ້ນໄດ້ໃຊ້ຄົນໄປຫາພໍ່ຂອງຜົວບອກວ່າ "ຂ້ານ້ອຍຖືພາຍ້ອນຜູ້ເປັນເຈົ້າຂອງສິ່ງນີ້ແຫຼະ ຂໍຈົ່ງພິຈາລະເບິ່ງເຄື່ອງປະທັບຕາ, ເຊືອກນ້ອຍແລະໄມ້ເທົ້ານີ້ວ່າແມ່ນຂອງຜູ້ໃດ". [໒໖]ແລ້ວ ຢູດາ ໄດ້ຮັບຮູ້ແລ້ວ ແລະກ່າວວ່າ "ຍິງຜູ້ນີ້ໄດ້ເປັນຄົນຊອບທຳກວ່າຂ້ອຍ, ເຫດວ່າຂ້ອຍບໍ່ໄດ້ຍົກນາງໃຫ້ເປັນເມຍຂອງ ເຊລາ ລູກຊາຍຂ້ອຍ" ແລະ ຢູດາ ບໍ່ໄດ້ເຂົ້າຫາຍິງນັ້ນອີກຕໍ່ໄປ.

[໒໗]ແລະຢູ່ມາເມື່ອເວລາກຳນົດຍິງນັ້ນຈະປະສູດລູກ ກໍເຫັນວ່າມີລູກຝາແຝດໃນທ້ອງລາວ. [໒໘]ແລະຢູ່ມາເມື່ອລາວໄດ້ປະສູດລູກນັ້ນ ລູກຄົນໜຶ່ງໄດ້ເອົາມືຍື່ນອອກມາກ່ອນ ຍິງໝໍຕຳແຍໄດ້ເອົາຝ້າຍແດງມັດທີ່ຂໍ້ແຂນໄວ້ ກ່າວວ່າ "ຜູ້ນີ້ໄດ້ອອກມາກ່ອນ". [໒໙]ແລະຢູ່ມາເມື່ອລູກນັ້ນໄດ້ເອົາມືຫົດເຂົ້າໄປຄືນ ແລະລູກອີກຄົນໜຶ່ງຈຶ່ງອອກມາກ່ອນ ຍິງໝໍຕຳແຍຈຶ່ງໄດ້ກ່າວວ່າ "ເຈົ້າແຫກອອກມາໄດ້ຢ່າງໃດ? ເຈົ້າໄດ້ແຫກອອກມາ" ເຫດສະນັ້ນຈຶ່ງເອີ້ນຊື່ວ່າ ເປເຣດ. [໓໐]ພາຍຫຼັງນັ້ນ ຜູ້ທີ່ມີຝ້າຍແດງມັດທີ່ຂໍ້ແຂນ ໄດ້ອອກມາຈຶ່ງເອີ້ນຊື່ວ່າ ເຊຣາ.

# ບົດທີ 39

໑ເຂົາໄດ້ພາ ໂຢເຊບ ລົງໄປຍັງປະເທດ ເອຢິບ ແລະຊາວ ເອຢິບ ຜູ້ໜຶ່ງ
ຊື່ ໂປຕີຟາ ຜູ້ເປັນນາຍທະຫານຮັກສາກະສັດ ຟາໂຣ ກໍໄດ້ຊື້ເອົາ
ໂຢເຊບ ຈາກມືພວກ ອິດຊະມາເອນ ທີ່ໄດ້ເອົາລາວລົງໄປໃນທີ່ນັ້ນ.
໒ພຣະເຢໂຮວາໄດ້ສະຖິດຢູ່ກັບ ໂຢເຊບ ແລະລາວມີຄວາມສຸກຈະ
ເລີນຂຶ້ນ ລາວຢູ່ໃນເຮືອນຊາວ ເອຢິບ ນາຍຂອງຕົນ. ໓ແລະນາຍຂອງ
ໂຢເຊບ ໄດ້ເຫັນວ່າພຣະເຢໂຮວາໄດ້ສະຖິດຢູ່ກັບລາວ ແລະເຫັນວ່າ
ພຣະເຢໂຮວາໄດ້ໂຜດໃຫ້ການງານທັງສິ້ນທີ່ລາວໄດ້ເຮັດຈະເລີນ
ຂຶ້ນໃນມືຂອງລາວ. ໔ໂຢເຊບໄດ້ຮັບຄວາມກະລຸນາໃນສາຍຕາຂອງ
ນາຍຕົນ, ໄດ້ບົວລະບັດນາຍ ແລະນາຍໄດ້ຕັ້ງ ໂຢເຊບ ໃຫ້ເປັນຜູ້
ປົກຄອງຮັກສາການງານໃນເຮືອນ ແລະໄດ້ມອບສິ່ງຂອງທັງປວງໄວ້
ໃນມືຂອງຕົນ. ໕ແລະຢູ່ມານັບຕັ້ງແຕ່ ໂປຕີຟາ ໄດ້ແຕ່ງຕັ້ງ ໂຢເຊບ
ໄວ້ໃຫ້ເປັນຜູ້ປົກຄອງຮັກສາການງານທັງປວງໃນເຮືອນຂອງຕົນ
ແລ້ວ, ພຣະເຢໂຮວາໄດ້ອວຍພອນໃຫ້ຄອບຄົວຊາວ ເອຢິບ ນັ້ນຍ້ອນ
ໂຢເຊບ, ພຣະເຢໂຮວາໄດ້ອວຍພອນສິ່ງທັງປວງທີ່ທ່ານມີຢູ່ໃນ
ເຮືອນແລະໃນທົ່ງນາ. ໖ນາຍໄດ້ມອບສິ່ງຂອງທັງປວງຂອງຕົນໄວ້ໃນ
ມືຂອງໂຢເຊບ ແລະບໍ່ໄດ້ສົນໃຈສິ່ງໜຶ່ງສິ່ງໃດ ເວັ້ນໄວ້ຈະກິນອາຫານ
ເທົ່ານັ້ນ ອັນໜຶ່ງ ໂຢເຊບ ເປັນຄົນຮູບງາມແລະເປັນທີ່ໜ້າຊົມ.

໗ແລະຢູ່ມາເມື່ອພາຍຫຼັງການທັງຫຼາຍນີ້ ເມຍຂອງນາຍໄດ້ຫຼຽວເບິ່ງ
ໂຢເຊບ ແລະໄດ້ກ່າວວ່າ "ຈົ່ງມານອນນຳຂ້ອຍເທີ້ນ" ໘ແຕ່ລາວໄດ້
ປະຕິເສດ ແລະໄດ້ກ່າວແກ່ເມຍຂອງນາຍວ່າ "ນາຍຂອງຂ້ານ້ອຍບໍ່
ໄດ້ຫ່ວງສິ່ງໜຶ່ງສິ່ງໃດທີ່ຢູ່ໃນເຮືອນ ແລະທ່ານໄດ້ມອບຂອງທັງປວງ

ໄວ້ໃນມືຂ້ານ້ອຍແລ້ວ, ໙ບໍ່ມີໃຜໃຫຍ່ກວ່າຂ້ານ້ອຍໃນເຮືອນຫຼັງນີ້,
ນາຍບໍ່ໄດ້ຫ້າມສິ່ງໃດຈາກຂ້ານ້ອຍ, ເວັ້ນໄວ້ແຕ່ຕົວນາງ ເພາະນາງ
ເປັນເມຍຂອງນາຍ ແລະຂ້ານ້ອຍຈະກະທຳຄວາມຊົ່ວໃຫຍ່ດັ່ງນີ້
ແລະກະທຳຜິດບາບຕໍ່ພຣະເຈົ້າໄດ້ແນວໃດ?" ໑໐ແລະຢູ່ມາ ນາງໄດ້
ເວົ້າແກ່ ໂຢເຊບ ທຸກມື້ທຸກວັນແຕ່ ໂຢເຊບ ບໍ່ໄດ້ສົມຍອມທີ່ຈະໄປ
ນອນນຳນາງຫຼືຈະຢູ່ນຳນາງ. ໑໑ແລະຢູ່ມາໃນວັນໜຶ່ງລາວໄດ້ເຂົ້າໄປ
ໃນເຮືອນເຮັດວຽກງານຂອງຕົນ ແລະຢູ່ທີ່ນັ້ນບໍ່ມີຜູ້ຊາຍຈັກຄົນໃນ
ເຮືອນນັ້ນ. ໑໒ນາງໄດ້ຈັບເສື້ອຜ້າຂອງ ໂຢເຊບ ແລະໄດ້ບອກວ່າ
"ຈົ່ງນອນນຳຂ້ອຍເທີ້ນ" ແຕ່ ໂຢເຊບ ໄດ້ປະເສື້ອຜ້າຂອງຕົນໄວ້ໃນ
ມືນາງ ແລະປົບໜີໄປທາງນອກ. ໑໓ແລະຢູ່ມາເມື່ອນາງໄດ້ເຫັນວ່າ
ລາວໄດ້ປະເສື້ອຜ້າໄວ້ໃນມືຂອງຕົນແລະປົບໜີໄປທາງນອກແລ້ວ.
໑໔ນາງໄດ້ຮ້ອງເອີ້ນຜູ້ຊາຍທັງຫຼາຍຈາກເຮືອນຂອງຕົນ ແລະໄດ້ກ່າວ
ແກ່ພວກເຂົາວ່າ "ເບິ່ງແມ ນາຍໄດ້ເອົາຊາວ ເຮັບເຣີ ມາໄວ້ນີ້ເພື່ອ
ເຮັດການຫຍໍ້ຫຍັນພວກເຮົາ! ລາວໄດ້ເຂົ້າມາຈະນອນນຳຂ້ອຍ ແລະ
ຂ້ອຍໄດ້ຮ້ອງສຽງດັງຂຶ້ນ, ໑໕ແລະເມື່ອລາວໄດ້ຍິນຂ້ອຍຍົກສຽງຮ້ອງ
ຂຶ້ນ ລາວໄດ້ປະເສື້ອຜ້າຂອງລາວໄວ້ກັບຂ້ອຍແລະໄດ້ປົບໜີໄປທາງ
ນອກ". ໑໖ນາງໄດ້ເອົາເສື້ອຜ້າຂອງ ໂຢເຊບ ມາວາງໄວ້ທີ່ຂ້າງຕົນເອງ
ຈົນນາຍກັບມາເຮືອນ. ໑໗ແລ້ວນາງໄດ້ບອກນາຍຕາມຄວາມດັ່ງນີ້ວ່າ
"ອ້າຍຂ້າໃຊ້ເຮັບເຣີ ທີ່ທ່ານໄດ້ເອົາມາໄວ້ນັ້ນໄດ້ເຂົ້າມາເພື່ອເຮັດ
ການຫຍໍ້ຫຍັນຂ້ອຍ. ໑໘ແລະເມື່ອຂ້ອຍໄດ້ຍົກສຽງຮ້ອງຂຶ້ນ ລາວໄດ້
ປະເຄື່ອງນຸ່ງໄວ້ກັບຂ້ອຍ ແລະໄດ້ປົບໜີໄປທາງນອກ". ໑໙ເມື່ອນາຍ
ໄດ້ຍິນຖ້ອຍຄຳທີ່ເມຍໄດ້ບອກວ່າ "ຂ້າໃຊ້ຂອງທ່ານໄດ້ເຮັດດັ່ງນັ້ນ
ແກ່ນາງ" ເມື່ອນັ້ນຄວາມໃຈຮ້າຍຂອງນາຍໄດ້ພຸ່ງຂຶ້ນ. ໒໐ແລະນາຍ
ໄດ້ເອົາ ໂຢເຊບ ໄປຂັງໄວ້ໃນຄຸກ, ໃນບ່ອນທີ່ພວກນັກໂທດຂອງກະ
ສັດຖືກຂັງໄວ້ ແລ້ວໂຢເຊບໄດ້ຢູ່ໃນຄຸກທີ່ນັ້ນ.

໒໑ແຕ່ພຣະເຢໂຮວາໄດ້ສະຖິດຢູ່ກັບ ໂຢເຊບ, ໄດ້ຊົງສຳແດງຄວາມ
ເມດຕາຕໍ່ລາວ ໃຫ້ລາວເປັນທີ່ຊອບຕໍ່ໜ້າທ່ານຜູ້ຮັກສາຄຸກ. ໒໒ຜູ້ຮັກ
ສາຄຸກໄດ້ມອບນັກໂທດທັງປວງໄວ້ໃນມືຂອງ ໂຢເຊບ ແລະການທັງ
ປວງທີ່ເຂົາໄດ້ກະທຳທີ່ນັ້ນກໍສຸດແລ້ວກັບ ໂຢເຊບ. ໒໓ຜູ້ຮັກສາຄຸກກໍ
ບໍ່ໄດ້ກວດເບິ່ງການທີ່ຢູ່ໃນມືຂອງໂຢເຊບຍ້ອນພຣະເຢໂຮວາສະຖິດ
ຢູ່ກັບລາວ ແລະໄດ້ໂຜດໃຫ້ການທີ່ລາວກະທຳນັ້ນຈະເລີນບໍລິບູນ.

## ບົດທີ 40

໑ແລະຢູ່ມາພາຍຫຼັງການທັງຫຼາຍນີ້ ພະນັກງານນ້ຳອາງຸ່ນຂອງກະສັດ
ເອຢິບ ແລະພະນັກງານເຂົ້າຈີ່ກໍໄດ້ກະທຳຜິດຕໍ່ກະສັດ ເອຢິບ ເຈົ້າ
ນາຍຂອງພວກເຂົາ. ໒ກະສັດ ຟາໂຣ ໄດ້ໂກດຮ້າຍຕໍ່ຫົວໜ້າການທັງ
ສອງນີ້: ຕໍ່ຫົວໜ້າພະນັກງານນ້ຳອາງຸ່ນ ແລະຕໍ່ຫົວໜ້າພະນັກງານ
ເຂົ້າຈີ່. ໓ກະສັດໄດ້ຂັງພວກເຂົາໄວ້ໃນຄຸກຂອງນາຍທະຫານຮັກສາ
ໃນຄຸກໃນບ່ອນທີ່ ໂຢເຊບ ຖືກຂັງຢູ່. ໔ແລະນາຍທະຫານຮັກສາໄດ້
ຝາກເຂົາທັງສອງໄວ້ກັບ ໂຢເຊບ ແລະລາວໄດ້ບົວລະບັດພວກເຂົາ
ແລະພວກເຂົາໄດ້ຢູ່ຄຸກໄລຍະໜຶ່ງ.

໕ແລ້ວຄືນໜຶ່ງເຂົາທັງສອງໄດ້ຝັນຄື ຫົວໜ້າພະນັກງານນ້ຳອາງຸ່ນ
ແລະຫົວໜ້າພະນັກງານເຂົ້າຈີ່ຂອງກະສັດ ເອຢິບ ທີ່ຢູ່ໃນຄຸກນັ້ນຕ່າງ
ຄົນຕ່າງຝັນກັນຄົນລະຢ່າງຕາມການແປຄວາມຝັນຂອງຕົນ. ໖ແລ້ວ
ເວລາເຊົ້າ ໂຢເຊບ ໄດ້ເຂົ້າໄປຫາເຂົາທັງສອງນັ້ນ ແລະສັງເກດເບິ່ງ
ພວກເຂົາ ແລະເຫັນວ່າພວກເຂົາມີສີໜ້າໂສກເສົ້າ. ໗ລາວໄດ້ຖາມ
ຫົວໜ້າພະນັກງານຂອງກະສັດ ຟາໂຣ ທີ່ຂັງໄວ້ໃນຄຸກໃນເຮືອນນາຍ

ຂອງຕົນວ່າ “ເປັນຫຍັງທ່ານທັງສອງມີສີໜ້າທຸກໂສກເສົ້າແທ້ໃນວັນ
ນີ້?” ໘ພວກເຂົາໄດ້ຕອບລາວວ່າ “ເຮົາທັງສອງໄດ້ຝັນ ແລະບໍ່ມີຜູ້ໃດ
ຈະແປຄວາມຝັນນັ້ນໄດ້”. ແລ້ວ ໂຢເຊບ ໄດ້ກ່າວແກ່ພວກເຂົາວ່າ
“ການແປຄວາມຝັນນັ້ນເປັນຂອງພຣະເຈົ້າບໍ່ແມ່ນຫຼື? ຂໍພວກທ່ານ
ເລົ່າຄວາມຝັນໃຫ້ຂ້ານ້ອຍຟັງເທີ້ນ”.

໙ແລ້ວຫົວໜ້າພະນັກງານນຳອະງຸ່ນໄດ້ເລົ່າຄວາມຝັນຂອງຕົນໃຫ້
ໂຢເຊບ ຟັງ, ແລະໄດ້ກ່າວແກ່ລາວວ່າ “ໃນຄວາມຝັນຂອງເຮົາເປັນ
ດັ່ງນີ້ ມີເຄືອອະງຸ່ນຢູ່ຕໍ່ໜ້າເຮົາ ໑໐ແລະເຄືອອະງຸ່ນນັ້ນມີງ່າສາມງ່າ
ແລະໃບກຳລັງແຕກດອກບານອອກມາ ແລະພວງມີໝາກອະງຸ່ນສຸກ
ອອກມາ. ໑໑ແລ້ວເຮົາໄດ້ຖືຈອກກະສັດ ຟາໂຣ ໃນມືແລະເອົາໝາກ
ອະງຸ່ນບີບນ້ຳລົງໃນຈອກກະສັດ ຟາໂຣ ແລະເຮົາໄດ້ຍື່ນຈອກໃສ່ໃນ
ມືກະສັດ ຟາໂຣ”. ໑໒ແລ້ວ ໂຢເຊບ ໄດ້ກ່າວແກ່ລາວວ່າ “ຄວາມຝັນ
ນັ້ນແປໄດ້ດັ່ງນີ້ຄື ກິ່ງສາມກິ່ງນັ້ນແມ່ນສາມວັນ, ໑໓ພາຍໃນສາມວັນ
ກະສັດ ຟາໂຣ ຈະຍົກຍໍທ່ານຂຶ້ນ ແລະຈະຕັ້ງທ່ານໄວ້ໃນຕຳແໜ່ງ
ເກົ່າຂອງທ່ານ ແລະທ່ານຈະເອົາຈອກຍື່ນໃສ່ໃນມື ກະສັດ ຟາໂຣ
ຕາມທ່ານໄດ້ເຄີຍເຮັດໃນແຕ່ກ່ອນ ເມື່ອເປັນຫົວໜ້າພະນັກງານນຳ້
ອະງຸ່ນຂອງກະສັດນັ້ນ. ໑໔ແຕ່ວ່າເມື່ອທ່ານມີຄວາມສຸກແລ້ວ ຂໍຈົ່ງ
ຄິດເຖິງຂ້ານ້ອຍແດ່ ແລະສຳແດງຄວາມເມດຕາແກ່ຂ້ານ້ອຍ ແລະ
ກາບທູນກະສັດ ຟາໂຣ ໃຫ້ຊ່ອຍຂ້ານ້ອຍອອກຈາກເຮືອນຫຼັງນີ້ແດ່.
໑໕ເຫດວ່າຂ້ານ້ອຍໄດ້ຖືກລັກອອກມາຈາກແຜນແດນ ເຮັບເຣີ ແລະ
ໃນທີ່ນີ້ຂ້ານ້ອຍກໍບໍ່ໄດ້ກະທຳຜິດສິ່ງໜຶ່ງສິ່ງໃດ ທີ່ເປັນເຫດໃຫ້ຕ້ອງ
ຖືກຂັງຢູ່ໃນຄຸກໃຕ້ດິນນີ້”.

໑໖ເມື່ອຫົວໜ້າພະນັກງານເຂົ້າຈີ່ໄດ້ເຫັນວ່າ ຄຳແປຝັນນັ້ນດີ ແລ້ວໄດ້
ກ່າວແກ່ ໂຢເຊບ ວ່າ “ເຮົາໄດ້ຝັນຄືກັນ ແລະເປັນດັ່ງນີ້: ມີຖາດເຂົ້າຈີ່
ຂາວສາມອັນຕັ້ງຢູ່ເທິງຫົວຂອງເຮົາ”. ໑໗ແລະໃນຖາດໃບສູງສຸດນັ້ນ
ມີເຂົ້າຈີ່ສາລະພັດເປັນເຂົ້າຈີ່ສຳຫຼັບກະສັດ ຟາໂຣ, ແລະມີຝູງນົກມາ
ກິນອາຫານໃນຖາດທີ່ຕັ້ງຢູ່ເທິງຫົວຂອງເຮົາ”. ໑໘ໂຢເຊບ ໄດ້ຕອບ
ແລະກ່າວວ່າ “ຄວາມຝັນນັ້ນແປໄດ້ດັ່ງນີ້ຄື ຖາດສາມໃບນັ້ນແມ່ນ
ສາມວັນ. ໑໙ພາຍໃນສາມວັນ ກະສັດ ຟາໂຣ ຈະເອົາຫົວຍົກຂຶ້ນອອກ
ຈາກຕົວທ່ານເສຍ, ແລະຈະແຂວນທ່ານໄວ້ທີ່ຕົ້ນໄມ້ແລ້ວຝູງນົກຈະ
ມາກິນເນື້ອຂອງທ່ານ”. ໒໐ແລະຢູ່ມາເມື່ອວັນທີ່ສາມເປັນວັນກຳເນີດ
ຂອງກະສັດ ຟາໂຣ , ກະສັດໄດ້ຈັດງານລ້ຽງສຳຫຼັບຂ້າລາຊະການທັງ
ປວງຂອງຕົນ ແລະກະສັດ ຟາໂຣ ໄດ້ຍົກຍໍຫົວໜ້າພະນັກງານນ້ຳ
ອະງຸ່ນ ແລະຫົວໜ້າພະນັກງານເຂົ້າຈີ່ໃນທ່າມກາງຂ້າລາຊະການທັງ
ປວງ. ໒໑ກະສັດໄດ້ຕັ້ງໃຫ້ຫົວໜ້າພະນັກງານນ້ຳອະງຸ່ນໄວ້ໃນໜ້າທີ່
ເກົ່າຂອງຕົນອີກ ແລະລາວໄດ້ເອົາຈອກຍື່ນໃສ່ໃນມືກະສັດຟາໂຣ.
໒໒ແຕ່ຫົວໜ້າພະນັກງານເຂົ້າຈີ່ ກະສັດໄດ້ແຂວນຄໍເສຍຕາມທີ່ ໂຢ
ເຊບ ໄດ້ແປຄວາມຝັນໄວ້ແກ່ເຂົາທັງສອງ. ໒໓ແຕ່ຫົວໜ້າພະນັກງານ
ນ້ຳອະງຸ່ນກໍບໍ່ໄດ້ລະນຶກເຖິງ ໂຢເຊບ ແລະໄດ້ລືມລາວເສຍ.

## ບົດທີ 41

໑ແລະຢູ່ມາເມື່ອຄົບສອງປີເຕັມແລ້ວ ກະສັດ ຟາໂຣ ໄດ້ຝັນ ແລະ
ຄວາມຝັນນັ້ນເປັນດັ່ງນີ້ ກະສັດຢືນຢູ່ທ່າຝັ່ງແມ່ນ້ຳ. ໒ແລະເບິ່ງແມ
ມີງົວແມ່ເຈັດໂຕງາມໜ້າເບິ່ງ ແລະໂຕອ້ວນພີ ໄດ້ຂຶ້ນມາຈາກນ້ຳນັ້ນ
ແລະໄດ້ກິນຫຍ້າຢູ່ໃນທົ່ງຫຍ້າ. ໓ແລ້ວເບິ່ງແມ ມີງົວແມ່ອີກເຈັດໂຕ

ມີຮູບຮ່າງຂີ້ຮ້າຍບໍ່ເປັນຕາເບິ່ງ ແລະຈ່ອຍຜອມເຫັນແຕ່ກະດູກ ໄດ້
ຂຶ້ນມາພາຍຫຼັງ, ຢືນຢູ່ກັບງົວແມ່ອ້ວນພີທີ່ຮິມແມ່ນ້ຳນັ້ນ.໔ແລ້ວງົວ
ແມ່ທີ່ມີຮູບຮ່າງຂີ້ຮ້າຍບໍ່ເປັນຕາເບິ່ງແລະຈ່ອຍຜອມເຫັນແຕ່ກະດູກ
ກໍໄດ້ກືນກິນງົວແມ່ໂຕງາມອ້ວນພີທັງເຈັດໂຕນັ້ນ ແລ້ວກະສັດຟາໂຣ
ໄດ້ຕື່ນຂຶ້ນ. ໕ແລ້ວກະສັດໄດ້ຫຼັບອີກ ແລະໄດ້ຝັນເທື່ອທີ່ສອງ ແລະ
ເບິ່ງແມ ມີຮວງເຂົ້າອັນດີແລະເມັດຕຶ່ງດີເຈັດຮວງໄດ້ເກີດຂຶ້ນໃນລຳ
ຕົ້ນດຽວກັນ. ໖ແລ້ວເບິ່ງແມ ມີຮວງເຂົ້າລີບແລະແຫ່ວແຫ້ງດ້ວຍລົມ
ທິດຕາເວັນອອກ ເຈັດຮວງໄດ້ເກີດຂຶ້ນມາພາຍຫຼັງນັ້ນ. ໗ແລ້ວຮວງ
ເຂົ້າລີບໄດ້ກືນກິນຮວງເຂົ້າເມັດຕຶ່ງດີທັງເຈັດຮວງນັ້ນ ແລ້ວກະສັດ
ຟາໂຣ ໄດ້ຕື່ນຂຶ້ນ ແລະຮູ້ວ່ານັ້ນແມ່ນຄວາມຝັນ. ໘ແລະຢູ່ມາເມື່ອ
ເວລາເຊົ້າ ກະສັດມີຄວາມວຸ້ນວາຍໃນຈິດວິນຍານ ແລ້ວໄດ້ໃຊ້ຄົນ
ໄປຮ້ອງເອີ້ນເອົາໝໍດູ ແລະຄົນທັງປວງທີ່ມີປັນຍາທົ່ວປະເທດ ເອຢິບ
ມາ, ກະສັດ ຟາໂຣ ໄດ້ເລົ່າຄວາມຝັນໃຫ້ພວກເຂົາຟັງ ແຕ່ບໍ່ມີຜູ້ໃດ
ສາມາດແປຄວາມຝັນນັ້ນໃຫ້ແກ່ກະສັດ ຟາໂຣ ໄດ້.

໙ແລ້ວຫົວໜ້າພະນັກງານນ້ຳອະງຸ່ນໄດ້ກາບທູນກະສັດ ຟາໂຣ ວ່າ
"ວັນນີ້ຂ້ານ້ອຍລະນຶກເຖິງຄວາມຜິດຂອງຂ້ານ້ອຍ. ໑໐ຄືເມື່ອຄາວກະ
ສັດ ຟາໂຣ ໄດ້ໂກດຮ້າຍຕໍ່ຂ້າລາຊະການຂອງທ່ານ ແລະໄດ້ຂັງຂ້າ
ນ້ອຍໄວ້ໃນຄຸກໃນເຮືອນນາຍທະຫານຮັກສາ ທັງຂ້ານ້ອຍກັບຫົວ
ໜ້າພະນັກງານເຂົ້າຈີ່ນັ້ນ,໑໑ແລ້ວຂ້ານ້ອຍທັງສອງໄດ້ຝັນໃນຄືນດຽວ
ກັນທັງຂ້ານ້ອຍກັບລາວ ແລະຄວາມຝັນນັ້ນມີຄວາມໝາຍແຕກຕ່າງ
ກັນໄປ. ໑໒ແລ້ວມີຊາຍໜຸ່ມຊາວ ເຮັບເຣີ ຄົນໜຶ່ງທີ່ເປັນຂ້າໃຊ້ຂອງ
ນາຍທະຫານຮັກສາ ກໍໄດ້ຢູ່ທີ່ນັ້ນກັບພວກຂ້ານ້ອຍ ແລະຂ້ານ້ອຍ
ທັງສອງໄດ້ເລົ່າຄວາມຝັນໃຫ້ຊາຍໜຸ່ມນັ້ນຟັງ ແລ້ວຊາຍໜຸ່ມນັ້ນໄດ້

ແປຄວາມຝັນຂອງພວກຂ້ານ້ອຍທຸກຄົນຕາມຄວາມຝັນຂອງຕົນ.
໑໓ແລະຢູ່ມາເມື່ອຄົນນັ້ນໄດ້ແປຢ່າງໃດ ເຫດການກໍໄດ້ບັງເກີດຢ່າງ
ນັ້ນທຸກປະການ ຄື ກະສັດໄດ້ຕັ້ງຂ້ານ້ອຍໄວ້ໃນໜ້າທີ່ເກົ່າຂອງຂ້າ
ນ້ອຍຄືນ ແລະຫົວໜ້າພະນັກງານເຂົ້າຈີ່ນັ້ນ ກະສັດໄດ້ສັ່ງໃຫ້ແຂວນ
ຄໍເສຍ”.

໑໔ກະສັດ ຟາໂຣ ໄດ້ໃຊ້ຄົນໄປຮ້ອງ ໂຢເຊບ ມາ ແລະເຂົາຮີບໄປພາ
ໂຢເຊບ ອອກມາຈາກຄຸກໃຕ້ດິນ ລາວໄດ້ແຖໜວດ ໄດ້ປ່ຽນເຄື່ອງນຸ່ງ
ແລະໄດ້ເຂົ້າໄປເຝົ້າກະສັດຟາໂຣ. ໑໕ແລ້ວກະສັດຟາໂຣໄດ້ກ່າວແກ່
ໂຢເຊບວ່າ “ເຮົາໄດ້ຝັນເລື່ອງໜຶ່ງ ແລະບໍ່ມີໃຜສາມາດແປຄວາມຝັນ
ນັ້ນໄດ້, ເຮົາໄດ້ຍິນວ່າເຈົ້າສາມາດເຂົ້າໃຈຄວາມຝັນຈິນແປໄດ້”.
໑໖ໂຢເຊບ ໄດ້ທູນຕອບກະສັດ ຟາໂຣ ວ່າ “ບໍ່ແມ່ນຂ້ານ້ອຍ, ພຣະ
ເຈົ້າຕ່າງຫາກຈະໂຜດປະທານຄຳຕອບອັນເປັນສຸກແກ່ກະສັດ
ຟາໂຣ”. ໑໗ກະສັດ ຟາໂຣ ໄດ້ກ່າວແກ່ ໂຢເຊບ ວ່າ “ໃນຄວາມຝັນ
ນັ້ນເປັນດັ່ງນີ້ຄື ເຮົາໄດ້ຢືນຢູ່ທີ່ແຄມຝັ່ງແມ່ນ້ຳ. ໑໘ແລະເບິ່ງແມ ມີ
ງົວເຈັດໂຕງາມໜ້າເບິ່ງແລະອ້ວນພີ ໄດ້ຂຶ້ນມາຈາກແມ່ນ້ຳ ແລະໄດ້
ພາກັນກິນຫຍ້າຢູ່ໃນທົ່ງຫຍ້າ. ໑໙ແລ້ວເບິ່ງແມມີງົວແມ່ເຈັດໂຕໄດ້ຂຶ້ນ
ມາພາຍຫຼັງ ໂຕຂີ້ຮ້າຍບໍ່ເປັນຕາເບິ່ງແລະຈ່ອຍຜອມ, ງົວຂີ້ຮ້າຍຢ່າງ
ນັ້ນເຮົາບໍ່ເຄີຍເຫັນໃນປະເທດ ເອຢິບ ຈັກເທື່ອ. ໒໐ແລ້ວງົວແມ່ຈ່ອຍ
ຜອມແລະຂີ້ຮ້າຍໄດ້ກືນກິນງົວແມ່ອ້ວນພີທັງເຈັດໂຕນັ້ນ. ໒໑ແລະ
ເມື່ອພວກມັນໄດ້ກິນໝົດແລ້ວບໍ່ສາມາດຮູ້ໄດ້ເລີຍວ່າພວກມັນໄດ້
ກິນເຂົ້າໄປແລ້ວ ເພາະວ່າພວກມັນຍັງຈ່ອຍຜອມຂີ້ຮ້າຍເໝືອນເກົ່າ
ແລ້ວເຮົາກໍໄດ້ຕື່ນຂຶ້ນ. ໒໒ແລ້ວເຮົາໄດ້ເຫັນໃນຄວາມຝັນອີກຄືມີຮວງ
ເຂົ້າເມັດຕຶ່ງດີເຈັດຮວງໄດ້ເກີດຂຶ້ນໃນຕົ້ນດຽວກັນ. ໒໓ແລ້ວເບິ່ງແມ

ມີຮວງເຂົ້າລີບແລະແຫ້ວແຫ້ງດ້ວຍລົມທິດຕາເວັນອອກ ເຈັດຮວງໄດ້ເກີດຂຶ້ນມາພາຍຫຼັງນັ້ນ.

໒໔ແລ້ວຮວງເຂົ້າລີບນັ້ນໄດ້ກືນກິນຮວງເຂົ້າເມັດຕຶ່ງດີທັງເຈັດ. ເຮົາໄດ້ເລົ່າຄວາມຝັນນີ້ໃຫ້ພວກໝໍດູຟັງ ແຕ່ບໍ່ມີໃຜສາມາດແປຄວາມຝັນນີ້ໄດ້".

໒໕ໂຢເຊບ ໄດ້ກາບທູນກະສັດ ຟາໂຣ ວ່າ "ຄວາມຝັນຂອງກະສັດ ຟາໂຣ ມີຄວາມໝາຍອັນດຽວກັນ, ພຣະເຈົ້າໄດ້ສຳແດງໃຫ້ກະສັດຮູ້ຈັກເຖິງສິ່ງທີ່ພຣະເຈົ້າຈະຊົງກະທຳ. ໒໖ງົວແມ່ດີເຈັດໂຕນັ້ນແມ່ນເຈັດປີ ແລະຮວງເຂົ້າດີເຈັດຮວງນັ້ນກໍແມ່ນເຈັດປີ, ມີຄວາມໝາຍອັນດຽວກັນ. ໒໗ແລະງົວແມ່ຈ່ອຍຜອມແລະຂີ້ຮ້າຍເຈັດໂຕທີ່ຂຶ້ນມາພາຍຫຼັງນັ້ນ ແມ່ນເຈັດປີ ແລະຮວງເຂົ້າລີບແຫ້ວແຫ້ງດ້ວຍລົມທິດຕາເວັນອອກນັ້ນກໍແມ່ນເວລາເຈັດປີແຫ່ງຄວາມອຶດຢາກ. ໒໘ນີ້ຄືສິ່ງທີ່ຂ້ານ້ອຍໄດ້ກາບທູນກະສັດ ຟາໂຣ ວ່າ, ພຣະເຈົ້າໄດ້ສຳແດງໃຫ້ກະສັດ ຟາໂຣ ໄດ້ຮູ້ຈັກເຖິງສິ່ງທີ່ພຣະເຈົ້າຈະຊົງກະທຳ. ໒໙ເບິ່ງເຖີດ ຕັ້ງແຕ່ນີ້ໄປຈະມີເຂົ້າບໍລິບູນທົ່ວປະເທດ ເອຢິບ ລະຫວ່າງເຈັດປີ. ໓໐ຫຼັງຈາກນັ້ນຈະບັງເກີດການອຶດຢາກລະຫວ່າງເຈັດປີ ຈົນເຂົາຈະລືມຄວາມບໍລິບູນໃນແຜ່ນດິນ ເອຢິບ, ການອຶດຢາກຈະລ້າງຜານແຜ່ນດິນ. ໓໑ແລະຄວາມບໍລິບູນເຂົາຈະບໍ່ຮູ້ຈັກຕໍ່ໄປໃນປະເທດຍ້ອນຄວາມອຶດຢາກທີ່ຈະເກີດຂຶ້ນມາພາຍຫຼັງນັ້ນ ເພາະການອຶດຢາກນັ້ນຈະໜັກໜ່ວງຢ່າງແສນສາຫັດ. ໓໒ຄວາມຝັນທີ່ກະສັດ ຟາໂຣ ເຫັນເປັນສອງເທື່ອນັ້ນມີໃຈຄວາມວ່າ ພຣະເຈົ້າໄດ້ກຳນົດການນີ້ໄວ້ແລ້ວ ແລະຈະໃຫ້ບັງເກີດໃນໄວໆນີ້. ໓໓ແລະບັດນີ້ຂໍໃຫ້ກະສັດ ຟາໂຣ ຄັດເລືອກເອົາຄົນຜູ້ໜຶ່ງທີ່ມີຄວາມເຂົ້າໃຈຮອບຄອບ ແລະມີສະຕິປັນຍາແລ້ວ

ແຕ່ງຕັ້ງທ່ານນັ້ນໄວ້ໃນປະເທດ ເອຢິບ. ໓໔ຂໍໃຫ້ກະສັດ ຟາໂຣ ກະທຳ
ດັ່ງນີ້ ແລະໃຫ້ຜູ້ນັ້ນ ແຕ່ງຕັ້ງຂ້າລາຊະການໄວ້ໃນທົ່ວປະເທດແລະ
ໃຫ້ເກັບເຂົ້າໄວ້ໜຶ່ງໃນຫ້າສ່ວນຂອງປະເທດ ເອຢິບ ຕະຫຼອດເຈັດປີ
ທີ່ບໍລິບູນນັ້ນ. ໓໕ແລ້ວໃຫ້ທ່ານທັງຫຼາຍນັ້ນຮີບໂຮມອາຫານທັງສິ້ນ
ໄວ້ໃນລະຫວ່າງເຈັດປີທີ່ອຸດົມສົມບູນຊຶ່ງຈະມານັ້ນ ແລະເກັບໂຮມ
ເຂົ້າໄວ້ໃຫ້ຢູ່ໃຕ້ອຳນາດຂອງກະສັດ ຟາໂຣ ແລະໃຫ້ເກັບຮັກສາເຂົ້າ
ໄວ້ໃນເມືອງຕ່າງໆ. ໓໖ແລະອາຫານທີ່ເກັບໄວ້ນີ້ຈະເປັນສະບຽງສຳ
ຮອງຂອງແຜ່ນດິນສຳຫຼັບເຈັດປີທີ່ຈະບັງເກີດຄວາມອຶດຢາກທົ່ວປະ
ເທດ ເອຢິບ ເພື່ອແຜນດິນຈະບໍ່ໄດ້ພິນາດຍ້ອນຄວາມອຶດຢາກນັ້ນ".
໓໗ກະສັດ ຟາໂຣ ແລະຂ້າລາຊະການທັງປວງໄດ້ເຫັນຊອບດ້ວຍ
ຄວາມນີ້. ໓໘ແລ້ວກະສັດ ຟາໂຣ ໄດ້ກ່າວແກ່ຂ້າລາຊະການທັງປວງ
ວ່າ "ພວກເຮົາຈະຫາຄົນຄືກັບຄົນນີ້ ຜູ້ຊຶ່ງມີພຣະວິນຍານຂອງພຣະ
ເຈົ້າຢູ່ໃນຕົວໄດ້ຫຼື?" ໓໙ແລ້ວກະສັດ ຟາໂຣ ໄດ້ກ່າວແກ່ ໂຢເຊບ
ວ່າ "ຍ້ອນວ່າພຣະເຈົ້າໄດ້ໂຜດສຳແດງສິ່ງທັງໝົດນີ້ໃຫ້ແກ່ເຈົ້າ, ບໍ່ມີ
ຜູ້ໃດມີຄວາມເຂົ້າໃຈ ແລະມີສະຕິປັນຍາເໝືອນກັບເຈົ້າອີກ, ໔໐ເຈົ້າ
ຈະເປັນຜູ້ເບິ່ງແຍງລາຊະວັງຂອງເຮົາ ແລະປະຊາຊົນທັງໝົດຂອງ
ເຮົາຈະກະທຳຕາມຄຳສັ່ງຂອງເຈົ້າ, ມີພຽງແຕ່ລາຊະບັນລັງເທົ່ານັ້ນ
ທີ່ເຮົາຈະເປັນໃຫຍ່ກວ່າເຈົ້າ". ໔໑ແລ້ວກະສັດ ຟາໂຣ ໄດ້ກ່າວແກ່ ໂຢ
ເຊບ ວ່າ "ເບິ່ງແມ, ເຮົາແຕ່ງຕັ້ງເຈົ້າໄວ້ໃຫ້ຄຸ້ມຄອງທົ່ວປະເທດ ເອ
ຢິບ ແລ້ວ." ໔໒ກະສັດ ຟາໂຣ ໄດ້ຖອດແຫວນຕາປະທັບອອກຈາກ
ມືຂອງຕົນຊຸບໃສ່ມື ໂຢເຊບ, ເອົາເສື້ອຜ້າປ່ານເນື້ອລະອຽດໃຫ້ ໂຢ
ເຊບນຸ່ງຫົ່ມ, ປະທານສ້ອຍຄໍຄຳຊຸບໃສ່ຄໍ. ໔໓ແລ້ວໃຫ້ ໂຢເຊບ ຂຶ້ນ
ຂີ່ລົດມ້າປະຈຳຕຳແໜ່ງຄັນທີ່ສອງທີ່ກະສັດມີ ແລະເຂົາໄດ້ຮ້ອງປະ
ກາດໄປກ່ອນໜ້າວ່າ "ຈົ່ງຄຸເຂົ່າລົງ" ກະສັດໄດ້ຕັ້ງທ່ານໃຫ້ຄຸ້ມຄອງ

ທີ່ວປະເທດ ເອຢິບ. ໔໔ແລ້ວກະສັດ ຟາໂຣ ໄດ້ກ່າວແກ່ ໂຢເຊບ ວ່າ
"ຝ່າຍເຮົາເປັນ ຟາໂຣ ແລະທົ່ວປະເທດ ເອຢິບ ບໍ່ມີຄົນຈະຍົກມືຍົກ
ຕີນໄດ້ ເວັ້ນໄວ້ແຕ່ເຈົ້າຈະອະນຸຍາດ". ໔໕ກະສັດ ຟາໂຣ ໄດ້ເອີ້ນຊື່
ໂຢເຊບ ວ່າ "ຊາເຟນັດ ປາເນອາ" ແລະໄດ້ຍົກນາງ ອາເຊນັດ ລູກ
ສາວ ໂປຕິເຟຣາ ຜູ້ເປັນປະໂລຫິດໃນເມືອງ ໂອນ ໃຫ້ເປັນເມຍຂອງ
ໂຢເຊບ ແລ້ວ ໂຢເຊບ ໄດ້ອອກໄປກວດກາເບິ່ງທົ່ວປະເທດ ເອຢິບ.
໔໖ໂຢເຊບມີອາຍຸ30ປີເມື່ອໄດ້ເຂົ້າໄປເຝົ້າຕໍ່ໜ້າຟາໂຣກະສັດເອຢິບ.
ແລ້ວ ໂຢເຊບ ໄດ້ອອກຈາກຕໍ່ໜ້າກະສັດ ຟາໂຣ ແລະໄດ້ອອກໄປ
ທົ່ວປະເທດ ເອຢິບ. ໔໗ແລະໃນລະຫວ່າງເຈັດປີບໍລິບູນນັ້ນ, ແຜ່ນດິນ
ໄດ້ງອກຜົນລະປູກຢ່າງຫຼວງຫຼາຍຈົນເກັບກ່ຽວໄດ້ເຕັມມື. ໔໘ໂຢເຊບ
ໄດ້ຮິບໂຮມອາຫານທັງໝົດເຈັດປີນັ້ນ ໄວ້ໃນປະເທດ ເອຢິບ ແລະ
ຮິບໂຮມອາຫານໄວ້ໃນຫົວເມືອງຕ່າງໆ, ຜົນລະປູກຈາກທົ່ງນາທີ່ຢູ່
ອ້ອມຮອບທຸກໆເມືອງກໍໄດ້ຮິບໂຮມໄວ້ໃນເມືອງນັ້ນເໝືອນກັນ.
໔໙ໂຢເຊບໄດ້ຮິບໂຮມເຂົ້າໄວ້ຫຼວງຫຼາຍເໝືອນດັ່ງເມັດຊາຍທີ່ທະເລ,
ມີຢ່າງຫຼວງຫຼາຍຈົນລາວໄດ້ເຊົານັບບັນຊີ ເພາະມີຫຼວງຫຼາຍຈົນເຫຼືອ
ຈຳນວນນັບໄດ້. ໕໐ໂຢເຊບ ມີລູກຊາຍສອງຄົນເກີດກ່ອນປີຄວາມ
ອຶດຢາກຈະມາເຖິງນັ້ນ ຊຶ່ງນາງ ອາເຊນັດ ລູກ ໂປຕິເຟຣາ ຜູ້ເປັນ
ປະໂລຫິດຂອງເມືອງໂອນ ໄດ້ປະສູດໃຫ້ ໂຢເຊບ. ໕໑ໂຢເຊບ ໄດ້
ເອີ້ນຊື່ລູກຊາຍກົກວ່າ "ມານາເຊ ເພາະພຣະເຈົ້າໄດ້ໃຫ້ຂ້ອຍລືມ
ຄວາມລຳບາກໝົດສິ້ນແລະລືມຄອບຄົວພໍ່ຂອງຂ້ອຍທັງສິ້ນ".
໕໒ແລະລູກຄົນທີ່ສອງທ່ານໄດ້ເອີ້ນຊື່ວ່າ "ເອຟະລາອິມ ເພາະພຣະ
ເຈົ້າໄດ້ໃຫ້ເຮົາມີເຊື້ອສາຍທະວີຂຶ້ນໃນປະເທດທີ່ເຮົາມີຄວາມທຸກ
ລຳບາກ".

໕໓ແລ້ວເຈັດປີແຫ່ງຄວາມອຸດົມສົມບູນໃນປະເທດ ເອຢິບ ໄດ້ສິ້ນສຸດ.
໕໔ແລະເຈັດປີແຫ່ງຄວາມອຶດຢາກໄດ້ບັງເກີດມາຕາມທີ່ ໂຢເຊບ ໄດ້
ກ່າວໄວ້ ແລະຄວາມອຶດຢາກໄດ້ບັງເກີດຂຶ້ນໃນທຸກປະເທດ, ແຕ່ວ່າ
ໃນປະເທດ ເອຢິບ ຍັງມີເຂົ້າຢູ່. ໕໕ແລະທົ່ວປະເທດ ເອຢິບ ໄດ້ເກີດ
ອຶດຢາກເຂົ້າ, ຄົນທັງຫຼາຍໄດ້ໄປຂໍເຂົ້ານຳກະສັດ ຟາໂຣ ແລະກະ
ສັດ ຟາໂຣ ໄດ້ສັ່ງແກ່ຊາວ ເອຢິບ ທັງປວງວ່າ "ຈົ່ງໄປຫາໂຢເຊບ
ແລະທ່ານບອກສິ່ງໃດຈົ່ງກະທຳຕາມເຖີ້ນ". ໕໖ແລ້ວຄວາມອຶດຢາກ
ນັ້ນໄດ້ບັງເກີດທົ່ວພື້ນແຜ່ນດິນໂລກ ໂຢເຊບ ໄດ້ໄຂປະຕູສາງເຂົ້າ
ທັງປວງອອກ ແລ້ວໄດ້ຂາຍເຂົ້າໃຫ້ພວກຊາວ ເອຢິບ ຄວາມອຶດຢາກ
ໄດ້ທະວີຄວາມຮຸນແຮງຂຶ້ນໃນປະເທດ ເອຢິບ. ໕໗ແລະຄົນຈາກທົ່ວ
ແຜ່ນດິນໂລກໄດ້ໄປຍັງປະເທດ ເອຢິບ ເພື່ອຊື້ເຂົ້ານຳ ໂຢເຊບ ເພາະ
ມີຄວາມອຶດຢາກຮ້າຍແຮງໃນທຸກປະເທດ.

*41:45 "ຊາເຟນັດ ປາເນອາ" ເປັນພາສາ ເອຢິບ ທີ່ອາດຈະໝາຍຄວາມວ່າ "ຜູ້ຊ່ອຍມະນຸດສະໂລກ" ຫຼື "ຜູ້ທີ່ແປຝັນໄດ້"*

## ບົດທີ 42

໑ເມື່ອຢາໂຄບ ໄດ້ເຫັນວ່າປະເທດ ເອຢິບ ມີເຂົ້າ ແລ້ວ ຢາໂຄບ ໄດ້
ກ່າວແກ່ລູກຊາຍຂອງຕົນວ່າ "ເປັນຫຍັງພວກເຈົ້າເບິ່ງໜ້າກັນແລະ
ກັນຢູ່?" ໒ທ່ານໄດ້ກ່າວວ່າ "ເບິ່ງແມ ເຮົາໄດ້ຍິນຂ່າວວ່າໃນປະເທດ
ເອຢິບ ມີເຂົ້າ, ພວກເຈົ້າຈົ່ງລົງໄປທີ່ນັ້ນ ແລະຊື້ເຂົ້າມາຈາກທີ່ນັ້ນ
ເພື່ອພວກເຮົາຈະໄດ້ມີຊີວິດ ແລະບໍ່ຕາຍໄປ".

໓ແລ້ວພວກອ້າຍຂອງ ໂຢເຊບ 10 ຄົນໄດ້ລົງໄປຍັງປະເທດ ເອຢິບ
ເພື່ອຈະໄດ້ຊື້ເຂົ້າ. ໔ແຕ່ວ່າ ເບນຢາມິນ ນ້ອງຊາຍຂອງ ໂຢເຊບ, ຢາ
ໂຄບ ບໍ່ໃຫ້ໄປນຳພວກອ້າຍ ເຫດວ່າທ່ານໄດ້ກ່າວວ່າ “ຢ້ານຈະເກີດ
ອັນຕະລາຍແກ່ລາວ”. ໕ແລ້ວພວກລູກຊາຍຂອງ ອິດສະຣາເອນ ໄດ້
ພາກັນໄປກັບຄົນທັງຫຼາຍທີ່ໄປຊື້ເຂົ້າ ເພາະເກີດມີຄວາມອຶດຢາກ
ໃນແຜນດິນ ການາອານ. ໖ໂຢເຊບ ເປັນຜູ້ປົກຄອງປະເທດ ເອຢິບ,
ທ່ານໄດ້ຂາຍເຂົ້າໃຫ້ແກ່ຄົນທັງປວງທີ່ວປະເທດນັ້ນແລະພວກ
ອ້າຍຂອງ ໂຢເຊບ ໄດ້ພາກັນມາໝູບໜ້າລົງເຖິງດິນຕໍ່ໜ້າທ່ານ.
໗ໂຢເຊບ ໄດ້ເຫັນພວກອ້າຍ ແລະຈື່ພວກເຂົາໄດ້ ແຕ່ທ່ານໄດ້ເຮັດ
ເໝືອນບໍ່ຮູ້ຈັກພວກເຂົາແລະໄດ້ເວົ້າສຽງດັງແລະດຸຮ້າຍຖາມເຂົາວ່າ
“ພວກເຈົ້າມາແຕ່ໃສ” ພວກເຂົາໄດ້ຕອບວ່າ “ມາຈາກປະເທດການາ
ອານ ມາຊື້ອາຫານ” ໘ໂຢເຊບ ຈື່ພວກອ້າຍຂອງຕົນໄດ້, ແຕ່ວ່າພວກ
ອ້າຍຈື່ ໂຢເຊບບໍ່ໄດ້. ໙ໂຢເຊບ ຈື່ຄວາມຝັນທີ່ຕົນໄດ້ຝັນກ່ຽວຂ້ອງກັບ
ພວກອ້າຍແຕ່ກ່ອນ ແລະໄດ້ກ່າວແກ່ພວກເຂົາວ່າ “ພວກເຈົ້າເປັນ
ຄົນສອດແນມ ມາຈອບເບິ່ງຈຸດອ່ອນໃນປະເທດນີ້”. ໑໐ແລ້ວອ້າຍ
ທັງຫຼາຍໄດ້ຕອບທ່ານວ່າ “ບໍ່ແມ່ນຢ່າງນັ້ນນາຍເຈົ້າຂ້າ ແຕ່ວ່າຜູ້ຮັບ
ໃຊ້ທັງຫຼາຍຂອງທ່ານໄດ້ມາຊື້ອາຫານ, ໑໑ພວກຂ້ານ້ອຍທັງຫຼາຍເປັນ
ລູກພໍ່ດຽວກັນ, ເປັນຄົນສັດຈິງ, ຜູ້ຮັບໃຊ້ຂອງທ່ານບໍ່ແມ່ນຄົນສອດ
ແນມ”. ໑໒ທ່ານໄດ້ກ່າວກັບພວກເຂົາວ່າ “ບໍ່ແມ່ນດອກ, ແຕ່ພວກ
ເຈົ້າໄດ້ມາສອດແນມເບິ່ງຈຸດອ່ອນໃນປະເທດນີ້”. ໑໓ອ້າຍທັງຫຼາຍ
ໄດ້ຕອບວ່າ “ຜູ້ຮັບໃຊ້ຂອງທ່ານກໍມີອ້າຍນ້ອງ12 ຄົນ, ເປັນລູກຂອງ
ພໍ່ຄົນດຽວກັນໃນແຜນດິນ ການາອານ ແລະເບິ່ງແມ, ເວລານີ້ນ້ອງ
ຫຼ້າຂອງພວກເຮົາຢູ່ນຳພໍ່ ແລະນ້ອງຊາຍຜູ້ໜຶ່ງເສຍໄປແລ້ວ”. ໑໔ໂຢ
ເຊບ ໄດ້ກ່າວແກ່ພວກເຂົາວ່າ “ເປັນຕາມເຮົາໄດ້ກ່າວແກ່ພວກເຈົ້າ

ແລ້ວວ່າ ພວກເຈົ້າເປັນຄົນສອດແນມ". ໑໕ເຮົາຈະພິສູດເບິ່ງພວກ
ເຈົ້າດັ່ງນີ້, ດ້ວຍຊີວິດແຫ່ງກະສັດ ຟາໂຣ, ພວກເຈົ້າຈະໄປຈາກເມືອງ
ນີ້ບໍ່ໄດ້ ເວັ້ນໄວ້ແຕ່ນ້ອງຊາຍຫຼ້າຂອງພວກເຈົ້າຈະມາທີ່ນີ້. ໑໖ຈຶ່ງໃຫ້
ຜູ້ໜຶ່ງຈາກພວກເຈົ້າໄປເອົານ້ອງຊາຍພວກເຈົ້າມາ ແລະພວກເຈົ້າ
ທຸກຄົນຈະຖືກຄຸມຄັງໄວ້ຢູ່ໃນຄຸກເພື່ອພິສູດເບິ່ງວ່າຖ້ອຍຄຳຂອງ
ພວກເຈົ້າເປັນຈິງຫຼືບໍ່, ຖ້າບໍ່ດັ່ງນັ້ນ ດ້ວຍຊີວິດແຫ່ງກະສັດ ຟາໂຣ,
ພວກເຈົ້າເປັນຄົນສອດແນມຢ່າງແນ່ນອນ". ໑໗ໂຢເຊບ ໄດ້ເອົາ
ພວກອ້າຍໄປຂັງໄວ້ໃນຄຸກນຳກັນໃນລະຫວ່າງສາມວັນ. ໑໘ແລະໃນ
ວັນທີສາມ ໂຢເຊບໄດ້ບອກອ້າຍທັງຫຼາຍວ່າ"ຈົ່ງເຮັດດັ່ງນີ້ແລ້ວພວກ
ເຈົ້າຈະມີຊີວິດຢູ່, ເພາະເຮົາຢຳເກງພຣະເຈົ້າ, ໑໙ຖ້າແມ່ນພວກເຈົ້າ
ຫາກເປັນຄົນສັດຈິງໃຫ້ຜູ້ໜຶ່ງໃນພວກເຈົ້າຖືກຄຸມຂັງຢູ່ໃນຄຸກທີ່ພວກ
ເຈົ້າຢູ່ແລ້ວນັ້ນ ແລ້ວພວກເຈົ້າຈຶ່ງພາກັນໄປ ເພື່ອເອົາເຂົ້າໄປລ້ຽງ
ຄອບຄົວພວກເຈົ້າທີ່ອຶດຢາກ. ໒໐ແລ້ວຈຶ່ງພານ້ອງຊາຍຫຼ້າຂອງພວກ
ເຈົ້າມາຫາເຮົາ ສິ່ງນີ້ຈະເປັນສິ່ງພິສູດວ່າພວກເຈົ້າໄດ້ເວົ້າຄວາມຈິງ
ແລ້ວພວກເຈົ້າຈະບໍ່ຕ້ອງຕາຍ" ແລ້ວພວກເຂົາໄດ້ກະທຳດັ່ງນັ້ນ.

໒໑ແລະເຂົາໄດ້ເວົ້າກັນແລະກັນວ່າ "ຈິງແທ້ ພວກເຮົາໄດ້ກະທຳຜິດຕໍ່
ນ້ອງຊາຍແລ້ວ ເພາະພວກເຮົາໄດ້ເຫັນຄວາມທຸກໃຈຂອງນ້ອງ ເມື່ອ
ລາວໄດ້ອ້ອນວອນຂໍຕໍ່ພວກເຮົາ ແຕ່ພວກເຮົາບໍ່ໄດ້ຟັງລາວ, ດ້ວຍ
ເຫດນີ້ຄວາມທຸກໃຈນີ້ຈຶ່ງໄດ້ຕົກຖືກພວກເຮົາ". ໒໒ແລ້ວ ຣູເບັນ ໄດ້
ຕອບພວກເຂົາວ່າ "ເຮົາໄດ້ຫ້າມພວກເຈົ້າແລ້ວວ່າ 'ຢ່າກະທຳຜິດ
ຕໍ່ເດັກນ້ອຍນັ້ນ' ບໍ່ແມ່ນຫຼື? ແຕ່ພວກເຈົ້າບໍ່ໄດ້ຟັງຂ້ອຍ, ເຫດສະນັ້ນ
ເລືອດຂອງນ້ອງຈຶ່ງຮຽກຮ້ອງເອົາຈາກພວກເຮົາແລ້ວ".໒໓ພວກເຂົາ
ບໍ່ໄດ້ຮູ້ວ່າ ໂຢເຊບ ໄດ້ເຂົ້າໃຈຄຳເວົ້າຂອງພວກເຂົາ ເພາະວ່າທ່ານ

ໄດ້ໃຊ້ນາຍພາສາແປຄຳເວົ້າກັບພວກເຂົາ. ໒໔ທ່ານໄດ້ເວັ້ນໜີຈາກ
ພວກເຂົາໄປແລະລີ້ຮ້ອງໄຫ້ແລ້ວໄດ້ກັບມາຫາພວກເຂົາອີກ, ໄດ້ເວົ້າ
ນຳພວກເຂົາ ແລ້ວໄດ້ເອົາ ຊີເມໂອນ ອອກມາຈາກພວກເຂົາ ແລະ
ມັດລາວຕໍ່ໜ້າພວກເຂົາ.

໒໕ໂຢເຊບ ໄດ້ສັ່ງໃຫ້ເອົາເຂົ້າໃສ່ຖົງຂອງພວກເຂົາໃຫ້ເຕັມ ແລະໃຫ້
ເອົາເງິນຂອງພວກເຂົາໃສ່ໄວ້ໃນຖົງທຸກຄົນຄືນດ້ວຍ ແລະເອົາເຂົ້າ
ໃຫ້ພວກເຂົາຖືໄປກິນຕາມທາງ, ເຂົາໄດ້ເຮັດດັ່ງນັ້ນແກ່ພວກອ້າຍ.
໒໖ພວກອ້າຍໄດ້ເອົາເຂົ້າໄວ້ເທິງຫຼັງລາແລ້ວກໍພາກັນໄປຈາກທີ່ນັ້ນ.
໒໗ແລະເມື່ອມາເຖິງທີ່ພັກເຊົາ, ຜູ້ໜຶ່ງໃນພວກເຂົານັ້ນໄດ້ແກ້ຖົງເພື່ອ
ຈະເອົາເຂົ້າໃຫ້ລາກິນ ແລ້ວລາວໄດ້ເຫັນເງິນຂອງຕົນ ແລະເບິ່ງແມ
ເງິນຢູ່ໃນປາກຖົງຂອງຕົນ. ໒໘ລາວຈຶ່ງໄດ້ບອກແກ່ອ້າຍນ້ອງທັງຫຼາຍ
ວ່າ "ເງິນຂອງຂ້ອຍກັບຄືນມາ ຈົ່ງເບິ່ງແມ ມັນຢູ່ໃນຖົງຂອງຂ້ອຍ"
ພວກເຂົາໄດ້ຕົກໃຈ ແລະເກີດຄວາມຢ້ານຫຼາຍຈົນຕົວສັ່ນ, ຈຶ່ງເວົ້າ
ກັນວ່າ "ພຣະເຈົ້າໄດ້ກະທຳດັ່ງນີ້ແກ່ພວກເຮົາ ມັນແມ່ນຫຍັງກັນ
ນໍ?"

໒໙ແລ້ວພວກເຂົາໄດ້ມາເຖິງ ຢາໂຄບ ພໍ່ຂອງພວກເຂົາໃນແຜ່ນດິນ
ການາອານ ແລະໄດ້ເລົ່າເລື່ອງການທັງສິ້ນທີ່ໄດ້ບັງເກີດຂຶ້ນແກ່ພວກ
ເຂົາໃຫ້ພໍ່ຟັງວ່າ, ໓໐"ທ່ານຜູ້ເປັນເຈົ້ານາຍປະເທດນັ້ນໄດ້ເວົ້າສຽງດຸ
ຮ້າຍຕໍ່ພວກເຮົາ ວ່າພວກເຮົາເປັນຄົນສອດແນມເບິ່ງບ້ານເມືອງ.
໓໑ພວກເຮົາໄດ້ບອກທ່ານວ່າ ພວກເຮົາເປັນຄົນສັດຈິງ ບໍ່ແມ່ນຄົນ
ສອດແນມ. ໓໒ພວກເຮົາອ້າຍນ້ອງ 12 ຄົນ ເປັນລູກຂອງພໍ່ດຽວກັນ
ນ້ອງຜູ້ໜຶ່ງເສຍໄປແລ້ວ, ແລະນ້ອງຊາຍຫຼ້າ ເວລານີ້ຢູ່ນຳພໍ່ໃນແຜ່ນ

ດິນ ການາອານ. [໓໓]ແລ້ວທ່ານຜູ້ເປັນເຈົ້ານາຍປະເທດນັ້ນ ໄດ້ກ່າວ
ແກ່ພວກເຮົາວ່າ “ເບິ່ງເຖີດ, ເພື່ອເຮົາຈະຮູ້ວ່າພວກເຈົ້າເປັນຄົນສັດ
ຈິງ, ຈົ່ງປະໃຫ້ຜູ້ໜຶ່ງໃນພວກອ້າຍນ້ອງຂອງພວກເຈົ້າຢູ່ນຳເຮົາ ແລ້ວ
ພວກເຈົ້າຈົ່ງເອົາເຂົ້າໄປລ້ຽງຄອບຄົວຂອງພວກເຈົ້າທີ່ອຶດຫິວ ຈົ່ງໄປ
ເທີ້ນ: [໓໔]ແລ້ວໃຫ້ພານ້ອງຊາຍຫຼ້າຂອງພວກເຈົ້າມາຫາເຮົາທີ່ນີ້ ແລະ
ເພື່ອເຮົາຈະໄດ້ຮູ້ວ່າ ພວກເຈົ້າບໍ່ແມ່ນຄົນສອດແນມ ແຕ່ວ່າເປັນຄົນ
ສັດຈິງ, ແລ້ວເຮົາຈະປ່ອຍອ້າຍຂອງພວກເຈົ້າໄປ ແລ້ວພວກເຈົ້າ
ຈະໄດ້ຄ້າຂາຍໃນປະເທດ”. [໓໕]ແລະຢູ່ມາເມື່ອພວກເຂົາໄດ້ເປີດຖົງ
ເຂົ້າຂອງພວກເຂົາອອກມາ, ເບິ່ງແມ ເຫັນຫໍ່ເງິນຢູ່ໃນຖົງຂອງພວກ
ຕົນທຸກຄົນ ແລະພວກເຂົາກັບພໍ່ໄດ້ເຫັນຫໍ່ເງິນນັ້ນ ພວກເຂົາກໍເກີດ
ຄວາມຢ້ານ. [໓໖]ແລ້ວ ຢາໂຄບ ຜູ້ເປັນພໍ່ໄດ້ກ່າວຕໍ່ພວກເຂົາວ່າ
“ພວກເຈົ້າໄດ້ເຮັດໃຫ້ເຮົາເສຍລູກຂອງເຮົາ, ໂຢເຊບ ກໍໄດ້ເສຍໄປ
ແລ້ວ, ຊີເມໂອນ ກໍເສຍໄປແລ້ວ ແລະພວກເຈົ້າຈະເອົາ ເບນຢາມິນ
ໄປອີກຫຼື? ການທັງປວງນີ້ເຮັດໃຫ້ເຮົາທຸກລະທົມໃຈແທ້ນໍ”. [໓໗]ແລ້ວ
ຣູເບນ ໄດ້ກ່າວແກ່ພໍ່ວ່າ “ຖ້າເຮົາບໍ່ເອົາ ເບນຢາມິນ ກັບມາຫາພໍ່ອີກ
ພໍ່ກໍຈົ່ງຂ້າລູກຊາຍທັງສອງຂອງເຮົາເສຍເທີ້ນ, ຂໍມອບນ້ອງ ເບນຢາ
ມິນ ໄວ້ໃນມືລູກເຖີດ ແລະລູກຈະນຳລາວກັບມາຫາພໍ່ອີກ”. [໓໘]ແຕ່
ທ່ານໄດ້ຕອບວ່າ “ລູກຊາຍຂອງເຮົາຈະບໍ່ລົງໄປກັບພວກເຈົ້າ; ເພາະ
ວ່າອ້າຍລາວໄດ້ຕາຍໄປແລ້ວ ແລະເຫຼືອຢູ່ແຕ່ລາວຜູ້ດຽວ. ຖ້າຫາກມີ
ການອັນຕະລາຍອັນໃດເກີດຂຶ້ນກັບລາວໃນເສັ້ນທາງທີ່ພວກເຈົ້າຈະ
ໄປນັ້ນ ພວກເຈົ້າຈະກະທຳໃຫ້ຜົມອັນຫງອກຂອງເຮົາລົງໄປໃນຫຼຸມ
ຝັງສົບດ້ວຍຄວາມທຸກໂສກ”.

*42:36 “ເຮັດໃຫ້ເຮົາທຸກລະທົມໃຈ” ຫຼືວ່າ “ເຮັດຕໍ່ສູ້ເຮົາ”*

# ບົດທີ 43

໑ແລ້ວຄວາມອຶດຢາກກໍເພີ່ມທະວີໜັກຂຶ້ນໃນແຜນດິນນັ້ນ. ໒ແລະຢູ່
ມາເມື່ອພວກເຂົາໄດ້ກິນເຂົ້າທີ່ໄດ້ເອົາມາຈາກປະເທດ ເອຢິບ ນັ້ນ
ໝົດແລ້ວ, ພໍ່ຂອງພວກເຂົາໄດ້ກ່າວແກ່ພວກເຂົາວ່າ "ຈົ່ງໄປຊື້ເຂົ້າ
ອີກຈັກໜ້ອຍແດ່" ໓ຢູດາ ໄດ້ກ່າວແກ່ພໍ່ວ່າ "ທ່ານຜູ້ນັ້ນໄດ້ບັນຊາ
ແກ່ພວກເຮົາຢ່າງເດັດຂາດວ່າ 'ພວກເຈົ້າຈະເຫັນໜ້າເຮົາບໍ່ໄດ້ ເວັ້ນ
ໄວ້ແຕ່ນ້ອງຊາຍພວກເຈົ້າມານຳ'. ໔ຖ້າພໍ່ຍອມໃຫ້ນ້ອງຊາຍໄປນຳ
ພວກເຮົາ, ພວກເຮົາກໍຈະໄປ ແລະຊື້ເຂົ້າມາໃຫ້ພໍ່. ໕ແຕ່ຖ້າພໍ່ບໍ່
ຍອມໃຫ້ນ້ອງໄປນຳ, ພວກເຮົາຈະບໍ່ລົງໄປ ເພາະວ່າທ່ານຜູ້ນັ້ນໄດ້
ບອກພວກເຮົາວ່າ 'ພວກເຈົ້າຈະເຫັນໜ້າເຮົາບໍ່ໄດ້ ເວັ້ນໄວ້ນ້ອງຊາຍ
ຂອງພວກເຈົ້າມານຳ'." ໖ແລ້ວ ອິດສະຣາເອນ ໄດ້ກ່າວວ່າ "ດ້ວຍ
ເຫດໃດພວກເຈົ້າຈຶ່ງໄດ້ເຮັດໃຫ້ເຮົາທຸກໃຈແທ້ນໍ ເປັນຫຍັງໄປບອກ
ເພິ່ນວ່າ ພວກເຈົ້າມີນ້ອງຊາຍອີກຄົນໜຶ່ງ?" ໗ພວກເຂົາໄດ້ຕອບວ່າ
"ທ່ານຜູ້ນັ້ນໄດ້ຊັກໃຊ້ໄຕ່ຖາມພວກເຮົາຢ່າງຖີ່ຖ້ວນເຖິງພວກເຮົາ
ແລະເຖິງພວກຍາດຕິພີ່ນ້ອງຂອງພວກເຮົາວ່າ, 'ພໍ່ພວກເຈົ້າຍັງມີຊີ
ວິດຢູ່ຫຼືບໍ? ມີນ້ອງຊາຍອີກຫຼືບໍ?' ແລະພວກເຮົາກໍໄດ້ຕອບເພິ່ນຕາມ
ຄຳຖາມເຫຼົ່ານັ້ນ ພວກເຮົາຈະຮູ້ໄດ້ແນວໃດ ວ່າທ່ານຈະບອກໃຫ້
ພານ້ອງລົງໄປຫາເພິ່ນ" ໘ຢູດາ ໄດ້ກ່າວແກ່ ອິດສະຣາເອນ ພໍ່ຂອງ
ຕົນວ່າ "ຂໍພໍ່ໃຫ້ຊາຍໜຸ່ມນັ້ນໄປນຳຂ້ອຍ ແລະພວກເຮົາຈະຮີບອອກ
ເດີນທາງໄປເພື່ອພວກເຮົາຈະໄດ້ມີຊີວິດຢູ່ແລະບໍ່ຕາຍທັງພວກເຮົາ,
ທັງພໍ່ ແລະລູກນ້ອຍທັງຫຼາຍຂອງພວກເຮົາດ້ວຍ. ໙ຝ່າຍລູກຈະຮັບ
ປະກັນລາວໄວ້ເອງໃຫ້ພໍ່ຮຽກຮ້ອງເລື່ອງຂອງລາວຈາກມືຂອງລູກຖ້າ
ລູກຫາກບໍ່ພາລາວກັບມາຫາພໍ່ແລະມອບລາວຕໍ່ໜ້າພໍ່, ກໍຂໍໃຫ້ລູກ

ຮັບຜິດຕໍ່ພໍ່ຕະຫຼອດໄປເປັນນິດ. ໑໐ເຫດວ່າຖ້າພວກເຮົາຫາກບໍ່ໄດ້
ຊັກຊ້າຢູ່ຢ່າງນີ້ ກໍຄົງຈະກັບມາເປັນສອງເທື່ອແລ້ວ".

໑໑ແລ້ວ ອິດສະຣາເອນ ພໍ່ຂອງພວກເຂົາໄດ້ກ່າວແກ່ພວກເຂົາວ່າ
"ຖ້າເປັນດັ່ງນັ້ນ, ຈົ່ງກະທຳດັ່ງນີ້ຄື ພວກເຈົ້າຈົ່ງເອົາໝາກໄມ້ຢ່າງດີ
ທີ່ສຸດໃນແຜ່ນດິນນີ້ໃສ່ຖົງພວກເຈົ້າຖືລົງເປັນຂອງຂວັນຕ້ອນທ່ານ
ຜູ້ນັ້ນເຊັ່ນ:ກຳຍານໜ້ອຍໜຶ່ງ,ນໍ້າເຜິ້ງໜ້ອຍໜຶ່ງ,ເຄື່ອງຫອມ,ຢາງໄມ້
ຫອມ, ໝາກຖົ່ວດິນ ແລະໝາກບົກ ໃສ່ຖົງພວກເຈົ້າຖືລົງເປັນຂອງ
ຂວັນຕ້ອນທ່ານຜູ້ນັ້ນ. ໑໒ແລະຈົ່ງເອົາເງິນຕິດມືໄປອີກສອງເທົ່າ ສ່ວນ
ເງິນທີ່ຄືນມາໃນປາກຖົງນັ້ນ ຈົ່ງເອົາຕິດມືກັບໄປດ້ວຍ, ບາງທີເຂົາ
ອາດຈະຫຼົງລືມກໍໄດ້. ໑໓ຈົ່ງເອົານ້ອງຊາຍຂອງພວກເຈົ້າໄປນຳ ແລະ
ລຸກຂຶ້ນໄປຫາທ່ານຜູ້ນັ້ນອີກ. ໑໔ແລະຂໍໃຫ້ພຣະເຈົ້າຊົງລິດທານຸພາບ
ສູງສຸດໂຜດໃຫ້ພວກເຈົ້າໄດ້ພົບຄວາມເມດຕາຕໍ່ໜ້າທ່ານຜູ້ນັ້ນ,
ເພື່ອທ່ານຈະໄດ້ປ່ອຍອ້າຍກັບ ເບນຢາມິນ ກັບມາ ແລະຝ່າຍເຮົາ
ຖ້າເຮົາຈະເສຍລູກ ກໍໃຫ້ເສຍເທີ້ນ".

໑໕ແລ້ວຄົນທັງຫຼາຍນັ້ນໄດ້ເອົາຂອງຖວາຍນີ້ ແລະເງິນຕິດມືສອງເທົ່າ
ແລະໄດ້ພາເບນຢາມິນໄປ, ແລ້ວເດີນທາງລົງໄປເຖິງປະເທດເອຢິບ
ແລະໄດ້ເຂົ້າເຝົ້າຕໍ່ໜ້າ ໂຢເຊບ. ໑໖ໂຢເຊບ ໄດ້ເຫັນ ເບນຢາມິນ ມາ
ນຳພວກເຂົາ, ທ່ານໄດ້ສັ່ງແກ່ຄົນຕົ້ນເຮືອນຂອງຕົນວ່າ "ຈົ່ງພາຄົນ
ທັງຫຼາຍນີ້ໄປທີ່ເຮືອນຂອງເຮົາ ຈົ່ງຂ້າສັດ ແລະຈັດໂຕະ, ເພາະວ່າ
ຄົນທັງຫຼາຍນີ້ຈະກິນເຂົ້າກັບເຮົາໃນເວລາທ່ຽງວັນ". ໑໗ແລ້ວຄົນຕົ້ນ
ເຮືອນໄດ້ກະທຳຕາມຄຳຂອງ ໂຢເຊບ ໄດ້ສັ່ງນັ້ນ ແລະໄດ້ພາຄົນທັງ
ຫຼາຍນັ້ນເຂົ້າໄປໃນເຮືອນຂອງໂຢເຊບ. ໑໘ຄົນທັງຫຼາຍນັ້ນກໍພາກັນ

ຢ້ານ ເພາະເຂົາໄດ້ພາເຂົ້າໄປໃນເຮືອນ ໂຢເຊບ ແລະໄດ້ເວົ້າກັນ
ວ່າ "ເຂົາເອົາພວກເຮົາມາທີ່ນີ້ຍ້ອນເງິນທີ່ຄືນໄປໃນຖົງຄັ້ງກ່ອນ ເພື່ອ
ທ່ານຈະໄດ້ມີເຫດໃສ່ໂທດພວກເຮົາໄດ້ ຈະໄດ້ຊົງບຕີພວກເຮົາ ຈັບ
ເອົາພວກເຮົາໄວ້ເປັນທາດແລະຈັບເອົາຝູງລາຂອງພວກເຮົາ".
໑໙ພວກເຂົາໄດ້ພາກັນຫຍັບເຂົ້າໄປຫາຄົນຕົ້ນເຮືອນ ໂຢເຊບ ແລ້ວ
ພວກເຂົາລົມກັບຄົນຕົ້ນເຮືອນທີ່ປະຕູເຮືອນ, ໒໐ແລະກ່າວວ່າ "ຂໍ
ໂທດເດີ ທ່ານເຈົ້າຂ້າ, ພວກຂ້ານ້ອຍໄດ້ມາຄັ້ງກ່ອນເພື່ອຊື້ເຂົ້າ,
໒໑ແລະຢູ່ມາເມື່ອພວກຂ້ານ້ອຍໄດ້ມາເຖິງທີ່ພັກເຊົາ ເມື່ອແກ້ຖົງ
ອອກ ແລະເບິ່ງແມ ເຫັນເງິນຢູ່ໃນປາກຖົງຂອງຕົນທຸກຄົນ ເງິນນັ້ນ
ຍັງຄົບຢູ່ຄືເກົ່າ ແລ້ວພວກຂ້ານ້ອຍໄດ້ເອົາເງິນນັ້ນຕິດມືກັບມາສົ່ງ
ຄືນອີກ. ໒໒ແລະພວກຂ້ານ້ອຍໄດ້ເອົາເງິນຕື່ມຕິດມືມາຈະໄດ້ຊື້ອາ
ຫານອີກ, ພວກຂ້ານ້ອຍບໍ່ຮູ້ຈັກວ່າແມ່ນຜູ້ໃດໄດ້ເອົາເງິນນັ້ນມາໃສ່
ຖົງຂອງພວກຂ້ານ້ອຍ". ໒໓ແລ້ວຄົນຕົ້ນເຮືອນໄດ້ຕອບພວກເຂົາວ່າ
"ຈົ່ງເປັນສຸກເທີ້ນ ຢ່າຊູ່ຢ້ານ, ພຣະເຈົ້າຂອງພວກເຈົ້າ ແລະພຣະເຈົ້າ
ຂອງພໍ່ພວກເຈົ້າໄດ້ໂຜດໃຫ້ມີເງິນຢູ່ໃນຖົງຂອງພວກເຈົ້າ. ເງິນຂອງ
ພວກເຈົ້າເຮົາໄດ້ຮັບແລ້ວ"ແລະຄົນຕົ້ນເຮືອນໄດ້ເອົາຊີເມໂອນອອກ
ມາຫາພວກເຂົາ. ໒໔ຄົນຕົ້ນເຮືອນໄດ້ພາຄົນທັງຫຼາຍນັ້ນເຂົ້າໄປໃນ
ເຮືອນຂອງ ໂຢເຊບ, ເອົານ້ຳມາໃຫ້ພວກເຂົາລ້າງຕີນ ແລະລາວໄດ້
ເອົາເຟືອງໃຫ້ລາຂອງພວກເຂົາກິນ. ໒໕ແລ້ວພວກເຂົາໄດ້ຈັດຕຽມ
ຂອງຂວັນໄວ້ຄອຍຖ້າຕ້ອນ ໂຢເຊບ ຊຶ່ງຈະມາໃນເວລາທ່ຽງວັນ ເຫດ
ວ່າພວກເຂົາໄດ້ຍິນວ່າພວກເຂົາຈະໄດ້ກິນເຂົ້າຢູ່ທີ່ນັ້ນ.

໒໖ເມື່ອ ໂຢເຊບ ໄດ້ເຂົ້າມາໃນເຮືອນ, ພວກເຂົາກໍໄດ້ເອົາຂອງຕ້ອນ
ທີ່ຢູ່ໃນມືຂອງພວກເຂົາຍົກມາໃຫ້ທ່ານໃນເຮືອນ ແລະກາບໄຫວ້ລົງ

ເຖິງດິນຕໍ່ໜ້າທ່ານ. ໒໗ທ່ານໄດ້ຖາມເຖິງຄວາມທຸກສຸກຂອງພວກເຂົາ
ແລະກ່າວວ່າ "ພໍ່ຂອງພວກເຈົ້າຍັງສະບາຍດີບໍ? ຜູ້ທີ່ເຖົ້າແກ່ແລ້ວທີ່
ພວກເຈົ້າໄດ້ເວົ້າເຖິງ ເພິ່ນຍັງມີຊີວິດຢູ່ບໍ?" ໒໘ພວກເຂົາໄດ້ຕອບວ່າ
"ພໍ່ຂອງພວກຂ້ານ້ອຍຜູ້ຮັບໃຊ້ຂອງທ່ານຍັງມີຊີວິດຢູ່ ແລະຍັງມີສຸຂະ
ພາບດີຢູ່" ແລ້ວພວກເຂົາກໍໄດ້ກົ້ມຫົວລົງກາບໄຫວ້. ໒໙ໂຢເຊບ ໄດ້
ຫຼຽວເຫັນ ເບນຢາມິນ ນ້ອງຊາຍແມ່ດຽວກັນ ແລະໄດ້ຖາມວ່າ "ຄົນນີ້
ແມ່ນນ້ອງຊາຍຫຼ້າທີ່ພວກເຈົ້າໄດ້ເວົ້າຕໍ່ເຮົານັ້ນຫຼື?" ແລະທ່ານໄດ້
ກ່າວວ່າ "ລູກເອີຍ, ຂໍໃຫ້ພຣະເຈົ້າໂຜດພຣະກະລຸນາຄຸນແກ່ເຈົ້າ
ເທີ້ນ". ໓໐ແລ້ວ ໂຢເຊບ ໄດ້ຮີບຟ້າວອອກໄປ ເພາະຮັກນ້ອງຫຼາຍຈົນ
ກັ້ນນ້ຳຕາບໍ່ຢູ່ ແລະທ່ານໄດ້ຊອກຫາບ່ອນທີ່ຈະຮ້ອງໄຫ້, ທ່ານໄດ້
ເຂົ້າໄປໃນຫ້ອງນອນຂອງຕົນ ແລະໄດ້ຮ້ອງໄຫ້ຢູ່ທີ່ນັ້ນ. ໓໑ພາຍຫຼັງມາ
ທ່ານໄດ້ລ້າງໜ້າ ແລ້ວໄດ້ອອກມາເຮັດໃຈແຂງກັ້ນນ້ຳຕາຕົນເອງໄວ້
ແລະສັ່ງວ່າ "ຈົ່ງຈັດແຈງເອົາອາຫານມາກິນເທີ້ນ". ໓໒ເຂົາໄດ້ເອົາ
ຂອງກິນສ່ວນຂອງ ໂຢເຊບ ມາຕັ້ງໄວ້ຕ່າງຫາກ ສ່ວນຂອງອ້າຍນ້ອງ
ຕ່າງຫາກ, ສ່ວນຂອງຊາວ ເອຢິບ ທີ່ໄດ້ມາກິນເຂົ້າກັບທ່ານນັ້ນກໍຢູ່
ຕ່າງຫາກ ເພາະວ່າຊາວ ເອຢິບ ຈະກິນເຂົ້າຮ່ວມກັບຄົນ ເຮັບເຣີບໍ່ໄດ້,
ເພາະຊາວ ເອຢິບ ຖືວ່າເປັນໜ້າລັງກຽດ. ໓໓ແລະພວກອ້າຍນ້ອງໄດ້
ນັ່ງຕໍ່ໜ້າໂຢເຊບຕາມລຳດັບກັນຕັ້ງແຕ່ອ້າຍກົກຕາມສິດທິເກີດຂອງ
ລາວລົງມາຈົນເຖິງນ້ອງຫຼ້າຕາມຄວາມໜຸ່ມຂອງຕົນ ແລະຄົນທັງ
ຫຼາຍນັ້ນກໍໄດ້ພາກັນເບິ່ງໜ້າກັນແລະກັນດ້ວຍຄວາມປະຫຼາດໃຈ
ຫຼາຍ. ໓໔ໂຢເຊບ ໄດ້ໃຊ້ຂອງກິນຈາກໂຕະຕົນເອງໃຫ້ອ້າຍນ້ອງ
ທັງຫຼາຍກິນ ສ່ວນຂອງກິນທີ່ໃຫ້ແກ່ ເບນຢາມິນ ກໍຫຼາຍລື່ນສ່ວນ
ຂອງອ້າຍທັງປວງເຖິງຫ້າເທົ່າ ພວກເຂົາໄດ້ກິນໄດ້ດື່ມດ້ວຍຄວາມ
ສຳລານໃຈກັນກັບທ່ານ.

# ບົດທີ 44

໑ໂຢເຊບ ໄດ້ສັ່ງແກ່ຄົນຕົ້ນເຮືອນຂອງຕົນວ່າ “ຈົ່ງເອົາອາຫານໃສ່ໃນ
ຖົງຄົນທັງຫຼາຍນີ້ໃຫ້ຫຼາຍເທົ່າທີ່ພວກເຂົາສາມາດເອົາໄປໄດ້ ແລະ
ເອົາເງິນຂອງພວກເຂົາໃສ່ຄືນໄວ້ໃນປາກຖົງຂອງພວກເຂົາທຸກຄົນ.
໒ແລະຈົ່ງເອົາຈອກຂອງເຮົາຄື ຈອກເງິນນັ້ນໃສ່ໄວ້ໃນປາກຖົງຂອງຜູ້
ນ້ອງຫຼ້າກັບເງິນຄ່າເຂົ້າຂອງລາວດ້ວຍ”. ຄົນຕົ້ນເຮືອນໄດ້ເຮັດຕາມ
ໂຢເຊບ ໄດ້ສັ່ງນັ້ນ. ໓ເມື່ອເວລາຮຸ່ງເຊົ້າມາ ຄົນຕົ້ນເຮືອນໄດ້ສົ່ງໃຫ້
ພວກເຂົາເມືອ ທັງຄົນກັບລາຂອງພວກເຂົາ. ໔ເມື່ອພວກເຂົາໄດ້
ອອກໄປຈາກເມືອງຍັງບໍ່ທັນໄປໄດ້ໄກ ໂຢເຊບ ໄດ້ສັ່ງແກ່ຄົນຕົ້ນ
ເຮືອນວ່າ “ຈົ່ງລຸກຂຶ້ນໄປຕາມຄົນເຫຼົ່ານັ້ນ ເມື່ອພົບແລ້ວຈົ່ງຖາມວ່າ
‘ເປັນຫຍັງພວກເຈົ້າຈົ່ງໄດ້ກະທຳການຊົ່ວຕອບແທນການດີ? ໕ພວກ
ເຈົ້າໄດ້ລັກເອົາໄປຈອກທີ່ເຈົ້ານາຍຂອງເຮົາໃຊ້ດື່ມແລະໃຊ້ໃນການ
ທຳນວາຍນັ້ນໄປ ພວກເຈົ້າກະທຳຢ່າງນີ້ເປັນການຊົ່ວຫຼາຍ’.” ໖ຄົນ
ຕົ້ນເຮືອນໄດ້ຕິດຕາມພວກເຂົາໄປທັນ ແລ້ວຖາມຄົນທັງຫຼາຍຕາມ
ຖ້ອຍຄຳນັ້ນ. ໗ພວກເຂົາໄດ້ກ່າວແກ່ຄົນຕົ້ນເຮືອນວ່າ “ດ້ວຍເຫດ
ໃດເຈົ້ານາຍຂອງພວກຂ້ານ້ອຍຈຶ່ງໄດ້ກ່າວຢ່າງນີ້, ພຣະເຈົ້າຊົງຫ້າມ
ທີ່ຜູ້ຮັບໃຊ້ຂອງທ່ານຈະເຮັດການຢ່າງນັ້ນ. ໘ເບິ່ງແມ ເງິນທີ່ພວກຂ້າ
ນ້ອຍໄດ້ພົບໃນປາກຖົງນັ້ນພວກຂ້ານ້ອຍຍັງໄດ້ເອົາມາຈາກປະ
ເທດ ການາອານ ມາສົ່ງຄືນໃຫ້ທ່ານ ພວກຂ້ານ້ອຍຈະລັກເງິນລັກຄຳ
ຈາກເຮືອນເຈົ້ານາຍຂອງທ່ານໄດ້ຢ່າງໃດ? ໙ຖ້າທ່ານຫາກພົບຈອກ
ນັ້ນນຳຜູ້ໃດໃນພວກຜູ້ຮັບໃຊ້ຂອງທ່ານກໍໃຫ້ຜູ້ນັ້ນຕາຍໄປເຖີ້ນ ແລະ
ພວກຂ້ານ້ອຍຈະຍອມເປັນທາດຂອງເຈົ້ານາຍດ້ວຍ”. ໑໐ຄົນຕົ້ນ
ເຮືອນໄດ້ກ່າວວ່າ “ຕົກລົງ, ໃຫ້ເຮັດຕາມຄຳເວົ້າຂອງພວກເຈົ້າເຖີ້ນ,

ຖ້າເຮົາພົບຈອກນັ້ນນຳຜູ້ໃດ ເຮົາຈະເອົາຜູ້ນັ້ນມາເປັນທາດຂອງເຮົາ
ແລະທ່ານທັງຫຼາຍຈະບໍ່ມີຄວາມຜິດ”. ໑໑ແລ້ວພວກເຂົາກໍໄດ້ຮີບປົດ
ຖົງລົງມາເທິງດິນ ແລະແກ້ຖົງອອກທຸກຄົນ. ໑໒ຄົນຕົ້ນເຮືອນໄດ້ຈົກ
ເບິ່ງຕັ້ງແຕ່ອ້າຍກົກຈົນເຖິງນ້ອງຫຼ້າ ແລະໄດ້ພົບຈອກໃນຖົງຂອງ
ເບນຢາມິນ. ໑໓ດັ່ງນັ້ນພວກເຂົາໄດ້ຈີກເສື້ອຜ້າຂອງພວກເຂົາເສຍ
ແລະເອົາຂອງຂຶ້ນເທິງຫຼັງລາແລະກັບຄືນໄປໃນເມືອງອີກ.

໑໔ຢູດາ ແລະອ້າຍນ້ອງໄດ້ເຂົ້າໄປໃນເຮືອນຂອງ ໂຢເຊບ, ເພາະ
ທ່ານຍັງຢູ່ທີ່ນັ້ນ ແລ້ວພວກເຂົາໄດ້ກົ້ມລົງທີ່ພື້ນດິນຕໍ່ໜ້າທ່ານ. ໑໕ໂຢ
ເຊບ ໄດ້ຖາມພວກເຂົາວ່າ “ພວກເຈົ້າໄດ້ເຮັດຫຍັງລົງໄປ? ພວກເຈົ້າ
ບໍ່ຮູ້ຫຼືວ່າຄົນຢ່າງເຮົາສາມາດທຳນວາຍໄດ້?” ໑໖ຢູດາໄດ້ທູນຕອບວ່າ
“ພວກຂ້ານ້ອຍທັງຫຼາຍຈະກາບທູນສິ່ງໃດແກ່ເຈົ້ານາຍໄດ້? ພວກຂ້າ
ນ້ອຍທັງຫຼາຍຈະເວົ້າຢ່າງໃດ? ແກ້ຕົວຢ່າງໃດ? ພຣະເຈົ້າໄດ້ພົບ
ຄວາມຊົ່ວຮ້າຍຂອງພວກຂ້ານ້ອຍຜູ້ເປັນຂ້າຮັບໃຊ້ຂອງທ່ານແລ້ວ,
ບັດນີ້ ພວກຂ້ານ້ອຍເປັນທາດຂອງທ່ານ, ທັງຂ້ານ້ອຍທັງຫຼາຍກັບຄົນ
ທີ່ພົບຈອກນັ້ນດ້ວຍ”.໑໗ໂຢເຊບໄດ້ຕອບວ່າ“ພຣະເຈົ້າຊົງຫ້າມທີ່ເຮົາ
ຈະກະທຳຢ່າງນັ້ນ, ຄົນທີ່ພົບຈອກຢູ່ໃນມືນັ້ນຈະເປັນທາດຂອງເຮົາ
ສ່ວນຝ່າຍພວກເຈົ້າກໍຈົ່ງໄປຫາພໍ່ຂອງພວກເຈົ້າຢ່າງເປັນສຸກເຖີດ”.

໑໘ຢູດາ ໄດ້ຫຍັບເຂົ້າໄປໃກ້ ໂຢເຊບ ແລະກາບທູນວ່າ “ໂອ ເຈົ້ານາຍ
ຂອງຂ້ານ້ອຍເອີຍ, ຂໍໃຫ້ຂ້ານ້ອຍຜູ້ຮັບໃຊ້ຂອງທ່ານ ໄດ້ກາບທູນຈັກ
ຄຳໜຶ່ງໃນຫູຂອງທ່ານ, ຂໍທ່ານຢ່າຟ້າວຮ້າຍຂ້ານ້ອຍຜູ້ຮັບໃຊ້ຂອງ
ທ່ານເລີຍ ເພາະວ່າທ່ານກໍເປັນເໝືອນກັບກະສັດ ຟາໂຣ. ໑໙ນາຍ
ເຈົ້າຂ້າ, ທ່ານໄດ້ຖາມທາດທັງຫຼາຍຂອງທ່ານວ່າ ‘ພວກເຈົ້າຍັງມີພໍ່

ຫຼື ນ້ອງຊາຍຢູ່ອີກຫຼືບໍ?' ໒໐ແລ້ວພວກຂ້ານ້ອຍກໍໄດ້ຕອບນາຍທ່ານ
ວ່າ 'ພວກເຮົາມີພໍ່ທີ່ເຖົ້າແກ່ຫຼາຍແລ້ວ ແລະ ມີລູກຄົນໜຶ່ງເກີດເມື່ອ
ພໍ່ເຖົ້າແລ້ວ, ລາວຍັງນ້ອຍໆຢູ່ ອ້າຍຂອງຜູ້ນັ້ນໄດ້ຕາຍໄປແລ້ວ ແລະ
ຄົນນີ້ແມ່ນຜູ້ດຽວທີ່ແມ່ລາວຍັງເຫຼືອຢູ່ ແລະພໍ່ຮັກລາວຫຼາຍ. ໒໑ແລ້ວ
ທ່ານໄດ້ສັ່ງແກ່ຜູ້ຮັບໃຊ້ຂອງທ່ານວ່າ 'ຈົ່ງພາລາວລົງມາຫາທ່ານ
ແລະຕາຂອງເຮົາຈະໄດ້ເຫັນລາວ' ໒໒ແລ້ວພວກຂ້ານ້ອຍໄດ້ຕອບ
ເຈົ້ານາຍໄປແລ້ວວ່າ 'ເດັກໜຸ່ມນີ້ຈະຫ່າງຈາກພໍ່ມາບໍ່ໄດ້ ຖ້າລາວ
ຫາກຫ່າງຈາກພໍ່ໄປ ພໍ່ກໍຈະຕາຍ' ໒໓ແລະທ່ານໄດ້ກ່າວແກ່ພວກຜູ້
ຮັບໃຊ້ຂອງທ່ານວ່າ'ຖ້າພວກເຈົ້າບໍ່ເອົານ້ອງຊາຍຫຼ້າມານຳກັບພວກ
ເຈົ້າ, ພວກເຈົ້າຈະເຫັນໜ້າເຮົາບໍ່ໄດ້' ໒໔ແລະຢູ່ມາເມື່ອພວກຂ້າ
ນ້ອຍໄດ້ກັບໄປເຖິງພໍ່ຜູ້ຮັບໃຊ້ຂອງທ່ານ ແລ້ວພວກຂ້ານ້ອຍໄດ້ເອົາ
ຖ້ອຍຄຳຂອງທ່ານເລົ່າໃຫ້ພໍ່ຟັງ, ໒໕ແລ້ວພໍ່ໄດ້ສັ່ງແກ່ພວກຂ້ານ້ອຍ
ວ່າ 'ພວກເຈົ້າຈົ່ງໄປຊື້ອາຫານແດ່ມາໃຫ້ເຮົາອີກເຖີ້ນ' ໒໖ແຕ່ວ່າ
ພວກຂ້ານ້ອຍໄດ້ຕອບພໍ່ວ່າ 'ພວກເຮົາລົງໄປບໍ່ໄດ້. ຖ້ານ້ອງຊາຍຫຼ້າ
ໄປນຳພວກເຮົາ ແລ້ວພວກເຮົາຈິ່ງຈະລົງໄປໄດ້ ເພາະວ່າພວກເຮົາ
ຈະເຫັນໜ້າທ່ານຜູ້ນັ້ນອີກບໍ່ໄດ້ເວັ້ນໄວ້ແຕ່ນ້ອງຊາຍຫຼ້າໄປນຳ'
໒໗ແລ້ວພໍ່ຜູ້ຮັບໃຊ້ຂອງທ່ານໄດ້ກ່າວແກ່ພວກຂ້ານ້ອຍວ່າ 'ພວກເຈົ້າ
ກໍຮູ້ແລ້ວວ່າເມຍຂອງເຮົາໄດ້ປະສູດລູກໃຫ້ເຮົາສອງຄົນ, ໒໘ຜູ້ໜຶ່ງ
ໄດ້ໜີຈາກເຮົາເສຍ, ເຮົາໄດ້ກ່າວວ່າ ' ຈິງແທ້ສັດຮ້າຍໄດ້ກັດກິນລາວ
ເສຍແລ້ວແລະເຮົາກໍບໍ່ໄດ້ເຫັນລູກຄົນນັ້ນອີກຈົນເຖິງທຸກວັນນີ້.
໒໙ແລະຖ້າພວກເຈົ້າຈະເອົາລູກຄົນນີ້ໄປຈາກເຮົາອີກ ຖ້າມີອັນຕະ
ລາຍໃດເກີດຂຶ້ນກັບລາວ ພວກເຈົ້າຈະກະທຳໃຫ້ຜົມອັນຫງອກຂອງ
ເຮົາລົງໄປໃນຫຼຸມຝັງສົບດ້ວຍຄວາມທຸກໂສກ' ໓໐ເຫດສະນັ້ນ ເມື່ອ
ຂ້ານ້ອຍຈະໄປເຖິງພໍ່ຜູ້ຮັບໃຊ້ຂອງທ່ານ ແລະເດັກໜຸ່ມນັ້ນບໍ່ໄປນຳ

ພວກຂ້ານ້ອຍ; ເພາະເຫັນວ່າຊີວິດຂອງພໍ່ໄດ້ຂຶ້ນຢູ່ກັບຊີວິດຂອງເດັກ
ນ້ອຍນີ້, ໓໑ຕໍ່ມາເມື່ອພໍ່ເຫັນວ່າເດັກໜຸ່ມນັ້ນບໍ່ໄດ້ມາດ້ວຍ ພໍ່ກໍຈະສິ້ນ
ໃຈຕາຍ ແລະພວກຜູ້ຮັບໃຊ້ຂອງທ່ານຈະກະທຳໃຫ້ຜົມອັນຫງອກ
ຂອງພໍ່ຜູ້ຮັບໃຊ້ຂອງທ່ານ ລົງໄປໃນຫຼຸມຝັງສົບດ້ວຍຄວາມທຸກໂສກ.
໓໒ເຫດວ່າຜູ້ຮັບໃຊ້ຂອງທ່ານ ໄດ້ຮັບປະກັນເດັກໜຸ່ມນັ້ນໄວ້ກັບພໍ່ວ່າ,
ຖ້າລູກຫາກບໍ່ໄດ້ພານ້ອງກັບມາ ລູກຈະຮັບຄວາມຜິດຕໍ່ພໍ່ຕະຫຼອດ
ໄປເປັນນິດ. ໓໓ເຫດສະນັ້ນ ຂໍໂຜດໃຫ້ຂ້ານ້ອຍຜູ້ເປັນທາດຂອງທ່ານ
ຢູ່ນີ້ເປັນທາດຂອງທ່ານ ແທນເດັກໜຸ່ມນັ້ນ ແລະຂໍທ່ານໂຜດໃຫ້ເດັກ
ໜຸ່ມນັ້ນກັບຂຶ້ນໄປກັບພວກອ້າຍຂອງລາວເທີ້ນ. ໓໔ດ້ວຍວ່າ ຂ້ານ້ອຍ
ຈະກັບໄປຫາພໍ່ຂອງຂ້ານ້ອຍໄດ້ຢ່າງໃດ ຖ້າເດັກໜຸ່ມນັ້ນຫາກບໍ່ໄດ້
ກັບໄປນຳຂ້ານ້ອຍ ຢ້ານວ່າຂ້ານ້ອຍຈະເຫັນເຫດຮ້າຍເກີດແກ່ພໍ່
ຂອງຂ້ານ້ອຍ".

## ບົດທີ 45

໑ໂຢເຊບ ບໍ່ສາມາດອົດກັ້ນຕົນເອງຕໍ່ໜ້າຄົນທັງປວງທີ່ເຝົ້າຢູ່ນຳທ່ານ
ໄດ້ ແລ້ວຈິ່ງໄດ້ຮ້ອງສັ່ງວ່າ "ໃຫ້ທຸກຄົນອອກໄປຈາກເຮົາເຖີ້ນ". ແລ້ວ
ບໍ່ມີຜູ້ໃດຢູ່ກັບ ໂຢເຊບ ເມື່ອທ່ານໄດ້ເປີດເຜີຍຕົນເອງໃຫ້ພວກອ້າຍ
ນ້ອງຮູ້ຈັກ. ໒ທ່ານໄດ້ຮ້ອງໄຫ້ດ້ວຍສຽງອັນດັງ ຈົນພວກຊາວ ເອຢິບ
ແລະຄົນໃນ ລາຊະວັງກະສັດ ຟາໂຣ ໄດ້ຍິນ. ໓ໂຢເຊບ ໄດ້ກ່າວ
ແກ່ພວກອ້າຍນ້ອງວ່າ "ເຮົາແມ່ນ ໂຢເຊບ, ພໍ່ເຮົາຍັງມີຊີວິດຢູ່ຫຼື?"
ພວກອ້າຍນ້ອງຕອບ ໂຢເຊບ ບໍ່ໄດ້, ເພາະເຂົາໄດ້ຕົກໃຈຢ້ານຫຼາຍ
ຕໍ່ໜ້າຂອງ ໂຢເຊບ. ໔ໂຢເຊບ ໄດ້ບອກພວກອ້າຍນ້ອງວ່າ "ເຊີນພວກ
ເຈົ້າຫຍັບເຂົ້າມາໃກ້ເຮົາເຖີ້ນ" ເຂົາໄດ້ຫຍັບເຂົ້າໄປໃກ້ ແລະທ່ານ

ໄດ້ກ່າວວ່າ "ເຮົາແມ່ນ ໂຢເຊບ ນ້ອງຂອງພວກອ້າຍຜູ້ທີ່ພວກອ້າຍ
ໄດ້ຂາຍໄປໃນປະເທດ ເອຢິບ". ໕ບັດນີ້ຢ່າເປັນທຸກໃຈ ຫຼືກ່າວຮ້າຍ
ໂທດຕົນເອງເລີຍທີ່ໄດ້ຂາຍເຮົາມາທີ່ນີ້ເພາະວ່າພຣະເຈົ້າໄດ້ໃຊ້ເຮົາ
ມາກ່ອນໜ້າພວກເຈົ້າ ເພື່ອຈະໄດ້ຊ່ອຍຊີວິດໃຫ້ພົ້ນ. ໖ເຫດວ່າມີ
ຄວາມອຶດຢາກໃນປະເທດນີ້ໄດ້ສອງປີແລ້ວ ຍັງອີກຫ້າປີຊຶ່ງຈະບໍ່ມີ
ການເຮັດນາ ຫຼືກ່ຽວເຂົ້າ. ໗ພຣະເຈົ້າໄດ້ໃຊ້ເຮົາມາກ່ອນພວກເຈົ້າ
ເພື່ອຈະໄດ້ຮັກສາພວກເຈົ້າໄວ້ເທິງແຜ່ນດິນ ແລະໃຫ້ພົ້ນຊີວິດດ້ວຍ
ການໂຜດຊ່ອຍອັນໃຫຍ່. ໘ແລະດັ່ງນັ້ນບັດນີ້ຈຶ່ງບໍ່ແມ່ນພວກເຈົ້າໄດ້
ສົ່ງເຮົາມານີ້ ແຕ່ແມ່ນພຣະເຈົ້າໄດ້ສົ່ງເຮົາມາ, ພຣະອົງໄດ້ຕັ້ງເຮົາໃຫ້
ເປັນພໍ່ແກ່ຂອງກະສັດ ຟາໂຣ, ໃຫ້ເປັນເຈົ້ານາຍໃນລາຊະວັງຂອງ
ກະສັດ ແລະເປັນຜູ້ປົກຄອງປະເທດ ເອຢິບ ທັງໝົດ. ໙ພວກເຈົ້າ
ຈົ່ງຮີບກັບຂຶ້ນໄປຫາພໍ່ຂອງເຮົາ ແລະບອກພໍ່ວ່າ 'ໂຢເຊບລູກຂອງ
ທ່ານບອກດັ່ງນີ້ວ່າ, ພຣະເຈົ້າໄດ້ໂຜດຕັ້ງເຮົາໄວ້ໃຫ້ເປັນຜູ້ປົກຄອງ
ປະເທດ ເອຢິບ ທັງໝົດ, ເຊີນພໍ່ລົງມາຫາເຮົາ ຢ່າໄດ້ຊັກຊ້າ. ໑໐ແລ້ວ
ພໍ່ຈະໄດ້ອາໄສຢູ່ໃນແຜນດິນ ໂກເຊນ ພໍ່ຈະໄດ້ຢູ່ໃກ້ເຮົາທັງພໍ່ກັບລູກ
ຫຼານຂອງພໍ່, ຝູງແກະ,ຝູງແບ້,ຝູງງົວກັບສິ່ງຂອງທັງປວງຂອງພໍ່ດ້ວຍ.
໑໑ແລະເຮົາຈະລ້ຽງພໍ່ທີ່ນັ້ນ ເຫດວ່າຄວາມອຶດຢາກຍັງຈະມີຕໍ່ໄປອີກ
ຫ້າປີ ຢ້ານວ່າພໍ່, ຄອບຄົວຂອງພໍ່ແລະສິ່ງຂອງທັງປວງຂອງພໍ່ຈະມາ
ສູ່ຄວາມຍາກຈົນ'. ໑໒ແລະເບິ່ງແມ ຕາຂອງພວກເຈົ້າໄດ້ເຫັນ ແລະ
ຕາຂອງນ້ອງ ເບນຢາມິນ ກໍໄດ້ເຫັນວ່າ ແມ່ນປາກຂອງເຮົາເອງທີ່
ເວົ້າກັບພວກເຈົ້າ. ໑໓ແລະພວກເຈົ້າຈົ່ງເລົ່າສູ່ພໍ່ຟັງເຖິງຍົດສັກທີ່ເຮົາ
ມີຢູ່ໃນປະເທດ ເອຢິບ ແລະທຸກສິ່ງທີ່ພວກເຈົ້າໄດ້ເຫັນນັ້ນ ໃຫ້ພໍ່ຟັງ
ທຸກຢ່າງ ແລະພວກອ້າຍຈົ່ງຮີບພາພໍ່ເຮົາລົງມາທີ່ນີ້ເຖີດ". ໑໔ແລ້ວ
ໂຢເຊບ ໄດ້ແລ່ນໄປກອດຄໍນ້ອງ ເບນຢາມິນ ແລະຮ້ອງໄຫ້, ແລະ

ເບນຢາມິນ ກອດຄໍໂຢເຊບຮ້ອງໄຫ້. ໑໕ແລະຍິ່ງກວ່ານັ້ນ ໂຢເຊບ
ກໍໄດ້ກອດຈູບອ້າຍທຸກຄົນ ແລະຮ້ອງໄຫ້ກັບພວກເຂົາ ແລະພາຍຫຼັງ
ນັ້ນພວກອ້າຍກໍໄດ້ເວົ້າກັນກັບ ໂຢເຊບ.
໑໖ຂ່າວເລື່ອງນັ້ນໄດ້ມາເຖິງ ລາຊະວັງຂອງກະສັດ ຟາໂຣ ວ່າ “ອ້າຍ
ນ້ອງຂອງ ໂຢເຊບໄດ້ມາຫາເພິ່ນ” ກະສັດພ້ອມດ້ວຍຂ້າລາຊະການ
ຂອງເພິ່ນກໍພາກັນຍິນດີ. ໑໗ກະສັດ ຟາໂຣ ໄດ້ກ່າວແກ່ ໂຢເຊບ ວ່າ
“ຈົ່ງບອກພວກອ້າຍນ້ອງຂອງທ່ານວ່າ ‘ຈົ່ງກະທຳດັ່ງນີ້ ຈົ່ງເອົາຂອງ
ວາງໄວ້ເທິງຫຼັງສັດ ແລະກັບໄປໃນແຜນດິນ ການາອານ. ໑໘ພາພໍ່
ແລະຄອບຄົວຂອງທ່ານທັງຫຼາຍມາຫາເຮົາ ແລະເຮົາຈະເອົາຂອງ
ດີທີ່ສຸດໃນປະເທດ ເອຢິບ ໃຫ້ແກ່ທ່ານທັງຫຼາຍ ແລະທ່ານທັງຫຼາຍ
ຈະກິນຜົນອັນອຸດົມສົມບູນແຫ່ງປະເທດ ເອຢິບ. ໑໙ຝ່າຍທ່ານ ເຮົາມີ
ຄຳສັ່ງໃຫ້ບອກເຂົາວ່າ ຈົ່ງກະທຳດັ່ງນີ້ ຈົ່ງເອົາກວຽນທັງຫຼາຍຈາກ
ປະເທດ ເອຢິບ ໄປຮັບເອົາລູກເມຍທັງຫຼາຍ ແລະເອົາພໍ່ຂອງພວກ
ເຈົ້າມາທີ່ນີ້. ໒໐ຢ່າໃຫ້ພວກທ່ານເສຍດາຍຊັບສິ່ງຂອງເລີຍ ເພາະວ່າ
ຊັບສິ່ງຂອງອັນດີທີ່ສຸດຂອງປະເທດ ເອຢິບ ທັງໝົດເປັນຂອງທ່ານ
ທັງຫຼາຍ’ ”.

໒໑ແລ້ວພວກລູກຂອງ ອິດສະຣາເອນ ກໍໄດ້ກະທຳດັ່ງນັ້ນ ແລ້ວ ໂຢ
ເຊບໄດ້ຈັດແຈງລົດຫຼາຍຄັນໃຫ້ພວກເຂົາ ຕາມຄຳສັ່ງຂອງກະສັດ
ຟາໂຣ ແລະເອົາອາຫານໃຫ້ຖືໄປກິນຕາມທາງນຳ. ໒໒ທ່ານໄດ້ເອົາ
ເສື້ອຜ້າປ່ຽນໃຫ້ຄົນລະຊຸດ ແຕ່ ເບນຢາມິນ ເພິ່ນໄດ້ເອົາເງິນ 300
ຫຼຽນກັບເສື້ອຜ້າປ່ຽນຫ້າຊຸດໃຫ້ ເບນຢາມິນ. ໒໓ທ່ານໄດ້ຝາກຂອງໄປ
ໃຫ້ພໍ່ຂອງທ່ານດັ່ງນີ້: ລາ 10 ໂຕ ຕ່າງຂອງອັນດີທີ່ສຸດທີ່ໃນປະເທດ
ເອຢິບ, ລາໂຕແມ່ 10 ໂຕ ຕ່າງເຂົ້າ, ເຂົ້າຈີ່ ແລະອາຫານ ເພື່ອໃຫ້

ພໍ່ກິນໃນຕາມທາງ. ໒໔ດັ່ງນັ້ນ ໂຢເຊບ ໄດ້ສົ່ງພວກອ້າຍນ້ອງໄປ
ແລະພວກເຂົາໄດ້ຈາກໄປ ແລ້ວ ໂຢເຊບໄດ້ສັ່ງພວກເຂົາວ່າ “ລະວັງ
ຢ່າຜິດຖຽງກັນໃນກາງທາງເດີ”.
໒໕ພວກເຂົາໄດ້ຂຶ້ນໄປຈາກປະເທດ ເອຢິບ ແລະໄດ້ມາເຖິງ ຢາໂຄບ
ພໍ່ຂອງພວກາໃນແຜນດິນ ການາອານ. ໒໖ພວກເຂົາໄດ້ບອກພໍ່ວ່າ
“ໂຢເຊບ ຍັງມີຊີວິດຢູ່ ແລະເພິ່ນເປັນຜູ້ປົກຄອງທົ່ວປະເທດ ເອຢິບ”.
ແຕ່ຈິດໃຈຂອງ ຢາໂຄບຍັງມືນງົງຢູ່ ເພາະທ່ານບໍ່ໄດ້ເຊື່ອພວກເຂົາ.
໒໗ແລ້ວພວກເຂົາໄດ້ບອກທ່ານເຖິງຄຳທັງຫຼາຍທີ່ ໂຢເຊບ ໄດ້ສັ່ງມາ
ໃຫ້ພໍ່ຟັງທັງໝົດ, ທ່ານໄດ້ເຫັນລົດທັງຫຼາຍທີ່ ໂຢເຊບ ໄດ້ໃຊ້ມາຮັບ
ຕົນນັ້ນ ແລະ ຈິດໃຈຂອງຢາໂຄບ ພໍ່ຂອງພວກເຂົາກໍໄດ້ເກີດມີຊີວິດ
ຊີວາຂຶ້ນໃໝ່. ໒໘ແລ້ວ ອິດສະຣາເອນ ໄດ້ກ່າວວ່າ “ເຮົາອີ່ມໃຈແລ້ວ,
ໂຢເຊບ ລູກຂອງເຮົາຍັງມີຊີວິດຢູ່, ເຮົາຈະໄປເຫັນລູກກ່ອນເຮົາຈະ
ຕາຍໄປ”.

## ບົດທີ 46

໑ແລ້ວ ອິດສະຣາເອນ ໄດ້ເອົາສິ່ງຂອງທັງປວງທີ່ຕົນມີເດີນທາງໄປ
ແລະໄດ້ມາເຖິງເບເອນເຊບາ ແລະທີ່ນັ້ນທ່ານໄດ້ເອົາເຄື່ອງບູຊາ
ຖວາຍແກ່ພຣະເຈົ້າຂອງ ອີຊາກ ພໍ່ຂອງຕົນ. ໒ແລະໃນຄືນວັນນັ້ນ
ພຣະເຈົ້າໄດ້ກ່າວກັບ ອິດສະຣາເອນ ໃນນິມິດ ແລະຊົງກ່າວວ່າ,
“ຢາໂຄບ, ຢາໂຄບເອີຍ ” ທ່ານໄດ້ທູນຕອບວ່າ “ພຣະອົງເຈົ້າຂ້າ
ຂ້ານ້ອຍຢູ່ທີ່ນີ້”. ໓ພຣະອົງໄດ້ກ່າວວ່າ “ເຮົາແມ່ນພຣະເຈົ້າ, ຄືພຣະ
ເຈົ້າຂອງພໍ່ຂອງເຈົ້າ ຢ່າຊູ່ຢ້ານທີ່ຈະລົງໄປໃນປະເທດ ເອຢິບ, ເພາະ
ວ່າເຮົາຈະໃຫ້ເຈົ້າເກີດເປັນຊົນຊາດອັນໃຫຍ່ທີ່ນັ້ນ: ໔ເຮົາຈະລົງໄປ

ກັບເຈົ້າໃນປະເທດ ເອຢິບ ແລະ ເຮົາຈະພາເຈົ້າກັບຂຶ້ນມາອີກຢ່າງ
ແນ່ນອນດ້ວຍ ແລະ ໂຢເຊບ ຈະເອົາມືວາງລົງທີ່ຕາຂອງເຈົ້າ". ໕ແລ້ວ
ຢາໂຄບ ໄດ້ເດີນທາງຂຶ້ນໄປຈາກ ເບເອນເຊບາ ແລະພວກລູກຂອງ
ອິດສະຣາເອນ ໄດ້ໃຫ້ ຢາໂຄບ ພໍ່ຂອງພວກເຂົາ ກັບລູກນ້ອຍແລະ
ເມຍທັງຫຼາຍຂອງພວກເຂົາ ຂີ່ລົດທັງຫຼາຍທີ່ກະສັດ ຟາໂຣ ໄດ້ສົ່ງມາ
ເພື່ອຮັບເອົາທ່ານໄປນັ້ນ. ໖ເຂົາໄດ້ເອົາຝູງສັດ ແລະເຂົ້າຂອງທີ່ເຂົາ
ໄດ້ມີໃນແຜນດິນ ການາອານ ເດີນທາງມາໃນປະເທດ ເອຢິບ ທັງ
ຢາໂຄບ ກັບເຊື້ອສາຍທັງໝົດຂອງຕົນ. ໗ບັນດາລູກຊາຍກັບຫຼານ
ຊາຍຂອງຕົນ,ບັນດາລູກສາວກັບຫຼານສາວທັງປວງ ແລະຄອບຄົວ
ທັງໝົດຂອງ ຢາໂຄບ ໄດ້ເອົາລົງໄປໃນປະເທດ ເອຢິບ ກັບເພິ່ນ.

໘ແລະຕໍ່ໄປນີ້ຄືບັນດາຊື່ຂອງພວກລູກ ອິດສະຣາເອນ ທີ່ໄດ້ລົງໄປຢູ່
ໃນປະເທດ ເອຢິບ ທັງ ຢາໂຄບ ກັບລູກທັງຫຼາຍຂອງຕົນມີດັ່ງນີ້:
ຣູເບນ ລູກຊາຍກົກຂອງ ຢາໂຄບ. ໙ພວກລູກຊາຍຂອງ ຣູເບນ ມີ:
ຮາໂນກ, ປານລູ, ເຮສະໂຣນ ແລະຄາມີ.

໑໐ພວກລູກຊາຍຂອງ ຊີເມໂອນ ມີ: ເຢມູເອນ, ຢາມິນ, ໂອຮາດ, ຢາ
ກິນ, ໂສຮາ, ແລະ ຊາອູນ ຜູ້ທີ່ເກີດຈາກຍິງຊາວ ການາອານ.

໑໑ພວກລູກຊາຍຂອງ ເລວີ ມີ: ເກໂຊນ, ໂກຮາດ ແລະ ເມຣາຣີ.
໑໒ພວກລູກຊາຍຂອງ ຢູດາ ມີ: ເອຣະ, ໂອນານ, ເຊລາ, ເປເຣດ ແລະ
ເຊຣາ. ແຕ່ ເອຣະ ກັບ ໂອນານ ໄດ້ຕາຍໄປໃນແຜນດິນ ການາອານ,
ສ່ວນ ເປເຣດ ມີລູກຊາຍຊື່: ເຮສະໂຣນ ແລະ ຮາມູນ.

໑໓ພວກລູກຊາຍຂອງ ອິດຊາຄາ ມີ: ໂຕລາ, ປູວາ, ໂຢບ ແລະ ຊິມ
ໂຣນ.

໑໔ພວກລູກຊາຍຂອງ ຊາບູໂລນ ມີ: ເຊເຣດ, ເອໂລນ ແລະ ຢາເລ
ເອນ.

໑໕ຄົນທັງຫຼາຍນີ້ແມ່ນລູກຊາຍຂອງ ຢາໂຄບ ທີ່ໄດ້ບັງເກີດຈາກນາງ
ເລອາ ໃນເມືອງປາດັນອາຣຳ ກັບລູກສາວນາງ ດີນາ ລູກຊາຍຍິງທັງ
ປວງລວມມີ 33 ຄົນ.

໑໖ພວກລູກຊາຍຂອງກາດ ມີ: ສັບໂຟນ, ຮັກກີ, ຊູນີ, ເອັດສະໂບນ,
ເອຣີ, ອາໂລດີ ແລະ ອາເຣລີ.

໑໗ພວກລູກຊາຍຂອງ ອາເຊ ມີ: ຍິມນາ, ອີຊະວາ, ອີຊະວີ, ເບຣີອາ
ແລະ ເຊຣາ ຜູ້ເປັນນ້ອງສາວຂອງເຂົາ ແລະລູກຊາຍຂອງ ເບຣີອາ
ມີ: ເຮເບ ແລະ ມັນກີເອນ. ໑໘ຄົນທັງຫຼາຍນີ້ແມ່ນລູກນາງ ສີລະປາ
ທີ່ ລາບານ ໄດ້ໃຫ້ແກ່ນາງ ເລອາ ຜູ້ເປັນລູກສາວຂອງຕົນ ແລະ ລູກ
16 ຄົນນີ້ນາງ ສີລະປາ ໄດ້ເກີດໃຫ້ແກ່ ຢາໂຄບ. ໑໙ນາງ ຣາເຊນ
ເມຍຂອງ ຢາໂຄບ ມີລູກສອງຄົນຄື: ໂຢເຊບ ແລະ ເບນຢາມິນ.

໒໐ໂຢເຊບ ເມື່ອຢູ່ໃນປະເທດ ເອຢິບ ມີລູກສອງຄົນ: ຜູ້ໜຶ່ງຊື່ ມານາ
ເຊ ອີກຜູ້ໜຶ່ງຊື່ ເອຟະລາອິມ ເກີດຈາກນາງ ອາເຊນັດ ລູກສາວ ໂປ
ຕິເຟລາ ປະໂລຫິດແຫ່ງເມືອງໂອນ.

໒໑ພວກລູກຊາຍຂອງ ເບນຢາມິນ ຊື່: ເບລາ, ເບເກ, ອັດຊະເບນ,
ເກຣາ, ນາອາມານ, ເອຮີ, ໂຣເຊ, ມຸບປິມ, ຮຸບປິມ ແລະ ອາກເດ.
໒໒ຄົນເຫຼົ່ານີ້ແມ່ນລູກຊາຍຂອງນາງ ຣາເຊນ ທີ່ໄດ້ເກີດໃຫ້ແກ່ ຢາ
ໂຄບ ລວມທັງໝົດມີ14 ຄົນ.

໒໓ລູກຊາຍຂອງ ດານ ຊື່: ຮູຊິມ.

໒໔ພວກລູກຊາຍຂອງ ເນບທາລີ ຊື່: ຢາເຊເອນ, ກູນີ, ເຢເຊ ແລະ
ຊິນເລັມ. ໒໕ຄົນທັງຫຼາຍນີ້ແມ່ນລູກຂອງນາງ ບິນຮາ, ທີ່ ລາບານ ໄດ້
ໃຫ້ແກ່ນາງ ຣາເຊນ ລູກສາວຂອງຕົນ, ລູກ 7 ຄົນນີ້ນາງໄດ້ເກີດໃຫ້
ຢາໂຄບ. ໒໖ຄົນທັງປວງທີ່ໄດ້ລົງໄປໃນປະເທດ ເອຢິບ ກັບ ຢາໂຄບ
ທີ່ເກີດຈາກແອວຂອງເພິ່ນ ບໍ່ນັບເມຍຂອງພວກລູກຊາຍທ່ານ ມີ
ທັງໝົດ 66 ຄົນ. ໒໗ພວກລູກຊາຍຂອງ ໂຢເຊບ ທີ່ໄດ້ເກີດໃນປະເທດ
ເອຢິບ ມີສອງຄົນ, ນັບຄົນທັງປວງໃນຄອບຄົວຂອງ ຢາໂຄບ ທີ່ໄດ້
ມາຢູ່ໃນປະເທດ ເອຢິບ ແລ້ວມີ 70 ຄົນ.

໒໘ແລ້ວ ຢາໂຄບ ໄດ້ໃຊ້ ຢູດາ ໄປກ່ອນໜ້າໄປຫາ ໂຢເຊບ ເພື່ອຈະໄດ້
ນຳໜ້າໄປທີ່ ໂກເຊນ ແລະພວກເຂົາໄດ້ມາເຖິງແຜນດິນ ໂກເຊນ.
໒໙ໂຢເຊບ ໄດ້ຕຽມລົດມ້າຂອງຕົນໄປຕ້ອນຮັບ ອິດສະຣາເອນ ພໍ່
ຂອງຕົນເຖິງທີ່ ໂກເຊນ ພໍໄດ້ເຫັນພໍ່ ກໍໄດ້ແລ່ນໄປກອດຄໍພໍ່ແລະໄດ້
ຮ້ອງໄຫ້ເປັນເວລາດົນນານ. ໓໐ອິດສະຣາເອນ ໄດ້ກ່າວແກ່ ໂຢເຊບ
ວ່າ "ດຽວນີ້ພໍ່ຈະຕາຍກໍຕາມເຖີດ ເພາະພໍ່ໄດ້ເຫັນໜ້າຂອງລູກແລ້ວ
ແລະຮູ້ວ່າລູກຍັງມີຊີວິດຢູ່".

໓໑ໂຢເຊບ ໄດ້ບອກພວກອ້າຍນ້ອງ ແລະຄົນທັງປວງໃນຄອບຄົວ
ຂອງພໍ່ວ່າ “ເຮົາຈະຂຶ້ນໄປກາບທູນກະສັດ ຟາໂຣ ວ່າ: ‘ພວກອ້າຍ
ນ້ອງແລະຄອບຄົວຂອງພໍ່ທີ່ຢູ່ໃນແຜ່ນດິນ ການາອານ ນັ້ນໄດ້ມາ
ຫາຂ້ານ້ອຍແລ້ວ. ໓໒ຄົນທັງຫຼາຍນັ້ນເປັນຄົນລ້ຽງແກະ ເພາະພວກ
ເຂົາມີອາຊີບລ້ຽງສັດແລະພວກເຂົາໄດ້ເອົາຝູງແກະ, ຝູງແບ້, ຝູງງົວ
ແລະຊັບສິ່ງຂອງທັງປວງທີ່ພວກເຂົາມີມານຳດ້ວຍ’. ໓໓ແລະຢູ່ມາ
ເມື່ອກະສັດ ຟາໂຣ ຈະສັ່ງໃຫ້ເອີ້ນພວກເຈົ້າມາເຂົ້າເຝົ້າ ແລະຈະ
ຖາມວ່າ ‘ທ່ານທັງຫຼາຍທຳມາຫາກິນລ້ຽງຊີບຢ່າງໃດ?’ ໓໔ພວກເຈົ້າຈິ່ງ
ກາບທູນວ່າ ‘ຜູ້ຮັບໃຊ້ຂອງທ່ານທຳມາຫາກິນລ້ຽງຊີບກ່ຽວກັບການ
ລ້ຽງສັດມາຕັ້ງແຕ່ເປັນເດັກນ້ອຍຈົນເຖິງທຸກວັນນີ້ ທັງພວກຂ້ານ້ອຍ
ແລະບັນພະບຸລຸດຂອງພວກຂ້ານ້ອຍ’ ເພື່ອພວກເຈົ້າຈະໄດ້ອາໄສຢູ່
ໃນແຜ່ນດິນ ໂກເຊນ. ເຫດວ່າຊາວ ເອຢິບ ລັງກຽດພວກຜູ້ລ້ຽງແກະ
ທຸກຄົນ”.

## ບົດທີ 47

໑ໂຢເຊບ ໄດ້ເຂົ້າໄປກາບທູນກະສັດ ຟາໂຣ ວ່າ “ພໍ່ກັບອ້າຍນ້ອງຂອງ
ຂ້ານ້ອຍໄດ້ພາກັນມາຈາກແຜ່ນດິນ ການາອານ ແລ້ວ, ພວກເຂົາ
ໄດ້ເອົາຝູງແກະ, ຝູງແບ້, ຝູງງົວ ແລະສິ່ງຂອງທັງປວງທີ່ພວກເຂົາມີ
ມາຈາກແຜ່ນດິນ ການາອານ ແລະບັດນີ້ ພວກເຂົາຢູ່ທີ່ ໂກເຊນ”
໒ແລ້ວ ໂຢເຊບ ໄດ້ພາອ້າຍຫ້າຄົນໄປເຝົ້າກະສັດ ຟາໂຣ. ໓ກະສັດ
ຟາໂຣໄດ້ຖາມພວກອ້າຍນ້ອງຂອງໂຢເຊບວ່າ “ທ່ານທັງຫຼາຍທຳມາ
ຫາກິນລ້ຽງຊີບຢ່າງໃດ?” ພວກເຂົາໄດ້ກາບທູນກະສັດ ຟາໂຣ ວ່າ “ຜູ້
ຮັບໃຊ້ຂອງທ່ານເປັນຄົນລ້ຽງສັດ ທັງພວກຂ້ານ້ອຍທັງຫຼາຍກັບພວກ

ບັນພະບຸລຸດຂອງພວກຂ້ານ້ອຍດ້ວຍ”.໔ແລະເຂົາໄດ້ກາບທູນກະສັດ
ຟາໂຣ ອີກວ່າ “ພວກຂ້ານ້ອຍໄດ້ມາເພື່ອຈະໄດ້ອາໄສຢູ່ໃນປະເທດ
ນີ້, ເພາະວ່າບໍ່ມີທີ່ງຫຍ້າຈະລ້ຽງສັດຂອງພວກຂ້ານ້ອຍຜູ້ຮັບໃຊ້ຂອງ
ທ່ານ, ເຫດວ່າມີຄວາມອຶດຢາກຢ່າງໜັກໃນແຜນດິນ ການາອານ.
ເຫດສະນັ້ນຂໍກະສັດໂຜດໃຫ້ພວກຂ້ານ້ອຍຜູ້ຮັບໃຊຂອງທ່ານອາໄສ
ຢູ່ໃນແຜນດິນ ໂກເຊນ”. ໕ກະສັດ ຟາໂຣ ໄດ້ກ່າວແກ່ ໂຢເຊບ ວ່າ
“ພໍ່ກັບອ້າຍນ້ອງຂອງເຈົ້າໄດ້ມາຫາທ່ານແລ້ວ.໖ແຜນດິນໃນປະເທດ
ເອຢິບ ທັງໝົດຢູ່ໃນຕໍ່ໜ້າທ່ານ, ຈົ່ງເລືອກເອົາດິນຕອນທີ່ດີທີ່ສຸດໃຫ້
ພໍ່ກັບອ້າຍນ້ອງຂອງທ່ານອາໄສຢູ່ທີ່ນັ້ນ, ໃຫ້ພວກເຂົາອາໄສຢູ່ໃນ
ແຜນດິນ ໂກເຊນ ເທີ້ນ ແລະໃນພວກອ້າຍນ້ອງນັ້ນ ຖ້າທ່ານເຫັນຜູ້
ໜຶ່ງຜູ້ໃດໃນພວກເຂົາມີຄວາມສາມາດ ຈົ່ງແຕ່ງຕັ້ງເຂົາໄວ້ໃຫ້ເປັນ
ຫົວໜ້າຜູ້ລ້ຽງສັດຂອງເຮົາ”.໗ແລ້ວໂຢເຊບໄດ້ພາຢາໂຄບພໍ່ຂອງຕົນ,
ເຂົ້າໄປເຝົ້າກະສັດຟາໂຣແລ້ວຢາໂຄບໄດ້ອວຍພອນໃຫ້ແກ່ກະສັດ
ຟາໂຣ. ໘ກະສັດ ຟາໂຣ ໄດ້ຖາມ ຢາໂຄບ ວ່າ “ທ່ານມີອາຍຸຈັກປີ
ແລ້ວ?” ໙ຢາໂຄບ ໄດ້ກາບທູນກະສັດ ຟາໂຣ ວ່າ “ຈະນັບວັນແລະ
ປີທັງຫຼາຍທີ່ຂ້ານ້ອຍທ່ອງທ່ຽວໄປມາໄດ້ 130 ປີ ແລະວັນປີແຫ່ງຊີວິ
ດຂອງຂ້ານ້ອຍນັ້ນສັ້ນ ແລະລຳບາກ ,ບໍ່ເທົ່າອາຍຸຂອງບັນພະບຸລຸດ
ຂອງຂ້ານ້ອຍທ່ອງທ່ຽວໄປແຕ່ກ່ອນນັ້ນ”. ໑໐ແລ້ວ ຢາໂຄບ ໄດ້ອວຍ
ພອນໃຫ້ແກ່ກະສັດ ຟາໂຣ ແລະໄດ້ທູນລາຈາກ ຟາໂຣ ໄປ.

໑໑ໂຢເຊບ ໄດ້ໃຫ້ບ່ອນຢູ່ແກ່ພໍ່ ແລະອ້າຍນ້ອງຂອງຕົນ,ໃຫ້ດິນຕອນ
ໜຶ່ງເປັນກຳມະສິດຂອງພວກເຂົາໃນປະເທດ ເອຢິບ, ເປັນຕອນດິນ
ທີ່ດີທີ່ສຸດໃນແຜນດິນ ລາເຊເຊັດ ຕາມກະສັດ ຟາໂຣ ໄດ້ສັ່ງໄວ້.
໑໒ໂຢເຊບ ໄດ້ລ້ຽງພໍ່ກັບອ້າຍນ້ອງ ແລະຄົວເຮືອນທັງໝົດຂອງ
ທ່ານໃຫ້ພວກເຂົາມີອາຫານກິນຕາມຈຳນວນຄົນໃນຄອບຄົວ.

໑໓ແລະທົ່ວແຜນດິນບໍ່ມີອາຫານກິນ ເພາະຄວາມອຶດຢາກນັ້ນໜັກ
ແສນສາຫັດຫຼາຍ ຈົນປະເທດ ເອຢິບ ແລະແຜນດິນ ການາອານ
ໄດ້ອິດອ່ອນຫິວໂຮຍຍ້ອນຄວາມອຶດຢາກ. ໑໔ໂຢເຊບ ໄດ້ທ້ອນ
ໂຮມເອົາເງິນທີ່ໄດ້ໃນປະເທດ ເອຢິບ ແລະໃນແຜນດິນ ການາອານ
ທີ່ເຂົາເອົາມາຊື້ເຂົ້າ ແລ້ວ ໂຢເຊບ ໄດ້ນຳເອົາເງິນເຂົ້າມາໄວ້ໃນ
ລາຊະວັງຂອງກະສັດ ຟາໂຣ. ໑໕ແລະເມື່ອເງິນໃນປະເທດ ເອຢິບ
ໃນແຜນດິນ ການາອານ ໝົດແລ້ວ ຊາວ ເອຢິບ ທັງໝົດໄດ້ມາຮ້ອງ
ຮຽນຕໍ່ ໂຢເຊບ ວ່າ "ຂໍໃຫ້ພວກຂ້ານ້ອຍມີເຂົ້າກິນເທີ້ນ ເຫດໃດພວກ
ຂ້ານ້ອຍທັງຫຼາຍຈະຕ້ອງຕາຍຕໍ່ໜ້າທ່ານ ຍ້ອນເງິນໝົດເສຍແລ້ວ?"
໑໖ແລ້ວ ໂຢເຊບ ໄດ້ບອກວ່າ "ພວກເຈົ້າຈົ່ງເອົາຝູງສັດຂອງພວກ
ເຈົ້າມາ ແລະເຮົາຈະເອົາເຂົ້າແລກກັບຝູງສັດຂອງພວກເຈົ້າ ຖ້າ
ເງິນຫາກໝົດແລ້ວ". ໑໗ແລ້ວພວກເຂົາໄດ້ເອົາຝູງສັດມາໃຫ້ ໂຢ
ເຊບ, ຝ່າຍໂຢເຊບ ໄດ້ເອົາເຂົ້າແລກກັບຝູງມ້າ , ຝູງແກະ,ຝູງແບ້,
ຝູງງົວ, ຝູງລາ ໂຢເຊບ ໄດ້ລ້ຽງຄົນທັງຫຼາຍໃນປີນັ້ນດ້ວຍການເອົາ
ເຂົ້າແລກກັບຝູງສັດຂອງພວກເຂົາ. ໑໘ເມື່ອປີນັ້ນສິ້ນສຸດລົງແລ້ວ ໃນ
ປີຕໍ່ມາພວກເຂົາໄດ້ໄປຫາ ໂຢເຊບ ອີກ ແລະໄດ້ຮ້ອງຮຽນຕໍ່ທ່ານວ່າ
"ພວກຂ້ານ້ອຍທັງຫຼາຍຈະບໍ່ປິດບັງໄວ້ຈາກເຈົ້ານາຍຂອງພວກຂ້າ
ນ້ອຍວ່າເງິນຂອງພວກຂ້ານ້ອຍໄດ້ໝົດແລ້ວ ແລະຝູງສັດຂອງພວກ
ຂ້ານ້ອຍເຈົ້ານາຍກໍໄດ້ເອົາໄປໝົດແລ້ວ ບໍ່ເຫຼືອຫຍັງແລ້ວໃນສາຍ
ຕາຂອງເຈົ້ານາຍ ພວກຂ້ານ້ອຍເຫຼືອຢູ່ແຕ່ຕົນຕົວພວກຂ້ານ້ອຍກັບ
ທີ່ດິນເທົ່ານັ້ນ. ໑໙ເຫດໃດ ພວກຂ້ານ້ອຍຈະຕ້ອງຕາຍໄປຕໍ່ໜ້າທ່ານ
ທັງຕົວພວກຂ້ານ້ອຍກັບທີ່ດິນຂອງພວກຂ້ານ້ອຍ? ຂໍທ່ານຈົ່ງຊື້ຕົວ
ພວກຂ້ານ້ອຍກັບທີ່ດິນແລກກັບເຂົ້າ ແລະພວກຂ້ານ້ອຍທັງຫຼາຍກັບ
ດິນໄຮ່ດິນນາຈະເປັນທາດຂອງກະສັດ ຟາໂຣ ແລະຂໍທ່ານໂຜດໃຫ້

ແນວເຂົ້າປູກໃຫ້ແກ່ພວກຂ້ານ້ອຍ ເພື່ອພວກຂ້ານ້ອຍທັງຫຼາຍຈະໄດ້
ມີຊີວິດຢູ່ແລະບໍ່ຕາຍໄປ ແລະແຜ່ນດິນຈະບໍ່ຮົກຮ້າງເປົ່າວ່າງໄປ”.
໒໐ແລ້ວ ໂຢເຊບ ໄດ້ຊື້ທີ່ດິນທັງໝົດທົ່ວປະເທດ ເອຢິບ ໃຫ້ແກ່ກະສັດ
ຟາໂຣ. ເຫດວ່າຊາວ ເອຢິບ ໄດ້ຂາຍດິນນາຂອງພວກເຂົາທຸກຄົນ
ຍ້ອນຄວາມອຶດຢາກໜັກແສນສາຫັດຕໍ່ພວກເຂົາຫຼາຍ ແລະທີ່ດິນໄດ້
ກາຍເປັນຂອງກະສັດ ຟາໂຣ. ໒໑ແລະປະຊາຊົນເຫຼົ່ານັ້ນ ໂຢເຊບ
ໃຫ້ມາໂຮມກັນຢູ່ໃນຫົວເມືອງຕ່າງໆ ທົ່ວຕະຫຼອດເຂດແດນ ເອຢິບ
ຕັ້ງແຕ່ທີ່ສຸດນີ້ຈົນເຖິງທີ່ສຸດນັ້ນ. ໒໒ແຕ່ວ່າ ໂຢເຊບ ບໍ່ໄດ້ຊື້ເອົາທີ່ດິນ
ຂອງພວກປະໂລຫິດ ເພາະກະສັດ ຟາໂຣ ໄດ້ກຳນົດເອົາສ່ວນໜຶ່ງ
ໄວ້ສຳຫຼັບພວກປະໂລຫິດນັ້ນ ແລະເຂົາໄດ້ກິນສ່ວນທີ່ກະສັດ ຟາໂຣ
ໄດ້ກຳນົດໄວ້ໃຫ້ນັ້ນ ດ້ວຍເຫດນັ້ນ ເຂົາຈຶ່ງບໍ່ໄດ້ຂາຍທີ່ດິນຂອງເຂົາ.
໒໓ແລ້ວ ໂຢເຊບ ໄດ້ບອກປະຊາຊົນທັງປວງວ່າ “ເບິ່ງແມ ໃນວັນນີ້
ເຮົາໄດ້ຊື້ຕົວພວກເຈົ້າກັບທີ່ດິນໄຮ່ນາຂອງພວກເຈົ້າສຳຫຼັບກະສັດ
ຟາໂຣ ແລ້ວ ແລະເຮົາໄດ້ເອົາແນວເຂົ້າປູກໃຫ້ແກ່ພວກເຈົ້າ ພວກ
ເຈົ້າຈົ່ງປູກເຂົ້າເຖີ້ນ. ໒໔ແລະຢູ່ມາເມື່ອພວກເຈົ້າກ່ຽວເຂົ້າ ພວກ
ເຈົ້າຈົ່ງແບ່ງເປັນຫ້າສ່ວນ, ສ່ວນໜຶ່ງໃນຫ້າສ່ວນຈົ່ງໃຫ້ແກ່ກະສັດ
ຟາໂຣ ແລະສີ່ສ່ວນຈະເປັນຂອງພວກເຈົ້າເອງ ສຳຫຼັບແນວເຂົ້າປູກ
ແດ່ສຳຫຼັບອາຫານຂອງພວກເຈົ້າກັບຄອບຄົວຂອງພວກເຈົ້າດ້ວຍ
ແລະເປັນອາຫານລູກນ້ອຍຂອງພວກເຈົ້າ”. ໒໕ພວກເຂົາໄດ້ຕອບວ່າ
“ທ່ານໄດ້ຊ່ອຍຊີວິດຂອງພວກຂ້ານ້ອຍໄວ້ ຂໍໃຫ້ພວກຂ້ານ້ອຍເປັນ
ທີ່ໂຜດກະລຸນາຄຸນຕໍ່ໜ້າເຈົ້ານາຍເຖີ້ນ ແລະພວກຂ້ານ້ອຍທັງຫຼາຍ
ຈະເປັນທາດຮັບໃຊ້ຂອງ ຟາໂຣ”. ໒໖ແລະ ໂຢເຊບ ໄດ້ຕັ້ງໃຫ້ເປັນ
ກົດໝາຍແຫ່ງປະເທດ ເອຢິບ, ຕັ້ງແຕ່ວັນນັ້ນມາຈົນເຖິງທຸກວັນນີ້
ໃຫ້ສ່ວນໜຶ່ງໃນຫ້າສ່ວນ ເປັນຂອງກະສັດ ຟາໂຣ ຍົກເວັ້ນທີ່ດິນຂອງ

ປະໂລຫິດທັງປວງນັ້ນ ເພາະບໍ່ໄດ້ເປັນຂອງກະສັດ ຟາໂຣ. ໒໗ພວກ
ອິດສະຣາເອນ ໄດ້ອາໄສຢູ່ໃນປະເທດ ເອຢິບ ໃນແຂວງ ໂກເຊນ,
ພວກເຂົາມີຊັບສິນບັດທີ່ນັ້ນ ແລະພວກເຂົາໄດ້ຂະຫຍາຍເຊື້ອສາຍ
ເກີດທະວີມາກຂຶ້ນຢ່າງຫຼວງຫຼາຍ. ໒໘ຢາໂຄບ ໄດ້ອາໄສຢູ່ໃນປະເທດ
ເອຢິບ ໄດ້ 17 ປີ ແລະລວມອາຍຸທັງໝົດຂອງ ຢາໂຄບ ໄດ້ 147 ປີ.
໒໙ແລະເວລາ ອິດສະຣາເອນ ຈະຕາຍໄປໄດ້ຫຍັບເຂົ້າມາໃກ້ແລ້ວ,
ທ່ານໄດ້ຮ້ອງ ໂຢເຊບ ລູກຊາຍຂອງຕົນມາ ແລະກ່າວແກ່ທ່ານວ່າ
"ຖ້າເຮົາໄດ້ຮັບຄວາມກະລຸນາຕໍ່ສາຍຕາຂອງທ່ານ ຂໍທ່ານໄດ້ຢຽດ
ມືມາວາງໄວ້ທີ່ກົກຂາຂອງເຮົາ ແລະປະຕິບັດຕໍ່ເຮົາດ້ວຍຄວາມເມດ
ຕາ ແລະຈິງໃຈຕໍ່ເຮົາເຖີ້ນ, ຂໍທ່ານຢ່າຝັງສົບເຮົາໄວ້ໃນປະເທດ ເອ
ຢິບ, ໓໐ແຕ່ເມື່ອເຮົາຈະນອນຫຼັບໄປຢູ່ກັບພວກບັນພະບຸລຸດຂອງເຮົາ
ທ່ານຈົ່ງນຳເອົາສົບເຮົາອອກຈາກປະເທດ ເອຢິບ ແລະໄປຝັງເຮົາ
ໄວ້ທີ່ບ່ອນຝັງສົບຂອງພວກບັນພະບຸລຸດນັ້ນເທີ້ນ". ໂຢເຊບ ໄດ້ຕອບ
ທ່ານວ່າ, " ລູກຈະເຮັດຕາມທີ່ພໍ່ໄດ້ສັ່ງ". ໓໑ແລະທ່ານໄດ້ກ່າວວ່າ
"ຈົ່ງສາບານຕໍ່ໜ້າເຮົາເຖີ້ນ" ແລ້ວ ໂຢເຊບ ໄດ້ສາບານຕໍ່ພໍ່. ແລ້ວ
ອິດສະຣາເອນ ກໍໄດ້ໝູບຕົວລົງຂາບໄຫວ້ທີ່ເທິງຫົວຕຽງນອນ.

## ບົດທີ 48

໑ແລະຢູ່ມາເມື່ອພາຍຫຼັງສິ່ງທັງຫຼາຍນີ້ແລ້ວ ເຂົາກໍໄດ້ໄປບອກ ໂຢ
ເຊບ ວ່າ "ເບິ່ງເຖີດ ພໍ່ຂອງທ່ານປ່ວຍຢູ່" ແລ້ວ ໂຢເຊບ ກໍໄດ້ພາເອົາ
ມານາເຊ ກັບ ເອຟະລາອິມ ລູກຊາຍທັງສອງຂອງຕົນໄປກັບຕົນ.
໒ແລະມີຄົນໄດ້ໄປບອກ ຢາໂຄບ ວ່າ "ເບິ່ງແມ ໂຢເຊບ ລູກຂອງທ່ານ
ມາຫາທ່ານ" ແລ້ວ ອິດສະຣາເອນ ໄດ້ຮວບຮວມກຳລັງ ແລະລຸກນັ່ງ

ຢູ່ທີ່ຕຽງນອນ. ໓ຢາໂຄບ ໄດ້ບອກ ໂຢເຊບ ວ່າ "ພຣະເຈົ້າອົງຊົງ
ລິດທານຸພາບສູງສຸດໄດ້ປະກົດແກ່ພໍ່ທີ່ເມືອງລູເຊ ໃນແຜນດິນການາ
ອານ ແລະໄດ້ອວຍພອນໃຫ້ແກ່ພໍ່, ໔ແລະໄດ້ກ່າວແກ່ພໍ່ວ່າ "ເບິ່ງເຖີດ
ເຮົາຈະໃຫ້ເຈົ້າຂະຫຍາຍເຊື້ອສາຍເກີດທະວີມາກຂຶ້ນ ແລະເຮົາຈະ
ກະທຳໃຫ້ເຈົ້າເປັນຊົນຊາດອັນໃຫຍ່ ແລະຈະຍົກແຜ່ນດິນນີ້ໃຫ້ແກ່
ເຊື້ອສາຍຂອງເຈົ້າຊຶ່ງຈະມາພາຍຫຼັງເຈົ້າເປັນກຳມະສິດຕະຫຼອດໄປ
ເປັນນິດ".

໕"ແລະບັດນີ້ລູກຊາຍທັງສອງຂອງທ່ານທີ່ໄດ້ເກີດໃຫ້ແກ່ເຈົ້າໃນ
ປະເທດ ເອຢິບ ກ່ອນພໍ່ຈະມາຫາທ່ານໃນປະເທດ ເອຢິບ ນັ້ນ ກໍເປັນ
ລູກຊາຍຂອງພໍ່ ເໝືອນດັ່ງ ຣູເບນ ແລະ ຊີເມໂອນ ເປັນລູກຂອງພໍ່.
໖ແລະລູກທັງຫຼາຍທີ່ໄດ້ເກີດແກ່ທ່ານພາຍຫຼັງພວກເຂົານັ້ນຈະເປັນ
ຂອງທ່ານ ແລະເຂົາຈະມີຊື່ຕາມຊື່ພວກອ້າຍຂອງເຂົາໃນການຮັບ
ມໍລະດົກຂອງເຂົານັ້ນ. ໗ແລະຝ່າຍເຮົາ ເມື່ອເຮົາໄດ້ກັບມາຈາກເມືອງ
ປາດັນນາງຣາເຊນໄດ້ຕາຍຈາກພໍ່ໄປໃນແຜນດິນການາອານຂະນະ
ທີ່ຢູ່ຕາມທາງໃກ້ເມືອງ ເອຟາຣາທາ ແລະພໍ່ໄດ້ຝັງສົບນາງໄວ້ທີ່ຮີມ
ທາງໄປເມືອງ ເອຟາຣາທາ ນັ້ນກໍຄື ເບດເລເຮັມ. ໘ອິດສະຣາເອນ
ໄດ້ເຫັນລູກຊາຍທັງສອງຂອງ ໂຢເຊບ ແລ້ວຈຶ່ງຖາມວ່າ "ເດັກໜຸ່ມ
ນີ້ແມ່ນໃຜ?" ໙ໂຢເຊບ ໄດ້ກ່າວແກ່ພໍ່ວ່າ "ເດັກໜຸ່ມນີ້ແມ່ນລູກຊາຍ
ຂອງເຮົາທີ່ພຣະເຈົ້າໄດ້ປະທານໃຫ້ເຮົາໃນປະເທດນີ້" ແລະ ອິດສະ
ຣາເອນ ໄດ້ກ່າວວ່າ "ພາພວກເຂົາມາຫາພໍ່ເພື່ອພໍ່ຈະໄດ້ອວຍພອນ
ໃຫ້ພວກເຂົາ". ໑໐ອັນໜຶ່ງ ອິດສະຣາເອນ ໄດ້ຕາມືດມົວໄປຍ້ອນ
ຄວາມແກ່ຊະລາ ເບິ່ງເຫັນບໍ່ໄດ້ ແລ້ວ ໂຢເຊບ ໄດ້ພາລູກຊາຍທັງ
ສອງຫຍັບເຂົ້າມາໃກ້ພໍ່, ອິດສະຣາເອນ ໄດ້ກອດຈູບພວກເຂົາ.

໑໑ອິດສະຣາເອນ ໄດ້ບອກ ໂຢເຊບ ວ່າ "ພໍ່ບໍ່ຄິດວ່າຈະເຫັນໜ້າຂອງ
ເຈົ້າອີກ ແລະບັດນີ້ ພຣະເຈົ້າໄດ້ໂຜດໃຫ້ພໍ່ໄດ້ເຫັນຮອດເຊື້ອສາຍ
ຂອງເຈົ້າດ້ວຍ". ໑໒ໂຢເຊບ ໄດ້ເອົາລູກອອກໄປຈາກຫວ່າງກາງຫົວ
ເຂົ່າຂອງພໍ່ ແລະໄດ້ໝູບໜ້າລົງເຖິງດິນ. ໑໓ໂຢເຊບ ໄດ້ພາລູກທັງ
ສອງໄປຫາພໍ່ ໃຫ້ ເອຟະລາອິມ ຢູ່ເບື້ອງຂວາມືຂອງຕົນ ເພື່ອໃຫ້ຖືກ
ກັບມືເບື້ອງຊ້າຍຂອງ ອິດສະຣາເອນ, ມານາເຊ ຢູ່ເບື້ອງຊ້າຍມື
ຂອງຕົນເພື່ອໃຫ້ຖືກມືເບື້ອງຂວາຂອງອິດສະຣາເອນ ແລ້ວຫຍັບເຂົ້າ
ໄປໃກ້ພໍ່. ໑໔ແຕ່ວ່າ ອິດສະຣາເອນ ໄດ້ຢຽດມືເບື້ອງຂວາວາງໄວ້ເທິງ
ຫົວ ເອຟະລາອິມ ຜູ້ເປັນນ້ອງ ແລະມືເບື້ອງຊ້າຍວາງໄວ້ເທິງຫົວ
ມານາເຊ, ອິດສະຣາເອນ ໄດ້ຢຽດມືໄຂວ່ກັນຢ່າງນັ້ນດ້ວຍຄວາມຕັ້ງ
ໃຈ ເພາະວ່າ ມານາເຊ ເປັນອ້າຍກົກ. ໑໕ແລ້ວທ່ານໄດ້ກ່າວອວຍພອນ
ໃຫ້ແກ່ ໂຢເຊບ ວ່າ "ຂໍພຣະເຈົ້າທີ່ ອັບຣາຮາມ ແລະ ອີຊາກ ພໍ່ຂອງ
ເຮົາໄດ້ດຳເນີນຢູ່ຕໍ່ພຣະພັກພຣະອົງ, ພຣະເຈົ້າຜູ້ຊົງໄດ້ລ້ຽງຊີວິດ
ຂອງຂ້າພຣະອົງຕັ້ງແຕ່ເກີດມາຈົນເຖິງທຸກວັນນີ້, ໑໖ເທວະດາອົງທີ່
ໄດ້ຊ່ອຍເຮົາໃຫ້ພົ້ນຈາກການຊົ່ວຮ້າຍທຸກຢ່າງ, ຂໍໂຜດອວຍພອນ
ໃຫ້ເດັກໜຸ່ມສອງຄົນນີ້ເທີ້ນ, ໃຫ້ນາມຊື່ຂອງເຮົາ, ນາມຊື່ຂອງ ອັບຣາ
ຮາມ ແລະຂອງ ອີຊາກ ຜູ້ເປັນພໍ່ເຮົາເປັນນາມຊື່ເດັກໜຸ່ມທັງສອງນີ້
ແລະໃຫ້ພວກເຂົາຈະເລີນ ຂຶ້ນມີລູກດົກທະວີຂຶ້ນເປັນອັນມາກຫຼາຍ
ໃນທ່າມກາງແຜ່ນດິນໂລກນີ້ເຖີດ".

໑໗ໂຢເຊບ ໄດ້ເຫັນພໍ່ເອົາມືເບື້ອງຂວາວາງໄວ້ເທິງຫົວ ເອຟະລາອິມ
ກໍບໍ່ພໍໃຈ, ຈຶ່ງໄດ້ຈັບມືຂອງພໍ່ຍົກອອກຈາກຫົວຂອງ ເອຟະລາອິມ
ໃຫ້ມາວາງເທິງຫົວຂອງ ມານາເຊ. ໑໘ໂຢເຊບ ໄດ້ບອກພໍ່ວ່າ "ພໍ່ເອີຍ,
ນັ້ນບໍ່ຖືກ, ເພາະວ່າຜູ້ນີ້ແມ່ນລູກກົກ ໃຫ້ເອົາມືຂວາຂອງພໍ່ວາງໄວ້

ຫົວຜູ້ນີ້ເຖີ້ນ". ໑໙ແຕ່ພໍ່ໄດ້ປະຕິເສດ ແລະໄດ້ກ່າວວ່າ, ພໍ່ຮູ້ ລູກເອີຍ,
ພໍ່ຮູ້ຈັກຢູ່ ລາວຈະເປັນຄົນຕະກຸນໜຶ່ງຄືກັນ ແລະຈະເປັນໃຫຍ່ດ້ວຍ
ແຕ່ວ່ານ້ອງຊາຍຈະໃຫຍ່ກວ່າອ້າຍ ແລະເຊື້ອສາຍຂອງນ້ອງຈະເປັນ
ຫຼາຍຊົນຊາດ*." ໒໐ແລະ ອິດສະຣາເອນ ໄດ້ອວຍພອນໃຫ້ພວກເຂົາ
ໃນວັນນັ້ນວ່າ "ພວກອິດສະຣາເອນຈະໃຊ້ຊື່ເຈົ້າທັງສອງກ່າວອວຍ
ພອນກັນວ່າ "ຂໍພຣະເຈົ້າໂຜດໃຫ້ທ່ານເປັນເໝືອນດັ່ງ ເອຟະລາອິມ
ແລະ ມານາເຊ ເທີ້ນ" ແລະທ່ານໄດ້ຕັ້ງ ເອຟະລາອິມ ເປັນໃຫຍ່ກວ່າ
ມານາເຊ. ໒໑ແລ້ວ ອິດສະຣາເອນ ໄດ້ບອກ ໂຢເຊບ ວ່າ "ເບິ່ງແມ,
ພໍ່ຈະຕາຍໄປແລ້ວ ແຕ່ພຣະເຈົ້າຈະຊົງສະຖິດຢູ່ກັບພວກເຈົ້າ ແລະ
ຈະພາພວກເຈົ້າກັບໄປໃນແຜນດິນຂອງພວກບັນພະບຸລຸດຂອງ
ພວກເຈົ້າ. ໒໒ແລະຍິ່ງກວ່ານັ້ນອີກ ພໍ່ຈະເອົາສ່ວນໜຶ່ງ ທີ່ພໍ່ໄດ້ຕີເອົາ
ຈາກມືພວກ ອາໂມ ດ້ວຍດາບແລະດ້ວຍຫນ້າທະນູຂອງພໍ່ຍົກໃຫ້
ແກ່ເຈົ້າແທນທີ່ຈະໃຫ້ແກ່ພວກອ້າຍນ້ອງຂອງເຈົ້າ".

*48:19 "ຫຼາຍຊົນຊາດ" ຫຼືວ່າ "ຫຼາຍປະຊາຊາດ"*

# ບົດທີ 49

໑ຢາໂຄບ ໄດ້ຮ້ອງລູກຊາຍທັງຫຼາຍຂອງຕົນມາ ແລະໄດ້ກ່າວວ່າ
"ພວກເຈົ້າທັງຫຼາຍຈົ່ງມາເຕົ້າໂຮມກັນ ແລະພໍ່ຈະບອກສິ່ງທີ່ຈະບັງ
ເກີດຂຶ້ນແກ່ພວກເຈົ້າໃນພາຍຂ້າງໜ້າ. ໒ລູກຊາຍທັງຫຼາຍຂອງ ຢາ
ໂຄບ ເອີຍ, ຈົ່ງພາກັນມາເຕົ້າໂຮມ ແລະຈົ່ງຟັງຖ້ອຍຄຳ ອິດສະຣາ
ເອນ ພໍ່ຂອງເຈົ້າທັງຫຼາຍເທີ້ນ. ໓ລູເບນ ເອີຍ, ເຈົ້າເປັນລູກຊາຍກົກ

ຂອງເຮົາ ເປັນແຮງຂອງເຮົາ, ເປັນເລີ່ມຕົ້ນກຳລັງຂອງເຮົາ, ເປັນເລີດ
ກຽດຕິຍົດແລະເຫື່ອແຮງອັນເລີດ: ໔ເຈົ້າບໍ່ໝັ້ນຄົງຄືດັ່ງນ້ຳ ເຈົ້າຈະບໍ່
ເປັນຜູ້ໃຫຍ່ທີ່ສຸດ, ເພາະເຈົ້າໄດ້ຂຶ້ນໄປບ່ອນນອນຂອງພໍ່ເຈົ້າເຮັດໃຫ້
ເປັນມົນທິນ ແລະໄດ້ຂຶ້ນໄປເທິງຕຽງນອນຂອງເຮົາ.

໕ຝ່າຍ ຊີເມໂອນ ແລະ ເລວີ ເປັນອ້າຍນ້ອງກັນ; ອາວຸດໂຫດຮ້າຍອາ
ໄສຢູ່ໃນບ້ານຂອງພວກເຂົາ. ໖ຈິດໃຈເຮົາເອີຍ ຢ່າເຂົ້າໄປໃນທີ່ເລິກ
ລັບຂອງພວກເຂົາ, ຍົດສັກຂອງເຮົາເອີຍ ຢ່າໄດ້ເຂົ້າໄປບ່ອນຊຸມນຸມ
ພວກເຂົາ, ເພາະດ້ວຍຄວາມໃຈຮ້າຍຂອງພວກເຂົາ ໄດ້ຂ້າຄົນທັງ
ຫຼາຍເສຍ, ແລະພວກເຂົາໄດ້ທຳລາຍກຳແພງເມືອງລົງຕາມອຳເພີ
ໃຈຂອງພວກເຂົາ. ໗ຂໍໃຫ້ຄວາມຄຽດຮ້າຍຂອງພວກເຂົາຖືກສາບ
ແຊ່ງ ເພາະເປັນສິ່ງຫຍາບຊ້າ, ຂໍໃຫ້ຄວາມໂກດຮ້າຍຂອງພວກເຂົາ
ຖືກສາບແຊ່ງ ເພາະເປັນສິ່ງໂຫດຫ້ຽມ, ເຮົາຈະໃຫ້ພວກເຂົາແຍກ
ຈາກກັນໃນຢາໂຄບ ໃຫ້ເຂົາແຕກກະຈັດກະຈາຍໄປໃນພວກ ອິດ
ສະຣາເອນ.

໘ຝ່າຍ ຢູດາ ພວກອ້າຍນ້ອງຂອງເຈົ້າຈະສັນລະເສີນເຈົ້າ, ມືຂອງເຈົ້າ
ຈະຈັບຄໍພວກສັດຕູຂອງເຈົ້າ, ລູກທັງຫຼາຍຂອງພໍ່ເຈົ້າຈະກົ້ມກາບລົງ
ຕໍ່ໜ້າເຈົ້າ. ໙ຢູດາ ເປັນສິງໂຕໜຸ່ມ: ລູກເອີຍ ເຈົ້າໄດ້ກັບມາຈາກທີ່
ຈັບເນື້ອແລ້ວ ລາວໄດ້ໝອບລົງນອນເໝືອນດັ່ງສິງໂຕຜູ້ແລະເໝືອນ
ດັ່ງສິງໂຕເຖົ້າ, ໃຜຈະເຮັດໃຫ້ລາວຕື່ນຂຶ້ນໄດ້? ໑໐ຄະທາຂອງກະສັດ
ຈະບໍ່ຂາດເສຍຈາກ ຢູດາ ຫຼືຜູ້ຕັ້ງກົດໝາຍຈະບໍ່ຂາດໄປຈາກຫວ່າງ
ຕີນຂອງຕົນ, ຈົນເຖິງພຣະອົງ ຊີໂລ ຈະສະເດັດມາ ແລະຊົນຊາດ
ທັງຫຼາຍຈະມາຊຸມນຸມກັນກັບພຣະອົງ. ໑໑ເພິ່ນຈະຜູກລາໜຸ່ມຂອງ

ຕົນໄວ້ກັບເຄືອອະງຸ່ນແລະລູກລາໄວ້ກັບເຄືອອະງຸ່ນອັນດີທີ່ສຸດ,ລາວ ໄດ້ລ້າງເສື້ອຜ້າຂອງລາວໃນເຫຼົ້າອະງຸ່ນ ແລະໄດ້ລ້າງເສື້ອຊັ້ນນອກ ຂອງລາວໃນເລືອດແຫ່ງໝາກອະງຸ່ນ.
໑໒ຕາຂອງລາວແດງໄປດ້ວຍ ເຫຼົ້າອະງຸ່ນ ແລະແຂ້ວຂອງລາວຂາວໄປດ້ວຍນ້ຳນົມ.

໑໓ຝ່າຍ ເຊບູໂລນ ຈະຕັ້ງອາໄສຢູ່ຮິມນ້ຳທະເລ, ໃນບ່ອນສຳຫຼັບເຮືອ ຈອດຢູ່ ແລະເຂດແດນທີ່ດິນຂອງຕົນຈະໄກເຖິງເມືອງ ຊີດົນ.

໑໔ຝ່າຍ ອິດຊາຄາ ເປັນຕົວລາທີ່ມີແຮງຫຼາຍ ທີ່ໝອບລົງນອນຫວ່າງ ກາງຄອກສັດສອງບ່ອນ,
໑໕ລາວເຫັນວ່າທີ່ພັກເຊົາດີ ແລະແຜ່ນດິນ ນັ້ນເປັນທີ່ຊອບໃຈ ແລະລາວຫງ່ຽງບ່າຂອງຕົນລົງເພື່ອຮັບແບກແລະ ຍອມເປັນບ່າວເສຍສ່ວຍ.

໑໖ຝ່າຍ ດານ ຈະປົກຄອງໄພ່ພົນຂອງຕົນ ເໝືອນດັ່ງຕະກູນອື່ນຂອງ ພວກ ອິດສະຣາເອນ.
໑໗ດານ ຈະເປັນງູທີ່ຢູ່ໃນທາງຫຼວງ ເປັນງູ ພິດຮ້າຍທີ່ຢູ່ໃນຫົນທາງທີ່ຕອດສົ້ນຕີນມ້າແລະຄົນຂີ່ມ້ານັ້ນກໍຕົກ ຫງາຍລົງ.
໑໘ໂອ ພຣະເຢໂຮວາເຈົ້າຂ້າ, ຂ້ານ້ອຍໄດ້ຄອຍຖ້າຄວາມ ພົ້ນຈາກພຣະອົງ.

໑໙ຝ່າຍ ກາດ ພວກກອງທັບຈະຫຸ້ມຕີລາວ ແຕ່ໃນສຸດທ້າຍລາວຈະ ກັບມາຫຸ້ມຕີພວກກອງທັບນັ້ນ.

໒໐ຝ່າຍ ອາເຊ ເຂົ້າຈີ່ຢ່າງດີທີ່ສຸດຈະມາຈາກລາວ ແລະລາວຈະເອົາ ອາຫານອັນພິເສດສຳຫຼັບໃຫ້ກະສັດກິນ.

໒໑ຝ່າຍ ເນບທາລີ ເປັນກວາງຕົວແມ່ທີ່ປ່ອຍໄປ, ລາວເວົ້າຄຳຊອບ
ຄຳມ່ວນ.

໒໒ຝ່າຍ ໂຢເຊບ ເປັນງ່າໄມ້ທີ່ເກີດໝາກດົກ, ງ່າໄມ້ທີ່ເກີດໝາກດົກ
ຢູ່ໃກ້ບໍ່ນ້ຳ, ມີກິ່ງກ້ານງອກຂຶ້ນຂ້າມເທິງກຳແພງ. ໒໓ພວກນັກຍິງ
ໜ້າທະນູໄດ້ເຮັດໃຫ້ລາວເປັນທຸກໂສກຢ່າງໜັກ, ໄດ້ຍິງໃສ່ລາວ,
ແລະໄດ້ກຽດຊັງລາວ. ໒໔ແຕ່ວ່າໜ້າທະນູຂອງຕົນໄດ້ຕັ້ງໝັ້ນຄົງຢູ່
ຢ່າງເຂັ້ມແຂງ, ແລະແຂນມືຂອງຕົນໄດ້ເຮັດໃຫ້ແຂງແຮງຂຶ້ນ, ດ້ວຍ
ມືແຫ່ງພຣະອົງຜູ້ມີລິດເດດແຫ່ງຢາໂຄບ. (ຜູ້ລ້ຽງແກະ, ກ້ອນຫີນ
ຂອງ ອິດສະຣາເອນ ມາຈາກພຣະອົງນັ້ນ) ໒໕ມາຈາກພຣະເຈົ້າຂອງ
ພໍ່ຂອງເຈົ້າ ແລະພຣະອົງຈະຊ່ອຍເຫຼືອເຈົ້າ, ມາຈາກພຣະອົງຜູ້ມີ
ລິດທານຸພາບສູງສຸດຜູ້ຊຶ່ງຈະອວຍພອນໃຫ້ເຈົ້າດ້ວຍພຣະພອນທີ່ລົງ
ມາຈາກຟ້າສະຫວັນເບື້ອງເທິງກໍດີ ແລະພຣະພອນມາຈາກເບື້ອງ
ເລິກທາງລຸ່ມກໍດີ ແລະພຣະພອນມາຈາກນົມ ແລະຈາກທ້ອງແມ່ກໍດີ;
໒໖ພຣະພອນທັງຫຼາຍຈາກພໍ່ເຈົ້າຊຶ່ງລື່ນກວ່າພຣະພອນມາຈາກພວກ
ບັນພະບຸລຸດຂອງເຮົາຈົນເຖິງຍອດສູງສຸດແຫ່ງພູເຂົາທັງຫຼາຍທີ່ຕັ້ງຢູ່
ເປັນນິດ, ພຣະພອນນັ້ນຈະຕັ້ງຢູ່ເທິງຫົວຂອງ ໂຢເຊບ ແລະເທິງຫົວ
ຜູ້ນັ້ນທີ່ລາວໄດ້ແຍກຈາກພວກອ້າຍນ້ອງຂອງຕົນ.

໒໗ຝ່າຍ ເບນຢາມິນ ຈະຫາກິນເໝືອນດັ່ງໝາໄນ, ເວລາເຊົ້າລາວຈະ
ກັດກິນເນື້ອ, ແລະເວລາຄ່ຳລາວໄດ້ແບ່ງປັນສິ່ງຂອງທີ່ລາວປຸ້ນມາ
ໄດ້.

໒໘ຄົນທັງປວງນີ້ແມ່ນ 12 ຕະກູນຂອງ ອິດສະຣາເອນ ແລະນີ້ແມ່ນ
ຖ້ອຍຄຳທີ່ພໍ່ໄດ້ກ່າວແກ່ພວກເຂົາແລະໄດ້ອວຍພອນພວກເຂົາ, ຢາ

ໂຄບໄດ້ອວຍພອນແກ່ພວກເຂົາທຸກຄົນຢ່າງເໝາະສົມກັບຄວາມ
ພອນຂອງຜູ້ນັ້ນ. [໒໙]ຢາໂຄບ ໄດ້ສັ່ງແກ່ພວກລູກແລະໄດ້ບອກພວກ
ເຂົາວ່າ "ເຮົາຈະເປັນທີ່ໂຮມໄວ້ກັບພວກບັນພະບຸລຸດຂອງເຮົາ, ທ່ານ
ທັງຫຼາຍຈົ່ງເອົາສົບຂອງເຮົາໄປຝັງໄວ້ກັບພວກບັນພະບຸລຸດຂອງ
ເຮົາ ໃນຖ້ຳທີ່ຢູ່ໃນນາຂອງ ເອຟາໂຣນ ຊາວ ຮິດຕີ ນັ້ນ. [໓໐]ໃນຖ້ຳທີ່ຢູ່
ໃນນາຂອງມັກເປລາຊຶ່ງຢູ່ຕໍ່ໜ້າມຳເຣໃນແຜນດິນການາອານ ແລະ
ທີ່ ອັບຣາຮາມໄດ້ຊື້ເອົາກັບນາ ຈາກ ເອຟາໂຣນ ຊາວ ຮິດຕີ ເປັນ
ກຳມະສິດແລ້ວສຳລັບເປັນບ່ອນຝັງສົບ. [໓໑]ໃນທີ່ນັ້ນເຂົາໄດ້ຝັງສົບ
ອັບຣາຮາມແລະນາງຊາຣາ ເມຍຂອງເພິ່ນ ແລະທີ່ນັ້ນເຂົາໄດ້ຝັງສົບ
ອີຊາກ ແລະ ນາງ ເຣເບກາ ເມຍຂອງເພິ່ນ ແລະ ຂ້ອຍໄດ້ຝັງສົບນາງ
ເລອາ ໄວ້ທີ່ນັ້ນ. [໓໒]ນາກັບຖ້ຳທີ່ຢູ່ໃນນານັ້ນ ເຂົາໄດ້ຊື້ເອົາມາຈາກ
ພວກລູກຫຼານ ເຮດ. [໓໓]ແລະເມື່ອ ຢາໂຄບ ໄດ້ສັ່ງແກ່ພວກລູກຊາຍ
ທັງຫຼາຍຂອງຕົນສຳເລັດແລ້ວທ່ານກໍຍົກຕີນຂຶ້ນເທິງບ່ອນນອນ ແລະ
ໄດ້ຖອດຈິດວິນຍານອອກເປັນທີ່ໂຮມໄວ້ກັບພວກຂອງຕົນ.

*49:10 "ຄະທາກະສັດ" ເວົ້າເຖິງ ໄມ້ເທົ້າຍາວມີຍອດທີ່ປະດັບປະດາຈົ່ງງາມ ຊຶ່ງກະສັດຖືເພື່ອສະແດງເຖິງອຳນາດແລະໃຊ້ໃນເລື່ອງການຕັດສິນ*

## ບົດທີ 50

[໑]ໂຢເຊບ ໄດ້ເຂົ້າໝູບຕໍ່ໜ້າພໍ່ ທັງຮ້ອງໄຫ້ແລະໄດ້ຈູບພໍ່. [໒]ແລ້ວ ໂຢ
ເຊບ ໄດ້ສັ່ງແກ່ພວກໝໍຢາຜູ້ເປັນຂ້າຮັບໃຊ້ຂອງຕົນໃຫ້ດອງສົບພໍ່
ໄວ້, ພວກໝໍຢາໄດ້ເຮັດສົບ ອິດສະຣາເອນ ໄວ້ບໍ່ໃຫ້ເປື່ອຍເນົ່າໄປ.

໓ແລະເຂົາໄດ້ເຮັດວຽກງານການນັ້ນ ລະຫວ່າງ 40 ວັນ ຈຶ່ງແລ້ວ
ຕາມທຳນຽມດອງສົບໄວ້ບໍ່ໃຫ້ເປື່ອຍເນົ່າໄປ ແລະຊາວ ເອຢິບໄດ້ໄວ້
ທຸກ ເພື່ອອິດສະຣາເອນ ເປັນເວລາ 70 ວັນ. ໔ແລະເມື່ອວັນທັງຫຼາຍ
ທີ່ເຂົາໄດ້ໄວ້ທຸກເພື່ອທ່ານລ່ວງໄປແລ້ວ ໂຢເຊບ ໄດ້ກ່າວແກ່ຂ້າລາ
ຊະການປະຈຳລາຊະວັງກະສັດ ຟາໂຣ ວ່າ "ຖ້າຂ້ານ້ອຍຫາກເປັນ
ທີ່ພົບຄວາມກະລຸນາໃນສາຍຕາຂອງທ່ານທັງຫຼາຍ ຂໍທ່ານໄປກາບ
ທູນກະສັດຟາໂຣໃຫ້ຊາບວ່າ, ໕'ພໍ່ຂອງເຮົາໄດ້ໃຫ້ເຮົາສາບານຕົນໄວ້
ກ່າວວ່າ "ເບິ່ງເຖີດ, ເມື່ອພໍ່ຕາຍໄປເຈົ້າຈຶ່ງເອົາສົບຂອງພໍ່ໄປຝັງໄວ້ໃນ
ບ່ອນຝັງສົບທີ່ພໍ່ໄດ້ຂຸດໄວ້ສຳຫຼັບພໍ່ໃນແຜ່ນດິນການາອານເຖີ້ນ"
ດ້ວຍເຫດນີ້ ຂໍທ່ານອະນຸຍາດໃຫ້ຂ້ານ້ອຍຂຶ້ນໄປ ແລະຝັງສົບພໍ່
ແລ້ວຂ້ານ້ອຍຈະກັບມາອີກ". ໖ແລະກະສັດ ຟາໂຣ ໄດ້ກ່າວວ່າ "ຈົ່ງ
ຂຶ້ນໄປແລະຝັງສົບພໍ່ຂອງທ່ານ ຕາມຄຳທີ່ພໍ່ໄດ້ໃຫ້ທ່ານໄດ້ສາບານ
ໄວ້ເທີ້ນ".

໗ໂຢເຊບ ໄດ້ຂຶ້ນໄປຝັງສົບພໍ່ ແລະພວກຂ້າລາຊະການຂອງກະສັດ
ຟາໂຣ ກັບພວກຜູ້ເຖົ້າແກ່ທັງປວງໃນ ລາຊະວັງ ແລະຜູ້ເຖົ້າທົ່ວ
ປະເທດ ເອຢິບ ໄດ້ຂຶ້ນໄປດ້ວຍ, ໘ຄອບຄົວຂອງ ໂຢເຊບ ທັງໝົດ
ແລະພວກອ້າຍນ້ອງກັບຄອບຄົວພໍ່ຂອງຕົນໄດ້ເດີນທາງໄປດ້ວຍ
ເຫຼືອແຕ່ ລູກນ້ອຍທັງຫຼາຍກັບຝູງແກະ,ຝູງແບ້,ຝູງງົວຂອງເຂົາເທົ່າ
ນັ້ນ ເຂົາໄດ້ປະໄວ້ໃນເມືອງ ໂກເຊນ. ໙ແລະມີຂະບວນລົດມ້າໄດ້ຂຶ້ນ
ໄປດ້ວຍກັບທ່ານ ແລະຂະບວນແຫ່ສົບມີຄົນຫຼວງຫຼາຍ. ໑໐ແລະ
ເຂົາໄດ້ໄປເຖິງລານຟາດເຂົ້າຂອງ ເອຕາດ ທີ່ຟາກແມ່ນ້ຳ ຈໍແດນ
ພຸ້ນ, ແລະເຂົາໄດ້ໄວ້ທຸກອັນໃຫຍ່ ແລະຮ້ອງໄຫ້ທຸກໂສກຢ່າງໜັກ,
ໂຢເຊບ ເຮັດການໄວ້ທຸກພໍ່ຂອງຕົນເປັນເວລາເຈັດວັນ. ໑໑ແລະ

ຊາວແຜນດິນນັ້ນຄື ຊາວ ການາອານ ໄດ້ເຫັນການໄວ້ທຸກນັ້ນ ຢູ່ທີ່
ລານຟາດເຂົ້າ ເອຕາດ ແລະເຂົາໄດ້ເວົ້າກັນວ່າ “ອັນນີ້ ແມ່ນການ
ໄສກເສົ້າອັນໃຫຍ່ຂອງຊາວ ເອຢິບ” ເຫດສະນັ້ນເຂົາໄດ້ເອີ້ນຊື່ທີ່ນັ້ນ
ວ່າ ອາເບນມິດສະຣາອີມ ທີ່ນັ້ນຢູ່ຟາກແມ່ນໍ້າ ຈໍແດນ ພຸ້ນ. ໑໒ແລະ
ລູກຊາຍທັງຫຼາຍຂອງ ຢາໂຄບ ໄດ້ກະທຳຕາມທີ່ພໍ່ໄດ້ສັ່ງໄວ້. ໑໓ຄື
ພວກລູກຊາຍຂອງທ່ານໄດ້ເອົາສົບຂອງເພິ່ນໄປໄວ້ໃນແຜນດິນ ກາ
ນາອານ ແລະໄດ້ຝັງເພິ່ນໄວ້ໃນຖໍ້າທີ່ຢູ່ໃນທົ່ງນາແຫ່ງ ມັກເຟລາ ທີ່
ອັບຣາຮາມໄດ້ຊື້ໄວ້ເປັນກຳມະສິດຈາກເອຟາໂຣນຊາວເຮດກັບນາ
ຢູ່ຕໍ່ໜ້າ ມຳເຣ ເປັນບ່ອນຝັງສົບ.

໑໔ແລະເມື່ອໄດ້ຝັງສົບພໍ່ສຳເລັດແລ້ວ ໂຢເຊບກັບພວກອ້າຍນ້ອງ
ແລະຝູງຄົນທັງປວງທີ່ໄດ້ໄປດ້ວຍກັນເພື່ອຝັງສົບພໍ່ຂອງຕົນກໍໄດ້ກັບ
ໄປທີ່ປະເທດ ເອຢິບ.

໑໕ແລະພວກອ້າຍຂອງໂຢເຊບໄດ້ເຫັນວ່າພໍ່ຕາຍໄປແລ້ວແລະພວກ
ເຂົາໄດ້ເວົ້າກັນວ່າ “ຢ້ານວ່າ ໂຢເຊບ ຈະກຽດຊັງພວກເຮົາ ແລະຈະ
ແກ້ແຄ້ນພວກເຮົາຢ່າງແນ່ນອນຍ້ອນການຊົ່ວທີ່ພວກເຮົາໄດ້ກະທຳ
ແກ່ທ່ານ”.໑໖ແລ້ວພວກເຂົາໄດ້ໃຊ້ຄົນໄປຫາໂຢເຊບກ່າວວ່າ“ພໍ່ທ່ານ
ເມື່ອກ່ອນເພິ່ນຕາຍນັ້ນກໍໄດ້ສັ່ງວ່າ, ໑໗‘ທ່ານທັງຫຼາຍຈົ່ງກາບຮຽນຕໍ່
ໂຢເຊບ ດັ່ງນີ້ວ່າ “ເຮົາຂໍທ່ານຍົກໂທດຄວາມຜິດແລະຄວາມບາບ
ຂອງພວກອ້າຍຂອງທ່ານເພາະວ່າພວກອ້າຍໄດ້ກະທຳຊົ່ວແກ່ທ່ານ”
ແລະບັດນີ້ຂໍທ່ານໂຜດຍົກໂທດຄວາມຜິດຜູ້ຮັບໃຊ້ຂອງພຣະ
ເຈົ້າແຫ່ງພໍ່ທ່ານເຖີ້ນ’.” ແລະເມື່ອໂຢເຊບໄດ້ຍິນພວກເຂົາເວົ້າ ດັ່ງ
ນັ້ນ ທ່ານກໍໄດ້ຮ້ອງໄຫ້. ໑໘ແລ້ວພວກອ້າຍຂອງເພິ່ນໄດ້ພາກັນໝູບ

ໜ້າລົງຕໍ່ໜ້າທ່ານ ແລະເຂົາກ່າວວ່າ "ເບິ່ງແມ ຂ້ານ້ອຍທັງຫຼາຍເປັນ
ຜູ້ຮັບໃຊ້ຂອງທ່ານ". ໑໙ແລ້ວ ໂຢເຊບ ໄດ້ກ່າວແກ່ພວກເຂົາວ່າ "ຢ່າຊູ່
ຢ້ານ ເຫດວ່າເຮົາແມ່ນຜູ້ຕັ້ງຢູ່ແທນພຣະເຈົ້າຫຼື? ໒໐ແລະຝ່າຍພວກ
ທ່ານ, ພວກທ່ານໄດ້ຄິດກະທຳການຮ້າຍຕໍ່ເຮົາກໍຈິງຢູ່ ແຕ່ພຣະເຈົ້າ
ໄດ້ປ່ຽນແປງໃຫ້ເປັນການອັນດີເໝືອນດັ່ງໄດ້ບັງເກີດໃນວັນນີ້ ເພື່ອ
ຈະໄດ້ຊ່ອຍຊີວິດຫຼາຍຄົນໃຫ້ພົ້ນ. ໒໑ເຫດສະນັ້ນ ທ່ານທັງຫຼາຍຢ່າຊູ່
ຢ້ານ ເຮົາຈະບຳລຸງລ້ຽງພວກທ່ານກັບລູກນ້ອຍທັງຫຼາຍຂອງພວກ
ທ່ານ". ແລະ ໂຢເຊບ ໄດ້ເວົ້າຈາເລົ້າໂລມອອຍໃຈພວກອ້າຍ.

໒໒ໂຢເຊບ ກັບຄອບຄົວພໍ່ຂອງຕົນໄດ້ອາໄສຢູ່ໃນປະເທດ ເອຢິບ
ແລະ ໂຢເຊບ ມີອາຍຸໄດ້ 110 ປີ. ໒໓ໂຢເຊບ ໄດ້ເຫັນລູກເຫັນຫຼານ
ເຫັນເຫຼນທັງຫຼາຍຂອງ ເອຟະລາອິມ ແລະລູກທັງຫຼາຍຂອງ ມາ
ກີ ຜູ້ເປັນລູກຂອງ ມານາເຊ ໄດ້ເກີດເທິງຕັກ ໂຢເຊບ ດ້ວຍ. ໒໔ໂຢ
ເຊບ ໄດ້ບອກພວກອ້າຍນ້ອງຂອງຕົນວ່າ "ເຮົາໃກ້ຈະຕາຍແລ້ວ
ແຕ່ພຣະເຈົ້າຈະສະເດັດມາຢ້ຽມຢາມພວກເຈົ້າຢ່າງແນ່ນອນ ແລະ
ພຣະອົງຈະພາພວກເຈົ້າອອກໄປຈາກປະເທດນີ້ ໄປຍັງແຜ່ນດິນ
ທີ່ພຣະອົງໄດ້ສັນຍາໄວ້ແກ່ ອັບຣາຮາມ, ອີຊາກ ແລະ ຢາໂຄບ".
໒໕ແລ້ວ ໂຢເຊບ ໄດ້ໃຫ້ພວກລູກຫຼານຂອງ ອິດສະຣາເອນ ສາບານ
ຕົວໄວ້ວ່າ "ພຣະເຈົ້າຈະສະເດັດມາຢ້ຽມຢາມພວກເຈົ້າຢ່າງແນ່ນອນ
ແລະພວກເຈົ້າຈິ່ງເອົາກະດູກຂອງເຮົາອອກໄປຈາກທີ່ນີ້". ໒໖ສະນັ້ນ
ໂຢເຊບ ໄດ້ຕາຍໄປເມື່ອອາຍຸໄດ້ 110 ປີ, ແລະເຂົາໄດ້ດອງສົບ
ທ່ານບໍ່ໃຫ້ເປື່ອຍເນົ່າແລ້ວວາງໄວ້ໃນໂລງສົບໃນປະເທດ ເອຢິບ.

